## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 5 ກັນຍາ 2004 ( 9-5-2004)

---

# ປາຖນາຕ້ອງການຢາກຈະຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນ

**ຂໍ້ພຣະຄັມພີໃນບົດຮຽນ:** ອົບພະຍົບ 33:7-23
**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຊົງເປີດເຜີຍທິດທາງຂອງພຣະອົງໃຫ້ແກ່ຜູ້ທີ່ປາຖນາຕ້ອງການຢາກຈະຮູ້ຈັກກັບພຣະອົງໃຫ້ດີຂຶ້ນ.
**ຂໍ້ພຣະຄັມພີທີ່ສຳຄັນ:** ບັດນີ້ ຖ້າຊົງພໍພຣະທັຍໃນຂ້ານ້ອຍ ຂໍພຣະອົງຊົງບອກແຜນການຂອງພຣະອົງໃຫ້ຂ້ານ້ອຍຮູ້ແດ່ ເພື່ອຂ້ານ້ອຍຈະໄດ້ຮູ້ຈັກພຣະອົງ ແລະໄດ້ຮັບຄວາມພໍພຣະທັຍຈາກພຣະອົງສເມີໄປ ຂໍພຣະອົງຊົງສຳນຶກດ້ວຍວ່າ ຊົນຊາດນີ້ເປັນໄພ່ພົນຂອງພຣະອົງ (ອົບພະຍົບ 33:13).
**ຜົນສະທ້ອນຕໍ່ຊີວິດ:** ຊ່ວຍທ່ານໃຫ້ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນແລະໃຊ້ຊີວິດຕາມທິດທາງຂອງພຣະອົງ.

## ຂ້າພະເຈົ້າຢາກຈະຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນ, ແຕ່ຈະເຮັດຢ່າງໃດ?

ເປັນໄປໄດ້ບໍ່ທີ່ຈະຮູ້ຈັກກັບພຣະເຈົ້າ? ທີ່ຈະຕອບຄຳຖາມດັ່ງກ່າວນັ້ນ ເຖິງແມ່ນວ່າຜູ້ທີ່ບໍ່ມີມັນສມອງກໍຈະຕອບວ່າແນ່ນອນ. ແຕ່ວ່າ ຄຳຖາມດັ່ງກ່າວແອບແຝງຫລາຍໄປກວ່ານັ້ນອີກ. ເປັນໄປໄດ້ທີ່ຈະຮູ້ຈັກກ່ຽວກັບເຣື່ອງພຣະເຈົ້າ, ທິດທາງຂອງພຣະເຈົ້າ, ແລະພຣະຄຳຂອງພຣະເຈົ້າ ແຕ່ບໍ່ຮູ້ຈັກກັບພຣະເຈົ້າ. ຂ້າພະເຈົ້າເວົ້າໄດ້ກໍເພາະຂ້າພະເຈົ້າເຄີຍໃຊ້ຊີວິດແບບນີ້ມາກ່ອນ. ຂ້າພະເຈົ້າເຕີບໃຫຍ່ໃນຄອບຄົວທີ່ຢຳເກງພຣະເຈົ້າ, ຂ້າພະເຈົ້າໄປນະມັສການແລະເຂົ້າຫ້ອງຮຽນວັນອາທິດເປັນປະຈຳ - ແຕ່ຂ້າພະເຈົ້າບໍ່ມີຄວາມສັມພັນສ່ວນຕົວກັບພຣະເຈົ້າ. ຈົນກວ່າຂ້າພະເຈົ້າໃຫຍ່ກ້າຫນ້າບານມາ ຂ້າພະເຈົ້າຈຶ່ງສຳນຶກໄດ້ວ່າ ແທນທີ່ຈະຮູ້ຈັກແຕ່ເຣື່ອງຄວາມຈິງຂອງພຣະຄັມພີຕາມຄວາມຮູ້ຄວາມສລາດຂອງຕົນເອງ ຂ້າພະເຈົ້າຕ້ອງການຢາກຈະຮູ້ຈັກກັບພຣະເຈົ້າແລະມີປະສົບການສ່ວນຕົວກັບພຣະອົງ ໃຫ້ພຣະອົງເປັນພຣະຜູ້ໄຖ່ແລະເປັນພຣະເຈົ້າ ແລະເປັນເພື່ອນຂອງຂ້າພະເຈົ້າອີກດ້ວຍ. ປະສົບການໃນຄວາມລອດພົ້ນເປັນຕົ້ນກຳເນີດໃຫ້ຂ້າພະເຈົ້າມີຄວາມປາຖນາຕ້ອງການຢາກຈະຮູ້ຈັກກັບພຣະເຈົ້າໃຫ້ໃກ້ສນິດຫລາຍຂຶ້ນທຸກໆວັນ.

ທ່ານເປັນຢ່າງນີ້ຫລືບໍ່? ອາດຈະເປັນທ່ານ ຫລືຜູ້ໃດຜູ້ນຶ່ງທີ່ທ່ານຮູ້ຈັກຕົກຢູ່ໃນສພາບຢ່າງນີ້. ທ່ານຮູ້ກ່ຽວກັບເຣື່ອງຂອງພຣະເຈົ້າ ແຕ່ທ່ານຂາດຄວາມສັມພັນອັນມີຊີວິດຊີວາແລະຂາດການເດີນຄຽງບ່າຄຽງໄລ່ກັບພຣະເຈົ້າແຕ່ລະວັນ. ໃນພຣະທັມຕອນນີ້ໄດ້ສະແດງໃຫ້ພວກເຮົາເຫັນວ່າ ໂມເຊມີຄວາມປາຖນາຕ້ອງການຢາກຈະຮູ້ຈັກກັບພຣະເຈົ້າໃຫ້ຫລາຍຂຶ້ນ. ໃຫ້ພວກເຮົາມາສັງເກດເບິ່ງຊີວິດຂອງໂມເຊແລະຊອກເບິ່ງຕົວຢ່າງຈາກລາວເຊິ່ງພວກເຮົາຈະນຳມາໃຊ້ໃນຂນະທີ່ພວກເຮົາຈະເດີນໄປກັບພຣະເຈົ້າໃຫ້ລົງເລິກໄປກວ່ານັ້ນອີກ.

## ສຶກສາພຣະຄັມພີ

### 1. ພຣະເຈົ້າອົງຊົງເກງຂາມຊົງສະຖິດຢູ່ນຳ (ອົບພະຍົບ 33:7-11)

ໂມເຊໄດ້ປະເຊີນກັບຫນ້າທີ່ຮັບຜິດຊອບທີ່ກໍ່ໃຫ້ເກີດຄວາມທໍ້ຖອຍ ໃນການນຳພາປະຊາຊົນອິສຣາເອນອອກຈາກການເປັນຂ້າທາດຂອງປະເທດເອຢິບ ເພື່ອເຂົ້າໄປໃນແຜ່ນດິນພຣະສັນຍາ. ລາວໄດ້ເຊື່ອໃນຄວາມສັດຊື່ອັນຕລອດໄປຂອງພຣະເຈົ້າ ແຕ່ວ່າປະຊາຊົນບໍ່ເຊື່ອຟັງ ພຣະເຈົ້າບອກກັບລາວວ່າພຣະອົງຈະບໍ່ໄປນຳພວກເຂົາ (ອົບພະຍົບ 33:3). ໃຫ້ຫວນກັບຄືນມາເບິ່ງພຣະທັມ ອົບພະຍົບ 32:30-35 ໃຫ້ມາຊອກເບິ່ງວ່າປະຊາຊົນເຫລົ່ານີ້ໄດ້ເຮັດອັນໃດໃຫ້ເປັນທີ່ບໍ່

ພົພຣະທັຍກັບພຣະເຈົ້າ.

ລາວໄດ້ຕັດສິນໃຈດ້ວຍຄວາມສລາດ ລາວຈະບໍ່ນຳປະຊາຊົນອອກໄປຈົນກວ່າຮູ້ວ່າພຣະເຈົ້າຈະເປັນຜູ້ຊົງນຳ. ຫນ້າທີ່ນີ້ເປັນຫນ້າທີ່ຮັບຜິດຊອບຫນັກຫລາຍ ລາວຮູ້ວ່າດ້ວຍເຮື່ອແຮງແລະສະຕິປັນຍາຂອງລາວເອງ ລາວເຮັດບໍ່ໄດ້. ທ່ານເຄີຍຖືກຮ້ອງຂໍໃຫ້ເຮັດອັນໃດອັນນຶ່ງ ເບິ່ງເຫມືອນວ່າວຽກທີ່ຖືກມອບຫມາຍໃຫ້ເຮັດນັ້ນເຫນືອກຳລັງຂອງທ່ານ? ມັນເຮັດໃຫ້ທ່ານມີຄວາມຮູ້ສຶກຢ່າງໃດ?

ໃຫ້ຫມາຍໃສ່ໃນຂໍ້ຄວາມຕໍ່ໄປນີ້:__ ຫມົດທາງຊ່ວຍ __ ມີຄວາມຢ້ານ __ ຖືກທ້າທາຍ __ ມີກຳລັງວັງຊາ __ ຕື່ນເຕັ້ນ

ທ່ານຮັບອາສາວຽກນີ້ຢ່າງໃດ?

ເມື່ອພວກເຮົາຜູ້ເປັນຄຣິສຕຽນປະເຊີນກັບການທ້າທາຍອັນໃຫຍ່ຫລວງ ຕາມປົກຕິແລ້ວ ພວກເຮົາຈະຫັນຫນ້າເຂົ້າຫາພຣະເຈົ້າໃຫ້ຊ່ວຍເຫລືອແລະຊອກຫາຄຳແນະນຳຂອງພຣະອົງ. ພວກເຮົາອາດຈະອ້ອນວອນ ຫລືຮ້ອງຂໍໃຫ້ຄົນອື່ນອ້ອນວອນເພື່ອ. ໂມເຊພົບວ່າ ລາວໄດ້ປະເຊີນກັບຫນ້າທີ່ຮັບຜິດຊອບອັນຫນັກຫນ່ວງ ໃນຂນະທີ່ພຣະເຈົ້າຊົງສັ່ງໃຫ້ລາວນຳປະຊາຊົນຂອງພຣະອົງໄປແຜ່ນດິນພຣະສັນຍາ. ໃຫ້ອ່ານເຣື່ອງລາວຂອງເຫດການນີ້ໃນພຣະທັມ ອົບພະຍົບ 33:1-6.

ໂມເຊຮູ້ວ່າ ປາສຈາກພຣະເຈົ້າສະຖິດຢູ່ນຳແລ້ວ ລາວບໍ່ສາມາດຈະທຳຫນ້າທີ່ນີ້ໃຫ້ສຳເຣັດໄດ້. ໃຫ້ອ່ານຂໍ້ທີ 7-9 ແລະໃຫ້ບັນລະຍາຍເຣືອງລາວຂອງໂມເຊ ກ່ຽວກັບການເຂົ້າເຝົ້າແລະຮັບຟັງພຣະເຈົ້າ.

ທ່ານໄປບ່ອນໃດ ເມື່ອທ່ານຢາກຈະ **ເຂົ້າເຝົ້າພຣະເຈົ້າ?** ດ້ວຍເຫດໃດ?

ແຕ່ລະຄັ້ງ ເມື່ອໂມເຊອອກໄປທີ່ **ທຳເຕັນສັກສິດ** ເພື່ອຈະເຂົ້າເຝົ້າພຣະເຈົ້າເຊິ່ງເປັນແຮງດົນໃຈປາກົດໃຫ້ປະຊາຊົນເຫັນ. ໃຫ້ຂີດວົງກົມໃສ່ຂໍ້ພຣະຄັມພີ ເຊິ່ງທ່ານຄິດວ່າເປັນແຮງດົນໃຈແລະເປັນສິ່ງທີ່ດຶງດູດຈິດໃຈປະຊາຊົນ. ປະຊາຊົນຊິນເຄີຍກັບ **ກ້ອນເສົາເມກ** ໃນກໍຣະນີນີ້ເປັນສັນຍາລັກໃຫ້ເຫັນວ່າ ພຣະເຈົ້າອົງຊົງເກງຂາມຊົງສະຖິດຢູ່ນຳ. ແຕ່ກ່ອນນັ້ນ ແມ່ນກ້ອນເສົາເມກໃນຍາມກາງເວັນແລະແປວເສົາໄຟໃນຍາມກາງຄືນເຊິ່ງໄດ້ນຳພາປະຊາຊົນໃນຂນະທີ່ພວກເຂົາກຳລັງເດີນທາງໄປສູ່ທະເລໄມ້ອໍ້ (ທະເລແດງ) (ອົບພະຍົບ 13:21). ໃຫ້ຂີດໃຕ້ຂໍ້ພຣະທັມທີ່ສະແດງໃຫ້ເຫັນກິຣິຍາທ່າທີ່ຂອງປະຊາຊົນ ແຕ່ລະຄັ້ງ ເມື່ອໂມເຊອອກໄປຍັງ **ເຕັນທໍສັກສິດ.**

ການຊົງປາກົດຂອງອົງພຣະຜູ້ເປັນເຈົ້າຈະຕ້ອງເຮັດໃຫ້ປະຊາຊົນອິສຣາເອນລະນຶກເຖິງຄວາມບາບຂອງພວກເຂົາຊຶ່ງໄດ້ກະທຳຕໍ່ສູ້ພຣະອົງ. ພວກເຂົາຮູ້ດີຢູ່ແລ້ວວ່າຄວາມບາບເປັນສິ່ງກີດກັ້ນລະຫວ່າງພວກເຂົາກັບພຣະເຈົ້າ. ບໍ່ຕ່າງໄປຫຍັງເລີຍກັບພວກເຮົາໃນສມັຍນີ້ ຄວາມບາບແລະການບໍ່ເຊື່ອຟັງເປັນຜົນສະທ້ອນຕໍ່ຄວາມສາມັກຄີທັມຂອງພວກເຮົາກັບພຣະເຈົ້າ.

ໃຫ້ໃຊ້ເວລາຈັກຫນ້ອຍນຶ່ງແລະທວນຄືດເບິ່ງຊີວິດຂອງພວກທ່ານເອງ. ມີຄວາມບາບອັນໃດທີ່ກະທຳໄປເປັນສິ່ງທີ່ກີດກັ້ນທ່ານບໍ່ໃຫ້ເຂົ້າໄປພົບພຣະເຈົ້າ? ໃຫ້ຢຸດຈັກຄາວນຶ່ງ ແລະຮ້ອງຂໍໃຫ້ພຣະເຈົ້າອະພັຍໃຫ້ທ່ານໃນສິ່ງທີ່ເປັນເຫດກີດກັ້ນລະຫວ່າງທ່ານແລະພຣະເຈົ້າອົງຊົງເກງຂາມຊົງສະຖິດຢູ່ນຳ.

ປະຊາຊົນທັງຫມົດຢືນຢູ່ປະຕູເຕັນຂອງພວກເຂົາ ໃນຂນະທີ່ໂມເຊອອກໄປຍັງທໍເຕັນສັກສິດເພື່ອເຂົ້າເຝົ້າພຣະເຈົ້າ. ໃຫ້ຂີດໃຕ້ຂໍ້ພຣະທັມ ເຊິ່ງບົ່ງບອກໃຫ້ເຫັນການສະແດງອອກຂອງພວກເຂົາ (ອົບພະຍົບ 33:10).

ປະຊາຊົນໄດ້ສະແດງອອກເຖິງຄວາມຢຳເກງຕໍ່ພຣະເຈົ້າອົງຊົງເກງຂາມດ້ວຍການລຸກຢືນຂຶ້ນກົ້ມນະມັສການພຣະອົງ. ທ່ານໄດ້ສະແດງອອກເຖິງຄວາມຢຳເກງຕໍ່ພຣະເຈົ້າຢ່າງໃດ? ໃຫ້ບັນທຶກຄຳຕອບຂອງທ່ານ **ເຖິງຄວາມຢຳເກງພຣະເຈົ້າອົງຊົງເກງຂາມ.**

ໃຫ້ອ່ານກ່ຽວກັບເຣື່ອງໂມເຊໄດ້ເຂົ້າພົບພຣະເຈົ້າ (ຂໍ້ທີ 11) ແລະໃຫ້ຂີດວົງກົມໃສ່ຂໍ້ພຣະທັມທີ່ໄດ້ບັນລະຍາຍເຖິງເຫດການດັ່ງກ່າວ. ທ່ານເຫັນຂໍ້ຄວາມສຳຄັນບ່ອນໃດໃນການເຂົ້າເຝົ້າພຣະເຈົ້າຕອນນີ້?

**ຫນ້າຕໍ່ຫນ້າ** ຫມາຍເຖິງພຣະເຈົ້າຊົງສະຖິດຢູ່ ແລະຍັງອະທິບາຍຕື່ມໄປອີກວ່າ **ເຫມືອນມິດສະຫາຍສົນທະນາກັນ.** ທ່ານຄິດວ່າຢ່າງໃດ ໂມເຊມີຄວາມຮູ້ສຶກວ່າພຣະເຈົ້າຊົງຖືວ່າລາວເປັນມິດສະຫາຍ?

ໃຫ້ທ່ານແຈກແຍກເບິ່ງຄວາມສັມພັນຂອງທ່ານກັບພຣະເຈົ້າເປັນຢ່າງໃດ?

__ ຄົນແປກຫນ້າ __ ຮູ້ຈັກຊື່ຂອງກັນແລະກັນ __ ມີຄວາມສັມພັນຮ່ວມງານກັນ __ ມິດສະຫາຍທີ່ດີ

ທ່ານຈະມີຄວາມຮູ້ສຶກຢ່າງໃດ ເມື່ອຮູ້ວ່າພຣະເຈົ້າຢາກຈະພົບທ່ານ **ໜ້າຕໍ່ໜ້າ** ເໝືອນກັບພຣະອົງຊົງພົບກັບໂມເຊແລະຮ້ອງລາວວ່າເປັນມິດສະຫາຍ? ໃຫ້ຂີດວົງກົມໃສ່ຂໍ້ຄວາມໃດທີ່ຖືກກັບທ່ານ ຕໍ່ຈາກນັ້ນໃຫ້ຂຽນເປັນຄຳເວົ້າຂອງທ່ານເອງ: __ ເກງຂາມ __ ຢຳເກງ __ ນະມັສການ __ ຄວາມຮັກ __ ບໍ່ເໝາະສົມ __ ສົງສັຍ

ພຣະເຈົ້າຢາກຈະໃຫ້ລູກຂອງພຣະອົງຮູ້ຈັກກັບພຣະອົງໃຫ້ດີຂຶ້ນ. ໃຫ້ບັນລະຍາຍເຖິງ "ທຳເຕັນສັກສິດ" ທີ່ທ່ານພົບກັບພຣະເຈົ້າ. ທ່ານມີສະຖານທີ່ ຫລືເວລາເປັນພິເສດ ຫລືເປັນເວລາປົກກະຕິທີ່ທ່ານປະຕິບັດຢູ່ເປັນປະຈຳບໍ່?

ທ່ານຈະຮູ້ຈັກກັບພຣະເຈົ້າໃນທິດທາງຕາມຄວາມປາຖນາຂອງພຣະອົງໄດ້ຢ່າງໃດ? ໃຫ້ຄວາມຄິດເຫັນວ່າທ່ານຈະໃຫ້ເວລານີ້ເປັນເວລາທີ່ມີຄວາມໝາຍຫລາຍທີ່ສຸດ ເຊິ່ງທ່ານຈະນຳມາໃຊ້ໃນວັນນີ້.

## ໒. <u>ຄຳຮຽກຮ້ອງອັນພິເສດ</u> (ອົບພະຍົບ 33:12-16)

ໃຫ້ອ່ານພຣະທັມອົບພະຍົບ 33:12-14. ແມ່ນຄຳຮຽກຮ້ອງອັນໃດທີ່ໂມເຊບໍ່ໄດ້ຮັບຄຳຕອບ?

ໂມເຊທຳຢ່າງໃດກັບຄຳຮຽກຮ້ອງຂອງລາວເມື່ອບໍ່ໄດ້ຮັບຄຳຕອບ?

ໂມເຊໄດ້ນຳຄຳຮຽກຮ້ອງນັ້ນໄປຫາພຣະເຈົ້າ. ລາວຍັງບໍ່ທັນຮູ້ເລີຍວ່າແມ່ນຜູ້ໃດຈະໄປນຳລາວ ແຕ່ເຣື່ອງນັ້ນບໍ່ແມ່ນຄຳຖາມອັນສຳຄັນຂອງລາວ.

ທ່ານສັງເກດບໍ່ວ່າ ໃນຄວາມຮູ້ສຶກລາວມີຄວາມຈິງໃຈກັບພຣະເຈົ້າຢ່າງໃດ? ທ່ານຄິດວ່າເປັນຫຍັງລາວສາມາດເປັນຄົນຈິງໃຈຢ່າງນັ້ນ?

ລາວມີຄວາມໝັ້ນໃຈອັນແຮງກ້າວ່າ ພຣະເຈົ້າຊົງມີຄວາມຫ່ວງໃຍຕໍ່ລາວເປັນສ່ວນຕົວ. ທ່ານເດ ທ່ານມີຄວາມໝັ້ນໃຈອັນແຮງກ້າວ່າ ພຣະເຈົ້າຊົງມີຄວາມຫ່ວງໃຍຕໍ່ທ່ານຫລາຍປານໃດ? ທ່ານມີຄວາມຈິງໃຈກັບພຣະເຈົ້າຫລາຍປານໃດ?

ໃຫ້ຂີດກ້ອງຄຳຮຽກຮ້ອງອັນພິເສດຂອງໂມເຊຕໍ່ພຣະເຈົ້າ.

ໂມເຊບໍ່ໄດ້ຮຽກຮ້ອງໃຫ້ພຣະເຈົ້າບອກລາຍລະອຽດໃຫ້ລາວ, ແຕ່ລາວຮ້ອງຂໍໃຫ້ **ບອກແຜນການຂອງພຣະອົງ** ໃຫ້ລາວ. ກ່ອນອື່ນນັ້ນ ລາວຕ້ອງການຢາກຈະຮູ້ວ່າ ພຣະເຈົ້າຈະສະເດັດໄປນຳພວກລາວບໍ່ ອັນນັ້ນແມ່ນຄຳຮຽກຮ້ອງຂອງລາວ. ລາວບໍ່ໄດ້ຮ້ອງຂໍໃຫ້ພຣະເຈົ້າຢູ່ນຳຕົວລາວເອງ, ແຕ່ລາວຮ້ອງຂໍໃຫ້ພຣະເຈົ້າຢູ່ກັບໄພ່ພົນຂອງພຣະອົງ.

ຕອບຄຳຂອງພຣະເຈົ້າຕໍ່ຄຳຮຽກຮ້ອງຂອງໂມເຊນັ້ນເປັນສອງທົບມີອັນໃດແດ່ (ຂໍ້ທີ 14)?

ຜູ້ທີ່ເຊື່ອໃນສມັຍນີ້ ພຣະເຈົ້າໃຫ້ໂອກາດຊອກສແວງໃຫ້ພຣະອົງສະຖິດຢູ່ນຳຢ່າງເສຣີ. ໃຫ້ອ່ານພຣະທັມ ເຮັບເຣີ 4:16 ແລະໃຫ້ຂຽນອອກມາເປັນຄຳເວົ້າຂອງທ່ານເອງ.

ໃຫ້ອ່ານຂໍ້ທີ 13 ໃນພຣະທັມບົດນີ້. ໃຫ້ເປັນຄຳອ້ອນວອນຕໍ່ພຣະເຈົ້າຈາກຄວາມຮູ້ສຶກຂອງທ່ານເອງໃນຂນະທີ່ທ່ານໃຊ້ພຣະຄຳຂອງພຣະເຈົ້າເປັນຄຳອ້ອນວອນ.

ໂມເຊໄດ້ຮັບຄວາມໝັ້ນໃຈຈາກພຣະເຈົ້າ ບໍ່ພຽງແຕ່ພຣະອົງຊົງສະຖິດຢູ່ນຳເທົ່ານັ້ນ, ແຕ່ພຣະອົງຍັງປະທານຄວາມສງົບສຸກໃຫ້ກັບລາວອີກດ້ວຍ. ຄວາມສງົບສຸກນີ້ງບອກໃຫ້ເຫັນເຖິງຄວາມສັມພັນອັນໃກ້ສິດກັບພຣະເຈົ້າ. ມະນຸດໄດ້ຊອກສແວງຫາຄວາມສງົບສຸກໃນທາງອື່ນກໍຈະບໍ່ພົບ ຄວາມສງົບສຸກມີແຕ່ຢູ່ໃນທາງຂອງພຣະເຈົ້າເທົ່ານັ້ນ. ແທນທີ່ຈະປົບໄປທັ້ນປົບມາຫນີ້ຊອກຫາຄຳຕອບຂອງບັນຫາຊີວິດ ພວກເຮົາຈະຕ້ອງຫຍັບເຂົ້າໃກ້ພຣະເຈົ້າຊ້ອງໜ້າພຣະອົງ.

ໃຫ້ອ່ານພຣະທັມອົບພະຍົບ 33:15-16. ໃຫ້ສລູບເປັນຄຳເວົ້າຂອງທ່ານເອງຕາມຄວາມເຂົ້າໃຈຂອງທ່ານກ່ຽວກັບຄວາມເປັນຫ່ວງຂອງໂມເຊໃນພຣະທັມຕອນນີ້.

ທ່ານຄິດວ່າຢ່າງໃດ ເປັນຫຍັງໂມເຊຈຶ່ງມີຄວາມເປັນຫ່ວງໃນເຣື່ອງນີ້?

ໃນຂໍ້ທີ 15 ໂມເຊໄດ້ຕອບຢືນຢັນວ່າ ລາວຈະບໍ່ເຄື່ອນຍ້າຍຈົນກວ່າລາວຮູ້ວ່າພຣະເຈົ້າຈະສະເດັດໄປນຳພວກລາວ. ໜ້າທີ່ຮັບຜິດຊອບເຊິ່ງລາວໄດ້ຮັບນັ້ນຈຳເປັນຈະຕ້ອງໃຫ້ພຣະເຈົ້າສະຖິດຢູ່ນຳແລະໃຫ້ພຣະອົງເປັນຜູ້ນຳພາຈຶ່ງຈະໄດ້ຮັບຜົນສຳເຣັດ. ບໍ່ຕ່າງຫຍັງໝົດກັບຄຣິສຕຽນສມັຍນີ້. ບໍ່ວ່າພາຣະກິດອັນໃດກໍຕາມຂອງພຣະເຈົ້າຊຶ່ງພວກເຮົາໄດ້

ຖືກຮັບມອບໝາຍໃຫ້ກະທຳ ພາຣະກິດນັ້ນຈະບໍ່ມີຄຸນຄ່າອັນໃດຈົນກວ່າພວກເຮົາອະນຸຍາດໃຫ້ພຣະເຈົ້າສະແດງອຳນາດຂອງພຣະອົງແລະໃຫ້ພຣະອົງສະຖິດຢູ່ກັບພວກເຮົາ, ບໍ່ແມ່ນເພື່ອກຽດສັກສີຂອງພວກເຮົາ ແຕ່ເພື່ອສະງ່າຣາສີຂອງພຣະອົງ. ໂມເຊຕ້ອງການຄຳຢັ້ງຢືນອີກເທື່ອນຶ່ງວ່າ ລາວຈະບໍ່ໂດດດ່ຽວໃນຂນະທີ່ລາວທຳວຽກງານຂອງພຣະເຈົ້າທີ່ມອບໄວ້ໃຫ້ລຸລ່ວງໄປ.

- ໃຫ້ຄິດເບິ່ງໃນລະຍະນຶ່ງ ເມື່ອເຮັດວຽກໃຫ້ພຣະເຈົ້າຕາມທິດທາງຂອງທ່ານເອງ. ຜົນຮັບນັ້ນເປັນຢ່າງໃດ?
- ໃຫ້ຄິດເບິ່ງອີກລະຍະນຶ່ງ ເມື່ອທ່ານຍອມໃຫ້ພຣະເຈົ້າທຳງານຜ່ານທາງທ່ານ. ຜົນຮັບນັ້ນເປັນຢ່າງໃດ?
- ທ່ານໄດ້ຮັບມອບໝາຍອັນໃດໃນເວລານີ້ ເຊິ່ງທ່ານຕ້ອງການຄວາມໝັ້ນໃຈວ່າ ພຣະເຈົ້າຮູ້ທ່ານແລະພຣະອົງຊົງສະຖິດຢູ່ນຳທ່ານ?
- ໃຫ້ຄຳນຶງເບິ່ງຂໍ້ຄວາມນີ້ພົວພັນກັບໂມເຊຢ່າງໃດ ຫລັງຈາກນັ້ນໃຫ້ຕອບເບິ່ງ: ຈຳເປັນແທ້ຈະຕ້ອງຮັກສາການອ້ອນວອນແລະການງານໃຫ້ສົມດູນກັນ.

ລັກສະນະຂອງຊີວິດທ່ານມີການແຈກແຍກຢ່າງໃດ? ພາກປະຕິບັດຂອງທ່ານໄດ້ຊອກສແວງຫາພຣະພັກຂອງພຣະເຈົ້າກ່ອນທ່ານຈະໄດ້ຮັບເຮັດພາຣະທີ່ພຣະເຈົ້າມອບໃຫ້ບໍ່? ທ່ານລໍຖ້າຈົນໝັ້ນໃຈວ່າພຣະເຈົ້າຊົງສະຖິດຢູ່ນຳແລ້ວທ່ານຈຶ່ງກ້າວອອກໄປປະຕິບັດຕາມພຣະປະສົງຂອງພຣະອົງດ້ວຍຄວາມເຊື່ອຟັງບໍ່? ໂມເຊຈະບໍ່ກ້າວອອກໄປແມ່ນແຕ່ບາດກ້າວດຽວຈົນກວ່າລາວຮູ້ວ່າພຣະເຈົ້າຈະສະຖິດຢູ່ນຳລາວ. ຖ້າເປັນຄວາມປາຖນາຂອງທ່ານ ກໍໃຫ້ບອກກັບພຣະເຈົ້າເສັຽ.

## 3. <u>ພຣະສະງ່າຣາສີຂອງພຣະເຈົ້າ</u> (ອົບພະຍົບ 33:17-23)

ໃຫ້ອ່ານພຣະທັມອົບພະຍົບ 33:17-23. ພຣະເຈົ້າຊົງຕອບໂມເຊດ້ວຍຄຳຢືນຢັນແລະພຣະອົງໃຫ້ເຫດຜົນສອງຢ່າງ. ໃຫ້ຂີດວົງກົມໃສ່ຂໍ້ພຣະທັມທີ່ກ່າວເຖິງເຫດຜົນດັ່ງກ່າວໃນຂໍ້ທີ 17.

ໂມເຊໄດ້ຮ້ອງຂໍໃຫ້ພຣະເຈົ້າຊົງໂຜດສະແດງຣັສມີຄວາມຍິ່ງໃຫຽ່ຂອງພຣະອົງໃຫ້ເຫັນ. ໃຫ້ຂີດກ້ອງພຣະທັມທີ່ມີຂໍ້ຄວາມດັ່ງກ່າວນີ້:

- ແມ່ນອັນໃດທີ່ພຣະເຈົ້າບໍ່ອະນຸຍາດໃຫ້ໂມເຊເຫັນ
- ພຣະເຈົ້າເຊື່ອງໂມເຊຢ່າງໃດ
- ແມ່ນອັນໃດທີ່ພຣະເຈົ້າອະນຸຍາດໃຫ້ໂມເຊເຫັນ

ໂມເຊບໍ່ສາມາດຈະປະສົບພົບເຫັນຣັສມີຄວາມຍິ່ງໃຫຽ່ຂອງພຣະເຈົ້າທັງໝົດ. ແຕ່ລາວມີຄວາມປາຖນາອັນແຮງກ້າຢາກຈະຮູ້ຈັກກັບພຣະເຈົ້າຢ່າງໃກ້ຊິດ, ພຣະເຈົ້າຈຶ່ງໝູນໃຈລາວໃຫ້ມີປະສົບການກັບພຣະເຈົ້າເທົ່າທີ່ຈະຫລາຍໄດ້. ເພາະວ່າລາວຊອກສແວງຢາກພົບກັບພຣະເຈົ້າ ລາວຈຶ່ງໄດ້ຮັບຄວາມ **ພໍໃຈ** ຂອງພຣະເຈົ້າເປັນການຕອບແທນ.

ອັນນີ້ຄວນຈະເປັນຄວາມປາຖນາຂອງຜູ້ທີ່ເຊື່ອທຸກໆຄົນໃນສມັຍນີ້. ຄວນຈະເປັນຄວາມປາຖນາຂອງພວກເຮົາທີ່ຢາກຈະຮູ້ຈັກກັບພຣະເຈົ້າໃນຄວາມບໍຣິບູນຂອງພຣະອົງ. ທ່ານມີບາດກ້າວອັນໃດທີ່ຈະຊອກສແວງຢາກຈະພົບກັບພຣະເຈົ້າໃນຊີວິດຂອງທ່ານອາທິດນີ້? ຖ້າທ່ານຍັງບໍ່ຮູ້ຈັກກັບພຣະອົງ ໃນຖານະເປັນພຣະຜູ້ໂຜດໃຫ້ພົ້ນ ບາດກ້າວແລກທ່ານຈະຕ້ອງເຂົ້າມາມີຄວາມສັມພັນກັບພຣະອົງທາງສ່ວນຕົວເສັຽກ່ອນ ໂດຍຮັບເອົາພຣະເຢຊູມາເປັນພຣະຜູ້ໂຜດໃຫ້ພົ້ນຂອງທ່ານ. ຖ້າທ່ານເປັນຄຣິສຕຽນແລ້ວ ທ່ານຈະຊອກສແວງຢ່າງໃດ ເພື່ອຈະໃຫ້ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນ?

ທ່ານຈະຕ້ອງສລະອັນໃດ ເພື່ອຈະໃຫ້ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນ?
ທ່ານຈະທຳຢ່າງໃດຈຶ່ງຈະໄດ້ຮັບຄວາມສງົບສຸກຈາກ (ພັກຜ່ອນກັບ) ພຣະເຈົ້າແຕ່ລະວັນໃນອາທິດນີ້?

(ອຸປຖັມໂດຍ ລຊບສ www.lsbf.org)

# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 12 ກັນຍາ 2004 ( 9-12-2004)

---

## ຕອບສນອງຕໍ່ຄວາມບໍຣິສຸດຂອງພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ເອຊາຢາ 6:1-13

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຊົງບໍຣິສຸດ. ຄວາມບໍຣິສຸດຂອງພຣະເຈົ້າເປັນແຮງຈູງໃຈໃຫ້ມະນຸດຕອບສນອງຕໍ່ພຣະອົງ ໂດຍສາຣະພາບບາບສ່ວນຕົວຂອງພວກເຂົາ ແລະຕັດສິນໃຈຮັບໃຊ້ພຣະອົງ.

**ຂໍ້ພຣະຄັມພີທີ່ສຳຄັນ:** ເທວະດານີ້ເອີ້ນໃສ່ກັນແລະກັນວ່າ "ບໍຣິສຸດ! ບໍຣິສຸດ! ບໍຣິສຸດ! ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງບໍຣິສຸດ ພຣະຣັສມີຂອງພຣະອົງແຜ່ກະຈາຍໄປທົ່ວໂລກ" (ອຊຢ 6:3).

**ຜົນສະທ້ອນຕໍ່ຊີວິດ:** ເພື່ອຊ່ວຍທ່ານໃຫ້ຕອບສນອງຕໍ່ຄວາມບໍຣິສຸດຂອງພຣະເຈົ້າຢ່າງຖືກຕ້ອງ.

## ຂ້າພະເຈົ້າຈະຕອບສນອງຕໍ່ຄວາມບໍຣິສຸດຂອງພຣະເຈົ້າຢ່າງໃດ?

ມີເດັກນ້ອຍກຸ່ມນຶ່ງອາຍຸລຸ້ນກ່ອນອະນຸບານໄດ້ຖືກທາບທາມໃຫ້ແຕ້ມຮູບຂອງພຣະເຈົ້າ. ເດັກບາງຄົນກໍແຕ້ມເປັນຮູບຄົນ. ບາງຄົນກໍແຕ້ມຮູບເຮືອນຂອງພຣະເຈົ້າ ຫລືໄມ້ເປັນລົ້ວໆ. ຕ່າງຄົນຕ່າງກໍແຕ້ມຈົບແລ້ວ ຍັງເດັກຄົນນຶ່ງຍັງແຕ້ມບໍ່ແລ້ວເທື່ອ. ຄຣູຂອງລາວບອກໃຫ້ລາວຟ້າວແຕ້ມໃຫ້ແລ້ວ ແລະກ່າວເພີ້ມວ່າ "ບໍ່ມີໃຜເຄີຍເຫັນພຣະເຈົ້າຈັກເທື່ອດອກ." ເດັກຄົນນັ້ນເລີຍຕອບຄຣູຂອງລາວຄືນວ່າ "ພວກເຂົາຈະເຫັນຫລັງຈາກຂ້ອຍແຕ້ມແລ້ວ."

ເມື່ອທ່ານເດີນເຂົ້າໄປຊ້ອງພຣະພັກຂອງພຣະເຈົ້າ ທ່ານມີພາບພົດອັນໃດ? ທ່ານຈະແຕ້ມຮູບຂອງພຣະອົງຢ່າງໃດ? ເກືອບວ່າທຸກຄັ້ງ ເມື່ອພວກເຮົາຄິດເຖິງພາບພົດຂອງພຣະເຈົ້າ ພວກເຮົາຄິດເຫັນພຣະລັກສະນະຂອງພຣະອົງຫລາຍກວ່າ ເຊັ່ນຄວາມສັດຊື່, ຄວາມບໍຣິສຸດ, ຄວນຮັກ, ຣິດອຳນາດຂອງພຣະອົງ. ບາງຄັ້ງພວກເຮົາບັນລະຍາຍເຖິງພຣະອົງຕາມນາມຊື່ ເຊິ່ງພຣະຄັມພີໄດ້ບັນທຶກໄວ້ແລະກ່າວວ່າ ພຣະເຈົ້າຜູ້ປະເສີດ, ຜູ້ປຶກສາທີ່ສລາດສ້ຽມແຫລມ, ຜູ້ຊົງໂຜດປະທານໃຫ້, ແຕ່ແທ້ຈິງແລ້ວ ພວກເຮົາບໍ່ຮູ້ວ່າພຣະເຈົ້ານັ້ນມີຮູບຮ່າງເປັນຢ່າງໃດ.

ໃນບົດຮຽນຂອງອາທິດນີ້ ເອຊາຢາບໍ່ໄດ້ສົງສັຍເລີຍໃນສິ່ງທີ່ລາວເຫັນ ສິ່ງທີ່ລາວໄດ້ຍິນ ແລະສິ່ງທີ່ລາວຈະຕ້ອງເຮັດ. ໃນຂນະທີ່ພວກເຮົາໄດ້ສຶກສາກ່ຽວກັບປະສົບການຂອງເອຊາຢາ ພວກເຮົາຈະໄດ້ຄົ້ນຄວ້າແລະພວກເຮົາຈະໄດ້ຕອບສນອງຕໍ່ການຊົງເອີ້ນຂອງພຣະເຈົ້າຢ່າງຖືກຕ້ອງໃນຊີວິດຂອງພວກເຮົາ.

## ສຶກສາພຣະຄັມພີ

### 1. ສຳນຶກເຖິງຄວາມບໍຣິສຸດຂອງພຣະເຈົ້າ (ເອຊາຢາ 6:1-3)

ເປັນການຍາກທີ່ພວກເຮົາຈະວາດມະໂນພາບເບິ່ງຮູບຮ່າງໜ້າຕາຂອງພຣະເຈົ້າ. ຄວາມບໍຣິສຸດຂອງພຣະອົງພິເສດສຸດເຫນືອເກີນມະນຸດທີ່ຈະເອົາຫຍັງມາປຽບທຽບກັບພຣະອົງ ເຊິ່ງມະນຸດບໍ່ຈິງຈັງເຂົ້າຕິດແທດກັບພຣະເຈົ້າ.

ໃຫ້ໃຊ້ເວລາຕຶກຕອງຈັກໜ້ອຍນຶ່ງເບິ່ງພາບພົດຂອງພຣະເຈົ້າໃນສາຍຕາຂອງທ່ານຫລືໃນຈິດໃຈຂອງທ່ານ. ໃຫ້ຂຽນລົງໄປຈັກສາມຄຳ ການບັນລະຍາຍຂອງທ່ານເຖິງພາບພົດຂອງພຣະເຈົ້າຕາມແນວຄິດຂອງທ່ານ.

1. ____________________________________________

໒. ________________________________________________________________

3. ________________________________________________________________

ຕາມປົກກະຕິແລ້ວ ພວກເຮົາສາມາດຄິດເຫັນແຕ່ພຣະລັກສະນະຂອງພຣະເຈົ້າເທົ່ານັ້ນ. ທ່ານອາດຈະເຄີຍຂຽນໄວ້ເຊັ່ນ ຄວາມບໍຣິສຸດ, ຄວາມສັດຊື່ ຫລືພຣະບິດາ. ເອຊາຢາຖືກປົກຫຸ້ມດ້ວຍຄວາມບໍຣິສຸດທີ່ພຣະພັກຂອງພຣະເຈົ້າ. ໃຫ້ອ່ານເອຊາຢາ 6:1-3. ໃນພຣະທັມຂໍ້ດັ່ງກ່າວລາວໄດ້ບັນລະຍາຍເຖິງສິ່ງທີ່ລາວສັງເກດເຫັນໃນນິມິດຂອງລາວກ່ຽວກັບພຣະເຈົ້າ. ໃຫ້ໝາຍໃສ່ຂໍ້ຄວາມທີ່ຖືກຕ້ອງໃນຂ້າງລຸ່ມນີ້.

__ ຢືນຢູ່ດ້ວຍຄວາມຕັ້ງໃຈ

__ ນັ່ງຢູ່ເທິງບັນລັງ

__ ເຄື່ອງສລອງຂອງພຣະອົງໄດ້ເຕັມພຣະວິຫານ

__ ເຊຣາພິມຫລາຍໂຕຢືນຢູ່

__ ພວກເຂົາຮ້ອງວ່າ "ບໍຣິສຸດ"

__ ພວກເທວະດາເຝົ້າພຣະອົງຢູ່.

ເຫດການນີ້ໄດ້ເກີດຂຶ້ນໃນປີທີ່ກະສັດອຸດຊີອາສິ້ນພະຊົນ ຫລັງຈາກພະອົງໄດ້ປົກຄອງໄພ່ຟ້າຂ້າແຜ່ນດິນເປັນເວລາຫລາຍປີ. ການເພິ່ງພາກະສັດເລີ່ມມີການປ່ຽນແປງໃຫ້ມາເພິ່ງພາພຣະເຈົ້າ. ມີອັນໃດອີກແດ່ທີ່ປະຊາຊົນໄດ້ເພິ່ງພາໃນຍາມອຸດົມສົມບູນ ແທນທີ່ຈະເພິ່ງພາໃນພຣະເຈົ້າ?

ທ່ານໄດ້ເພິ່ງພາອັນໃດແດ່ທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນີ້ ຫລືອັນໃດອັນນຶ່ງນອກເຫນືອຈາກພຣະເຈົ້າ?

ເພື່ອເຕືອນປະຊາຊົນເຖິງຣິດອຳນາດອັນເກງຂາມຂອງພຣະອົງ ພຣະອົງຊົງຮ້ອງໃຫ້ເອຊາຢາມາເປັນຜູ້ປະກາດພຣະທັມ. ໃນຂນະທີ່ເອຊາຢາເຫັນພຣະເຈົ້າແລະໄດ້ຍິນສຽງຂອງເຊຣາພິມ ລາວເຫັນຕົວຂອງລາວຖ້ວມລົ້ນດ້ວຍຄວາມບໍຣິສຸດຂອງພຣະເຈົ້າ. ໃຫ້ທົບທວນພຣະທັມຂໍ້ນີ້ ແລ້ວຂີດວົງກົມໃສ່ຂໍ້ຄວາມທີ່ເອຊາຢາໄດ້ບັນທຶກໄວ້ກ່ຽວກັບຄວາມບໍຣິສຸດຂອງພຣະເຈົ້າ.

ທ່ານອາດຈະພົບຂໍ້ພຣະທັມທີ່ອ້າງອີງຫລາຍຕອນ. ໃນຂໍ້ພຣະທັມຕ່າງໆທີ່ທ່ານພົບນັ້ນມີຂໍ້ພຣະທັມທີ່ກ່າວເຖິງເຊຣາພິມໄດ້ໃຊ້ສີ່ປີກຂອງທົກປີກທີ່ມີນັ້ນປິດໜ້າຂອງພວກເຂົາທີ່ພຣະພັກຂອງພຣະເຈົ້າບໍ່? ມີພຣະທັມຕອນໃດທີ່ຊ່ອຍທ່ານໃຫ້ເຫັນຄວາມບໍຣິສຸດຂອງພຣະເຈົ້າ? ເພາະດ້ວຍເຫດໃດ?

ເມື່ອທ່ານຄິດເຖິງຄວາມບໍຣິສຸດຂອງພຣະເຈົ້າເຮັດໃຫ້ທ່ານມີຄວາມຮູ້ສຶກຢ່າງໃດ?

ທ່ານເຫັນຕົວຂອງທ່ານເປັນຢ່າງໃດ? ທ່ານເຫັນພຣະເຈົ້າເປັນຢ່າງໃດ?

○ ຕົວຂອງທ່ານເອງ

○ ສຳລັບພຣະເຈົ້າ

ເມື່ອເບິ່ງພຣະເຈົ້າດ້ວຍຄວາມຈິງໃຈຈະເຮັດໃຫ້ພວກເຮົາລະນຶກເຫັນຄວາມບໍຣິສຸດຂອງພຣະເຈົ້າ.

## ໒. <u>ຮັບສາຣະພາບຄວາມບາບຂອງທ່ານ</u> (ເອຊາຢາ 6:4-7)

ໃຫ້ອ່ານພຣະທັມເອຊາຢາ 6:4-5. ເອຊາຢາມີທ່າທີຢ່າງໃດເມື່ອລາວພົບວ່າ ລາວຢືນຢູ່ຕໍ່ໜ້າຂອງພຣະເຈົ້າຜູ້ຊົງບໍຣິສຸດ?

__ ລາວສັຣເສີນພຣະເຈົ້າ.
__ ລາວຮູ້ສຶກວ່າລາວບໍ່ສະອາດ.
__ ລາວສຳນຶກເຖິງຄວາມບາບຂອງລາວ.
__ ລາວແລ່ນອອກຈາກພຣະວິຫານ.

ໃຫ້ສັງເກດເບິ່ງທ່າທີສອງຢ່າງທີ່ເອຊາຢາໄດ້ສະແດງອອກ. 1) ລາວມີຄວາມຮູ້ສຶກວ່າລາວມີຄວາມຜິດແລະບໍ່ມີຄຸນຄ່າອັນໃດເລີຍ. 2) ລາວເຂົ້າໃຈວ່າຄວາມຜິດຂອງລາວນັ້ນເປັນທາງສ່ວນຕົວແລະສ່ວນຮວມອີກດ້ວຍ.

ທ່ານໄດ້ປະເຊີນກັບຄວາມບໍຣິສຸດຂອງພຣະເຈົ້າຢູ່ບ່ອນໃດແລະຢ່າງໃດ?

ທ່ານອາດຈະສັງເກດເຫັນວ່າ ບາງຄັ້ງແມ່ນຢູ່ໃນລະຫວ່າງການນະມັສການຮວມໝູ່ ແລະບາງຄັ້ງກໍແມ່ນການນະມັສການສ່ວນຕົວ ທ່ານກັບພຣະເຈົ້າ. ທ່ານມີທ່າທີຢ່າງໃດຕໍ່ຄວາມບໍຣິສຸດຂອງພຣະເຈົ້າ?

ປະສົບການຂອງການເປັນພຍານເຖິງຄວາມບໍຣິສຸດຂອງພຣະເຈົ້າເປັນເຫດໃຫ້ເອຊາຢາສຳນຶກເຖິງຄວາມບາບຂອງລາວ ແລະຮູ້ວ່າລາວຈະຕ້ອງໄດ້ຮັບການຊຳຣະຄວາມຜິດບາບຂອງລາວ. ເພື່ອໃຫ້ຄວາມສຳພັນຂອງລາວກັບພຣະເຈົ້າເປີດກວ້າງແລະບໍຣິສຸດ ລາວຕ້ອງການໄດ້ຮັບການໃຫ້ອະພັຍແລະການຊຳຣະລ້າງ. ຖ້າປາສຈາກສິ່ງດັ່ງກ່າວແລ້ວລາວຈະບໍ່ພ້ອມເທື່ອໃນການຮັບໃຊ້ພຣະເຈົ້າ. ໃນຂນະທີ່ພຣະເຈົ້າຊົງຈັດຕຽມລາວໃຫ້ໄປຮ້ອງໃຫ້ປະຊາຊົນກັບໃຈຄືນມາຫາພຣະເຈົ້າ ສິ່ງທີ່ຈຳເປັນນັ້ນ ກ່ອນອື່ນແມ່ນລາວຈະຕ້ອງມີປະສົບການຂອງການກັບໃຈແລະໄດ້ຮັບການໃຫ້ອະພັຍຈາກພຣະເຈົ້າໃນຊີວິດຂອງຕົວລາວເອງເສັຽກ່ອນ.

ທ່ານຕ້ອງການຈະກັບໃຈແລະຮັບເອົາການໃຫ້ອະພັຍຈາກພຣະເຈົ້າບໍ່?

## 3. <u>ຕັດສິນໃຈຮັບໃຊ້ພຣະເຈົ້າ</u> (6:8-13)

ເມື່ອເອຊາຢາປະເຊີນກັບຄວາມບໍຣິສຸດຂອງພຣະເຈົ້າແລະລາວເຫັນຄວາມບົກພ່ອງຂອງລາວ ພຣະເຈົ້າພ້ອມແລ້ວທີ່ຈະເປີດເຜີຍພາຣະກິຈຂອງພຣະອົງໃຫ້ເຫັນ. ຫລັງຈາກພຣະເຈົ້າໄດ້ຍົກເລີກຄວາມຜິດຂອງລາວແລະໃຫ້ອະພັຍບາບລາວແລ້ວ ພຣະອົງຊົງຕັ້ງຄຳຖາມຂຶ້ນ. ໃຫ້ອ່ານພຣະທັມເອຊາຢາ 6:8-10. ໃຫ້ຂີດກ້ອງຄຳຖາມນັ້ນ. ເອຊາຢາຕອບຄຳຖາມຂອງພຣະເຈົ້າວ່າຢ່າງໃດ?

__ ໃຫ້ຂ້ານ້ອຍໄປອ້ອນວອນເບິ່ງກ່ອນ
__ ຂ້ານ້ອຍບໍ່ດີພໍ
__ ຂ້ານ້ອຍຈະໄປດອກ ໂຜດໃຊ້ຂ້ານ້ອຍຖ້ອນ
__ ບໍ່ມີຜູ້ອື່ນບໍຢາກຈະຮັບໄປ?

ມີຂໍ້ສັງເກດທີ່ສຳຄັນຢູ່ວ່າ ເອຊາຢາຄົງຈະບໍ່ໄດ້ຍິນ ຫລືບໍ່ເຂົ້າໃຈຄຳຖາມຂອງພຣະເຈົ້າ ຖ້າລາວບໍ່ໄດ້ຖືກຊຳຣະບາບຂອງລາວ. ບາງຄັ້ງພວກເຮົາສົງສັຍໄປວ່າ ເປັນຫຍັງພຣະເຈົ້າບໍ່ໃຊ້ພວກເຮົາໃຫ້ມີສະມັດຕະພາບ ແລະອາດຈະເປັນຍ້ອນພວກເຮົາຊຸກເຊື່ອງບາບທີ່ຍັງບໍ່ໄດ້ສາຣະພາບເທື່ອ.

ຕອນແລກ ເບິ່ງເຫມືອນກັບວ່າເປັນພາຣະກິຈທີ່ເປັນໄປບໍ່ໄດ້. ເອຊາຢາຖືກສັ່ງໃຫ້ນຳເຣື່ອງການຕັດສິນລົງໂທດໄປປະກາດແກ່ຊົນຊາດອິສຣາເອນ ຖ້າພວກເຂົາຫາກບໍ່ກັບໃຈມາຫາພຣະເຈົ້າ. ແນ່ນອນການຊົງຮ້ອງຈາກພຣະເຈົ້າເປັນພາຣະກິຈທີ່ບໍ່ງ່າຍຈັກລີ້ໃຫ້ກັບຊີວິດຂອງລາວ. ບໍ່ມີອັນໃດຈະຮັບຮອງວ່າປະຊາຊົນຈະເຊື່ອຟັງ. ພຣະເຈົ້າຊົງຮູ້ແລ້ວວ່າ

ຈິດໃຈຂອງປະຊາຊົນນັ້ນແຂງກະດ້າງ. ພຣະເຈົ້າຊົງບອກກັບລາວວ່າຢ່າງໃດກ່ຽວກັບການຕອບສນອງຂອງປະຊາຊົນນັ້ນ (ຂໍ້ທີ 10)? ໃຫ້ຂຽນອອກມາເປັນຄຳເວົ້າຂອງທ່ານເອງ.

ທ່ານເຄີຍໄດ້ຍິນພຣະເຈົ້າຊົງຮ້ອງໃຫ້ທ່ານເຮັດອັນໃດອັນນຶ່ງເພື່ອພຣະອົງບໍ່? __ ເຄີຍ __ບໍ່ເຄີຍ
__ ພຣະເຈົ້າບໍ່ເຄີຍເວົ້າກັບຂ້າພະເຈົ້າຈັກເທື່ອ
__ ຂ້າພະເຈົ້າບໍ່ຫມັ້ນໃຈເທື່ອ. ໃຫ້ອະທິບາຍຄຳຕອບຂອງທ່ານຢູ່ຂ້າງລຸ່ມນີ້.

ປະຊາຊົນຈະຕອບຮັບ ຫລືບໍ່ກໍຕາມ ຫນ້າທີ່ຂອງພວກເຮົາຈະຕ້ອງປະກາດຂ່າວຂອງພຣະເຈົ້າ. ພວກເຮົາຈະຕ້ອງຕັດສິນໃຈເຮັດຕາມພາຣະກິຈທີ່ໄດ້ມອບຫມາຍໃຫ້ ບໍ່ວ່າຜົນສະທ້ອນຄືນມາຈະເປັນຢ່າງໃດ.

ທ່ານຈະອະທິບາຍວ່າຢ່າງໃດຄວາມຜູກພັນລະຫວ່າງ ນິມິດຂອງເອຊາຢາກ່ຽວກັບຄວາມບໍຣິສຸດຂອງພຣະເຈົ້າໃນພຣະວິຫານແລະການຖືກຮ້ອງຂອງລາວໃຫ້ຮັບໃຊ້?

ແມ່ນຫຍັງທີ່ເຮັດໃຫ້ເອຊາຢາເຫມາະສົມກັບພາຣະກິຈທີ່ພຣະເຈົ້າຊົງຮ້ອງລາວໃຫ້ເຮັດໃຫ້ສຳເຣັດ?

ທ່ານຈະຕ້ອງເຮັດຢ່າງໃດເພື່ອທ່ານຈະໄດ້ເຮັດໃຫ້ພາຣະກິຈທີ່ພຣະເຈົ້າຊົງຮ້ອງທ່ານໃຫ້ສຳເຣັດ?

ທູນຂໍໃຫ້ພຣະເຈົ້າເຮັດອັນໃດອັນນຶ່ງໃນຊີວິດຂອງທານ.

ເອຊາຢາກໍມີຄຳຖາມເຫມືອນກັນ. ໃຫ້ອ່ານພຣະທັມເອຊາຢາ 6:11-13 ແລະໃຫ້ຫມາຍຄຳຖາມດັ່ງກ່າວ. ມັນເປັນການຍາກທີ່ຈະຮັບໃຊ້ພຣະເຈົ້າຕໍ່ໄປ ເມື່ອບໍ່ເຫັນຜົນເກີດຂຶ້ນກັບຕາໃຫ້ເຫັນ. ໃຫ້ສລູບຄຳຕອບຂອງພຣະເຈົ້າເບິ່ງດູ.

ບໍ່ວ່າຈະເກີດເຫດໃດກໍຕາມ ປະເທດຊາດຈະຖືກທຳຮ້າຍໃຫ້ເພພັງລົງແລະຖືກລົງໂທດຈາກພຣະເຈົ້າກໍຕາມ ເອຊາຢາຍັງຈະສືບຕໍ່ພາຣະກິຈຂອງລາວຢູ່ບໍ່ຢຸດບໍ່ເຊົາ. ແມ່ນຫຍັງເປັນແຮງຈູງໃຈໃຫ້ແກ່ລາວ? ລາວໄດ້ຮັບກຳລັງມາຈາກໃສເພື່ອດຳເນີນຕໍ່ໄປ? ອາດຈະແມ່ນປະສົບການທີ່ລາວໄດ້ເຫັນພຣະເຈົ້າໃນພຣະວິຫານໃຫ້ລາວມີຄວາມກ້າຫານແລະແຂງແກ່ນສູ້ທົນຕໍ່ໄປ.

ພຣະເຈົ້າໄດ້ຮ້ອງໃຫ້ທ່ານເຮັດຫຍັງແດ່? ໃນຂນະທີ່ພວກເຮົາໃຊ້ຊີວິດຢູ່ອີກເບື້ອງນຶ່ງຂອງໄມ້ກາງແຂນໃນປະຈຸບັນ ພຣະເຢຊູຊົງມີພາຣະກິຈມອບຫມາຍໃຫ້ທຸກຄົນທີ່ຕິດຕາມພຣະອົງເຫມືອນກັນ. ເມື່ອພວກເຮົາໄດ້ປະເຊີນກັບຄວາມບໍຣິສຸດຂອງພຣະເຈົ້າຢ່າງແທ້ຈິງແລ້ວ ພວກເຮົາຈະບໍ່ໄປບອກຄົນອື່ນກໍບໍ່ໄດ້.

ທ່ານມີໂອກາດແບ່ງປັນຂ່າວປະເສີດກ່ຽວກັບເຣື່ອງຄວາມລອດໃຫ້ຄົນອື່ນຢ່າງໃດ? ໃຫ້ທ່ານບັນທຶກບ່ອນທີ່ທ່ານໄປເປັນປະຈຳ ບ່ອນທີ່ທ່ານມີໂອກາດເປັນພຍານເຣື່ອງຂ່າວປະເສີດ ເຊັ່ນ ຕລາດ, ຮ້ານອາຫານ, ຫລືປັ້ມນ້ຳມັນ.

1. 2. 3. 4.

ທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງເຮັດໃຫ້ທ່ານເປັນຜູ້ຕັ້ງຕໍ່ກັບການຊົງຮ້ອງຂອງພຣະອົງໃນການຮັບໃຊ້. ມີຄົນສ່ວນຫນ້ອຍທີ່ພຣະເຈົ້າຮ້ອງໃຫ້ພວກເຂົາມາຮັບໃຊ້ເປັນອາຊີບສະເພາະຂອງພວກເຂົາ ແຕ່ພວກເຮົາສ່ວນຫລາຍແລ້ວ ແມ່ນພວກເຮົານຳຂ່າວປະເສີດໄປບ່ອນທີ່ພວກເຮົາໄປແຕ່ລະວັນ. ສຳລັບເອຊາຢາແລ້ວ ລາວໄດ້ພົບພຣະເຈົ້າແລະນິມິດເຫັນຄວາມບໍຣິສຸດຂອງພຣະເຈົ້າ ເຊິ່ງບັງຄັບລາວໃຫ້ຕອບສນອງໃນການຮັບໃຊ້.

ມີທາງໃດແດ່ທີ່ທ່ານໄດ້ຕອບສນອງຕໍ່ການຊົງຮ້ອງຂອງພຣະເຈົ້າ ເພື່ອໃຫ້ຮັບໃຊ້ພຣະອົງ?

(ອຸປຖັມໂດຍ ລຊບສ www.lsbf.org)

# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 19 ກັນຍາ 2004 ( 9-19-2004)

---

## <u>ການຮູ້ຈັກກັບພຣະເຈົ້າຜ່ານທາງພຣະເຢຊູ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ 14:1-14

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຽງແຕ່ເຊື່ອແລະໄວ້ວາງໃຈໃນພຣະເຢຊູ ຄົນເຮົາສາມາດຮູ້ຈັກກັບພຣະເຈົ້າໄດ້ ແລະໄດ້ຮັບປະສົບການຄວາມລອດພົ້ນຈາກພຣະອົງ.

**<u>ຂໍ້ພຣະຄັມພີທີ່ສຳຄັນ:</u>** ພຣະເຢຊູຊົງຕອບລາວວ່າ, "ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14:6)

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຈະຊ່ອຍທ່ານໃຫ້ມີຄວາມໝັ້ນໃຈວ່າ ທ່ານຮູ້ຈັກກັບພຣະເຈົ້າໄດ້ ໂດຍຜ່ານທາງພຣະເຢຊູ.

## <u>ພຣະເຢຊູຊ່ອຍໃຫ້ຂ້າພະເຈົ້າຮູ້ຈັກກັບພຣະເຈົ້າໄດ້ຢ່າງໃດ?</u>

ນັກຂຽນຄຣິສຕຽນທີ່ດີເລີດຄົນນຶ່ງ ຊີ. ເອສ. ລູອິສ (C.S. Lewis) ໄດ້ຂຽນໄວ້ໃນປຶ້ມເຫລັ້ມນຶ່ງ, *ແກ່ນແທ້ແຫ່ງຄຣິສຕະສາສນາ (Mere Christianity):* "ຂ້າພະເຈົ້າກຳລັງພຍາຍາມທີ່ຈະປ້ອງກັນບໍ່ໃຫ້ຜູ້ໃດກ່າວດ້ວຍຄວາມໂງ່ຈ້າ ມີຫລາຍຄັ້ງຄົນມັກກ່າວວ່າ "ຂ້ອຍພ້ອມທີ່ຈະຮັບວ່າພຣະເຢຊູເປັນຜູ້ສອນສິນທັມໄດ້ຢ່າງດີເລີດ ແຕ່ບໍ່ຮັບວ່າເພິ່ນເປັນພຣະເຈົ້າຕາມທີ່ເພິ່ນອ້າງ" ນັ້ນຄືສິ່ງນຶ່ງທີ່ບໍ່ຕ້ອງເວົ້າ ຫາກຄົນທັມມະດາເວົ້າຢ່າງພຣະເຢຊູເວົ້າ ຄົນນັ້ນຈະບໍ່ໄດ້ເປັນຜູ້ສອນສິນທັມທີ່ຍິ່ງໃຫຍ່ເລີຍ ເພາະຖ້າບໍ່ເປັນຄົນບ້າພໍໆກັນກັບຄົນທີ່ອ້າງວ່າຕົນເອງເປັນໃຜ ກໍຕ້ອງເປັນພະຍາມານຈາກນາຮົກ ທ່ານຕ້ອງຕັດສິນໃຈເອງວ່າຊາຍຄົນນີ້ເປັນບຸດຂອງພຣະເຈົ້າຫລືເປັນຄົນບ້າ ຫລືອັນໃດທີ່ຮ້າຍກວ່ານັ້ນ ທ່ານອາດຈະຄິດວ່າພຣະອົງໂງ່ ແລະບໍ່ຍອມຟັງພຣະອົງເລີຍ ທ່ານອາດຈະຖົ່ມນ້ຳລາຍໃສ່ພຣະອົງ ແລະປະຫານພຣະອົງດ້ວຍຂໍ້ຫາວ່າພຣະອົງເປັນຜີ ຫລືທ່ານອາດຈະກົ້ມລົງທີ່ພຣະບາດຂອງພຣະອົງ ແລະເອີ້ນພຣະອົງເປັນອົງພຣະຜູ້ເປັນເຈົ້າແລະພຣະເຈົ້າ ນັ້ນກໍແລ້ວແຕ່ທ່ານ ແຕ່ຢ່າໃຫ້ເຮົາທຳເປັນຜູ້ອວດຮູ້ໂດຍກ່າວວ່າ ພຣະອົງເປັນຄຣູທີ່ສລາດຄົນນຶ່ງ ພຣະອົງບໍ່ໄດ້ຊົງເປີດທາງໃຫ້ເຮົາຄິດເຊັ່ນນັ້ນ ແລະບໍ່ໄດ້ຊົງເປີດເຜີຍມີເຈຕນາທີ່ຈະເປີດເຜີຍເຊັ່ນນັ້ນເລີຍ."[1]

ທ່ານແລະຂ້າພະເຈົ້າຄິດຢ່າງໃດກ່ຽວກັບພຣະເຢຊູ? ພຣະອົງກ່າວຢ່າງແຈ່ມແຈ້ງຈາກຄຳຕອບຂອງພຣະອົງ ແຕ່ຄວາມສຳຄັນນັ້ນແມ່ນຢູ່ໃນຄຳຄອບຂອງພວກເຮົາເອງ. ທ່ານມີພຶດທິການໂຕ້ຕອບຢ່າງໃດໃນຂໍ້ຄວາມຂອງພຣະອົງ "ເຮົາເປັນທາງນັ້ນ?" ທ່ານໄດ້ຮັບກຳລັງໃຈຈາກຂໍ້ຄວາມເຫລົ່ານັ້ນບໍ່ ຫລືວ່າສງົບສົນເທົ່ ເໝືອນກັບພວກສາວົກຂອງພຣະອົງ? ທ່ານໄດ້ພົບແລ້ວບໍ່ວ່າພຣະອົງຊົງເປັນທາງນັ້ນໃນຊີວິດຂອງທ່ານ ແລະໄວ້ວາງໃຈໃນພຣະອົງ? ໃຫ້ພວກເຮົາມາອ່ານເພື່ອພົບຫາຄຳຕອບ.

[1] ຊີ. ເອສ. ລູອິສ, *ແກ່ນແທ້ແຫ່ງຄຣິສຕະສາສນາ* (ກຸງເທບ, ກະນົກບັນນາສານ, 1998) ໜ້າທີ 99

## <u>ສຶກສາພຣະຄັມພີ</u>

1. **<u>ພຣະເຢຊູຊົງຈັດແຈ່ງບ່ອນໃຫ້</u>** (ໂຢຮັນ 14:1-4)

ເປັນຫຍັງຈິດໃຈຂອງພວກສາວົກຈຶ່ງວຸ້ນວາຍ? ໃຫ້ທົບທວນເບິ່ງພຣະທັມໂຢຮັນ ບົດທີ 13 ມີຫລາຍສິ່ງທີ່ພຣະເຢຊູ

ໄດ້ກ່າວແລະໄດ້ກະທຳເຊິ່ງພວກເຂົາບໍ່ເຂົ້າໃຈ. ໃຫ້ໝາຍໃສ່ຂໍ້ຄວາມເຊິ່ງທ່ານຄິດວ່າເປັນຕົ້ນເຫດທີ່ສ້າງຄວາມໜຸ້ນວາຍຂຶ້ນໃນຈິດໃຈຂອງພວກເຂົາ:

- ຖືກລ້າງຕີນ
- ໄດ້ຍິນວ່າຜູ້ນຶ່ງໃນພວກເຂົາຈະທໍຣະຍົດຕໍ່ພຣະອົງ
- ໄດ້ຍິນວ່າຜູ້ນຶ່ງໃນພວກເຂົາຈະປະຕິເສດພຣະອົງ
- ຈັດຕຽມພວກເຂົາໃນເຫດການທີ່ຈະເກີດຂຶ້ນ

ໃຫ້ອ່ານພຣະທັມໂຢຮັນ 14:1-4 ແລະໃຫ້ສລູບຂໍ້ຄວາມເນັ້ນໜັກຂອງພຣະເຢຊູເຂົ້າເປັນສອງຫາສາມຄຳ.

ພຣະເຢຊູບໍ່ໄດ້ພຍາຍາມຈະບອກພາບພົດຂອງສວັນໃຫ້ພວກສາວົກຂອງພຣະອົງ ແຕ່ພຣະອົງຊົງຢາກໃຫ້ພວກເຂົາໄດ້ຮັບຄວາມໝັ້ນໃຈວ່າພວກເຂົາຈະໄດ້ພົບກັບພຣະອົງແລະຢູ່ຮ່ວມກັນອີກ. ການພັດພາກຈາກກັນຈະຕ້ອງເກີດຂຶ້ນ ແຕ່ບໍ່ແມ່ນສຸດຢູ່ບ່ອນນັ້ນ ເພາະວ່າພຣະອົງມີຄວາມຄາດໝາຍວ່າພວກເຂົາຈະໄດ້ຢູ່ນຳພຣະອົງໃນວັນນຶ່ງຂ້າງໜ້າ. ພຣະອົງຊົງເຕືອນພວກເຂົາວ່າ ໃຫ້ພວກເຂົາໄວ້ວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນພຣະອົງເໝືອນກັນ.

ຄຳສັນຍາຂອງພຣະອົງໃນຂໍ້ທີ 1-4 ຈະເລົ້າໂລມໃຈຂອງພວກສາວົກໄດ້ຢ່າງໃດ?

ສຳລັບພວກເຮົາທີ່ຢູ່ໃນສະພາບຢ່າງດຽວກັນນີ້ເດ ພວກເຮົາກໍບໍ່ຕ່າງໄປຫຍັງເລີຍຈາກພວກເຂົາໃນສມັຍກ່ອນ. ພວກເຮົາຮູ້ຢູ່ວ່າບໍ່ຄວນກະວົນກະວາຍ ແຕ່ເບິ່ງເໝືອນກັບວ່າສະຖານະການສິ່ງແວດລ້ອມຫຸ້ມຮັດພວກເຮົາເຕັມທີ. ໃຫ້ຂຽນອອກມາສິ່ງທີ່ເຮັດໃຫ້ທ່ານມີຄວາມໜຸ້ນວາຍໃນຈິດໃຈຂອງທ່ານ:

ພຣະເຢຊູຊົງກ່າວຕໍ່ພວກສາວົກຂອງພຣະອົງວ່າຢ່າໃຫ້ຈິດໃຈຂອງພວກເຂົາໜຸ້ນວາຍໄປໃນໂລກອັນໜຸ້ນວາຍນີ້. ທ່ານໄດ້ຮັບກຳລັງໃຈອັນໃດແດ່ທີ່ໄດ້ຮູ້ວ່າພຣະອົງຊົງ **ໄປຈັດແຈງບ່ອນໄວ້ສຳລັບທ່ານ?**

ຄວາມຮູ້ດັ່ງກ່າວຈະນຳມາໃຊ້ກັບເຫດການທີ່ກໍໃຫ້ເກີດຄວາມໜຸ້ນວາຍໃນຂນະນັ້ນໄດ້ຢ່າງໃດ?

ໃຫ້ອ້ອນວອນຂອບຄຸນພຣະເຈົ້າ ຄວາມຈິງແລ້ວພຣະເຈົ້າຊົງຈັດແຈງບ່ອນໄວ້ໃຫ້ລູກຂອງພຣະອົງ ແລະທ່ານບໍ່ຈຳເປັນອີກທີ່ຈະຕ້ອງ **ໜຸ້ນວາຍ** ຖ້າຊີວິດຂອງທ່ານຢູ່ໃນອ້ອມມືຂອງພຣະອົງ.

## ຂ. <u>ພຣະເຢຊູຊົງເປັນທາງໄປຫາພຣະບິດາ</u> (ໂຢຮັນ 14:5-7)

ຊື່ຄົນນັ້ນສຳຄັນຫລາຍ. ພວກເຮົາມີຄວາມຮູ້ສຶກດີໃຈ ເມື່ອຄົນໃດຄົນນຶ່ງຈື່ຊື່ຂອງພວກເຮົາ. ພວກເຮົາຖືວ່າສຳຄັນຫລາຍໃນການໃສ່ຊື່ລູກຂອງພວກເຮົາ. ຊື່ຂອງຄົນໃນພຣະຄັມພີນັ້ນ ບໍ່ແມ່ນເປັນພຽງແຕ່ບອກຊື່ຄົນໃດຄົນນຶ່ງເທົ່ານັ້ນ ຊື່ຂອງແຕ່ລະຄົນບົ່ງບອກເຖິງລັກສະນະແລະຄຸນສົມບັດຂອງເຂົາດ້ວຍ. ພຣະຄັມພີໄດ້ບົ່ງບອກວ່າພຣະເຢຊູຖືກເອີ້ນໃຫ້ເປັນຫລາຍຢ່າງ ພຣະອົງຖືກເອີ້ນວ່າເປັນອັນນັ້ນອັນນີ້ອີກ. ໃຫ້ຂຽນມາເບິ່ງວ່າພຣະເຢຊູໄດ້ຖືກເອີ້ນວ່າເປັນອັນໃດແດ່ເຊິ່ງພວກເຮົາເອີ້ນວ່າແມ່ນຊື່ຂອງພຣະອົງ:

1)

2)

3)

ທ່ານອາດຈະຂຽນລົງໄປວ່າ ພຣະເມຊີອາ, ພຣະຜູ້ໂຜດໃຫ້ພົ້ນ, ພຣະອາຈານ, ພຣະເຈົ້າ, ຄຣູຫລືນາມຊື່ອື່ນໆທີ່ໄດ້ກ່າວເຖິງການຊົງເປັນຂອງພຣະອົງ. ໃນປຶ້ມພຣະທັມໂຢຮັນ ພຣະເຢຊູຊົງເອີ້ນພຣະອົງເອງວ່າ "ເຮົາເປັນ________." ພຣະອົງຊົງກ່າວວ່າ "ເຮົາເປັນປະຕູ" ແລະ "ເຮົາເປັນອາຫານຝ່າຍຊີວິດ." ໃຫ້ອ່ານພຣະທັມໂຢຮັນ 14:5-7.

ໃຫ້ຂີດກ້ອງສາມຄໍາ "ເຮົາເປັນ" (ທັງສາມນັ້ນຢູ່ໃນຂໍ້ທີ 6). ຄໍາໃດໃນສາມຄໍານັ້ນມີຄວາມຫມາຍຫລາຍສໍາລັບທ່ານ? ເພາະດ້ວຍເຫດໃດ?

ຂໍ້ຄວາມໃດທີ່ມີຜົນສະທ້ອນຕໍ່ທ່ານຫລາຍທີ່ສຸດ?

- ○ ຂ້າພະເຈົ້າບໍ່ຫມັ້ນໃຈວ່າມີຫົນທາງຫລາຍສາຍປານໃດທີ່ຈະໄປຫາພຣະເຈົ້າໄດ້.
- ○ ຂ້າພະເຈົ້າໄວ້ວາງໃຈພຣະເຢຊູ ເຊິ່ງເປັນທາງດຽວເທົ່ານັ້ນທີ່ຈະນໍາໄປຫາພຣະເຈົ້າ.
- ○ ຂ້າພະເຈົ້າຈໍາໄດ້ວ່າໄວ້ວາງໃຈພຣະເຢຊູ ແຕ່ຮູ້ສຶກວ່າບໍ່ໄດ້ຮັບຄວາມລອດພົ້ນ.
- ○ ຂ້າພະເຈົ້າມີຄວາມແນ່ໃຈວ່າຄວາມລອດພົ້ນຂອງຂ້າພະເຈົ້າຢູ່ໃນພຣະເຢຊູ.

ພຣະເຢຊູຊົງສອນໄວ້ວ່າ ພຣະອົງເທົ່ານັ້ນເປັນທາງໄປຫາພຣະເຈົ້າ ບໍ່ແມ່ນທາງນຶ່ງໃນຈໍານວນຫລາຍໆທາງ.

## 3. <u>ພຣະເຢຊູຊົງສະແດງໃຫ້ເຫັນພຣະບິດາ</u> (ໂຢຮັນ 14:8-12)

ໃນພຣະທັມໂຢຮັນ 14:7 ພຣະເຢຊູຊົງກ່າວຕໍ່ພວກສາວົກຂອງພຣະອົງວ່າ ຮູ້ຈັກພຣະອົງກໍຈະຮູ້ຈັກພຣະບິດາ.

ທໍາອິດນັ້ນ ໂທມາ (ຂໍ້ທີ 5) ແລະຕໍ່ມາ ຟີລິບ (ຂໍ້ທີ 8) ບໍ່ໄດ້ເຂົ້າໃຈໃນສິ່ງທີ່ພຣະອົງຊົງສອນ. ໃຫ້ອ່ານພຣະທັມ ໂຢຮັນ 14:8-12 ແລະກ່າວເຖິງຄວາມບໍ່ເຂົ້າໃຈຂອງຟີລິບ. ໃຫ້ສລຸບຂໍ້ຄວາມທີ່ພຣະເຢຊູຕອບຟີລິບ.

ທ່ານອາດຈະຕອບໄດ້ຫລາຍທາງ, ແຕ່ທ່ານສາມາດກ່າວວາ "ພຣະເຢຊູຊົງສະແດງໃຫ້ເຫັນພຣະບິດາ." ພຣະເຢຊູບໍ່ໄດ້ກ່າວວ່າພຣະອົງແລະພຣະບິດາເປັນຕົນດຽວກັນ (one person) ແຕ່ພຣະອົງຍັງຊົງເປັນນຶ່ງໃນແກ່ນແທ້ແລະພຣະລັກສະນະກັບພຣະເຈົ້າ. ແຕ່ລະຕົນມີພຣະລັກສະນະແຕກຕ່າງກັນໃນຕຣີເອກນຸພາບ.

ພຣະເຢຊູຊົງບອກໃຫ້ຟີລິບທົບທວນການກະທໍາຂອງພຣະອົງໃນຖ້າມກາງພວກເຂົາ ເຊິ່ງເປັນເວລາສາມປີທີ່ພຣະອົງຊົງເປັນພຍານໃຫ້ພວກເຂົາເຫັນ. ພຣະອົງຊົງສະແດງໃຫ້ພວກເຂົາເຫັນວ່າພຣະບິດານັ້ນເປັນຢ່າງໃດ. ໃຫ້ນໍາໄປຄຶດເບິ່ງການຮັບໃຊ້ຂອງພຣະເຢຊູ ແລະຂຽນອອກມາເບິ່ງ ບາງສິ່ງບາງຢ່າງທີ່ໄດ້ຊົງສະແດງອອກໃຫ້ເຫັນກ່ຽວກັບພຣະບິດາ.

- ______________________________________________
- ______________________________________________
- ______________________________________________

ພຣະເຢຊູຊົງບອກຟີລິບວ່າປະສົບການທີ່ລາວໄດ້ຮັບນັ້ນຄົງຈະສອນລາວບາງຢ່າງ. ພຣະອົງຊົງອະທິບາຍຕໍ່ໄປວ່າທຸກໆຖ້ອຍຄໍາທີ່ພຣະອົງຊົງກ່າວໄປນັ້ນບໍ່ແມ່ນຂອງພຣະອົງເອງ ແຕ່ແມ່ນພຣະບິດາຊົງກ່າວຕໍ່ພວກເຂົາໂດຍຜ່ານທາງພຣະອົງ. ທ່ານເຫັນວ່າອັນໃດສໍາຄັນໃນຄໍາໃຫ້ການຂອງພຣະເຢຊູ?

ທຸກສິ່ງທຸກຢ່າງນັ້ນຂຶ້ນຢູ່ກັບພຣະບິດາ ເມື່ອເປັນຄວາມຈິງກັບພຣະເຢຊູແລ້ວ ຈະເປັນຄວາມຈິ່ງຫລາຍເທົ່າໃດຫນໍສໍາລັບພວກເຮົາ? ພຣະເຢຊູຊົງຕັ້ງມາຕຖານໃຫ້ທຸກສິ່ງເປັນໄປໃຫ້ສໍາເຣັດ ຫລືກ່າວໃນພຣະນາມຂອງພຣະອົງສໍາລັບພວກສາວົກແລະພວກເຮົາເຊັ່ນກັນໃນສມັຍນີ້.

ພຣະເຢຊູຊົງກ່າວຖ້ອຍຄໍາອັນປລາດໃຈໃນຂໍ້ທີ 12. ໃຫ້ຂີດກ້ອງຖ້ອຍຄໍານັ້ນແລະນໍາມາພິຈາຣະນາເບິ່ງ. ດ້ວຍເຫດໃດພຣະເຢຊູສະຖິດຢູ່ໃນທ່ານຊົງ **ເຮັດການໃຫຍ່ກວ່ານັ້ນອີກ** ໃນການສະແດງພຣະບິດາ ເມື່ອພຣະອົງສັນຈອນໄປມາໃນໂລກນີ້?

ເຈ. ຣັດເຊີນ ເຫເລີ, ຜູ້ປະກາດຂ່າວປະເສີດໄປປະເທດຈີນ ແຜ່ນດິນໃຫຍ່ ເຄີຍກ່າວວ່າ "ພາຣະກິດຂອງພຣະເຈົ້າເຮັດໃຫ້ສໍາເຣັດຕາມທິດທາງຂອງພຣະອົງ ແລະພຣະອົງຈະປະທານໃຫ້ຢ່າງບໍ່ຂາດເຂີນ." ໃຫ້ເລືອກເອົາສາດຣວນີ້

ໃຫ້ຕັດສິນໃຈມອບໃຫ້ພຣະເຈົ້າດ້ວຍພະລັງຂອງພຣະເຈົ້າບໍ່ແມ່ນກຳລັງຂອງຕົວທ່ານເອງ. ອະນຸຍາດໃຫ້ພຣະເຢຊູສະແດງພຣະບິດາໃຫ້ໂລກເຫັນໂດຍຜ່ານທາງທ່ານຕລອດໄປ. ໃຫ້ບອກພຣະອົງໃນຄຳອ້ອນວອນຂອງທ່ານວັນນີ້.

## 4. <u>ພຣະເຢຊູຊົງຕອບຄຳອ້ອນວອນ</u> (ໂຢຮັນ 14:13-14)

ທ່ານເຄີຍຖືກຮ້ອງຂໍໃຫ້ເຮັດອັນໃດອັນນຶ່ງເຊິ່ງທ່ານຄິດວ່າທ່ານບໍ່ມີຄວາມສາມາດພຽງພໍບໍ່? ທ່ານອາດຈະຕອບວ່າ, "ໃຫ້ຫາຄົນອື່ນສາ ຂ້ອຍບໍ່ສາມາດເຮັດ." ທ່ານເຮັ່ນຣີ ແບລກກາບີ (Henry Blackaby) ເວົ້າວ່າ, "ເມື່ອມາເຖິງຈຸດນຶ່ງໃນຊີວິດຂອງຂ້າພະເຈົ້າ ຖ້າຫາກຂ້າພະເຈົ້າຮູ້ສຶກວ່າພຣະເຈົ້າໄດ້ມອບຫມາຍກິຈການອັນໃດອັນນຶ່ງໃຫ້ຂ້າພະເຈົ້າເມື່ອຂ້າພະເຈົ້າຫມັ້ນໃຈວ່າກິຈການນັ້ນຂ້າພະເຈົ້າເຮັດໄດ້ດ້ວຍຕົນເອງໂດຍບໍ່ຕ້ອງການພຣະເຈົ້າຊ່ອຍ ຂ້າພະເຈົ້າຮູ້ວ່າກິຈການນັ້ນອາດຈະບໍ່ແມ່ນມາຈາກພຣະເຈົ້າ."[1]

ໃຫ້ອ່ານພຣະທັມໂຢຮັນ 14:13-14 ແລະໃຫ້ຂີດກ້ອງສິ່ງທີ່ພວກສາວົກຕ້ອງເຮັດ, ເຮັດຢ່າງໃດ, ແລະມີຈຸດປະສົງອັນໃດ.

ພວກສາວົກຄິດຕຶກໃຈວ່າຈະຕ້ອງໄດ້ເຮັດກິຈການທີ່ພຣະເຢຊູໄດ້ເຮັດໄປນັ້ນ. ພວກເຂົາຄິດຕໍ່ໄປອີກວ່າພວກເຂົາຈະຕ້ອງໄດ້ເຮັດກິຈການໃຫຍ່ກວ່ານັ້ນອີກ. ພຣະເຢຊູບໍ່ໄດ້ຫມາຍຄວາມວ່າກິຈການນັ້ນຈະໃຫຍ່ເກີນກວ່າແຮງຂອງພວກເຂົາ ແຕ່ຂົງເຂດຂອງກິຈການນັ້ນຈະແຜ່ກວ້າງອອກໄປ. ໃນຄາວນັ້ນພຣະອົງຖືກຈຳກັດຂອບເຂດ ພຣະອົງບໍ່ສາມາດຈະຢູ່ທຸກຫົນທຸກແຫ່ງໄດ້ໃນເວລາດຽວກັນ. ທຸກສິ່ງທຸກຢ່າງຈະມີການປ່ຽນແປງ. ພຣະທັມກິຈການ 1:8 ສະແດງໃຫ້ເຫັນວົງກວ້າງຂອງການຮັບໃຊ້ຂອງພວກເຂົາໃນພາຍຫນ້າ.

ເມື່ອໄດ້ບອກພວກສາວົກເຮັດກິຈການນັ້ນແລ້ວ, ພຣະເຢຊູໄດ້ບອກພວກເຂົາເຮັດຢ່າງໃດແລະເພາະດ້ວຍເຫດໃດ. ຂໍ້ຄວາມສຳຄັນນັ້ນແມ່ນຢູ່ໃນຂໍ້ທີ 12-13. ພວກເຂົາຈະທູນຂໍໃນ **ພຣະນາມ** ຂອງພຣະອົງ ແລະພຣະອົງຈະຕອບຄຳອ້ອນວອນຕາມພຣະປະສົງເພື່ອພຣະບິດາຈະໄດ້ຮັບການສັຣເສີນ.

[1] *Experiencing the Word New Testament* (Nashville: Holman Bible Publishers, 2000), 250.

### ທູນຂໍໃນພຣະນາມຂອງພຣະເຢຊູ-ແມ່ນຫຍັງກັນນີ້?

ທູນຂໍໃນພຣະນາມຂອງພຣະເຢຊູຫມາຍຄວາມວ່າຢ່າງໃດ? ໃຫ້ຫມາຍໃສ່ຂໍ້ຄວາມທີ່ທ່ານເຫັນພ້ອມ:

- ○ ເພື່ອມ້ວນທ້າຍຄຳອ້ອນວອນຂອງທ່ານ " ໃນພຣະນາມຂອງພຣະເຢຊູ, ອາແມນ"
- ○ ເພື່ອເປີດການອ້ອນວອນຂອງທ່ານ "ພຣະເຢຊູເຈົ້າຂ້າ"
- ○ ໃຫ້ທູນຂໍຕາມພຣະປະສົງຂອງພຣະອົງ
- ○ ໃຫ້ທູນຂໍໃນສິ່ງທີ່ຈະສຸມໃສ່ການສັຣເສີນພຣະເຢຊູ

ພຣະເຢຊູບໍ່ໄດ້ກ່າວວ່າທຸກໆຄັ້ງທີ່ພວກສາວົກທູນຂໍເພື່ອການສ່ວນຕົວ ພວກເຂົາຈະໄດ້ຮັບຕາມສິ່ງທີ່ພວກເຂົາທູນຂໍ ແລະພຣະອົງກໍບໍ່ໄດ້ໃຫ້ສູດຂອງການອ້ອນວອນເພື່ອເອົາໄປເລົ່າເຊັ່ນກັນ. ແຕ່ວ່າ ເມື່ອພວກເຂົາທູນຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ ແລ້ວພຣະອົງຈະຕອບຄຳອ້ອນວອນນັ້ນ. ພຣະອົງຈະຕອບຄຳອ້ອນວອນຂອງພວກເຂົາ ແລະຜົນທີ່ຕາມມານັ້ນແມ່ນພຣະບິດາໄດ້ຮັບການສັຣເສີນ.

ໃຫ້ທວນຄິດເບິ່ງຄຳອ້ອນວອນຂອງທ່ານໃນບໍ່ນານມານີ້. ແມ່ນຫຍັງເປັນສິ່ງທີ່ຈູງໃຈໃຫ້ທ່ານອ້ອນວອນຂໍ?

ຈາກພຣະທັມຂອງວັນນີ້ ໃຫ້ຂຽນຄຳອ້ອນວອນ ຫລືອ້ອນວອນຕາມແບບເຊິ່ງພຣະເຢຊູໄດ້ໃຫ້ມານັ້ນ. ໃຫ້ອ້ອນວອນຂໍໃຫ້ທ່ານຖືກໃຊ້ໃຫ້ນຳເຣື່ອງຣາຊແຜ່ນດິນຂອງພຣະເຈົ້າອອກໄປ, ໃນທາງຂອງພຣະອົງ, ເພື່ອນຳການສັຣເສີນມາໃຫ້ພຣະບິດາເທົ່ານັ້ນ.

(ອຸປຖັມໂດຍ ລຊບສ www.lsbf.org)

## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 26 ກັນຍາ 2004 (9-26-2004)

---

# ໄດ້ຮັບການໜູນໃຈດ້ວຍວ່າຮູ້ຈັກກັບພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ພຣະນິມິດ 1:4-6, 9-18
**ພຣະຄັມພີແຫ່ງຄວາມຈິງ:** ດ້ວຍວ່າຮູ້ຈັກກັບພຣະເຈົ້າ ຜູ້ທີ່ເຊື່ອສາມາດໄດ້ຮັບການໜູນໃຈ ເຖິງແມ່ນວ່າຈະຢູ່ໃນສະພາບອັນໜ້າຢ້ານກົວ.
**ຂໍ້ພຣະຄັມພີທີ່ສຳຄັນ:** ເມື່ອຂ້າພະເຈົ້າໄດ້ເຫັນພຣະອົງ ຂ້າພະເຈົ້າໄດ້ກົ້ມລົງແທບພຣະບາດຂອງພຣະອົງເໝືອນດັ່ງຄົນທີ່ຕາຍແລ້ວ ແຕ່ພຣະອົງຊົງຢຽດພຣະຫັດກ້ຳຂວາບາຍຂ້າພະເຈົ້າແລ້ວຊົງກ່າວວ່າ, "ຢ່າຊູ່ຢ້ານ ຝ່າຍເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ" (ພຣະນິມິດ 1:17-18).
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຈະຊ່ອຍທ່ານໃຫ້ໄດ້ຮັບການໜູນໃຈດ້ວຍວ່າພຣະເຈົ້າຊົງສະຖິດຢູ່ນຳ.

## ມີຄວາມສັມພັນກັບພຣະເຈົ້າໃຫ້ການໜູນໃຈຂ້າພະເຈົ້າໄດ້ຢ່າງໃດ?

ນາງຈອນນີ ແອເຣັກເຊິນ ທາດາ (Jonie Eareckson Tada) ນັ່ງລໍ້ຂອງຄົນພິການຕັ້ງແຕ່ນາງຍັງເປັນສາວ ຫລັງຈາກນາງໄປໂດດນ້ຳຫລິ້ນກັບເພື່ອນ ແລ້ວຫົວຂອງນາງໄປວັດກັບຫີນໃນພື້ນນ້ຳ. ນາງຕ້ອງໄດ້ນັ່ງລໍ້ ນາງຊ່ອຍຕົນເອງບໍ່ໄດ້. ແຕ່ສິ່ງເຫລົ່ານີ້ບໍ່ໄດ້ຢັບຢັ້ງນາງເລີຍ ນາງເປັນນັກຮ້ອງ, ນັກແຕ້ມ, ນັກຂຽນ, ແລະນາງຍັງມີອົງການຮັບໃຊ້ຂອງນາງອີກ. ໃນ*ສວັນບ້ານແທ້ຂອງທ່ານ (In Heaven Your Real Home),* ນາງໄດ້ກ່າວໄວ້ວ່າ ພວກເຮົາຈະລະນຶກເຖິງຄວາມສຸກ ເມື່ອພວກເຮົາຖືກເຮັດໃຫ້ສົມບູນໃນສວັນ. ນາງບໍ່ໃຫ້ຄວາມຈິງທີ່ເກີດຂຶ້ນໃນປະຈຸບັນຈຳຈ່ອງຊີວິດຂອງນາງໄວ້ ແຕ່ນາງມີຄວາມຫວັງໃນອະນາຄົດທີ່ຈະມາ.

ນາງຂຽນໄວ້ວ່າ, "ວັນນຶ່ງພວກເຮົາຈະຖືກສວມໃນຄວາມຊອບທັມ ... ຮຸ່ງເຮືອງເຫລືອງເຫລື້ອມແລະປິຕິຍິນດີ. ຂ້າພະເຈົ້າບໍ່ສາມາດຈະລໍຄອຍວັນນັ້ນເພື່ອຈະໄດ້ສວມໃນຄວາມຊອບທັມ. ບໍ່ມີຮອຍດ່າງພ້ອຍຈາກບາບ ... ຈິດໃຈຂອງຂ້າພະເຈົ້າແລະຈິດໃຈຂອງທ່ານຮ່ວມກັນສັຣເສີນດ້ວຍຄວາມຕື່ນເຕັ້ນ. ພວກເຮົາຈະໄດ້ສາມັກຄີທັມກັບພຣະບິດາແລະພຣະບຸດຢ່າງເຕັມປ່ຽມ. ເວລານັ້ນເປັນເວລາວິເສດສຸດສຳລັບຂ້າພະເຈົ້າ."[1]

ອັຄສາວົກໂຢຮັນຖືກຄຸກຢູ່ໃນເກາະປັດໂມ ເຊິ່ງຢູ່ໃນສະພາບການບໍ່ດີເລີຍ. ແຕ່ລາວສາມາດໃຊ້ຊີວິດຢູ່ເໜືອສະພາບການດັ່ງກ່າວ ເພາະລາວມີຄວາມໝັ້ນໃຈວ່າພຣະເຈົ້າຊົງສະຖິດຢູ່ນຳລາວ. ສະພາບຂອງທ່ານເປັນຢ່າງໃດໃນປັດຈຸບັນນີ້? ຄວາມຫວັງຂອງທ່ານເປັນຢ່າງໃດ? ທ່ານມີຄວາມຫວັງໃນພຣະເຈົ້າຊົງສະຖິດຢູ່ນຳທ່ານບໍ່ ແລະຄວາມຫວັງຂອງທ່ານຢູ່ໃນສວັນແຜ່ນດິນຂອງພຣະເຈົ້າຕລອດໄປບໍ່?

[1] Jonie Eareckson Tada, *Heaven your Real Home*, (Grand Rapids:Zondervan 1995). 41.

## ສຶກສາພຣະຄັມພີ

### 1. ຄວາມໝັ້ນໃຈຂອງການຊົງໄຖ່ (ພຣະນິມິດ 1:4-6)

ການຂຽນຈົດໝາຍສົ່ງໄປທາງໄປສະນີເກືອບຈະບໍ່ມີອີກຕໍ່ໄປ. ໂທຣະສັບຂອງພວກເຮົາໃນສມັຍນີ້ ແມ່ນໂທຣະສັບມືຖື ແລະຂຽນໜັງສືຫາກັນກໍໃຊ້ຄອມພິວເຕີ ແລ້ວສົ່ງໄປທາງອິນເຕີແນັດທີ່ເອີ້ນກັນວ່າ ອີເມວ (email). ຈົດໝາຍເກືອບຈະວ່າເປັນຂອງແປກປລາດໄປເລີຍ. ສຳລັບຈົດໝາຍຂອງອັຄສາວົກໂຢຮັນແລ້ວ ກໍແປກປລາດໄປໜ້ອຍນຶ່ງກວ່າຈົດໝາຍທັງໝົດ. ລາວຜູ້ດຽວເທົ່ານັ້ນທີ່ເຫລືອຢູ່ໃນຖ້ານກາງສາວົກເລັ້ມແລກຂອງພຣະເຢຊູ ແລະລາວໄດ້ສົ່ງ

ຈົດໝາຍໄປເຖິງ **ຄຣິສຕະຈັກທັງເຈັດທີ່ຢູ່ໃນແຂວງອາເຊັຽ.**

ຄຣິສຕະຈັກຢູ່ທຸກຫົນທຸກແຫ່ງຢູ່ໃນໂລກຖືກຂົ່ມເຫງຢ່າງຮ້າຍແຮງ. ໂຢຮັນໄດ້ຂຽນຈົດໝາຍໄປໃຫ້ການໜູນໃຈພວກພີ່ນ້ອງຄຣິສຕຽນທີ່ກຳລັງຖືກທໍຣະມານຢ່າງແສນສາຫັດ. ໃຫ້ອ່ານພຣະທັມພຣະນິມິດ 1:4-6. ລາວໄດ້ສະແດງຄວາມນັບຖື ເຊິ່ງປະກອບດ້ວຍພຣະຄຸນແລະສັນຕິສຸກ (ຂໍ້ທີ 4). ແຕ່ຜູ້ສົ່ງນັ້ນໄດ້ສະແດງຕົວໃນທ່າທີອັນປລາດ. ການສະແດງເຖິງຄວາມນັບຖືນັ້ນແມ່ນມາຈາກຜູ້ໃດ? **ຜູ້ຊົງ** ___________________, **ຜູ້ຊົງ** ________________, **ຜູ້ຈະ** ______________________. ໂຢຮັນໄດ້ອ້າງເຖິງຜູ້ໃດ?

ເມື່ອໂຢຮັນກ່າວເຖິງ **ຜູ້ຊົງ** ສອງເທື່ອແລະ **ຜູ້ຈະ** ເທື່ອນຶ່ງໃນຄວາມຄິດຂອງລາວນັ້ນ ທ່ານຄິດວ່າຢ່າງໃດ?

ໃຫ້ຂີດກ້ອງຂໍ້ຄວາມທີ່ບັນລະຍາຍເຖິງນາມຊື່ ຫລືຕຳແໜ່ງເຊິ່ງໂຢຮັນໄດ້ໃສ່ໃຫ້ພຣະເຢຊູ (ຂໍ້ທີ 5). ໃນການບັນລະຍາຍນັ້ນ ລາວໄດ້ໜູນໃຈຜູ້ທີ່ເຊື່ອໃຫ້ **ສັດຊື່** ເພາະວ່າການຮັບໃຊ້ຂອງພຣະເຢຊູຢູ່ໃນຊີວິດຂອງພວກເຂົາ. ພຣະເຢຊູຊົງເປັນຜູ້ເຮັດໃຫ້ໂລກຮູ້ຈັກກັບພຣະເຈົ້າ. ມີຫລາຍຄົນໃນຄຣິສຕະຈັກອາດຈະຖືກຂົ່ມເຫັງຈົນເຖິງແກ່ຊີວິດຍ້ອນຄວາມເຊື່ອ ແຕ່ພຣະເຢຊູຊົງເປັນຜູ້ແລກ **ເປັນຄືນມາຈາກຕາຍ** ເຊິ່ງເປັນການໜູນໃຈໃຫ້ພວກເຂົານັ້ນ ຄວາມຕາຍບໍ່ແມ່ນຈຸດຈົບຂອງຊີວິດອັນແທ້ຈິງ. ພວກເຂົາກໍຈະໄດ້ຮັບປະສົບການຂອງການຄືນມາຈາກຕາຍເໝືອນກັນ. **ກັບທັງຊົງຄອບຄອງກະສັດທັງຫລາຍໃນໂລກ** ພຣະເຢຊູມີອຳນາດເໜືອຜູ້ນຳທຸກຄົນໃນໂລກນີ້. ໃນທີ່ສຸດຜູ້ນຳທຸກຄົນໃນໂລກນີ້ຈະຕ້ອງໃຫ້ການຕໍ່ກະສັດອົງຍິ່ງໃຫຍ່ສູງສຸດໃນຣາຊອານາຈັກອັນຍິ່ງໃຫຍ່ຂອງພຣະອົງ.

ຂໍ້ຄວາມທີ່ກ່າວມານີ້ບໍ່ແມ່ນເປັນຄວາມໄຝ່ຝັນຂອງໂຢຮັນຊື່ໆ. ແມ່ນຫຍັງໃຫ້ຄວາມໝັ້ນໃຈແກ່ໂຢຮັນ? (ຂໍ້ 5-6)

ຄວາມໝັ້ນໃຈຂອງລາວມີພື້ນຖານອັນໝັ້ນແກ່ນໃນຄວາມເຊື່ອ ເຊິ່ງລາວມີໃນຜູ້ນຶ່ງທີ່ຮັກລາວແລະຊົງເຮັດໃຫ້ລາວເປັນອິສຣະຈາກ **ການຜິດບາບດ້ວຍພຣະໂລຫິດຂອງພຣະອົງ**. ບໍ່ພຽງແຕ່ໂຢຮັນເທົ່ານັ້ນທີ່ມີຄວາມໝັ້ນໃຈຂອງຄວາມລອດພົ້ນ ແຕ່ "**ພວກເຮົາ**" ບົ່ງບອກເຖິງທຸກຄົນທີ່ໄວ້ວາງໃຈເຊື່ອໃນພຣະເຢຊູຄຣິດເໝືອນກັນ.

ຂໍ້ພຣະທັມເປີດເປັນແບບເພງສັຣເສີນຖວາຍກຽດພຣະເຢຊູ. ພຣະອົງຊົງສະແດງຄວາມຮັກໃຫ້ແກ່ມະນຸດຊາດໂດຍສລະພຣະໂລຫິດຂອງພຣະອົງຫລັ່ງໄຫລ ເພື່ອພວກເຂົາຈະໄດ້ຮັບການໄຖ່ຈາກຄວາມຜິດບາບຂອງພວກເຂົາ.

ໃຫ້ເອົາເຈັ້ຽຂາວໃບນຶ່ງ ແລ້ວຂຽນເປັນເພງຂອງທ່ານເອງດ້ວຍຄຳສັຣເສີນພຣະເຢຊູ ເຊິ່ງພຣະອົງໄດ້ທຳກິຈການໃນຊີວິດຂອງທ່ານ.

ພຣະອົງບໍ່ພຽງແຕ່ **ປົດປ່ອຍພວກເຮົາຈາກການຜິດບາບ** ເທົ່ານັ້ນ ແຕ່ພຣະອົງຍັງ **ຕັ້ງເຮົາທັງຫລາຍໄວ້ໃຫ້ເປັນອານາຈັກ** ແລະ **ເປັນປະໂລຫິດຂອງພຣະອົງ** ເຊິ່ງເປັນໜ້າທີ່ສຳຄັນແກ່ຊີວິດໃນການຊົງໄຖ່ໃຫ້ກັບຄົນອື່ນ.

## ຂ. <u>ຄວາມໝັ້ນໃຈທີ່ພຣະເຈົ້າຊົງມີຄວາມຫ່ວງໃຍ</u> (ພຣະນິມິດ 1:9-11)

ໃນພຣະທັມພຣະນິມິດ 1:7-8 ໄດ້ເນັ້ນໃຫ້ເຫັນວ່າພຣະເຈົ້າຊົງແຕ່ງຕັ້ງພຣະເຢຊູໃຫ້ເປັນຜູ້ປົກຄອງຣາຊອານາຈັກຂອງພຣະອົງ. ເມື່ອພຣະອົງສະເດັດກັບມາທຸກຄົນຈະເຫັນພຣະອົງ. ພຣະອົງຊົງເປັນອາລະຟາແລະໂອເມຄາ ພະຍັນສະນະຕົວຕົ້ນແລະຕົວສຸດທ້າຍຂອງພາສາກຣີກ ເຊິ່ງບົ່ງບອກໃຫ້ເຫັນວ່າພຣະເຈົ້າຊົງຄອບຄອງປະວັດສາຂອງມະນຸດທັງໝົດ.

ຂໍ້ຄວາມທີ່ກ່າວມານີ້ສຳຄັນຫລາຍ ໃນຂະນະທີ່ໂຢຮັນຈະໄດ້ກ່າວເຖິງຄວາມທຸກຍາກລຳບາກແລະຖືກທໍຣະມານທີ່ພວກເຂົາຈະໄດ້ປະເຊີນ. ທ່ານໄດ້ປະເຊີນກັບຄວາມລຳບາກ ຫລືຖືກທໍຣະມານອັນໃດແດ່?

ໂຢຮັນຖືກເນຣະເທດໄປຢູ່ເກາະປັດໂມ ເຊິ່ງເປັນອານານິຄົມຂອງຜູ້ທີ່ເຮັດຜິດກົດໝາຍເພື່ອໄວ້ກັກຂັງນັກໂທດການເມືອງ. ລາວຖືກຄຸກຍ້ອນລາວເປັນຄຣິສຕຽນ. ໃຫ້ຂີດວົງກົມໃສ່ເຫດຜົນທີ່ລາວໄດ້ຮັບຄວາມລຳບາກ (ຂໍ້ທີ 9).

**ໃນວັນຂອງອົງພຣະຜູ້ເປັນເຈົ້າ** ໂຢຮັນ **ປະກອບໄປດ້ວຍພຣະວິນຍານ** ນະມັສການແຕ່ເດິກຂອງວັນທີ່ຖືກແຍກອອກມາ. ບາງຄັ້ງ ການນະມັສການເປັນສິ່ງສຸດທ້າຍຂອງບາງຄົນທີ່ຢາກຈະເຮັດ ເມື່ອພວກເຂົາປະເຊີນກັບຄວາມທຸກລຳບາກແລະທໍຣະມານ. ພວກເຮົາຈະຮຽນອັນໃດຈາກຕົວຢ່າງດັ່ງກ່າວ?

ເປັນຫຍັງການນະມັສການຈຶ່ງໃຫ້ຄວາມໝັ້ນໃຈຂອງການຊົງສະຖິດຢູ່ຂອງພຣະເຈົ້າ?

ໂຢຮັນມີປະສົບການອັນໃດ ໃນຂະນະທີ່ລາວຕິດສະນິດກັບພຣະວິນຍານ?

ໂຢຮັນຖືກບອກໃຫ້ເຮັດຫຍັງແດ່ (ຂໍ້ທີ 10-11)?

ເພື່ອໃຫ້ມີກຳລັງປະເຊີນກັບການຖືກຂົ່ມເຫງ ຄຣິສຕະຈັກໃນແຂວງອາເຊັຽຕ້ອງການພຣະຄຳກ່ຽວກັບເຣື່ອງອະນາຄົດເຊິ່ງຈະນຳຄວາມຫວັງມາໃຫ້ໃນເຫດການປັດຈຸບັນ. ໂຢຮັນກຳລັງຈະເຜີຍພຣະຄຳໃຫ້ຟັງ. ໃຫ້ເບິ່ງຕາມແຜນທີ່ແລະສັງເກດເບິ່ງຊື່ຂອງແຕ່ລະເມືອງທີ່ມີຄຣິສຕະຈັກຕັ້ງຢູ່. ແຜນທີ່ນັ້ນຊື້ໄດ້ຕາມຮ້ານຂາຍປຶ້ມຄຣິສຕຽນ.

## 3. <u>ຄວາມຫມັ້ນໃຈທີ່ພຣະເຈົ້າຊົງສະຖິດຢູ່ນຳ</u> (ພຣະນິມິດ 1:12-16)

ໃຫ້ອ່ານພຣະທັມພຣະນິມິດ 1:12-13. ທ່ານຈະມີທ່າທີຢ່າງໃດ ຖ້າຫາກວ່າທ່ານຫລຽວຫລັງເບິ່ງແລ້ວເຫັນ **ຜູ້ນຶ່ງເຫມືອນບຸດມະນຸດ** ຍືນຢູ່ທາງຫລັງຂອງທ່ານແລະເບິ່ງທ່ານຢູ່ເຫມືອນກັບໂຢຮັນໄດ້ບັນລະຍາຍ? ຂ້າພະເຈົ້າຄົງຈະ... __ ສລົບໄປ __ ແລ່ນໄປຫາພຣະອົງ __ ແລ່ນຫນີຈາກພຣະອົງ __ ຕົວແຂງ __ ປິຕິຍິນດີແລະຮ້ອງສັຣເສີນ __ ຈັບມືຖາມສະບາຍ.

ຖືກຊັກນຳໄປທາງ **ພຣະສຸຣະສຽງ** ໂຢຮັນຫລຽວໄປທາງທີ່ສຽງດັງມາ. ໃຫ້ຂີດກ້ອງພຣະທັມຂໍ້ນີ້ເຊິ່ງໂຢຮັນໄດ້ບັນທຶກໃນສິ່ງທີ່ລາວເຫັນ.

ໃນຂໍ້ທີ 20 ໂຢຮັນໄດ້ກ່າວວ່າເຄື່ອງຮອງຕີນໂຄມນັ້ນເປັນເຄື່ອງຫມາຍ. ໃຫ້ເບິ່ງພຣະທັມຂໍ້ນີ້ ແລະໃຫ້ຂຽນອອກມາເຄື່ອງຫມາຍເຫລົ່ານີ້ໄດ້ສະແດງເຖິງອັນໃດ.

ເປັນຫຍັງເຄື່ອງຫມາຍນີ້ຈຶ່ງຖືກກັບເຫດການນີ້? (ໃຫ້ເບິ່ງພຣະທັມມັດທາຍ 5:14-16 ຄຳເວົ້າຂອງພຣະເຢຊູ)

ໂຢຮັນວາດພາບພຣະເຢຊູຢູ່ຖ້າມກາງຄຣິສຕະຈັກທັງເຈັດ ໄດ້ສ້າງຄວາມຫມັ້ນໃຈໃຫ້ແກ່ພວກເຂົາເຊິ່ງພຣະອົງຊົງສະຖິດຢູ່ໃນຖ້າມກາງຄວາມລຳບາກຂອງພວກເຂົາ.

ໃຊ້ເປັນຖ້ອຍຄຳຫລືເປັນພາບເພື່ອບັນລະຍາຍເຖິງ ທ່ານແລເຫັນພຣະເຢຊູຊົງສະຖິດໃນຄວາມສັມພັນກັບທ່ານແລະເຫດການຂອງໃນປັດຈຸບັນນີ້. (ໃຫ້ເອົາເຈັ້ຽໃບນຶ່ງອອກມາຂຽນໃສ່ ຖ້າຫາກຕ້ອງການ).

ໃນສມັຍພຣະສັນຍາເດີມ ມີແຕ່ປະໂລຫິດເທົ່ານັ້ນທີ່ເຂົ້າໄປໃນບໍຣິເວນອັນສັກສິດທີ່ຕັ້ງເຄື່ອງຮອງຕີນໂຄມ. ໃນປັດຈຸບັນນີ້ ຣາຊອານາຈັກໃຫມ່ຂອງພວກປະໂລຫິດທີ່ໄດ້ສ້າງຂຶ້ນຈາກພຣະໂລຫິດຂອງພຣະຄຣິດ ເຄື່ອງຮອງຕີນໂຄມປາກົດຢູ່ທີ່ພຣະພັກຂອງພຣະເຢຊູ. ໃນຖານະເປັນປະໂລຫິດ (ຂໍ້ທີ 6) ຄຣິສຕຽນໄດ້ຮັບສິດເຂົ້າຊ້ອງຫນ້າກັບພຣະພັກຂອງພຣະເຈົ້າ ເຖິງແມ່ນວ່າຈະຢູ່ໃນຖ້າມກາງຄວາມລຳບາກແລະທໍຣະມານ.

ປະໂລຫິດໄດ້ນຳຄວາມຮຽກຮ້ອງຕ້ອງການຂອງປະຊາຊົນມາທູນຂໍຕໍ່ພຣະເຈົ້າ ແລະນຳຄຳບັນຊາຈາກພຣະເຈົ້າໄປກ່າວຕໍ່ປະຊາຊົນ. ໃນພຣະຄັມພີ ປະໂລຫິດຖວາຍເຄື່ອງບູຊາໃຫ້ພຣະເຈົ້າ, ສັ່ງສອນກົດບັນຍັດໃຫ້ກັບປະຊາຊົນ, ເຂົ້າໄປໃນທີ່ສັກສິດທີ່ສຸດຂອງຜ້າເຕັນ ຫລືພຣະວິຫານເພື່ອເຂົ້າເຝົ້າພຣະເຈົ້າ. ພວກເຮົາເປັນປະໂລຫິດໃນສມັຍນີ້ເຮັດອັນໃດແດ່?

ເມື່ອໂຢຮັນຫລຽວໄປທີ່ມາຂອງພຣະສຸຣະສຽງ ລາວຄົງຈະບໍ່ໄດ້ຕຽມພ້ອມກັບໃນສິ່ງທີ່ລາວເຫັນ. ຫລັງຈາກຫລຽວໄປຄັ້ງທຳອິດ ລາວຄົງຈະຫາຄຳເວົ້າທີ່ຈະມາບັນລະຍາຍ. ໃຫ້ອ່ານພຣະທັມພຣະນິມິດ 1:14-16. ການຊົງປາກົດຂອງພຣະເຢຊູນັ້ນສົມຄວນຈະເອົາໃຈໃສ່. ໂຢຮັນໄດ້ບັນລະຍາຍພຣະອົງເປັນຮູບຮ່າງຢ່າງໃດ?

ພຣະເກສາ ______________________ ພຣະເນດ ______________________

ພຣະບາດ ______________________ ພຣະສຸຣະສຽງ ______________________

**ພຣະເກສາ...** **ສີຂາວ** ເປັນສັນຍາລັກຂອງສະຕິປັນຍາແລະຣັບກຽດ. ພຣະອົງຊົງປັກຕາເບິ່ງ ບໍ່ມີໃຜຈະຫລີກຫນີຈາກ **ແປວໄຟ** ຈາກສາຍຕາຂອງພຣະອົງ. ພຣະອົງຊົງເບິ່ງວ່າໂລກເຮັດຢ່າງໃດກັບໄພ່ພົນຂອງພຣະອົງ. ກຳລັງຂອງພຣະບາດຂອງພຣະເຢຊູສະແດງໃຫ້ເຫັນວ່າພຣະອົງຈະຢຽບສັດຕຣູຂອງພຣະອົງແລະຈະເອົາຊະນະເຫນືອກວ່າກຳລັງຂອງຄວາມຊົ່ວຮ້າຍ. ພຣະສຸຣະສຽງຂອງພຣະອົງດັງເຫມືອນກັບສຽງນ້ຳຕົກຕາດ.

ເປັນດ້ວຍເຫດໃດການບັນລະຍາຍເຖິງພຣະຄຣິດໄດ້ນຳຄຳຫນູນໃຈມາສູ່ຜູ້ທີ່ກຳລັງປະເຊີນກັບການຖືກຂົ່ມເຫງ?

ການບັນລະຍາຍເຖິງຮູບພາບອັນສຸດທ້າຍໃນຂໍ້ທີ 16 ໄດ້ກ່າວເຖິງພະລັງແລະຣິດອຳນາດຂອງພຣະເຢຊູ. ໂຢຮັນ

ໄດ້ເວົ້າຢ່າງໃດໃນຂໍ້ຄວາມຕໍ່ໄປນີ້:

**ພຣະຫັດກ້ຳຂວາ** ________________ **ພຣະໂອດ** ________________ **ພຣະພັກ** ________________

**ດາວເຈັດດວງ** ຕໍ່ມາຫມາຍເຖິງທູດຂອງພຣະເຈົ້າ ຫລືຜູ້ສົ່ງຂ່າວຂອງຄຣິສຕະຈັກທັງເຈັດ, **ພຣະແສງ** ສະແດງໃຫ້ເຫັນອຳນາດຂອງພຣະເຈົ້າແລະພຣະຄັມຂອງພຣະອົງ ທັງເປັນການຕັດສິນອີກດ້ວຍ. ພຣະພັກຂອງພຣະອົງເຫມືອນດັ່ງດວງອາທິດທີ່ **ສ່ອງແສງກ້າ** ເຮັດໃຫ້ຄິດເຖິງປະສົບການທີ່ຜ່ານມາເມື່ອພຣະອົງຊົງປ່ຽນລັກສະນະພຣະກາຍ (ມັດທາຍ 17:1-6) ແລະປະທານແສງສວ່າງໃຫ້ແກ່ຄວາມມືດຂອງຄວາມບາບໃນໂລກນີ້.

ຮູບພາບທີ່ໂຢຮັນເຫັນນັ້ນສາມາດໃຫ້ການຫນູນໃຈແກ່ທ່ານ. ພາບທີ່ລາວໄດ້ບັນລະຍາຍມານັ້ນຈະຊ່ອຍທ່ານໃຫ້ປະເຊີນກັບໂລກເຊິ່ງບໍ່ຮູ້ຈັກກັບພຣະເຈົ້າໄດ້ຢ່າງໃດ?

ໃຫ້ນຳເອົາຮູບພາບອັນນຶ່ງທີ່ໄດ້ບັນລະຍາຍມານັ້ນ ແລະໃຫ້ນຳມາປະກອບກັບຊີວິດຂອງທ່ານ. ໃຫ້ອະທິບາຍເບິ່ງການຊົງປະກົດຂອງພຣະເຢຊູທີ່ໃຊ້ຮູບພາບຢ່າງນີ້ເປັນການຊ່ອຍໃຫ້ກຳລັງໃຈຂອງທ່ານເປັນພິເສດໃນວັນນີ້.

4. **<u>ຄວາມຫມັ້ນໃຈຂອງການຊົຍຊະນະ</u>** (ພຣະນິມິດ 1:17-18)

ໂຢຮັນໄດ້ສແດງຕອບນິມິດຂອງພຣະເຢຊູເຫມືອນກັນກັບພວກຜູ້ປະກາດພຣະທັມໃນພຣະສັນຍາເດີມ ໃນສິ່ງແວດລ້ອມຄ້າຍໆຄືກັນ. ໃຫ້ອ່ານພຣະທັມພຣະນິມິດ 1:17-18 ແລະໃຫ້ບັນລະຍາຍເບິ່ງວ່າໂຢຮັນສະແດງຕອບຢ່າງໃດ.

ພຣະເຢຊູຊົງໃຫ້ການຫນູນໃຈໂຢຮັນອີກໂດຍຢຽດພຣະຫັດກ້ຳຂວາຂອງພຣະອົງບາຍລາວແລະກ່າວຕໍ່ລາວ ເຊິ່ງເປັນຄຳເວົ້າທີ່ລາວເຄີຍໄດ້ຍິນມາກ່ອນເປັນເວລາຫລາຍຄັ້ງ.

ເປັນດ້ວຍເຫດໃດຈຶ່ງເປັນການເຫມາະສົມທີ່ໂຢຮັນບໍ່ຄວນຈະຢ້ານພຣະເຢຊູ ເຖິງແມ່ນພຣະອົງຈະປະກົດຕໍ່ລາວໃນຮູບຮ່າງຢ່າງນັ້ນ?

ໃຫ້ບັນລະຍາຍເບິ່ງ ເມື່ອການຊົງປະກົດຂອງພຣະເຢຊູຊົງຫນູນຈິດໃຈທ່ານ ແລະທ່ານບໍ່ຈຳເປັນມີຄວາມ **ຢ້ານ.**

ໃຫ້ສົມທຽບເບິ່ງ ການບັນລະຍາຍເຖິງຮູບພາບຂອງພຣະເຢຊູໃນພຣະທັມສອງຂໍ້ນີ້ (17-18) ກັບຮູບພາບຂອງພຣະອົງໃນພຣະທັມຂໍ້ທີ 8. ເປັນຫຍັງພຣະທັມຕອນນີ້ຈຶ່ງເປັນການຫນູນໃຈຄຣິສຕຽນຊ້ຳກັນ?

ເຖິງແມ່ນວ່າ ພຣະເຢຊູສູ້ທົນໄປຈົນເຖິງທີ່ສຸດທີ່ໄມ້ກາງແຂນແລະສິ້ນພຣະຊົນ, ພຣະອົງໄດ້ຊົຍຊະນະກັບຄວາມຕາຍ, ຟື້ນຂຶ້ນມາໃຫມ່ຢ່າງມີຊົຍ, ແລະຊົງພຣະຊົນຢູ່. ໃຫ້ຂີດອົງກົມໃສ່ຫົວຂໍ້ຂນານຂອງພຣະອົງໃນຂໍ້ທີ 18 ເຊິ່ງພຣະຊົງໃຊ້ປະກາດຕົວຂອງພຣະອົງເອງ.

ຄວາມຈິງທີ່ພຣະເຢຊູຊົງ **ມີຊີວິດຢູ່** ມີຄວາມຫມາຍອັນໃດສຳລັບທ່ານ?

ບໍ່ພຽງແຕ່ພຣະເຢຊູຊົງບັນລະຍາຍຕົວຂອງພຣະອົງເປັນຜູ້ມີຊີວິດຢູ່ເທົ່ານັ້ນ ແຕ່ພຣະອົງຊົງຖື **ຂໍກະແຈແຫ່ງຄວາມຕາຍ ແລະແຫ່ງແດນມໍຣະນາ** ອີກດ້ວຍ. ຄຳວ່າ ແດນມໍຣະນາ ຄວາມຫມາຍອັນຖືກຕ້ອງແລ້ວແມ່ນ "ຂຸມຝັງສົບ" ແລະບົ່ງບອກໃຫ້ເຫັນວ່າພຣະເຢຊູມີຊົຍຊະນະເຫນືອຂຸມຝັງສົບ ແລະຄວາມຕາຍບໍ່ແມ່ນສຸດຢູ່ກັບຫັ້ນ.

ຄວາມທຸກຍາກລຳບາກສຳລັບຄຣິສຕຽນແລ້ວ ແມ່ນເກີດຂຶ້ນຕັ້ງແຕ່ພຣະເຢຊູມາຕັ້ງຄຣິສຕະຈັກພຸ້ນ. ຄຣິສຕຽນສມັຍແລກຢູ່ໃນກຸງເຢຣູຊາເລັມຖືກທະຫານໂຣມຂັບໄລ່ແລະຊາວຢິວຖືກເຂັ່ນຂ້າ ແລະສຳລັບພວກເຂົາແລ້ວ ຄວາມທຸກຍາກລຳບາກເປັນຂອງປະຈຳວັນ.

ຄຣິສຕຽນໃນສມັຍຂອງຮິດເລີຂອງເຢຣະມັນ (Hitler's Germany) ແລະສມັຍຂອງສະຕາລິນຂອງໂຊວຽດ (Stalin's Soviet Union) ຄວາມທຸກຍາກລຳບາກຍ້ອນຖືກຂົ່ມເຫງເປັນຂອງແທ້ສຳລັບພວກເຂົາ. ຄຣິສຕຽນສມັຍນີ້ໃນຣາວັນດາ (Rwanda), ລາຍບີເຣັຽ (Liberia), ບອສເນັຽ (Bosnia), ອາຟາການິສທານ (Afghanistan), ກໍປະເຊີນກັບການຖືກຂົ່ມເຫງແລະຄວາມທຸກຍາກລຳບາກ.

ເມື່ອທ່ານປະເຊີນກັບອຸປສັກເພາະຄວາມເຊື່ອຂອງທ່ານ, ຄວາມທຸກຍາກລຳບາກເປັນຂອງແທ້ປະຈຳທ່ານ. ພວກເຮົາບໍ່ຮູ້ວ່າ ເມື່ອໃດພຣະເຢຊູຈະສະເດັດກັບມາ, ແຕ່ພວກເຮົາຮູ້ວ່າການສະເດັດກັບມາຢ່າງມີຊົຍຂອງພຣະອົງໃກ້ເຂົ້າມາແລ້ວຫລາຍກວ່າເກົ່າ. ທ່ານພ້ອມແລ້ວຫລືຍັງ?

(ອຸປຖັມໂດຍ ລຊບສ www.lsbf.org)

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 3 ຕຸລາ 2004 (10-3-2004)

---

## ສະແດງອອກເຖິງຄວາມຮັກ

**ເນື້ອເຣື່ອງໃນພຣະຄັມພີ :** (ລກ 7:36-50)

**ຄວາມຈິງໃນພຣະຄັມພີ :** ຄຣິສຕຽນທີ່ຮູ້ວ່າພຣະເຢຊູຮັກເຂົາຊ່ຳໃດນັ້ນ ໄດ້ຖືກດົນໃຈໃຫ້ສະແດງຄວາມຮັກຂອງເຂົາທີ່ມີຕໍ່ພຣະອົງນັ້ນອອກມາ.

**ພຣະຄັມພີຂໍ້ສຳຄັນ :** ເຫດສັນນັ້ນເຮົາບອກທ່ານວ່າ ຄວາມຜິດບາບຂອງຍິງນີ້ຊຶ່ງມີຫລາຍນັ້ນໄດ້ໂຜດຍົກເສັຽແລ້ວ ເພາະລາວຮັກຫລາຍ ແຕ່ຜູ້ທີ່ໄດ້ຮັບການຍົກໂທດນ້ອຍກໍຮັກນ້ອຍ. (ລກ 7:47)

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ສະແດງຄວາມຮັກຕໍ່ພຣະເຢຊູອອກມາ.

## ຈະສະແດງຄວາມຮັກຂອງຂ້າພະເຈົ້າຕໍ່ພຣະເຢຊູອອກມາຢ່າງໃດ?

ຍ.ນ. ດານາ ເຄ ນັກຂ່າວຈາກຊ່ອງຂ່າວ ເມືອງແນສວິວ ໄດ້ຮັບບັດ, ຈົດຫມາຍ ແລະອີແມວຫລາຍສະບັບຫລັງຈາກນາງໄດ້ເດີນທາງກັບມາຈາກປະເທດອີຣັກ ຮ່ວມກັບກອງການບິນຫມູ່ທີສາມ ຂອງກອງພັນການບິນທີ 101. ຮ້ອຍອາກາດເອກ ບອບ ເດລານີ, ຮອງຜູ້ກຳກັບຝູງບິນໃນກອງພັນທີສອງໃນກອງພົນນັ້ນ, ໄດ້ຂຽນເຣື່ອງຄົນອີຣັກຫນຸ່ມຄົນນຶ່ງວ່າ.

" ອາ ຣີຢາ ເປັນເຣື່ອງຂອງຄວາມສຳເຣັດ. ພວກຊາວບ້ານໄດ້ພາກັນໂຮ່ຮ້ອງດ້ວຍຄວາມດີໃຈຫລາຍ ເມື່ອພວກເຮົາໄດ້ເຂົ້າໄປໃນທີ່ນັ້ນ. ຣີຢາ ເປັນທີ່ເກີດຂອງ "ຄາລ" ຊຶ່ງເປັນສະມາຊິກຂອງຄະນະອີຣັກອິສຣະ. ຫລັງຈາກທີ່ໄດ້ຢູ່ຫ່າງຈາກປະເທດຂອງຕົນ ໃນທີ່ສຸດກໍໄດ້ມີໂອກາດພົບກັບແມ່ຂອງເພິ່ນທີ່ມີອາຍຸກາຍເຈັດສິບປີໄປແລ້ວ. ດານາ ເອີຍ, ຊາຍຄົນນັ້ນໄດ້ຄຸເຂົ່າລົງຈູບຕີນແມ່ຂອງລາວໃນຖ່າມກາງກຸ່ມຄົນທັງຫລາຍຊຶ່ງມີປະມານ 200 ຄົນ. ຖ້າຫາກວ່າເຈົ້າໄດ້ຢູ່ໃນທີ່ນັ້ນ ເຈົ້າຈະໄດ້ເຫັນເຫດການທີ່ຫນ້າຕື່ນເຕັ້ນແລະຈັບໃຈຫລາຍ.

ການສຶກສາຂອງພວກເຮົາໃນອາທິດນີ້ ພວກເຮົາຈະໄດ້ຮູ້ຈັກກັບອຳນາດຂອງຄວາມຫອມຫວານຂອງຄວາມຮັກທີ່ມອບໃຫ້ອົງພຣະຜູ້ເປັນເຈົ້າເຢຊູຄຣິດ. ທ່ານ " ຄາລ " ທີ່ໄດ້ສ່ຽງຕໍ່ການຫົວຂວັນແລະການລັງກຽດເພາະການຈູບຕີນແມ່ຂອງລາວ, ເຊັ່ນດຽວກັນກັບຍິງຄົນນຶ່ງໄດ້ເຂົ້າມາໃນເຮືອນຂອງຊີໂມນ ແລະໄດ້ຖອກເທຄວາມຮັກຂອງນາງໃຫ້ແກ່ພຣະເຢຊູ. ຂະນະທີ່ທ່ານໄດ້ພິຈາຣະນາເບິ່ງຕົວຢ່າງຂອງຄວາມຮັກທີ່ໄດ້ຖອກເທອອກມາຈາກໃຈແບບນີ້ແລ້ວ, ຈົ່ງຕັ້ງຄຳຖາມກັບຕົນເອງວ່າ, ຂ້າພະເຈົ້າຈະສະແດງຄວາມຮັກຂອງຂ້າພະເຈົ້າຕໍ່ພຣະເຢຊູຢ່າງໃດ?

## ສຶກສາພຣະຄັມພີ

### 1. ຄວາມຮັກທີ່ສະແດງອອກມາ: (ລກ 7:36-38)

ນັບແຕ່ປີ 1264 ເປັນຕົ້ນມາ, ທຸກໆຣະດູໃບໄມ້ປົ່ງ ບ້ານສະແປໂລໃນປະເທດອີຕາລີໄດ້ມີກິ່ນຫອມຈາກຜ້າພົມຢ່າງຫລວງຫລາຍແຜ່ກະຈາຍອອກໄປ, ຊຶ່ງນັກສິລະປະກອນໄດ້ບັລຍາຍວ່າ ເປັນງານອຸທິດເພື່ອພຣະຣັສມີຂອງພຣະເຈົ້າ. ນັກຂຽນຫນັງສືພິມຄົນນຶ່ງໄດ້ຂຽນວ່າ, " ຄວາມຫອມຈາກດອກໄມ້ຈຳນວນເປັນພັນໆດອກ, ຄວາມກົມກຽວ

ຂອງສີດອກໄມ້ ແລະກິ່ນຫອມຟຸ້ງຂອງດອກຊ້ອນຍັງຕິດຕາມມານຳຂ້າພະເຈົ້າຢູ່."

ຈົ່ງອ່ານ ລກ 7:36-38 ແລະຄິດເຖິງກິ່ນທີ່ຫອມຫວນຂອງນ້ຳຫອມທີ່ຖອກອອກມາໃສ່ພຣະບາດຂອງພຣະເຢຊູຈາກຍິງທີ່ບໍ່ໄດ້ຖືກເຊີນຄົນນັ້ນ.

ມີຫຍັງອີກແດ່ກ່ຽວກັບຍິງຄົນນີ້ທີ່ທ່ານສາມາດພິສູດໄດ້ວ່າມັນຄືກັນ? ຈົ່ງເພີ່ມເຕີມໃຫ້ຄົບເຕັມ " ການສົມທຽບຄວາມຮັກຕໍ່ພຣະເຢຊູ."

ທ່ານສາມາດຄິດເຖິງເວລາທີ່ທ່ານໄດ້ສ່ຽງພັຍເມື່ອທ່ານໄດ້ສະແດງຄວາມຮັກ ຫລືການອຸທິດຕົນຕໍ່ພຣະເຢຊູບໍ່?

▯ ແມ່ນແລ້ວ, ຂ້າພະເຈົ້າໄດ້ສ່ຽງເມື່ອ..........................................................................................

▯ ບໍ່, ຂ້າພະເຈົ້າບໍ່ເປັນຄົນມັກສ່ຽງ ແລະຈະບໍ່ສ່ຽງຕໍ່...........................................................................

ຈົ່ງຂີດວົງມົນທີ່ບັລຍາຍເຫດການນັ້ນ:

ທຳໃຫ້ຊື່ນບານໃຈ ທຳໃຫ້ທໍ້ໃຈ ທຳໃຫ້ອ່ອນເພັຽ ທຳໃຫ້ເກີດການດົນໃຈ
ທຳໃຫ້ຫຽຸ້ງໃຈ ທຳໃຫ້ມີກຳລັງໃຈ

ສລູບຄວາມແລ້ວ, ມັນເປັນ..........................................................................................................

ນ້ຳຫອມໃນກະອອມຫີນຂາວແມ່ນຊັບສົມບັດອັນແພງສຳລັບຍິງນັ້ນ. ແບບຢ່າງການທີ່ດສົງພຣະເຢຊູຂອງນາງໄດ້ດົນໃຈໃຫ້ທ່ານໃຊ້ຊັບສົມບັດຂອງທ່ານເພື່ອສະແດງເຖິງຄວາມຮັກຂອງທ່ານຕໍ່ພຣະອົງຢ່າງໃດ?

......... ຖວາຍເງິນທີ່ທ່ານໄດ້ສະສົມມາເພື່ອຈະໃຊ້ໃນການທ່ອງທ່ຽວ.

......... ຖວາຍບ້ານຂອງທ່ານເພື່ອເປັນບ່ອນສຶກສາພຣະຄັມພີ.

......... ໃຊ້ເວລາກັບຄອບຄົວຂອງຂ້າພະເຈົ້າ, ກັບເພື່ອນ, ແລະກັບຄົນອື່ນໆຫລາຍຂຶ້ນ.

......... ໃຊ້ປະສົບການແລະສິ່ງປະທານເພື່ອຊ່ອຍເຫລືອຄົນອື່ນ.

......... ອື່ນໆ :

## <u>2. ຄວາມຮັກໃນຮູບແບບທີ່ມີສີສັນແຕກຕ່າງກັນ, ພາກນຶ່ງ:</u> ( ລກ 7:39-46 )

ເມື່ອທ່ານເບິ່ງຄົນ, ທ່ານໄດ້ເຫັນຫຍັງແທ້? ທ່ານ ມຽວເຕີນ, ນັກຖ່າຍຮູບເອກະສານທີ່ມີຊື່ສຽງຄົນນຶ່ງ, ຂະນະນີ້ມີອາຍຸ 93 ປີ, ໄດ້ບັລຍາຍເຣື່ອງງານຂອງທ່ານໃນຣະຫວ່າງເສຖກິດທີ່ຝືດເຄືອງວ່າ, " ຄົນທັງຫລາຍໄດ້ສົນໃຈຂ້າພະເຈົ້າຫລາຍທີ່ສຸດ, ແລະຂ້າພະເຈົ້າຕ້ອງການໃຫ້ຄົນໃດຄົນນຶ່ງສົນໃຈຈຳພວກຄົນເຫລົ່ານັ້ນ, ຂ້າພະເຈົ້າບໍ່ສາມາດຈະເປັນຄົນບໍ່ເອົາໃຈໃສ່ຕໍ່ເຂົາເຈົ້າໄດ້ອີກຕໍ່ໄປ....ຊຶ່ງເຫມືອນກັບວ່າພວກເຂົາເປັນຄົນທີ່ຖືກຫລົງລືມໄປແລ້ວ." ເຊັ່ນດຽວກັນກັບຊ່າງຖ່າຍຮູບຄົນນັ້ນ ພຣະເຢຊູໄດ້ຊອກຫາຄົນທີ່ໄດ້ຖືກຫລົງລືມໄປແລ້ວ ແລະໄດ້ເຫັນຄວາມແຕກຕ່າງທີ່ຫລາຍຄົນບໍ່ໄດ້ເຫັນ.

ຈົ່ງອ່ານ ລກ 7:39-43. ຈົ່ງເຮັດລາຍການຂອງຄວາມແຕກຕ່າງທີ່ທ່ານໄດ້ພົບໃນການເບິ່ງເຫັນຂອງພຣະເຢຊູ ແລະການເບິ່ງເຫັນຂອງຊີໂມນ.

ການປະເມີນສະພາບການຂອງຊີໂມນນັ້ນ ▯ ເຮັດຖືກຕ້ອງບໍ? ▯ ບົກພ່ອງຫລືມີສ່ອງຫວ້າງ? ເປັນດ້ວຍເຫດໃດ?

ບາງເທື່ອພວກເຮົາກໍ " ເຫັນ " ຄົນທັງຫລາຍຜິດພ້ຽນໄປເຫມືອນດັ່ງຊີໂມນທີ່ເພັ່ງເບິ່ງແຕ່ຄວາມຜິດພາດຂອງຄົນ. ພຣະເຢຊູໄດ້ " ເຫັນ " ຍິງຄົນນັ້ນຢ່າງໃດ?

ຈົ່ງໄຕ່ຕອງເບິ່ງເຫດການຄືນໃຫມ່ເມື່ອພຣະເຢຊູຊົງເວົ້າວ່າ, " ຊີໂມນເອີຍ, ເຮົາມີສິ່ງນຶ່ງຈະເວົ້າກັບເຈົ້າ." ພຣະອົງຢາກຈະວ່າຢ່າງໃດ?

▯ ມີຫລາຍຢ່າງກວ່ານັ້ນອີກທີ່ທ່ານບໍ່ສາມາດເຫັນ.

▯ ເປັນຫຍັງສິ່ງນີ້ຈຶ່ງເປັນບ່ອນເກີດຂອງຄວາມເປັນປໍຣະປັກກັນສຳລັບເຈົ້າ?

- ເປັນຫຍັງການກະທຳຂອງຄົນໆນີ້ຈຶ່ງເຮັດໃຫ້ທ່ານບໍ່ເປັນສຸກແທ້?
- ແລະອື່ນໆ:

ໃນຂະນະທ່ານໄດ້ຫອນຄຳນີ້ງເຖິງຄວາມສຳພັນຂອງທ່ານຕໍ່ພຣະເຢຊູ, ແມ່ນຫຍັງໄດ້ເຜີຍນິສັຍແລະການປະພຶດຂອງທ່ານທີ່ແຕກຕ່າງກັບການສະແດງອອກມາຈາກໃຈຂອງພຣະເຢຊູທີ່ມີຄວາມຮັກແທ້?

## 3. ຄວາມຮັກໃນສິສັນທີ່ແຕກຕ່າງກັນ, ພາກສອງ: ( ລກ 7:39-46 )

ບາງເທື່ອພວກເຮົາເບິ່ງຄົນດ້ວຍຂນາດ, ຮູບຮ່າງດ້ານນອກ, ຫລືການກະທຳວ່າເປັນຄວາມຜິດແປກແຕກຕ່າງກັນກັບສິ່ງທີ່ເຂົາກຳລັງເຮັດຢູ່. ຊາຍໜຸ່ມຄົນນຶ່ງໄດ້ຊື້ພິນໜ່ວຍນຶ່ງເພື່ອຈະເອົາໄປໃຫ້ເພື່ອນຍິງ. ໃນຂະນະທີ່ຍ່າງໄປຫານາງ ລາວໄດ້ພົບເຫັນພວກຜູ້ຊາຍທີ່ມີຮູບຮ່າງໃຫຍ່ຕູ້ຍພີໜູ່ນຶ່ງ. ຄົນນຶ່ງໃນໝູ່ນັ້ນຍິ້ມອອກມາ ແລ້ວຂໍຢືມພິນໜ່ວຍນັ້ນຫລິ້ນລອງເບິ່ງວ່າຕົນຈະຫລິ້ນໄດ້ບໍ່. ຊາວໜຸ່ມຄົນນີ້ກໍຕົກໃຈໂດຍນຶກໃນໃຈຕົນເອງວ່າ "ຍັກ" ຕົວນີ້ຖ້າໄດ້ຈັບບາຍອັນໃດແລ້ວຄົງຈະແຕກຫັກໄປໝົດ, ແຕ່ວ່າລາວກໍຍອມໃຫ້ຢືມໄປ. ຍັກຕົວນັ້ນກໍໄດ້ດີດພິນນັ້ນ, ແລະເພງທີ່ດັງອອນມານັ້ນກໍປາກົດນ່ອນນຸ້ມນວນແລະໜ້າອອນຊອນຫລາຍ.

ທ່ານຄິດວ່າແມ່ນຜູ້ໃດທີ່ໄດ້ສ່ຽງພັຍກະທຳເພື່ອພຣະເຢຊູຫລາຍກວ່າກັນຣະຫວ່າງຊີໂມນ ແລະຍິງຄົນນັ້ນ?

....... ຊີໂມນ, ເພາະວ່າເພິ່ນໄດ້ເຊີນພຣະເຢຊູເຂົ້າມາໃນເຮືອນຂອງເພິ່ນ.

....... ຍິງຄົນນັ້ນ, ເພາະວ່າຊື່ສຽງອັນບໍ່ດີຂອງນາງໄດ້ມາກ່ອນນາງແລ້ວ.

ເມື່ອທຽບກັບຊີໂມນແລ້ວ, ຍິງທີ່ມີຄວາມບາບທີ່ໄດ້ເຂົ້າມາໃນບ້ານນັ້ນ ເພື່ອຈະພົບພຣະເຢຊູອາດຈະປຽບເໝືອນຍັກທີ່ຫລິ້ນພິນຄົນນັ້ນ. ຄວາມແຕກຕ່າງດ້ານນອກບໍ່ໄດ້ເຮັດໃຫ້ພຣະເຢຊູບອດໃນສິ່ງອື່ນ. ການດີດພິນອອກມາດ້ວຍສຽງເພງທີ່ອອນຊອນໃຈນັ້ນ, ພຣະເຢຊູນັ້ນກໍບໍ່ເຫັນແຕກຕ່າງອັນໃດກັບທີ່ນາງຄົນນີ້ມີກະອອມນ້ຳຫອມທີ່ຫອມຫວນ. ຕາມຄວາມເຫັນຂອງພຣະເຢຊູແລ້ວ ໃນ ລກ 7:44-46 ນີ້, ມີຫຍັງແດ່ທີ່ແຕກຕ່າງກັນຣະຫວ່າງການກະທຳຂອງຊີໂມນແລະການກະທຳຂອງຍິງຄົນນີ້?

1. (ຂໍ້ 44) ..............................................................................................................

2. (ຂໍ້ 45) ..............................................................................................................

3. (ຂໍ້ 46) ..............................................................................................................

ເຖິງແມ່ນວ່າການລ້າງຕີນ, ການຈູບຕ້ອນຮັບ, ການຊະໂລມດ້ວຍນ້ຳຫອມຫາກເປັນສິ່ງທີ່ຈຳເປັນຕາມປະເພນີ ສິ່ງເຫລົ່ານີ້ກໍເປັນທີ່ບອກຊັດແຈ້ງແລ້ວວ່າຊີໂມນບໍ່ໄດ້ສະແດງອອກມາເຖິງຄວາມຮັກຕໍ່ພຣະເຢຊູ ເໝືອນດັ່ງທີ່ຍິງຄົນນັ້ນໄດ້ສະແດງອອກມາເລີຍ.

ຄວາມຮັກຂອງທ່ານເປັນຢ່າງໃດຖ້າທຽບກັບຄວາມຮັກຂອງຊີໂມນ ຫລືມີຄວາມແຕກຕ່າງກັນຢ່າງໃດ?

1. ..............................................................................................................................

2. ..............................................................................................................................

3. ..............................................................................................................................

ຂະນະທີ່ທ່ານໄດ້ເຫັນພາບລວມຂອງການກະທຳຂອງຍິງຄົນນີ້ຕໍ່ພຣະເຢຊູແລ້ວ, ທ່ານຄິດວ່າແມ່ນຫຍັງເປັນສິ່ງດົນໃຈນາງໃຫ້ເຮັດແນວນັ້ນ? ທ່ານຈະເວົ້າວ່າຊີໂມນເປັນຢ່າງໃດ ສຳລັບຄວາມຂາດການພິຈາຣະນາຂອງເພິ່ນ? ທີ່ຈະກະທຳໃນສິ່ງທີ່ຄວນທຳຕໍ່ຄົນອື່ນ? ຈົ່ງກວດເບິ່ງໝົດທຸກຢ່າງນີ້ທີ່ທ່ານຄິດວ່າຄວນຈະເຮັດ.

....... ນາງມີສິ່ງພຽງເລັກນ້ອຍທີ່ຈະເສັຽໄປ, ເປັນຫຍັງນາງຈຶ່ງບໍ່ເຮັດຕໍ່ໄປ?

....... ນາງຄິດວ່າພຣະເຢຊູຈະຊົງຮັບເອົານາງ.

....... ພຣະເຢຊູໄດ້ເຊີນນາງໃຫ້ມາ.

....... ນາງເປັນຄົນຊົ່ວຫລາຍ, ນາງຄວນຈະມາ.

....... ນາງຢາກຈະສະແດງຄວາມຮັກຂອງນາງຕໍ່ພຣະເຢຊູ.

ມີການສ່ຽງພັຍອັນໃດທີ່ທ່ານຢາກຈະສະແດງຄວາມຮັກຂອງທ່ານອອກມາເພື່ອພຣະເຢຊູ? ທ່ານຈະສະແດງຄວາມຮັກຂອງທ່ານຕໍ່ພຣະເຢຊູຢ່າງໃດ ເພື່ອວ່າຄົນອື່ນຈະໄດ້ຖືກຮ້ອງເຂົ້າມາໃກ້ຊິດພຣະອົງ? ຈົ່ງສ່ຽງພັຍເທີ້ນ!

## 4- ຖືກສັ່ງໄວ້ໃຫ້ຮັກ: ( ລກ 7:47-50 )

ທ່ານ ເອເວີແຣຕ ແອບ ໄດ້ຕາຍໄປເມື່ອອາຍຸ 80 ປີ ແລະໄດ້ຮັບຊົມເຊີຍເພາະການງານຂອງທ່ານ. ທ່ານໄດ້ເປັນນຶ່ງໃນສີ່ນັກວິສະວະກອນທີ່ໄດ້ອອກແບບສ້າງເຄື່ອງບິນ ຈັມໂບແຈັດ ໂບອິງ 747 ໃນໂລກ. ລູກສາວຂອງທ່ານໄດ້ເວົ້າວ່າ, " ທ່ານເປັນນັກແກ້ໄຂບັນຫາດ້ວຍຄວາມຄິດທີ່ວ່າອັນໃດກໍສາມາດແກ້ໄຂໄດ້. ທ່ານບໍ່ພຽງແຕ່ສົນໃຈນຳການພັທນາສິ່ງຂອງໃຫ້ດີຂຶ້ນເທົ່ານັ້ນ ທ່ານຍັງເຮັດໃຫ້ສິ່ງຂອງເຫລົ່ານັ້ນທຳງານໃຫ້ດີທີ່ສຸດ."

ຍິງທີ່ໄດ້ມາຢ້ຽມເຮືອນຂອງຊີໂມນນັ້ນຕ້ອງການໃຫ້ງານດີຂຶ້ນຢ່າງສຸດຍອດ ແລະຄວາມເຊື່ອຂອງນາງເອງໄດ້ນຳນາງມາຫາພຣະເຢຊູ. ບາງທີນາງອາດຈະໄດ້ຍິນການສິດສອນຂອງພຣະອົງ ຫລືວ່າໄດ້ເຫັນການເຮັດອິດທິຣິດຂອງພຣະອົງກໍໄດ້. ນາງອາດຊອກສະແວງຫາການຊ່ອຍເຫລືອຈິນຫມົດແຮງ ທີ່ເຮົາບໍ່ອາດຮູ້ໄດ້. ນາງອາດຈະຮູ້ຄັກແນ່ໃນໃຈວ່າ ພຣະອົງຈະສາມາດເປັນຜູ້ປ່ຽນຊີວິດຂອງນາງໄດ້, ພຣະອົງກໍໄດ້ສັ່ງນາງ!

ໃນ ລກ 7:50, ພຣະເຢຊູໄດ້ເວົ້າຫຽັງກັບນາງ? " ຄວາມເຊື່ອຂອງເຈົ້າ..............................................."

ຈົ່ງສນອງຕອບຄຳເວົ້າຕໍ່ໄປນີ້: ມີຫລາຍຄົນເຂົ້າໃຈບໍ່ແຈ່ມແຈ້ງ ໃນເຣື່ອງຄວາມສຳພັນຂອງການທຳຄວາມດີ ແລະການກະທຳທາງສິນທັມເພື່ອຮັບເອົາຄວາມພົ້ນ.

....... ຂ້າພະເຈົ້າເຫັນພ້ອມນຳ ....... ຂ້າພະເຈົ້າບໍ່ເຫັນພ້ອມນຳ

ພຣະເຢຊູບໍ່ໄດ້ບອກວ່າວ່າຍິງທີ່ໄດ້ເຊັດພຣະບາດພຣະອົງ ແລະໄດ້ສົງພຣະອົງນັ້ນ ເຮັດໃຫ້ນາງໄດ້ຮັບຄວາມພົ້ນເລີຍ, ແຕ່ຫາກວ່າແມ່ນຄວາມເຊື່ອຂອງນາງຕ່າງຫາກທີ່ເຮັດໃຫ້ນາງໄດ້ພົ້ນ.

ຖ້າຫາກວ່າການທຳດີບໍ່ເຮັດໃຫ້ທ່ານພົ້ນໄດ້ແລ້ວ, ທ່ານຈະເຮັດຄວາມດີໄປເພື່ອຫຽັງ? ຕອບຕໍ່ຄຳຖາມນີ້, ຄືໃຫ້ທ່ານພິຈາຣະນາເບິ່ງພຣະຄັມພີທີ່ເວົ້າເຖິງຄວາມເຊື່ອແລະການປະຕິບັດດັ່ງນີ້:

- ຢກບ 2:26 : " ຄວາມເຊື່ອ.................................ກໍເປັນຄວາມເຊື່ອທີ່ຕາຍແລ້ວ."
- ອຟຊ 2:8-9 : " ດ້ວຍວ່າທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນກໍຍ້ອນ.......................................
  .... , ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ, ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນ.................... ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້."
- ຄລຕ 3:26 : " ເພາະວ່າເຈົ້າທັງຫລາຍກໍເປັນບຸດຂອງພຣະເຈົ້າຮ່ວມໃນຄວາມເຊື່ອໂດຍ.................."
- ຕິໂຕ 3:8 : " ... ເຮົາປາຖນາໃຫ້ເຈົ້າເນັ້ນເຖິງເຣື່ອງເຫລົ່ານີ້ ເພື່ອຄົນທັງຫລາຍທີ່ເຊື່ອໃນພຣະເຈົ້າແລ້ວຈະ................, ການເຫລົ່ານີ້ດີ ແລະມີປໂຍດແກ່ຄົນທັງປວງ."

ໃນຂະນະທີ່ທ່ານຍອມໃຫ້ຄວາມເຊື່ອນຳພາທ່ານໃນການກະທຳ, ທ່ານໄດ້ເຫັນວ່າຄຳສັ່ງຂອງພຣະເຢຊູວ່າເປັນຢ່າງໃດ?

1 ຢຮ 4:19 ເວົ້າວ່າ, " ຝ່າຍເຮົາທັງຫລາຍໄດ້ຮັກ ເພາະພຣະອົງໄດ້ຊົງຮັກພວກເຮົາກ່ອນ."

ທ່ານໄດ້ຖອກເທຄວາມຮັກຕໍ່ພຣະເຢຊູຢ່າງໃດ?

ພວກເຮົາບໍ່ຄວນຢ້ານກົວທີ່ຈະສະແດງອອກມາຊຶ່ງຄວາມຮັກອັນແທ້ຕໍ່ພຣະເຢຊູ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 10 ຕຸລາ 2004 ( 10-10-2004 )

---

## ມີຄວາມຫວັງວ່າຈະໄດ້ຮັບການຊ່ອຍເຫລືອ

**ເນື້ອເຣື່ອງໃນພຣະຄັມພີ :** ( ມທ 8:1-13 )

**ຄວາມຈິງໃນພຣະຄັມພີ :** ຄົນທີ່ເຊື່ອສາມາດມີຊີວິດໃນຄວາມຫວັງໂດຍເຊື່ອວ່າພຣະເຢຊູຈະຈັດການກັບທຸກບັນຫາທີ່ພວກເຂົາຄິດວ່າຈະໄດ້ປະເຊີນ.

**ພຣະຄັມພີຂໍ້ສຳຄັນ :** ພຣະເຢຊູຊົງບອກແກ່ນາຍຮ້ອຍຜູ້ນັ້ນວ່າ, " ຈົ່ງກັບເມືອເສັຽ ທ່ານໄດ້ເຊື່ອຢ່າງໃດກໍໃຫ້ເປັນແກ່ທ່ານຢ່າງນັ້ນ." ແລ້ວໃນໂມງນັ້ນຄົນໃຊ້ຜູ້ນັ້ນກໍໄດ້ດີເປັນປົກກະຕິ. ( ມທ 8:13 )

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ສະແດງອອກເຖິງຄວາມຮັກຕໍ່ພຣະເຢຊູ.

## ຂ້າພະເຈົ້າຈະໄດ້ຮັບການຊ່ອຍເຫລືອຈາກພຣະເຈົ້າຢ່າງໃດ?

ນາງ ລໍຣາ ໄດ້ຢືນຢູ່ໜ້າຫ້ອງນະມັສການ, ນາງໄດ້ເບິ່ງຄົນຫລາຍຄົນ ແລະຫລາຍຄອບຄົວໄດ້ຈຸ້ມກັນເພື່ອໂອ້ລົມກັນຫລັງຈາກທີ່ໄດ້ນະມັສການພຣະເຈົ້າເສັດສິ້ນລົງແລ້ວ. ລາວໄດ້ຍິນແມ່ຄົນນຶ່ງເວົ້າກັບອີກຄົນນຶ່ງວ່າ, " ຂ້ອຍບໍ່ຮູ້ວ່າຂ້ອຍຈະເຮັດກັບ ເຄວິນ ຢ່າງໃດ. ລາວດື້ດຶງບໍ່ຟັງຄວາມເຮົາຈັກຢ່າງ." ເພື່ອນຂອງນາງໃຫ້ຄວາມເຫັນວ່າ, " ເປັນຫຍັງໃນອາທິດນີ້ຈຶ່ງບໍ່ລົມກັບຜູ້ໃຫ້ຄຳແນະນຳເສັຽ? ຜູ້ໃຫ້ຄຳແນະນຳຄົນນີ້ເຄີຍຊ່ອຍຄອບຄົວຂອງຂ້ອຍໃນບັນຫາແບບດຽວກັນນີ້ແຫລະ."

ພວກຜົວເມັຽຫນຸ່ມກໍປຶກສາກັນວ່າ, " ຂ້ອຍມັກຢູ່ໂບດແຫ່ງນີ້! ຂ້ອຍຈະເຂົ້າຮຽນຫ້ອງພວກແຕ່ງງານໃຫມ່."

ມີຊາຍແກ່ຄົນນຶ່ງໄດ້ນັ່ງຢູ່ຄົນດຽວ. ນາງ ລໍຣາ ຄິດໃນໃຈວ່າຄົງຈະເປັນການດີຖ້າຫາກມີຄົນໃດຄົນນຶ່ງໄປລົມນຳເພິ່ນ. ພວກເດັກນ້ອຍສອງຄົນໄດ້ແລ່ນມາເພື່ອເອົາງານບ້ານຈາກໂຮງຮຽນວັນອາທິດໄປໃຫ້ເພິ່ນເບິ່ງ.

ຍິງຊະຣາຄົນນຶ່ງໄດ້ຍ່າງກາຍມາແລະເວົ້າວ່າ, " ສະບາຍດີ, ວັນນີ້ເປັນວັນງາມຫລາຍນໍ? ນາງ ລໍຣາ ບໍ່ຮູ້ວ່າຈະຕອບຢ່າງໃດ, ເລີຍຕອບວ່າ, " ເອີ່...ອ່າ....ເຈົ້າ....., ເປັນວັນງາມແທ້ງ...!" ( ຢ່າງຂາດງຄຳ ).

ນາງ ລໍຣາ ຢາກຮູ້ວ່າພຣະເຢຊູຈະຕອບສນອງຄວາມຕ້ອງການຂອງຄົນແຕ່ລະຄົນທັງຫມົດນີ້ຢ່າງໃດ? ເຮັດແນວໃດ, ໂດຍອີງໃສ່ຄວາມເຊື່ອຂອງນາງ, ນາງຈະຊ່ອຍຄົນເຫລົ່ານີ້ຕອບຄຳຖາມໄດ້. ຂ້າພະເຈົ້າຈະໄດ້ຮັບການຊ່ອຍເຫລືອຈາກພຣະເຈົ້າໄດ້ຢ່າງໃດ? ໂດຍພິຈາຣະນາຕາມການໂອ້ລົມກັນເຫລົ່ານີ້ທີ່ນາງໄດ້ຍິນມາ, ນາງໄດ້ຮູ້ສຶກວ່າເຣື່ອງທັງຫລານກໍຄ້າຍຄືກັນກັບເຣື່ອງຂອງນາງເອງ, ແລະຄ້າຍຄືກັນກັບເຣື່ອງທັງຫລາຍທີ່ມີຢູ່ໃນພຣະຄັມພີເຫມືອນກັນ. ເມື່ອພວກເຮົາມາຫາພຣະເຢຊູດ້ວຍຄວາມເຊື່ອແລ້ວ, ພວກເຮົາສາມາດໄດ້ຮັບການຄ້ຳປະກັນວ່າພຣະອົງຈະຕອບສນອງຄວາມຕ້ອງການແກ່ພວກເຮົາໄດ້.

## ສຶກສາພຣະຄັມພີ

1. ຈົ່ງວາງໃຈພຣະເຢຊູທີ່ຈະຕອບສນອງຄວາມຕ້ອງການຂອງທ່ານ: ( ມທ 8:1-4 )

ຫນັງສືນິດຕະຍະສານ. ທີວີໂຊ. ຄໍລັມການນິນທາ. ຄວາມສົນໃຈຂອງເຮົາໃນຄົນທີ່ຮັ່ງມີ ແລະໃນຄົນທີ່ມີຊື່

ສຽງ, ຄົນດັງ ແລະຄົນມີຄວາມຄິດແຫລມຄົມ, ໄດ້ກາຍເປັນສິ່ງມີອິດທິພົນໃນວົງການທີວີ. ສຳລັບຜູ້ທີ່ສາມາດໄປກໍຊື້ແຜນທີ່ແລະກໍອອກໄປທ່ຽວ. ສ່ວນພວກທີ່ເຫລືອນັ້ນ, ກໍເບິ່ງພາບຖ່າຍ ລາຍງານຂ່າວທຸກໆການເຄື່ອນໄຫວຂອງຄົນດັງທັງຫລາຍ.

ການເຫັ່ນຳຄົນດັງ! ພຣະເຢຊູກຳລັງສະເດັດມາ! ຫລັງຈາກພຣະອົງໄດ້ສັ່ງສອນຢ່າງຍືດຍາວທີ່ຈ້າຍພູ, ຄວາມສົນໃຈຢ່າງດຽວກັນໄດ້ມາກ່ອນທີ່ພຣະອົງລົງມາຈາກພູເຂົ້ານັ້ນ. ມັດທາຍໄດ້ເວົ້າເຖິງການຕິດຕາມຂອງຄົນຈຳນວນຫລວງຫລາຍນຳພຣະເຢຊູ ( ມທ 4:25; 8:1 ).

ທ່ານອາດຈະບໍ່ເປັນນັກຕິດຕາມເບິ່ງພວກຄົນດັງ ຫລືວ່ານັກອ່ານການພາດຂ່າວໃນໜັງສືພິດຕະຍະສານ, ແຕ່ວ່າໃຫ້ອ່ານຕໍ່ໄປອີກ. ຈົ່ງອ່ານ ມທ 8:1-2 ແລະຈົ່ງສັງເກດເບິ່ງຄົນໆນຶ່ງໃນຝູງຄົນເຫລົ່ານັ້ນ, ຄືຄົນນຶ່ງທີ່ເປັນພະຍາດຜິວໜັງຮ້າຍແຮງ. ຄວາມສົນໃຈໃນພຣະເຢຊູຂອງຄົນໆນີ້ແມ່ນກ່ຽວກັບຫຽັງ?

ໃນສມັຍນັ້ນ, ຄຳທີ່ວ່າພະຍາດຂີ້ທູດໄດ້ກວມເອົາພະຍາດຜິວໜັງຕັ້ງຫລາຍຢ່າງ. ໃນເມື່ອເຮົາບໍ່ຮູ້ວ່າຊາຍຄົນນັ້ນເປັນຂີ້ທູດແທ້ຫລືບໍ່, ແຕ່ວ່າເຮົາຮູ້ວ່າລາວເປັນໂຣກຜິວໜັງຮ້າຍແຮງ ແລະມີຄວາມຕ້ອງການໆປິ່ນປົວ ແລະລາວໄດ້ຮູ້ວ່າພຣະເຢຊູເປັນຜູ້ທີ່ສາມາດປົວພະຍາດຂອງລາວໄດ້. ລາວໄດ້ມາຫາພຣະເຢຊູດ້ວຍຄວາມເຊື່ອ. ມີຄວາມຕ້ອງການອັນໃດທີ່ທ່ານຕ້ອງການ? ໃຫ້ຂີດວົງມົນໃສ່ຄຳຕອບທີ່ນຳມາໃຊ້ໄດ້:

- ຄວາມເປັນເພື່ອນມິດ - ບ້ານເຮືອນ - ຄວາມຮູ້ສຶກຕ່າງໆ - ການປິ່ນປົວຄວາມກົດດັນ - ຄວາມຮັກ
- ວຽກງານທຳ - ຄວາມຝັ້ນ - ການລ້ຽງດູລູກເຕົ້າ - ການແຕ່ງງານ - ການເປັນໜີ້ສິນ - ແລະອື່ນໆ...

ເມື່ອທ່ານມີຄວາມຕ້ອງການ ທ່ານຈະໄປຫາການຊ່ອຍເຫລືຢູ່ໃສ? ຈົ່ງເລືອກເອົາລາຍການທີ່ໃຊ້ການໄດ້:

....... ເພື່ອນ ຫລືພີ່ນ້ອງທີ່ອາງໃຈໄດ້ ....... ຄອບຄົວຜູ້ບົວຣະບັດ ....... ສີດຢາພິບານ
....... ອ່ານຈາກປື້ມຊ່ອຍເຫລືອຕົນເອງ ....... ອົງພຣະຜູ້ເປັນເຈົ້າ.

ຄັນເມື່ອມາເຖິງພຣະເຢຊູແລ້ວ, ຊາຍຄົນນັ້ນກໍຄຸເຂົ່າລົງຕໍ່ໜ້າພຣະອົງ. ການກະທຳທີ່ນອບນ້ອມຖ່ອມຕົວເຊັ່ນການຄຸເຂົ່າລົງນີ້ ໄດ້ເປັນເຫດໃຫ້ພຣະເຢຊູເຣີ່ມຕົ້ນທຳງານທັນທີ.

ຄຳເວົ້າຂອງຊາຍຄົນນັ້ນໃນ ຂໍ້ 2 ໄດ້ກະຕຸ້ນຫລືບັນດານຄວາມເຊື່ອຂອງທ່ານຕອບສນອງພຣະເຢຊູຢ່າງໃດ?

ຈົ່ງອ່ານ ຂໍ້ 3-4 . ຫລັງຈາກປິ່ນປົວຄົນນັ້ນແລ້ວ, ພຣະເຢຊູໄດ້ສັ່ງລາວໃຫ້ນຳເອົາເຄື່ອງໄປຖວາຍທີ່ໂມເຊໄດ້ສັ່ງໄວ້ແລ້ວນັ້ນ ( ລວ 14:4-32 ). ດ້ວຍວິທີນີ້ຄົນນີ້ຈະໄດ້ໃຫ້ການເປັນພະຍານຕໍ່ສັງຄົມຊຶ່ງຄຽງຂ້າງໄປກັບ ການສະແດງຫລັກຖານວ່າຕົນໄດ້ສະອາດແລ້ວ.

ມີຫລັກຖານອັນໃດທີ່ທ່ານຈະບອກວ່າພຣະເຢຊູໄດ້ສນອງຄວາມຕ້ອງການຂອງທ່ານໄດ້ແດ່?

....... ພຣະອົງຊົງໄດ້ສນອງຄວາມຕ້ອງການແກ່ຂ້າພະເຈົ້າ.
....... ພຣະອົງຊົງໄດ້ຊ່ອຍເຫລືອຄອບຄົວຂອງຂ້າພະເຈົ້າ.
....... ພຣະອົງຊົງໄດ້ຊ່ອຍເຫລືອເພື່ອນຂອງຂ້າພະເຈົ້າ.
....... ພຣະເຢຊູຊົງສັນຍາວ່າຈະຊ່ອຍເຫລືອຄວາມຕ້ອງການຂອງຂ້າພະເຈົ້າ.

ສຳລັບຄົນຂີ້ທູດຄົນນັ້ນ, ຄຳວ່າ "ສະອາດ" ໝາຍຄວາມວ່າລາວຈະໄດ້ສາມັກຄີທັມຢ່າງຖືກຕ້ອງກັບພຣະເຈົ້າແລະກັບສັງຄົມ. ທ່ານຕ້ອງການໃຫ້ພຣະເຢຊູເຮັດອັນໃດໃນຊີວິດຂອງທ່ານ? ທ່ານຈະສາມາດວາງໃຈພຣະອົງວ່າຈະຊ່ອຍເຫລືອຄວາມຕ້ອງການ ແລະເຮັດໃຫ້ທ່ານສະອາດໄດ້ຢ່າງໃດ?

2. <u>ຈົ່ງຫັນມາຫາພຣະເຢຊູເມື່ອທ່ານຕ້ອງການຊ່ວຍເຫລືອ, ພາກນຶ່ງ:</u> ( ມທ 8:5-9 )

ນັກສັງເກດການສມັຍໃຫມ່ຄົນນຶ່ງໄດ້ຂຽນໄວ້ວ່າ, " ຄົນສ່ວນຫລາຍບໍ່ມີນິສັຍທີ່ເປັນໄປຕາມຄວາມຫນັກແຫນ້ນຂອງຄວາມເຊື່ອ ຫລືວ່າຄວາມບໍ່ເຊື່ອຂອງຕົນ ແຕ່ວ່າເປັນໄປຕາມການທ່ຽວໄປຢ່າງບໍ່ມີຈຸດສຳເຣັດຂອງຕົນ. ເຂົາເຈົ້າເປັນເຫມືອນຄົນທີ່ຖືກເນຣະເທດ ແລະເຫມືອນຄົນອົພະຍົບທີ່ບໍ່ມີບ້ານເກີດເມືອງນອນເປັນຂອງຕົນເອງ ແລະພວກເຂົາເຈົ້າກໍເປັນຄົນທີ່ເດີນໄປທຸກຫົນທຸກແຫ່ງ.

ຈົ່ງອ່ານ ມທ 8:5-6 . ຈົ່ງສົມທຽບເບິ່ງການຂຽນເຣື່ອງການປະພຶດ ແລະການກະທຳຂອງນາຍຮ້ອຍທະຫານໂຣມມັນກັບຂໍ້ສັງເກດໃນຂ້າງເທິງເບິ່ງດູ. ທ່ານຖືວ່ານາຍຮ້ອຍທະຫານໂຣມັນຈະເຂົ້າກັນກັບກໍຣະນີຂອງຄົນທັງຫລາຍໃນສມັຍນີ້ບໍ? ດ້ວຍເຫດໃດ?

ມັດທາຍໄດ້ເວົ້າວ່ານາຍຮ້ອຍທະຫານໂຣມັນຄົນນີ້ໄດ້ມາຫາພຣະເຢຊູເພາະເຣື່ອງຄົນຮັບໃຊ້ຂອງເພິ່ນ. ໃຫ້ຂີດວົງມົນໃສ່ຄຳຫລືວ່າປໂຍກທີ່ກ່ຽວຂ້ອງກັບການກະທຳຂອງເພິ່ນ: - ເຊື່ອພຣະເຢຊູ - ມີຄວາມຫມັ້ນໃຈໃນພຣະເຢຊູ - ບໍ່ໄດ້ຮູ້ຮອດວ່າພຣະເຢຊູເປັນຜູ້ໃດ - ໄປຫາໂດຍບໍ່ມີຄວາມແນ່ນອນໃຈ - ໄດ້ຕັດສິນໃຈແລ້ວວ່າຕ້ອງໄປຫາພຣະອົງ.

ເມື່ອທ່ານຫາກມີຄວາມຈຳເປັນ ເປັນຫຍັງທ່ານຈຶ່ງບໍ່ມາຫາພຣະເຢຊູ?

☐ ..........................................................................................................................

ພຣະຄັມພີສັນຍາວ່າພຣະເຢຊູຈະຊ່ວຍເຫລືອຂ້າພະເຈົ້າ.

☐ ..........................................................................................................................

ເມື່ອໃດທີ່ທ່ານໄດ້ພົບພາສິດທີ່ວ່າ, " ການຮູ້ຈັກບັນຫາ ຄືການເຂົ້າໃນການສູ້ຮົບບັນຫານັ້ນແລ້ວເຄິ່ງນຶ່ງ " , ທ່ານເຫັນວ່າມີຄວາມເປັນຈິງບໍ່?

ຫລັງຈາກຮູ້ຈັກບັນຫາແລ້ວ, ການສູ້ຮົບເຄິ່ງສຸດທ້າຍກໍຄືການແກ້ໄຂບັນຫາທີ່ມີຢູ່ນັ້ນ. ຈົ່ງຂີດກ້ອງການແກ້ຂອງພຣະເຢຊູຕໍ່ບັນຫານີ້.

ຈົ່ງຫມາຍເອົາຂໍ້ສັງເກດທັງຫລາຍເຫລົ່ານີ້ ເຖິງແມ່ນວ່າທ່ານເຫັນດີ ຫລືບໍ່ເຫັນດີນຳກໍຕາມ:

- ນາຍຮ້ອຍທະຫານພະຍາຍາມທີ່ຈະໃຊ້ພຣະເຢຊູເປັນເຄື່ອງມືໃຫ້ຕົນ. ☐ ເຫັນດີ ☐ ບໍ່ເຫັນດີ
- ພຣະເຢຊູເປັນຄົນຖືກຫລອກໃຊ້ງ່າຍແລະເປັນເຄື່ອງມືໄດ້ງ່າຍ. ☐ ເຫັນດີ ☐ ບໍ່ເຫັນດີ
- ການຫລອກໃຫ້ຄົນເປັນເຄື່ອງມືແມ່ນວິທີທີ່ສັດຊື່ສຳລັບແກ້ໄຂບັນຫາ. ☐ ເຫັນດີ ☐ ບໍ່ເຫັນດີ
- ຂ້າພະເຈົ້າຜິດແລ້ວທີ່ພະຍາຍາມຍັດພຣະເຢຊູເຂົ້າໄວ້ໃນກ່ອງ. ☐ ເຫັນດີ ☐ ບໍ່ເຫັນດີ

ການສນອງຕອບຂອງພຣະເຢຊູຕໍ່ນາຍຮ້ອຍທະຫານນັ້ນແມ່ນການສນອງຕອບທີ່ທ່ານຫວັງຄືກັນບໍ່? ເຖິງແມ່ນວ່າພຣະອົງອາດບໍ່ໄດ້ຕອບທ່ານດ້ວຍການຊ່ວຍເຫລືອຕາມທາງທີ່ທ່ານຕ້ອງການເຊັ່ນຕາມແບບຂອງນາຍຮ້ອຍທະຫານຄົນນີ້ກໍຕາມ, ພຣະອົງກໍຍັງຈະໄດ້ຊ່ວຍເຫລືອທ່ານເມື່ອທ່ານໄດ້ຫັນມາຫາພຣະອົງສເມີ.

ມີຫຍັງບໍ່ທີ່ກີດກັນທ່ານໄວ້ເພື່ອບໍ່ໃຫ້ຫັນມາຫາພຣະເຢຊູ? ກີດກັນທ່ານໄວ້ຈາກການຮັບເອົາຄວາມປາຖນາດີຂອງພຣະເຈົ້າທີ່ຢາກຈະຊ່ວຍທ່ານ? ຈົ່ງເຮັດໃຫ້ຄຳເວົ້າເຫລົ່ານີ້ຄົບເຕັມ:

- ຂ້າພະເຈົ້າໄດ້ຮັບພຣະພອນຫລາຍ, ພຣະເຢຊູໄດ້ຊ່ວຍຂ້າພະເຈົ້າ..................................................
- ຂ້າພະເຈົ້າໄດ້ຮູ້ວ່າ.....................................ໄດ້ຂັດຂວາງຂ້າພະເຈົ້າບໍ່ໃຫ້ຫັນມາຫາພຣະເຢຊູ.
- ພຣະເຢຊູໄດ້ສະແດງໃຫ້ຂ້າພະເຈົ້າເຫັນວ່າ........................ໄດ້ກີດກັນຂ້າພະເຈົ້າເພື່ອບໍ່ໃຫ້ໄດ້ຮັບການ

ຊ່ວຍຈາກພຣະອົງ.

ແມ່ນຫຽັງເປັນສິ່ງຫມັ້ນທ່ຽງໃນເຣື່ອງຄວາມເຊື່ອ ແລະຄວາມບໍ່ເຊື່ອ? ຄວາມເຊື່ອຂອງທ່ານຈະປ່ຽນແປງການສໍາລວມຂອງທ່ານເພາະຄວາມຫມັ້ນທ່ຽງໃນການເຊື່ອພຣະເຢຊູຈະສາມາດເຮັດໃຫ້ທ່ານປ່ຽນແປງ.

### 3. <u>ຈົ່ງມາຫາພຣະເຢຊູເມື່ອທ່ານຕ້ອງການໆຊ່ວຍເຫລືອ, ພາກສອງ:</u> ( ມທ 8:5-9 )

ບາງຄັ້ງບາງຄາວໃນເຣື່ອງການກິລາຂອງໂລກ ນັກກິລາບາງຄົນໄດ້ຮັບຊັຍຊະນະທັງໆໃຜໆກໍຄິດວ່າລາວຄົງຈະບໍ່ມີໂອກາດຊະນະໄດ້. " ລາວຊ້າໂພດ", " ລາວເຖົ້າໂພດ", " ລາວຕົວນ້ອຍໂພດ", "ລາວອ້ອຍໂພດ".ເຖິງແມ່ນວ່າຄໍາເຫັນຂອງປວງຊົນ ແລະຄວາມສົງສັຍຂອງພວກຊ່ຽວຊານທັງຫລາຍທີ່ອວດຕົວວ່າຮູ້ເຣື່ອງຈໍາພວກນີ້ດີກໍຕາມ, ແຕ່ວ່ານັກກິລາທີ່ວ່າມີຫວັງຍາກນັ້ນກໍໄດ້ຊະນະໄປແລ້ວ. ທ່ານ ມັກຊີ ໂບກິສ ໄດ້ຊະນະແລ້ວ. ເພິ່ນໄດ້ຫລິ້ນກິລາບານບ້ວງເຖິງ 14 ປີໃນສະມາຄົມບານບ້ວງແຫ່ງຊາດ ເຖິງແມ່ນວ່າເພິ່ນມີຄວາມສູງພຽງ 5 ຟຸດ ກັບ 3 ນີ້ວກໍຕາມ. ດ້ວຍການຄາດຄະເນທັມມະດາເຊັ່ນນີ້, ລາວຈຶ່ງບໍ່ສົມຈະໄດ້ຢູ່ໃນທຸຣະກິດຂອງສະມາຄົມບານບ້ວງແຫ່ງຊາດເລີຍ.

ດ້ວຍການຄາດຄະເນທັມມະດາ, ນາຍຮ້ອຍຄົນນີ້ຈຶ່ງບໍ່ສົມກັບຈະມີສ່ວນໃນເຣື່ອງນີ້ເຊັ່ນດຽວກັນ. ລາວເປັນຄົນຕ່າງຊາດ, ບໍ່ໄດ້ເປັນຄົນນຶ່ງໃນບັນດາໄພ່ພົນຂອງພຣະເຈົ້າ. ຮ້າຍຍິ່ງໄປກວ່ານັ້ນອີກ ລາວຍັງເປັນນາຍຮ້ອຍທະຫານຂອງພວກໂຣມັນ, ເປັນຄົນນຶ່ງໃນພວກນີ້ທີ່ເຮັດໃຫ້ພວກຢິວບໍ່ໄດ້ປົກຄອງດ້ວຍຕົນເອງ. ແນ່ນອນຄວາມອວດໃນສັກສີຂອງຕົນໃນອາຊີບເປັນທະຫານ ຈຶ່ງຕ້ອງເປັນການຍາກຫລາຍທີ່ເຮັດໃຫ້ລາວມາຫາພຣະອາຈານທີ່ຖ່ອມຕົນເພື່ອຈະຂໍຄວາມຊ່ວຍເຫລືອ. ແຕ່ປານນັ້ນ ລາວຍັງໄດ້ມາ ແລະພຣະເຢຊູກໍໄດ້ໄປປິ່ນປົວຄົນຮັບໃຊ້ຂອງລາວໃຫ້ດີ.

ຈົ່ງອ່ານ ມທ 8:8-9 . ຈົ່ງຂີດກ້ອງຄໍາທີ່ສະແດງເຖິງຄວາມຖືຕົວຂອງນາຍຮ້ອຍ. ຈົ່ງຂີດວົງມົນອ້ອມຄໍາທີ່ສົມທຽບອໍານາດຂອງລາວ ແລະພຣະອໍານາດຂອງພຣະເຢຊູ.

ເຖິງແມ່ນວ່າລາວມີເຫດຜົນທີ່ບໍ່ໄດ້ໃຫ້ພຣະເຢຊູໄປທີ່ບ້ານຂອງຕົນກໍຕາມ, ແຕ່ນາຍຮ້ອຍນັ້ນຍັງໄດ້ກາຍເປັນຜູ້ມີລັກສະນະຂອງຄົນຕ່າງຊາດທີ່ເຊື່ອ ເພາະວ່າລາວໄດ້ມາຫາພຣະເຢຊູເພື່ອຂໍຄວາມຊ່ວຍເຫລືອ.

ຈົ່ງກັບມາພິຈາຣະນາຄືນໃຫມ່ເຖິງເຣື່ອງຄວາມປາຖນາຂອງທ່ານເອງເບິ່ງດູເມື່ອທ່ານໄດ້ມາຫາພຣະເຢຊູເພື່ອຂໍຄວາມຊ່ວຍເຫລືອ. ມີສິ່ງໃດແດ່ທີ່ເປັນສາຍເຫດເຮັດໃຫ້ທ່ານເຍື້ອນເວລາທີ່ຈະມາຫາພຣະອົງເພື່ອຂໍຄວາມຊ່ວຍເຫລືອ, ຫລືວ່າໄດ້ກັກກັນທ່ານໄວ້ບໍ່ໃຫ້ທ່ານມາ?

ສໍາລັບນາຍຮ້ອຍນັ້ນແລ້ວ, ບໍ່ມີສາຍເຫດອັນໃດສໍາຄັນຫລາຍຈົນວ່າຈະບໍ່ໃຫ້ມາຫາພຣະເຢຊູເລີຍ. ລາວມີຄວາມຈໍາເປັນ ແລະຮູ້ວ່າພຣະເຢຊູມີອໍານາດທີ່ຈະຊ່ວຍຄວາມຕ້ອງການຂອງລາວໄດ້. ນາຍຮ້ອຍຄົນນີ້ຍັງບໍ່ໄດ້ຄາດຫວັງເພື່ອການເອົາໃຈໃສ່ຢ່າງພິເສດ ຫລືວ່າມີຄວາມຄິດໄວ້ກ່ອນວ່າພຣະເຢຊູຈະເຮັດຢ່າງໃດຊໍ້າ. ສໍາລັບລາວແລ້ວ, ພຽງແຕ່ພຣະເຢຊູເອີ່ຍຄໍາເວົ້າອອກມາຄໍາດຽວເທົ່ານັ້ນກໍພຽງພໍແລ້ວ. ຈົ່ງຂຽນອອກມາເບິ່ງດູ ເຖິງຄວາມເຊື່ອຂອງທ່ານໃນພຣະປຣີຊາສາມາດຂອງພຣະເຢຊູສໍາລັບຕອບສນອງຄວາມຕ້ອງການຂອງທ່ານ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 17 ຕຸລາ 2004 (10-17-2004)

---

## ຊອກຫາຈຸດປະສົງໃໝ່

**ເນື້ອເຣື່ອງໃນພຣະຄັມພີ :** (ລກ 4:42-5:11)

**ຄວາມຈິງໃນພຣະຄັມພີ :** ຄົນທີ່ຕິດຕາມພຣະເຢຊູທຸກຄົນໄດ້ຖືກເອີ້ນມາເພື່ອໄປປະກາດຂ່າວປະເສີດເຣື່ອງ ຣາຊອານາຈັກຂອງພຣະເຈົ້າ.

**ພຣະຄັມພີຂໍ້ສຳຄັນ :** ເມື່ອໄດ້ນຳເຮືອມາເຖິງຝັ່ງແລ້ວ ເຂົາກໍສລະສິ່ງສາຣະພັດແລ້ວຕາມພຣະອົງໄປ. (ລກ 5:11)

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານພົບຈຸດປະສົງໃໝ່ໃນການປະກາດຕໍ່ຄົນອື່ນໃນເຣື່ອງຣາຊອານາຈັກຂອງ ພຣະເຈົ້າ.

## ຂ້າພະເຈົ້າຈະພົບຈຸດປະສົງໃໝ່ໃນຊີວິດໄດ້ຢ່າງໃດ?

"ທ່ານຢາກຈະເປັນຫຍັງເມື່ອທ່ານໃຫຍ່ຂຶ້ນ?" ຄຳຖາມນີ້ໄດ້ຖືກຖາມໃນວີດີໂອເນື່ອງໃນໂອກາດການຈົບຫ້ອງຮຽນຕຽມອະນຸບານ. ພວກນັກຮຽນໄດ້ຕອບວ່າ, "ເປັນນັກດັບເພີງ", "ເປັນນັກຟຸຕບອລ", "ເປັນພຣະຣາຊີນີ", "ເປັນນັກແຂ່ງຣົດ", "ເປັນແມ່", "ເປັນນາຍຄຣູ". ພວກເຮົາບໍ່ຄວນຢຸດຖາມຕົນເອງວ່າ, "ຂ້າພະເຈົ້າຈະເປັນຫຍັງເມື່ອຂ້າພະເຈົ້າໃຫຍ່ຂຶ້ນ?" ມັນຄ້າຍກັບວ່າທ່ານກຳລັງໃຊ້ຊີວິດຢູ່ໃນການຮັບໃຊ້ ແລະມັນເປັນການຕັກເຕືອນສະຕິຂອງທ່ານເອງຢ່າງງ່າຍໆ.

ຄຳຖາມທີ່ວ່າ, "ງານຂອງຂ້າພະເຈົ້າກຳລັງເຮັດຢູ່ນີ້ຈະເຮັດໃຫ້ຊີວິດສ່ວນທີ່ເຫລືອຢູ່ຂອງຂ້າພະເຈົ້າ ແລະຂອງຄົນອື່ນມີຄວາມສຸກ ຫລືວ່າໂສກເສົ້າໃຈບໍ່? ຄຳຖາມນີ້ນຳມາຊຶ່ງຄຳຕອບດັ່ງນີ້: "ພື້ນຖານຂອງຊີວິດທີ່ທຳງານແມ່ນວາງລົງບົນງານທີ່ເຄີຍທຳມານັ້ນຢ່າງແຈ່ມແຈ້ງ ແລະໃນງານທີ່ເຮົາຢາກຈະເຮັກໃນເວລາອັນອັນຈຳກັດທີ່ຍັງເຫລືອຢູ່ໃນໂລກນີ້."

ການສັງເກດເບິ່ງການຮຽກເອີ້ນໃນຊີວິດຂອງຊີໂມນເປໂຕ ແລະຊີວິດຂອງເພິ່ນທີ່ໄດ້ປ່ຽນແປງໄປນັ້ນ ຈະໜູນໃຈການຕອບສນອງຄວາມເຊື່ອຂອງທ່ານຕໍ່ພຣະເຢຊູ ແລະຊ່ອຍທ່ານໃຫ້ຕອບຄຳຖາມທີ່ວ່າ: "ຂ້າພະເຈົ້າຈະພົບຈຸດປະສົງໃໝ່ໃນຊີວິດຂອງຂ້າພະເຈົ້າໄດ້ຢ່າງໃດ?

## ສຶກສາພຣະຄັມພີ

### 1. ຈົ່ງເຂົ້າໃຈຈຸດປະສົງຂອງພຣະເຢຊູ: (ລກ 4:42-44)

ຈົ່ງມຸ້ງໝັ້ນໃຫ້ຄຳຊີ້ແຈງເຫດຜົນ, ໜ້າທີ່ຂອງວຽກງານແຕ່ລະຢ່າງເບິ່ງດູ. ທ່ານມີຈຸດປະສົງຢ່າງໃດ? ເມື່ອທ່ານໄດ້ພິຈາຣະນາເບິ່ງຄວາມເປັນຢູ່ຂອງຄວາມສຳພັນ, ອາຊີບ, ແລະຄອບຄົວຂອງທ່ານ, ທ່ານຮູ້ບໍວ່າທ່ານພະຍາຍາມຈະໃຫ້ສຳເຣັດ ແລະທ່ານຈະເຮັດຢ່າງໃດຈຶ່ງຈະໄດ້ໄປເຖິງທີ່ນັ້ນ?

ບາງທີທ່ານອາດເປັນເໝືອນກັນກັບນ້ອງສາວນ້ອຍຂອງ ຊາລີ ບຣາວ ທີ່ຊື່ວ່ານາງ ຊາລີ. ນາງໄດ້ຖາມວ່າ, "ຣົດບັສຄັນນີ້ໄປເມືອງສໂຕນເຮັນຊ໌ບໍ່?" ທ້າວ ລີນັສ ຕອບວ່າ, "ບໍ່ດອກ, ຣົດບັສຄັນນີ້ເປັນຣົດບັສທັມມະດາທີ່ໄປ

ໂຮງຮຽນປະຖົມປາຍນ໌ແກຣສທຸກວັນໃນຊີວິດຂອງເຈົ້າ." ນາງ ຊາລີ ຈົ່ມພຶມພໍາວ່າ, "ເຮັດແນວໃດຂ້ອຍຈະຂຶ້ນຣົດບັສຜິດໄດ້ນໍ?" "ຂ້າພະເຈົ້າໄດ້ນັ່ງຢູ່ໃນຣົດບັສທີ່ໄປຜິດບໍ່?"

ຈົ່ງອ່ານ ລກ 4:42-44 . ເປັນຫຍັງທ່ານຈຶ່ງຄິດວ່າຝູງຄົນເຫລົ່ານັ້ນຕ້ອງການຈະກັກຕົວພຣະເຢຊູໄວ້ເພື່ອຈະໃຫ້ພຣະອົງຢູ່ນໍາພວກເຂົາ?

ຈົ່ງເບິ່ງຄືນການອະທິບາຍຂອງພຣະເຢຊູທີ່ວ່າເປັນຫຍັງພຣະອົງຈຶ່ງບໍ່ສາມາດຢູ່ນໍາພວກເຂົາໄດ້, ແລ້ວໃຫ້ທ່ານດຶງເອົາຂໍ້ຄວາມອອກມາດ້ວຍຄໍາເວົ້າຂອງທ່ານເອງ.

ຈຸດປະສົງຂອງນາງຊາລີ ແມ່ນ : ໄປໂຮງຮຽນ.

ຈຸດປະສົງຂອງພຣະເຢຊູແມ່ນ : ເທສນາເຣື່ອງຣາຊອານາຈັກຂອງພຣະເຈົ້າ.

ແລ້ວທ່ານເດ? ຈົ່ງໃຫ້ທ່ານເພີ່ມເຕີມໃສ່ຊ່ອງຫວ່າງດ້ວຍອັນໃດທີ່ທ່ານເຫັນວ່າມັນເປັນຈຸດປະສົງຂອງພຣະເຈົ້າໃນຊີວິດນີ້ຂອງທ່ານ:

ຈຸດປະສົງຂອງຂ້າພະເຈົ້າແມ່ນ : ........................................................................................

ມັນເປັນສິ່ງທີ່ສາມາດເຂົ້າໃຈໄດ້ທີ່ຄົນເຫລົ່ານັ້ນໄດ້ຊອກຫາພຣະເຢຊູ ແລະຕ້ອງການໃຫ້ພຣະອົງຢູ່ນໍາເຂົາຕໍ່ໄປ. ຈົ່ງກວດເບິ່ງ ລູກາບົດທີ 4 ເພື່ອຊອກຫາເບິ່ງວິທີທັງຫລາຍທີ່ພຣະອົງໄດ້ສໍາຜັດກັບຊີວິດຂອງພວກເຂົາ.

ທ່ານເຫັນວ່າການສະແດງຫາຈຸດປະສົງຂອງພຣະເຈົ້ານັ້ນເປັນສິ່ງສາມາດເຂົ້າໃຈໄດ້ບໍ່? ໃນປຶ້ມ "ຊີວິດທີ່ເຄື່ອນໄປດ້ວຍຈຸດປະສົງຂອງພຣະເຈົ້າ" ທີ່ທ່ານ ຣິກ ວາແຣນ ຂຽນຂຶ້ນມານັ້ນໄດ້ເວົ້າວ່າພວກເຮົາໄດ້ເລີ້ມຈາກຈຸດທີ່ຜິດພາດເພື່ອຈະຕອບຄໍາຖາມນີ້. ພວກເຮົາໄດ້ຕັ້ງຄໍາຖາມດ້ວຍຕົນເອງເປັນຈຸດໃຈກາງເຊັ່ນ, "ຂ້າພຣະເຈົ້າຢາກເປັນຫຍັງ?" "ຂ້າພະເຈົ້າຄວນຈະເຮັດຫຍັງສໍາລັບຊີວິດຂອງຂ້າພະເຈົ້າ?" "ອັນໃດຄືຈຸດປະສົງ, ຄວາມທະເຍີທະຍານ, ຄວາມໄຝ່ຝັນສໍາລັບອະນາຄົດຂອງຂ້າພະເຈົ້າ?" ດັ່ງນັ້ນ, ຄວາມຈິງທີ່ປາກົດອອກມາຄື: "ການວາງຈຸດສຸມໃສ່ຕົນເອງນັ້ນ ຈະບໍ່ສະແດງຈຸດປະສົງຂອງຂອງຊີວິດຂອງພວກເອງອອກມາເລີຍ. ຫລາຍສິ່ງຕ້ອງເລີ້ມຕົ້ນມາຈາກພຣະເຈົ້າທັງນັ້ນ."

ຈຸດປະສົງຂອງພຣະເຢຊູທີ່ປະກາດອອກມາໃນເຣື່ອງການເທສນາກ່ຽວກັບຣາຊອານາຈັກຂອງພຣະເຈົ້ານັ້ນກໍເຫມາະກັບພຣະອົງດີ. ເມື່ອພຣະເຢຊູໄດ້ບອກກັບສາວົກຂອງພຣະອົງວ່າ, "ດ້ວຍວ່າແອກຂອງເຮົາກໍພໍເຫມາະແລະພາຣະຂອງເຮົາກໍເບົາ "(ມທ 11:29-30). ພຣະອົງໄດ້ຊີ້ໃຫ້ເຫັນວ່າ ຈຸດປະສົງຂອງພຣະເຈົ້າສໍາລັບເຮົານັ້ນກໍພໍເຫມາະກັບເຮົາ. ແມ່ນຫຍັງເປັນຈຸດປະສົງທີ່ພຣະເຈົ້າມອບໃຫ້ເຮົາ? ແມ່ນຫຍັງທີ່ພໍເຫມາະກັບເຮົາ?

....... ສິດສອນ ....... ບໍຣິຫານແນວຄິດ ....... ອອກແບບອາຄານ ....... ປະພັນເພງ
....... ເຮັດໄຮ່ນາ ....... ປິ່ນປົວຄົນບາດເຈັບ ....... ບິນໄປດາວພຣະອັງຄານ ....... ຟັງແລະໃຫ້ຄໍາປຶກສາ ....... ເປັນພະຍານເຣື່ອງພຣະເຢຊູ ....... ແລະອື່ນໆ.

ທ່ານໄດ້ຖາມຄໍາຖາມນີ້ບໍ່, "ຂ້າພະເຈົ້າຈະຂຶ້ນຣົດບັສຜິດບໍ່? ຫລືວ່າທ່ານໄດ້ເຮັດງານ ແລະໃຊ້ຊີວິດໃນທີ່ໆພຣະເຈົ້າໄດ້ວາງໃຫ້ຢ່າງພໍເຫມາະບໍ່?

## ໒. <u>ຈົ່ງຍອມໃຫ້ພຣະເຢຊູໃຊ້ສິ່ງທີ່ທ່ານມີຢູ່:</u> ( ລກ 5:1-3 )

ຄໍາຖາມທີ່ມັກຖາມກັນຢູ່ເລື້ອຍກໍຄື, "ທ່ານຈະເຮັດຫຍັງ?" ແລະຕິດຕາມມາດ້ວຍ, "ທ່ານໄດ້ຫຍັງແດ່?" ໃຫ້ວາດພາບເບິ່ງຄົນທີ່ເປັນເພື່ອນກັນກຸ່ມນຶ່ງກໍາລັງໄຂກັບອາຫານ ຫລືວ່າພວກນັກບໍຣິຫານທໍາໂຄງການຢ່າງຈິງຈັງໂດຍການສົ່ງອີແມວ ແລະແຟັກຊ໌ກັນໄປມາ. ໃນທຸກສິ່ງຂອງໃນຊີວິດ, ພວກເຮົາໄດ້ປະສົບກັບບັນຫາເຣື່ອງສິ່ງທີ່ເຮົາຈະເຮັດ ແລະສິ່ງທີ່ເຮົາມີຢູ່.

ຈົ່ງອ່ານ ລກ 5:1-3 . ຝູງຄົນທັງຫລາຍໄດ້ອ້ອມພຣະເຢຊູທີ່ກໍາລັງສືບຕໍ່ເຮັດງານຕາມທີ່ພຣະອົງໄດ້ຖືກສົ່ງມາເຮັດນັ້ນ ໃນຂະນະທີ່ຄົນອື່ນກໍໄປເຮັດງານຕາມວຽກງານປະຈໍາວັນຂອງໃຜລາວ. ຖ້າຫາກທ່ານເປັນຊີໂມນ, ທ່ານເຫັນວ່າອັນໃດຈະເປັນຄໍາຕອບທີ່ຖືກຕ້ອງເມື່ອພຣະເຢຊູໄດ້ເຂົ້າມາເພື່ອໃຊ້ເຮືອຂອງທ່ານ?

- ພຣະເຢໃຊ້ທຸກສິ່ງທີ່ເປັນຂອງເຮົາໄດ້. ພຣະອົງຊົງທຽວອອກທຽວເຂົ້າບ້ານຂອງເຮົາເກືອບສ່ຳກັນກັບເຮົາ.
- ເວລານີ້ຂ້າພະເຈົ້າບໍ່ໄດ້ໃຊ້ເຮືອ, ດັ່ງນັ້ນພຣະເຢຊູຈິ່ງສາມາດໃຊ້ເຮືອເຮົາໄດ້ຈົນກວ່າວ່າເຮົາຕ້ອງການ.
- ນີ້ເດ, ພຣະເຢຊູ. ຂ້ານ້ອຍກຳລັງຈະອອກເຮືອເພື່ອງານຂອງພຣະອົງ.
- ຂ້ານ້ອຍກຳລັງມີວຽກກັບມອງຢູ່. ຂໍເຊີນພຣະອົງເອົາເຮືອຂ້ານ້ອຍໄປໃຊ້ໂລດ.
- ພຣະອົງຊົງສະເດັດໄປອີກແລ້ວ. ເປັນຫຍັງ?

ດ້ວຍວ່າຊີໂມນເປັນຄົນຫາປາຄົນນຶ່ງໃນຄົນຫາປາທັງຫລາຍ, ເພິ່ນຈິ່ງມີເຄື່ອງມືສຳລັບຫາປາໂດຍສະເພາະ. ບໍ່ມີຈັກຢ່າງທີ່ມີແປກຕ່າງຫມູ່ ຫລືວ່າພິເສດລື່ນຫມູ່ໃນເຮືອງມອງ ແລະເຮືອທີ່ພຣະເຢຊູໄດ້ເຫັນໃນເວລານັ້ນ. ແຕ່ວ່າ, ເຂົາຮັບເອົາຈຸດປະສົງໃຫມ່ເມື່ອພຣະເຢຊູໄດ້ໃຊ້ເຂົາເພື່ອທຳຈຸດປະສົງຂອງພຣະອົງໃຫ້ສຳເຣັດ.

ພຣະເຢຊູໄດ້ດັດແປງ ແລະໃຊ້ສິ່ງຂອງປະຈຳວັນຢ່າງໃດ? ຈົ່ງເບິ່ງຢ່າງເຜີນໆ ແລະໃຫ້ຕິດຕໍ່ຄຳເວົ້າເຫລົ່ານີ້ໃຫ້ເຂົ້າກັນກັບສິ່ງທີ່ພຣະເຢຊູໄດ້ກະທຳມານັ້ນ.

....... ໄຫໃສ່ນ້ຳທີ່ເຮັດດ້ວຍຫີນ (ຢຮ 2:1-12) ....... ເຊືອກ (ຢຮ 2:15-16) .......ນ້ຳສ້າງ (ຢຮ 4)
....... ເຂົ້າຈີ່ຫ້າກ້ອນແລະປານ້ອຍສອງໂຕ (ຢຮ 6 :9-13) ....... ຂີ້ດິນແລະນ້ຳລາຍ (ຢຮ 9:6-9)

ກ. ພຣະເຢຊູປົວຄົນຕາບອດ ຂ. ພຣະເຢຊູເຮັດນ້ຳໃຫ້ເປັນເຫລົ້າແວງ ຄ. ພຣະເຢຊູຊົງລ້ຽງຄົນ 5000 ຄົນ ແລະຜູ້ຍິງກັບເດັກນ້ອຍ ງ. ຕົວຢ່າງຂອງພຣະເຢຊູໃນການໃຫ້ນ້ຳແຫ່ງຊີວິດ ....... ພຣະຢູຊົງຂ້ຽນຜູ້ຄົນ ແລະຊຳຣະພຣະວິຫານ.

ຖ້າຫາກວ່າພຣະເຢຊູໄດ້ມາໃນທີ່ທຳງານ ຫລືວ່າບ້ານຂອງທ່ານ, ທ່ານຈະພົບສິ່ງໃດແດ່? ຈົ່ງຄິດໃນໃຈຂອງທ່ານເຖິງບັນຊີເຄື່ອງໃຊ້ສອຍ, ຊັບສິນບັດ, ຄວາມສາມາດ, ແລະຄວາມຮອບຮູ້. ຈົ່ງເລືອກເອົາສາມຢ່າງຈາກສິ່ງທັງຫມົດນີ້ ແລະຈົ່ງສເນີຄວາມຄິດມາວ່າພຣະເຈົ້າອາດຈະໃຊ້ມັນເຮັດຫຍັງຖ້າຫາກວ່າທ່ານ " ອະນຸຍາດໃຫ້ພຣະອົງໃຊ້ສິ່ງທີ່ທ່ານມີຢູ່ນັ້ນ?"

1. ........................................................................................................................
2. ........................................................................................................................
3. ........................................................................................................................

ການສິດສອນ ແລະການກະທຳຂອງພຣະເຢຊູໄດ້ມີຜົນກະທົບທ່ານຢ່າງໃດ? ໃຫ້ຂີດກ້ອງທັງຫມົດທີ່ໃຊ້ໄດ້:

- ໄດ້ຊຸກຍູ້ຄວາມເຊື່ອຂອງຂ້າພະເຈົ້າ, " ຂ້າພະເຈົ້າເຊື່ອວ່າພຣະເຈົ້າຈະຊ່ອຍເຫລືອຂ້າພະເຈົ້າ."
- ໄດ້ທ້າທາຍຄວາມຄິດຂອງຂ້າພະເຈົ້າ. ມັນເປັນ ບາດລ້ຽວໃຫມ່ຂອງຂ້າພະເຈົ້າ.
- ມັນໃຫ້ຄວາມເຂົ້າໃຈແກ່ຂ້າພະເຈົ້າ, ຂ້າພະເຈົ້າເຫັນຕາມທີ່ທ່ານເຂົ້າໃຈ.
- ມັນໃຫ້ຂ້າພະເຈົ້າມີຄວາມຮັບກັນແລະກັນໄດ້. ຂອບໃຈທີ່ທ່ານເປັນເພື່ອນຂ້າພະເຈົ້າ.
- ມັນໃຫ້ກຳລັງໃຈຂ້າພະເຈົ້າ. ພຣະເຢຊູຮັກຂ້າພະເຈົ້າ.

ໃນຂະນະທີ່ທ່ານຮ່ຳຮຽນຈາກພຣະເຢຊູນັ້ນ, ທ່ານຈະອະນຸຍາດໃຫ້ພຣະອົງໃຊ້ສິ່ງຂອງທີ່ທ່ານມີຢູ່ໃນທຸກວັນນີ້ເພື່ອຈຸດປະສົງຂອງພຣະອົງໄດ້ດີກວ່າເກົ່າຢ່າງໃດ?

## 3. <u>ຈົ່ງທຳຕາມການສິດສອນຂອງພຣະເຢຊູ:</u> ( ລກ 5:4-7 )

ການອອກຄຳເຫັນຂອງຄົນງານອະເມຣິກັນໃນຫມໍ່ໆນີ້ໄດ້ພົບວ່າ 33 % ມັກງານຂອງຕົນເອງ, 28% ຮັກວຽກງານຂອງຕົນເອງ, ແລະມີ 26% " ກະຕືລືລົ້ນກັບງານຂອງຕົນເອງ. ມັນເປັນຄຳເຫັນຂອງສຽງສ່ວນຫລາຍທີ່ແທ້ຈິງ.

ທຸກໆການສຳຣວດຢັ່ງສຽງຂອງຄົນອະເມຣິກັນ ສ່ວນມາກຈະເຫັນວ່າເຂົາເຈົ້າພໍໃຈກັບວຽກງານຂອງຕົນ, ຄົນສ່ວນຫລາຍຍັງຮູ້ສຶກວ່າຈິງຮັກພັກດີນຳບໍຣິສັດຂອງເຂົາເຈົ້າ ເຖິງແມ່ນວ່າຈະຢູ່ໃນຖ້າມກາງໂລກ " ພາຍຫລັງເຫດການຂອງແອນຣອນ " ກໍຕາມ. ໃນຂໍ້ຕົ້ນໆ ຂອງລາຍການຂອງສິ່ງທີ່ເຮົາມັກຫລາຍຈາກວຽກງານຂອງເຮົານັ້ນ ແມ່ນສິ່ງໃດແດ່ທີ່ງານຂອງເຮົາໄດ້ໃຫ້ແກ່ເຮົາຄື: " ຄວາມຮູ້ສຶກເຖິງຄວາມສຳເຣັດ ".

ເປໂຕໄດ້ພົບກັບການທ້າທາຍອັນໃຫມ່ກັບວຽກຂອງຕົນ ແລະຈຸດປະສົງຂອງຊີວິດຂອງເພິ່ນ, ແລະພວກເຮົາກໍເຊັ່ນດຽວກັນ. ຈົ່ງອ່ານ ລກ 5:6-7 ແລະໃຫ້ຂີດກ້ອງຄວາມທ້າທາຍໃຫມ່ຂອງເປໂຕ.

ພຣະຄັມພີໄດ້ເວົ້າເຖິງ " ມອງ " ແລະ " ເຮືອ " ຂອງເປໂຕຢ່າງໃດ?

ເຣື່ອງ " ເຮືອ "?..........................................................................................................................

ແລະເຣື່ອງ: " ເຮືອທັງສອງລຳ " : .........................................................................................

ທ່ານຄິດວ່າຜົນທີ່ບໍ່ຄິດວ່າຈະໄດ້ຮັບຂອງການທ້າທາຍໃຫມ່ຂອງຊີໂມນນັ້ນ ຈະມີຜົນກະທົບຄວາມຮູ້ສຶກຕໍ່ຄວາມສຳເຣັດ ຫລືຈຸດປະສົງຂອງເພິ່ນຢ່າງໃດ?

ເມື່ອທ່ານໄດ້ຟັງຄຳສອນແລະທຳຕາມພຣະເຢຊູນັ້ນ, ມີຫວັງແດ່ທີ່ເປັນຜົນອອກມາ? ຈົ່ງເລືອກເອົາສິ່ງທີ່ຖືກຕ້ອງ.

....... ຂ້າພະເຈົ້າຫວັງຈະສຳເຣັດຜົນເມື່ອຂ້າພະເຈົ້າເຮັດໃນສິ່ງທີ່ຖືກຕ້ອງ.

....... ຂ້າພະເຈົ້າເຂົ້າໃຈໃນຄວາມເສັຽໃຈຂອງເພື່ອຄູ່ຂອງຂ້າພະເຈົ້າ.

....... ຂ້າພະເຈົ້າຈະຟັງສິ່ງທີ່ລູກຂອງຂ້າພະເຈົ້າສົນໃຈ.

....... ແລະອື່ນໆ.

ການເຮັດຕາມຄຳສອນຂອງພຣະເຢຊູເປັນການຖືກຕ້ອງ ແລະມີຈຸດປະສົງຖືກຕ້ອງສເມີ, ແຕ່ວ່າບາງທີມັນກໍອາດຈະຍາກລຳບາກແດ່. ຊີໂມນໄດ້ຟັງ ແລະໄດ້ເຮັດຕາມຄຳສັ່ງຂອງພຣະເຢຊູ ແລະມອງຂອງເພິ່ນກໍເລີ້ມຂາດ ແລະເຮືອທັງສອງລຳກໍເກືອບຈະຫລົ້ມ. ຊີໂມນເປັນຄົນຟັງຄວາມ, ແຕ່ວ່າຊີວິດຂອງເພິ່ນເອງກໍໄດ້ສ່ຽງຕໍ່ອັນຕະລາຍ.

ທ່ານເຄີຍໄດ້ປະສົບດ້ວຍຕົນເອງເຖິງຜົນໄດ້ຮັບຢ່າງບໍ່ຄາດຝັນເອົາໄວ້ ຈາກການທີ່ທ່ານໄດ້ເຮັດຕາມຄຳສັ່ງຂອງພຣະເຢຊູແບບດຽວກັນນີ້ຈັກເທື່ອບໍ່? ຈົ່ງອະທິບາຍ.

ພຣະເຢຊູໄດ້ຫັນປ່ຽນຄວາມຄິດອັນສລາດຂອງຊີໂມນ, ທີ່ໄດ້ຫາປາຈົນຫມົດຄືນ, ມາໃຫ້ເປັນຄວາມຄິດທີ່ຖືກຕ້ອງຄື ໃຫ້ຢ່ອນມອງລົງຕຶກປາອີກ! ຈົ່ງຄິດເບິ່ງບັນຫາ ຫລືວ່າຈຸດປະສົງໃຫມ່ທີ່ທ່ານມີຢູ່: ຈົ່ງຖາມທ່ານເອງ:

ມີຫລາຍວິທີທີ່ແຕກຕ່າງກັນບໍທີ່ຂ້າພະເຈົ້າໄດ້ເຫັນ?

ຂ້າພະເຈົ້າຈະຄິດຢ່າງໃດຈຶ່ງຈະເຫັນທາງນັ້ນໄດ້?

ມີວິທີທາງທີ່ແຕກຕ່າງກັນຈັກຢ່າງເພື່ອຈະແກ້ໄຂບັນຫານີ້ໄດ້?

ຈົ່ງອະທິຖານເພື່ອວ່າພຣະເຢຊູຈະຊ່ອຍທ່ານໃຫ້ເຫັນຄວາມສາມາດເປັນໄປໄດ້ເພື່ອໃຫ້ປາເຕັມມອງຈົນມອງຂາດ ແລະເຕັມເຮືອຈົນເຮືອເກືອບຫລົ້ມ. ຄວາມຄິດ " ຖືກຕ້ອງ " ອັນໃດທີ່ພຣະເຢຊູໄດ້ໃຫ້ທ່ານແດ່?

ໃນສ່ວນສະເພາະເຈາະຈົງອັນໃດແດ່ທີ່ທ່ານຕ້ອງການຢາກຈະຟັງຄວາມພຣະເຢຊູສຳລັບຈະຢ່ອນມອງຂອງທ່ານລົງນ້ຳອີກ?

ຊີໂມນອາດຈະພໍໃຈຈາກຄວາມພະຍາຍາມຢ່າງສຸດຂີດຂອງເພິ່ນ ເຖິງແມ່ນວ່າເພິ່ນຈະບໍ່ໄດ້ປາຈັກໂຕກໍດີ (ຂໍ້ 5), ແຕ່ວ່າເມື່ອເພິ່ນໄດ້ທຳຕາມທີ່ພຣະເຢຊູບອກເພິ່ນນັ້ນແລ້ວ ແລະເພິ່ນກໍໄດ້ພົບວ່າເພິ່ນໄດ້ຮັບຄວາມອຸດົມສົມບູນອັນໃຫມ່!

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 24 ຕຸລາ 2004 ( 10-24-2004 )

---

# ເຂົ້າເຖິງຊີວິດຢ່າງແທ້ຈິງ

**ເນື້ອເຣື່ອງໃນພຣະຄັມພີ :** ( ມທ 19: 16-30 )

**ຄວາມຈິງໃນພຣະຄັມພີ :** ຄົນທັງຫລາຍໄດ້ພົບຊີວິດຈິງດ້ວຍການອຸທິດຢ່າງຫມົດຈິດຫມົດໃຈເພື່ອຖວາຍແດ່ພຣະເຢຊູ, ບໍ່ແມ່ນດ້ວນການກະທຳຕາມໃຈມັກຂອງຕົນ ແລະດ້ວຍການສແວງຫາຊັບສົມບັດຕ່າງໆ.

**ພຣະຄັມພີຂໍ້ສຳຄັນ :** ພຣະເຢຊູທອດພຣະເນດພວກສາວົກແລ້ວຊົງກ່າວວ່າ, " ຝ່າຍມະນຸດກໍເຫລືອກຳລັງທີ່ຈະເຮັດໄດ້ ແຕ່ຝ່າຍພຣະເຈົ້າຊົງເຮັດໄດ້ທຸກຢ່າງ " ( ມທ 19:26 ).

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ໃຊ້ຊີວິດກັບການອຸທິດຕົວຕໍ່ພຣະເຢຊູຢ່າງຫມົດຈິດຫມົດໃຈ.

## ຂ້າພະເຈົ້າຈະປະສົບກັບຊີວິດອັນແທ້ຈິງຢ່າງໃດ?

" ແມ່, ເຮົາຢື້ເອົາບໍ່ເຖິງ. " ຄຳນີ້ເປັນຄຳທີ່ຄຸ້ນຫູເມື່ອເວລາເດັກນ້ອຍພະຍາຍາມຢື້ເອົາເຂົ້າຫນົມຫລືວ່າສິ່ງອື່ນທີ່ຢູ່ຫລັງຕູ້. ຫລືວ່າ, " ພໍ່, ເຮົາພະຍາຍາມເຮັດອີກບໍ່ໄດ້ອີກແລ້ວ ", ເມື່ອເດັກສິບກວ່າປີໄດ້ປະສົບກັບການປະຕິເສດຫລືວ່າການລົ້ມເຫລວ. ຄົນທຳງານຮ່ວມກັນໄດ້ຟາດປື້ມລົງຫລັງໂຕະຢ່າງແຮງ ແລະຮ້ອງຂຶ້ນໃສ່ຜູ້ຄວບຄຸມວຽກວ່າ, " " " ເຈົ້າບໍ່ເຄີຍໃຫ້ໂອກາດຂ້ອຍຈັກເທື່ອເລີຍ! " ການເບິ່ງເພື່ອນຂ້າງບ້ານຂອງທ່ານຂັບຣົດກະບະຄັນໃຫມ່ເຂົ້າທາງຫນ້າບ້ານຂອງລາວນັ້ນ ມັນຕັກເຕືອນທ່ານອີກວ່າທ່ານບໍ່ມີຣົດກະບະໃຫມ່ໃນຫນ້າບ້ານຂອງທ່ານຄືລາວ.

ໃນທີ່ສຸດຂອງວັນນັ້ນ, ທ່ານໄດ້ພົບວ່າມັນຈະຕ້ອງມີຫລາຍຢ່າງຕື່ມອີກໃນຊີວິດນີ້. ຄຳເວົ້າຂອງພຣະເຢຊູຍັງດັງກັງວານຢູ່ໃນໃຈຂອງທ່ານວ່າ, " ຝ່າຍເຮົາມາເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ " ( ຢຮ 10: 10). ຄຳເວົ້າຂອງການຮັບໃຊ້ຂອງພຣະອົງແມ່ນເພື່ອຊີວິດຂອງທ່ານ, ຄຳເວົ້າໃນການຮັບໃຊ້ຂອງທ່ານເດແມ່ນຫຍັງ? "

ໃນຂະນະທີ່ເຮົາສຶກສາຄຳສົນທະນາຂອງພຣະເຢຊູກັບເສດຖີຫນຸ່ມ ແລະອັຄະສາວົກຂອງພຣະອົງ, ພວກເຮົາຈະປະສົບກັບການມອງ ແລະການຈັດການກັບຊັບສົມຂອງເຮົາຢ່າງໃດ. ພວກເຮົາພະຍາຍາມຈະບັນລຸຊີວິດອັນແທ້ຈິງ ແລະຕ້ອງການໆຊ່ອຍເຫລືອບໍ່? ພວກເຮົາມີຄວາມບໍ່ແນ່ໃຈໃນຄວາມສຳພັນ ແລະຄວາມຕ້ອງການຢາກໃຫ້ມີຫູທີ່ຟັງພວກເຮົາຫລືບໍ່? ບາງທີພວກເຮົາບໍ່ເຄີຍໄດ້ສົມຫວັງໃນສິ່ງທີ່ເຮົາຕ້ອງການ. ຈົ່ງພາກັນສັງເກດຄຳຖາມນີ້. ເຮົາຈະໄດ້ປະສົບກັບຊີວິດແທ້ຈິງໄດ້ຢ່າງໃດ?

## ສຶກສາພຣະຄັມພີ

### 1. ການສແວງຫາຊີວິດອັນແທ້ຈິງ, ພາກນຶ່ງ: ( ມທ 19:16-22 )

ທ່ານ ສະແຕນຟອດ ແອັດດີສັນ ເປັນຜູ້ທີ່ບາງຄົນຮ້ອງວ່າ, " ຄົນຊຶ່ມໃສ່ຫູມ້າ ". ເມື່ອມ້າໄດ້ເຈັບໂຊລົງເພາະໃຊ້ງານຫນັກເກີນຄວນຈົນເຮັດໃຫ້ກະດູກແອວຫລັ່ນຈຶ່ງທຳງານບໍ່ໄດ້. ທ່ານ ແອັດດີສັນ ໄດ້ເວົ້າວ່າ, " ຂ້າພະເຈົ້າໄດ້ພະຍາຍາມຢ່າງດີທີ່ສຸດເພື່ອຈະຮູ້ວ່າມີຫຍັງທີ່ຂາດຕົກບົກພ່ອງ. ແລະສິ່ງທີ່ຂາດຕົກບົກພ່ອງນັ້ນກໍແມ່ນການເຂົ້າໃຈ. "

ພຣະເຢຊູໄດ້ສື່ສານກັບພວກເຮົາໃນເຣື່ອງການ " ການຊອກຫາຊີວິດອັນແທ້ຈິງ ". ຈົ່ງອ່ານ ມທ 19:16-20.

ໃນຂະນະທີ່ທ່ານອ່ານນີ້, ຈົ່ງຂີດວົງມົນໃສ່ຄຳຖາມຂອງເສດຖີໜຸ່ມ ແລະໃຫ້ທ່ານຂີດກ້ອງໃສ່ຄຳຕອບຂອງພຣະເຢຊູ. ຈົ່ງຂຽນອັກສອນຕົວ " ຊ " ໃສ່ຂ້າງຄຳສັ່ງທີ່ທ່ານເຫັນວ່າຊັດເຈນ ແລະຂຽນອັກສອນ " ຍ " ໃສ່ຄຳສັ່ງທີ່ຍາກ (ຂໍ້ 18-19). ຊີວິດຂອງທ່ານຍັງຂາດສິ່ງໃດສິ່ງນຶ່ງຢູ່ບໍ່? (ຂໍ້ 20). ທ່ານໄດ້ມີຄວາມສຳພັນກັບພຣະເຢຊູບໍ່? ຫລືວ່າຍັງຂາດຕົກບົກພ່ອງໃນເຣື່ອງການເຊື່ອຟັງຄວາມ, ຫລືເຣື່ອງຄວາມຢາກ, ຫລືເຣື່ອງຂອງທຸຣະກິດ? ຈົ່ງຕອບ: ...........
..............................................................................................................................................

ແອັດດີສັນ, " ຄົນຊື່ນໃສ່ໜູນ້າ " ຄົນນີ້ໄດ້ເວົ້າວ່າ, " ຄົນທຸກຄົນຢ້ານທີ່ຈະປະເຊີນກັບຄວາມກົວ... ສິ່ງນີ້ມັນເຮັດໃຫ້ທ່ານຢູ່ຢ່າງສະບາຍເພາະທີ່ນັ້ນທ່ານຈະໃຊ້ສອຍພຣະພອນທັງຫມົດທີ່ພຣະຜູ້ສ້າງໄດ້ໃຫ້ທ່ານ."

ແມ່ນຫຍັງທີ່ເຮັດໃຫ້ທ່ານຢ້ານກົວ? ເຮັດໃຫ້ທ່ານເຈັບປວດ? ແມ່ນຂອງປະທານອັນໃດແດ່ທີ່ພຣະເຈົ້າໄດ້ໃຫ້ທ່ານສຳລັບຄວາມຢ້ານກົວເຫລົ່ານັ້ນ? ຈົ່ງເພີ່ມ " ຄວາມຢ້ານກົວແລະຂອງປະທານຈາກພຣະຜູ້ສ້າງ "ໃຫ້ຄົບເຕັມ.

ໃນກະດານ ການອະທິຖານເພື່ອຂໍພຣະພອນໄດ້ຂຽນວ່າ, " ພຣະເຈົ້າຊົງຍິ່ງໃຫຍ່ ". " ພຣະເຈົ້າເປັນພຣະເຈົ້າທີ່ດີ ". ດ້ວຍຮູ້ຈັກວ່າພຣະເຈົ້າພຣະອົງດຽວເທົ່ານັ້ນທີ່ເປັນ " ພຣະເຈົ້າທີ່ດີ". ຈົ່ງຍອມໃຫ້ພຣະອົງຕັດກັບທ່ານແລະຊ່ອຍເຫລືອທ່ານຕອບຄຳຖາມທີ່ວ່າ, " ມີຫຍັງອີກແດ່ທີ່ຂ້າພະເຈົ້າຍັງຂາດເຂີນ?".

## 2. <u>ການສແວງຫາຊີວິດອັນແທ້ຈິງ, ພາກສອງ:</u> ( ມທ 19:16-22 )

ຈົ່ງອ່ານ ມທ 19:21-22 . ຈົ່ງທຳການສົມທຽບກັນກັບຊັບສົມບັດ: " ຖ້າທ່ານປາຖນາຢາກເປັນຜູ້ຄົບຖ້ວນ...................................................... ແຈກທານຄົນອານາຖາ ແລ້ວ.............................................. ແລະ......................... . ເມື່ອຄົນໜຸ່ມໄດ້ຍິນດັ່ງນັ້ນ.......................................................................... ".

ຈົ່ງຂີດກ້ອງສິ່ງທີ່ກີດຂວາງເສດຖີໜຸ່ມຄົນນັ້ນເພື່ອບໍ່ໃຫ້ລາວໄດ້ພົບຊີວິດທີ່ລາວກຳລັງສແວງຫາຢູ່ໃນຂໍ້ 22.

ຖ້າວ່າເສດຖີຄົນນັ້ນມີ " ບັນຫາໃນໃຈ " ແລ້ວ, ບັນຫາໃນໃຈຂອງລາວທີ່ກ່ຽວກັບເງິນຄຳນັ້ນແມ່ນຫຍັງ? ໃນໜັງສື " ຊີວິດທີ່ຂັບເຄື່ອນໄປດ້ວຍຈຸດປະສົງ " ທ່ານ ຣິກ ວາແຣນໄດ້ຂຽນວ່າ, " ຄົນສ່ວນຫລາຍບໍ່ໄດ້ຮູ້ຈັກວ່າເງິນທີ່ມາຈາກພຣະເຈົ້ານັ້ນເປັນໄດ້ທັງສອງຢ່າງຄື ການທົດສອບແລະການໄວ້ວາງໃຈໃນເງິນຄຳ. ພຣະເຈົ້າໄດ້ໃຊ້ເງິນຄຳເພື່ອຈະສິດສອນພວກເຮົາໃຫ້ໄວ້ວາງໃຈໃນພຣະອົງ, ແລະສຳລັບຄົນຢ່າງຫລວງຫລາຍແລ້ວ ເງິນຄຳແມ່ນການທົດສອບອັນໃຫຍ່ກັບຄົນທຸກຄົນ."

ຈົ່ງໃຫ້ເຮັດເປັນສອງລາຍການ: ໃນຊີວິດຂອງທ່ານ ພຣະເຈົ້າໄດ້ໃຊ້ເງິນຄຳເປັນການທົດສອບ ແລະການໄວ້ວາງໃຈໃນເງິນຄຳຢ່າງໃດ?

| | ເປັນການທົດສອບ | ເປັນການໄວ້ວາງໃຈ |
|---|---|---|
| ຊີວິດຂອງຄອບຄົວ | | |
| ຄວາມມ່ວນຊື່ນ/ງານອະດິເຣກ | | |
| ອາຊີບ/ວຽກທຳ | | |
| ຄວາມສຳພັນ | | |
| ຄຣິສຈັກຕະ/ການຖວາຍນຶ່ງສ່ວນສິບ | | |

ເສດຖີໜຸ່ມໄດ້ສອບຕົກ ( ຕ ) ຫລືວ່າ ສອບຜ່ານ ( ຜ ) ໃນການທົດສອບຂອງເງິນຄຳ?............ , ແລະ ໃນການໄວ້ວາງໃຈໃນເງິນຄຳ?............ . ຈົ່ງອະທິບາຍ.

ເມື່ອທ່ານສອບຕົກ ຫລືວ່າສອບຜ່ານການທົດສອບແລະການວາງໃນເງິນຈາກພຣະເຈົ້ານັ້ນ, ທ່ານມີຄວາມຮູ້ສຶກຢ່າງໃດ? ຈົ່ງຂີດວົງມົນອ້ອມຄຳທັງຫລາຍທີ່ບອກຄວາມຮູ້ສຶກເມື່ອທ່ານໄດ້ສອບຕົກ. ຈົ່ງຂີດກ້ອງຄຳທັງຫລາຍທີ່ບອກວ່າທ່ານຮູ້ສຶກຢ່າງໃດເມື່ອໄດ້ສອບຜ່ານ.

....... ຮູ້ສຶກມີຄວາມຜິດ ....... ຮູ້ສຶກລະອາຍ ....... ຮູ້ສຶກວ່າຕົນສລາດ ....... ຮູ້ສຶກເສົ້າໃຈ
....... ຮູ້ສຶກໃຈຮ້າຍ ....... ຮູ້ສຶກໄດ້ຖືກໜູນໃຈ ....... ຮູ້ສຶກເປັນທຸກຮ້ອນໃຈ ....... ຮູ້ສຶກຖືກ

ຫມິ່ນປະມາດ ....... ຮູ້ສຶກດີໃຈ ....... ຮູ້ສຶກວ່າເປັນຜູ້ຜິດ ....... ຮູ້ສຶກກິນແຫນງ ....... ຮູ້ສຶກໄຮ້ຄ່າ ....... ຮູ້ສຶກຂອບຄຸນ ....... ຮູ້ສຶກພໍໃຈ ....... ແລະອື່ນໆ.

ຈົ່ງຊັ່ງຊາເບິ່ງຄຸນຄ່າໃນການຕິດຕາມພຣະເຢຊູຢ່າງລະມັດລະວັງ. ຈົ່ງພິຈະນາໃນເຣື່ອງເງິນຄຳໃຫ້ດີ, ມັນເປັນສິ່ງທີ່ໄຮ້ຄ່າ. ພຣະເຈົ້າໄດ້ໃຊ້ເງິນຄຳໃຫ້ເປັນການທົດສອບ ຫລືວ່າໃຫ້ທ່ານວາງໃຈໃນມັນບໍ່ໃນຊີວິດນີ້?

## 3. ຢ່າໃຫ້ການຮັກເງິນຄຳປິດບັງຊີວິດອັນແທ້ຈິງ: ( ມທ 19:23-26 )

ໃຫ້ເຮົາພາກັນຫລິ້ນເກມ " ຂ້ອຍແມ່ນໃຜ " ກັນເທາະ. ນີ້ຄືກະຕິກາຫລືເງື່ອນໄຂ : " ຂ້ອຍເປັນຄົນຮັ່ງມີທີ່ສຸດໃນໂລກ. ຂ້ອຍເປັນຜູ້ຕັ້ງບໍຣິສັດ Computer software ທີ່ໃຫຍ່ໂຕ. ຂ້ອຍແມ່ນຜູ້ໃດ?" ຄຳຕອບ : ....................

ຕໍ່ໄປນີ້ແມ່ນທີຂອງເຈົ້າ. ເຈົ້າແມ່ນຜູ້ໃດ?

ການເປັນຄົນຮັ່ງມີທີ່ສຸດໃນໂລກນັ້ນຕ້ອງເປັນສິ່ງທີ່ບໍ່ຫນ້າເຊື່ອ! ແຕ່ວ່າໃຫ້ອ່ານ ມທ 19:23-24 . ເປັນຫຍັງມັນຈຶ່ງເປັນການຍາກສຳລັບຄົນຮັ່ງມີທີ່ຈະເຂົ້າໄປໃນຣາຊອານາຈັກຂອງພຣະເຈົ້າ?

ການຮັກເງິນຄຳເປັນອຸປະສັກໃນການຕິດຕາມ ຫລືການອຸທິດຕົນຈົນຫມົດໃຈໃຫ້ກັບພຣະເຢຊູສເມີໄປບໍ່? ຈົ່ງອະທິບາຍ.

ຫລາຍເທື່ອເງິນຄຳມັກກາຍເປັນຕົ້ນເຫດຂອງບັນຫາ ແລະການດີ້ນລົນທີ່ຢາກຈະໄດ້ແຕ່ບໍ່ໄດ້ມາ. ຈົ່ງອ່ານແລະຕອບຄຳຖາມຂອງການສອບທີ່ງ່າຍໆ ແລະໃຫ້ຕີລາຄານິສັຍທີ່ກ່ຽວເຣື່ອງເງິນຂອງຄອບຄົວທ່ານ. ທ່ານມີບັນຫາບໍ່?

" ການສອບອັນງ່າຍໆ " ເພື່ອຈະໄດ້ຮູ້ວ່າ ທ່ານມີບັນຫາດ້ານການເງິນບໍ່?

....... 1. ທ່ານໃຊ້ Credit Card ເພື່ອແກ້ໄຂບັນຫາໃນແຕ່ລະເດືອນບໍ່?
....... 2. ທ່ານເຄີຍຈ່າຍຫນີ້ສິນຊ້າບໍ່?
....... 3. ທ່ານເຄີຍຫັກເອົາເງິນໃນຮ່ວງລາຍຈ່າຍເພື່ອໄປຈ່າຍຫນີ້ສິນອັນອື່ນອີກບໍ່?
....... 4. ທ່ານເຄີຍຊັ່ງສຽງໂທຣະສັບຂອງທ່ານທີ່ມີຄົນໂທມາຫາທ່ານບໍ່?
....... 5. ທ່ານຈ່າຍ Credit Card ແຕ່ Minimum payment ເທົ່ານັ້ນບໍ່?
....... 6. ທ່ານລົ້ມເຫລວໃນການຖວາຍນຶ່ງສ່ວນສິບບໍ່ ຫລືວ່າມີຄວາມຂີ້ຫນຽວໃນການບໍຣິຈາກ?
....... 7. ທ່ານບໍ່ມີບັນຊີເງິນຝາກອອມສິນ ຫລືວ່າບັນຊີຝາກເງິນບຳນານແມ່ນບໍ່?
....... 8. ທ່ານເຄີຍຖອນເງິນເກີນກຳນົດທີ່ຕົນມີຢູ່ເກີນນຶ່ງເທື່ອໃນປີນີ້ບໍ່?
....... 9. ທ່ານມີຄວາມຝັນວ່າຈະຮັ່ງມີຢ່າງໄວບໍ່?

ຖ້າທ່ານຕອບວ່າ " ແມ່ນແລ້ວ " ເຖິງສາມຂໍ້ ຫລືວ່າກາຍສາມຂໍ້ຂຶ້ນໄປຕໍ່ຂອງຄຳຖາມເຫລົ່ານີ້ແລ້ວ ມັນອາດບອກທ່ານວ່າ ທ່ານກຳລັງມີບັນຫາດ້ານການເງິນໃນຂີດອັນຕະລາຍແລ້ວ.

ຄຳເວົ້າຂອງພຣະເຢຊູບໍ່ພຽງແຕ່ເປັນສິ່ງສຸດທ້າຍທີ່ເສດຖີຫນຸ່ມຄົນນີ້ຄວນຈະໄດ້ຍິນເທົ່ານັ້ນ, ແຕ່ວ່າມັນຍັງເປັນຄຳເວົ້າທີ່ພວກອັກຄະສາວົກບໍ່ປະສົງຢາກຈະຟັງຄືກັນ. ຈົ່ງຂີດວົງມົນໃສ່ການກະທຳຂອງເຂົາ (ຂໍ້ 25). ຈົ່ງອ່ານ ຂໍ້ 26 . ໃນຊີວິດຂອງທ່ານ, ບັນຫາການເງິນ ຫລືວ່າບັນຫາຢ່າງອື່ນນັ້ນ ອັນໃດທີ່ທ່ານເຫັນວ່າມັນເປັນໄປບໍ່ໄດ້ສຳລັບທ່ານ ແຕ່ວ່າມັນເປັນໄປໄດ້ສຳລັບພຣະເຈົ້າ?

ແມ່ນຫຍັງຄືສິ່ງທີ່ພຣະເຢຊູໄດ້ສະແດງອອກມາໃຫ້ທ່ານຮູ້ວ່າທ່ານຈະຕ້ອງໄດ້ທຳເພື່ອວ່າທ່ານຈະໄດ້ໃຊ້ຊີວິດຂອງທ່ານທີ່ອຸທິດຕົວຈົນຫມົດຈິດຫມົດໃຈຕໍ່ພຣະອົງ?

- ☐ ຈົ່ງວາງແຜນເພື່ອຖວາຍນຶ່ງສ່ວນສິບ.
- ☐ ຈົ່ງຮູ້ຈັກວ່າເງິນນັ້ນຈະບໍ່ພຽງພໍສຳລັບທ່ານຈັກເທື່ອ, ແຕ່ວ່າຈົ່ງຮູ້ຈັກວາງໃຈໃນພຣະເຈົ້າ.
- ☐ ຈົ່ງເຮັດໃຫ້ຊີວິດຂອງຂ້າພະເຈົ້າງ່າຍຂຶ້ນດ້ວຍການຮູ້ຈັກລົດບາງສິ່ງບາງຢ່າງທີ່ບໍ່ຈຳເປັນອອກໄປ.
- ☐ ຈົ່ງໃຫ້ຄອບຄົວມີການວາງແຜນໃນການຮັບໃຊ້.

- ຈົ່ງໃຫ້ເຮົາຊື້ແຕ່ສິ່ງທີ່ເຫັນວ່າຈຳເປັນ.
- ແລະອື່ນໆ...

## 4. <u>ຈົ່ງສລະຖິ້ມທຸກຢ່າງເພື່ອຊີວິດແທ້:</u> ( ມທ 19:27-30 )

ໃນບົດຮຽນວັນນີ້, ເຮົາໄດ້ພົບວ່າເປໂຕໄດ້ຫັນມາຫາພຣະເຢຊູແລະກ່າວວ່າ, " ເບິ່ງແມ, ຂ້ານ້ອຍທັງຫລາຍໄດ້ສລະຫມົດທຸກສິ່ງແລ້ວ ແລະໄດ້ຕິດຕາມທ່ານມາ ພວກຂ້ານ້ອຍຈະເຮັດຫຽັງແດ່?" ຈົ່ງອ່ານ ມທ 19:27-29 . ຈົ່ງໃຫ້ທ່ານຂຽນຄຳຖາມເພື່ອຖາມພຣະເຢຊູ ຕາມພາສາໃນທຸກວັນນີ້ ເບິ່ງດູ?

ທ່ານໄດ້ເຫັນວ່າຄຳເວົ້າຂອງເປໂຕຕໍ່ພຣະເຢຊູວ່າເປັນຢ່າງໃດ? ຈົ່ງເລືອກເອົາສິ່ງທີ່ໃຊ້ໄດ້.

- ຄຳເວົ້າທີ່ຂາດໄປເປັນຍ່ານໆ ສະແດງວ່າການເຫັນແຈ້ງຂອງເປໂຕໄດ້ຫັນປ່ຽນໄປ.
- ເປັນຄຳຕອບທີ່ອອກມາຢ່າງທັມມະດາ.
- ເປັນໂອກາດໃຫມ່ສຳລັບພຣະເຢຊູທີ່ຈະໄດ້ອວຍພອນເພິ່ນ.
- ເປັນລະຍະເວລາທີ່ຂາດຄວາມເຊື່ອ.
- ແລະອື່ນໆ...

ມີໂອກາດໃດແດ່ໃນຊີວິດຂອງທ່ານທີ່ເປັນເຫດໃຫ້ທ່ານເປັນເຫມືອນເປໂຕ ທີ່ໄດ້ຖາມວ່າ, " ຂ້ານ້ອຍຈະຕ້ອງເຮັດຫຽັງແດ່?"

ໃນຊີວິດຂອງທ່ານວັນນີ້, ດຽວນີ້ທ່ານມີນິສັຍຕໍ່ພຣະເຢຊູຢ່າງໃດ? ຈົ່ງໃຫ້ເລືອກເອົາໃນຂໍ້ຕ່າງໆຂ້າງເທິງນີ້ ຫລືຈະຂຽນຂໍ້ໃຫມ່ຕື່ມໃສ່ອີກກໍໄດ້.

ທ່ານເດົາເອົາໄດ້ບໍ່ວ່າຄຳຕອບທີ່ພຣະເຈົ້າກຳລັງຈະຕອບຄຳຖາມຂອງທ່ານນັ້ນ?

ພຣະເຢູໄດ້ຕອບຄຳຖາມຂອງພວກອັຄະສາວົກດ້ວຍການຫັນປ່ຽນຄວາມສົນໃຈຂອງເຂົາຫນີໄປໃຫ້ຫ່າງຈາກຊັບສົມບັດຊົ່ວຄາວທີ່ເຂົາວາງໃຈນັ້ນ ແລະໄດ້ຊີ້ງຊີ້ໃຫ້ເຂົາເຫັນຄວາມສຳຄັນຂອງສິ່ງທີ່ຈະມານັ້ນສຳຄັນກວ່າ. ຈົ່ງອ່ານຄືນເບິ່ງ ຂໍ້ 28-29; ຈົ່ງຫມາຍສິ່ງຕ່າງໆທີ່ພຣະເຢຊູໄດ້ເວົ້າເຖິງນັ້ນ. ເຖິງແມ່ນວ່າຄວາມຕຽມ ຫລືຈະແມ່ນຄວາມຫມັ້ນໃຈຂອງເປໂຕຕໍ່ພຣະອົງກໍຕາມ, ພຣະເຢຊູກໍໄດ້ກ່າວຊ້ຳເຖິງສອງເທື່ອເຖິງບຳເນັດທີ່ຈະໄດ້ຈາກການຕິດຕາມພຣະອົງ. ອັນໃດທີ່ທ່ານຄິດເຫັນວ່າອາດຈະມີຄວາມຫມາຍສຳຄັນກວ່າສຳລັບພວກອັຄະສາວົກ?

ອັນໃດທີ່ມີຄວາມຫມາຍສຳຄັນສຳລັບທ່ານໃນເມື່ອທ່ານໄດ້ພິຈາຣະນາເບິ່ງຄຸນຄ່າທີ່ຈະໄດ້ມາຈາກການຕິດຕາມພຣະເຢຊູດ້ວຍການອຸທິດຈົນຫມົດຈິດຫມົດໃຈ? ເປັນດ້ວຍເຫດໃດ?

ຈົ່ງຄິດເບິ່ງວ່າ ພຣະເຢຊູໄດ້ສລະຟ້າສວັນຂອງພຣະອົງສະເດັດລົງມາຍັງໂລກເພື່ອທ່ານ. ຈົ່ງສັນຍາກັບພຣະເຈົ້າໃນວັນນີ້: ຈົ່ງຮັກພຣະເຈົ້າໃຫ້ຫມົດຈິດຫມົດໃຈຂອງທ່ານ ແລະຈົ່ງຮັກເພື່ອນບ້ານຂອງທ່ານເຫມືອນທ່ານຮັກຕົວທ່ານເອງເພື່ອຈະໄດ້ໄປເຖິງຊີວິດອັນແທ້ຈິງ.

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 31 ຕຸລາ 2004 ( 10-31-2004 )

---

## ປາຖນາຢາກຮັບການຊ່ອຍໃຫ້ພົ້ນ

**ພື້ນຖານຂອງເຣື່ອງ :** ( ມຣກ 5:1-20 )

**ຈຸດສຸມຂອງເຣື່ອງ :** ( ມຣກ 5:1-13, 18-20 )

**ຄວາມຈິງໃນພຣະຄັມພີ :** ພຣະເຢຊູສາມາດຊ່ອຍຄົນທັງຫລາຍໃຫ້ພົ້ນຈາກອຳນາດຂອງຜີມານທີ່ຄວບຄຸມພວກເຂົາໄດ້.

**ພຣະຄັມພີຂໍ້ສຳຄັນ :** ພຣະອົງບໍ່ໄດ້ຊົງອະນຸຍາດ ແຕ່ຊົງກ່າວແກ່ລາວວ່າ, " ໃຫ້ເຈົ້າເມືອບ້ານຫາພີ່ນ້ອງ ແລ້ວບອກເຂົາເຖິງເຣື່ອງເຫດການອັນໃຫຽ່ຊຶ່ງພຣະເຈົ້າໄດ້ຊົງໂຜດແກ່ເຈົ້າແລະຊົງພຣະເມດຕາແກ່ເຈົ້າແລ້ວ.(ມຣກ 5:19).

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ມາຫາພຣະເຢຊູເພື່ອທ່ານຈະໄດ້ຮັບຄວາມພົ້ນຈາກຜີມານຊາຕານ.

## ຂ້າພະເຈົ້າຈະພົ້ນຈາກຜີມານໄດ້ຢ່າງໃດ?

ນັກສິລະປະ Dean Kalomas ໄດ້ທຳງານເກືອບສິບປີມາແລ້ວເພື່ອຈະສ້ອມຮູບປະດັບຄືນໃຫມ່ທີ່ໄດ້ຖືກແຕ້ມປະໄວ້ຢ່າງດົນນານຈາກນັກແຕ້ມທີ່ລືຊື່ຄືທ່ານ Elmer E. Garnsey. ໃນຕອນປາຍຂອງສັຕະວັດທີ 19 ທ່ານ Garnsey ໄດ້ນຳທີມນັກແຕ້ມເພື່ອປະດັບອາຄານ Jefferson ໃນຫໍສມຸດຂອງສະພາສູງດ້ວຍຮູບພາບອັນມີລວດລາຍສອດສີສວຍງາມ. ສິລະປະຊິ້ນນີ້ຂອງທ່ານໄດ້ຖືກເສັຽຫາຍແລະເປື້ອນເປິະຢ່າງຫນັກໃນລະຍະສັຕະວັດທີ 20 ຈາກການປົກຄຸມດ້ວຍນ້ຳສີສີຂາວວາງທັບກັນເອົາໄວ້ບ່ອນນັ້ນຕັ້ງຫລາຍໆຊັ້ນ. ການແຕ້ມປະດັບປະດາເອ້ຍ້ອງຂອງທ່ານໄດ້ສຳເຣັດຜົນ ຫາກແຕ່ວ່າໄດ້ຖືກຫລົງລືມໄປຈົນກວ່າວ່າທາງຫໍສມຸດໄດ້ຕັດສິນໃຈວ່າຈະສ້ອມແປງມັນຄືນໃຫມ່.

ເມື່ອພຣະເຢຊູໄດ້ມາພົບຊາຍຄົນນັ້ນ, ລາວໄດ້ຖືກຜີສິງຕັ້ງນົ່ງກອງທັບ, ລາວໄດ້ຢູ່ໃນຫລຸມຝັງສົບເປັນເວລາດົນນານ. ລາວເປືອຍຕົວຢູ່, ແລະບໍ່ສາມາດຈະຢູ່ໃນບ້ານເຮືອນໄດ້. ລາວຕ້ອງການໆຊ່ອຍເຫລືອໃຫ້ພົ້ນ! ຊາຍຄົນນີ້ໄດ້ຖືກຄວບຄຸມດ້ວຍຜີຕັ້ງຫລາຍໆຕົວ, ຖືກຫລົງລືມຈາກຄອບຄົວ ແລະເພື່ອນໆ, ແລະລາວໄດ້ຖືກຊ່ອຍໃຫ້ພົ້ນດ້ວຍຄວາມຮັກ ແລະດ້ວຍຣິດເດດອຳນາດຂອງພຣະເຢຊູຄຣິດ.

ການຊ່ອຍໃຫ້ພົ້ນມີຄວາມຫມາຍວ່າແນວໃດສຳລັບທ່ານ? ທ່ານຕ້ອງການການປ່ອຍຕົວ, ການຖືກປົດປ່ອຍ, ການກູ້ພັຍ, ການສ້ອມແປງຄືນໃຫມ່, ການຫາຍຈາກການເຈັບເປັນ, ການຫລົບຫນີ, ຫລືວ່າການເປັນອິສຣະພາບບໍ່? ໃນຂະນະທີ່ທ່ານໄດ້ສັງເກດເບິ່ງເຣື່ອງນີ້ຢູ່, ຈົ່ງໃຫ້ການເປັນພະຍານຂອງຊາຍຄົນນີ້ຊ່ອຍທ່ານຕອບຄຳຖາມທີ່ວ່າ. ຂ້າພະເຈົ້າຈະຖືກຊ່ອຍໃຫ້ພົ້ນພັຍຈາກຜີມານໄດ້ຢ່າງໃດ?

## ສຶກສາພຣະຄັມພີ

1. ຈົ່ງຮູ້ວ່າຜີມານສາມາດຄວບຄຸມຄົນໄດ້, ພາກນຶ່ງ : ( ມຣກ 5:1-7 )

ນາງ ແຄທີ ໄດ້ຫລົບໜີການສອນຂອງໂບດໃນອາຍຸຂອງລາວຣະຫວ່າງ 13 ເຖິງ 19 ປີ. ນາງໄດ້ພົບກັບໝໍຜີຍິງຄົນນຶ່ງຊຶ່ງຄວບຄຸມນາງໄວ້ ແລະໄດ້ສອນນາງໃຫ້ເປັນແມ່ມົດ: " ຍິ່ງຂ້າພະເຈົ້າຮຽນໄປຫລາຍເທົ່າໃດ ທຸກສິ່ງກໍຍິ່ງເປັນຮ້າຍລົງຊຸກໃຊ້. ຄືນນຶ່ງໃນຣະດູຮ້ອນຂ້າພະເຈົ້າໄດ້ນອນລົງແຕ່ບໍ່ໄດ້ຫລັບໃນຫ້ອງນອນ, ໃນທັນໃດນັ້ນຫ້ອງນອນນັ້ນກໍເຢັນລົງຢ່າງກະທັນຫັນ. ຂ້າພະເຈົ້າຮູ້ສຶກໜາວສັ່ນຈົນໄຄ່ຄ້າວແຕກອອກມາ... ຂ້າພະເຈົ້າໄດ້ກອດເອົາຂາຂອງຂ້າພະເຈົ້າແນບໄວ້ໃສ່ໜ້າເອິກແລະຄາງກະໃຕແຂງ ເໝືອນດັ່ງກອງທັບພວກປີສາດສີດໍາໄດ້ອ້ອມຮອບຫົວຂອງຂ້າພະເຈົ້າ, ພວກມັນໄດ້ຫົວຂວັນຂ້າພະເຈົ້າ... ຂ້າພະເຈົ້າໄດ້ຄຶດເຫັນໂຮງຮຽນວັນອາທິດ... ແລະການສອນເຣື່ອງພຣະເຢຊູ... ຂ້າພະເຈົ້າໄດ້ຮ້ອງຫາພຣະເຢຊູດ້ວຍສຽງອັນດັງເພື່ອໃຫ້ພຣະອົງໄລ່ພວກຜີປີສາດສີດໍາພວກນີ້ໃຫ້ອອກໜີໄປຈາກຫ້ອງຂອງຂ້າພະເຈົ້າ. ໃນທັນໃດນັ້ນພວກມັນທັງໝົດກໍໄດ້ໜີໄປ, ຫ້ອງນອນຂອງຂ້າພະເຈົ້າກໍອົບອຸ່ນຂຶ້ນ ແລະງຽບສງົບລົງ. ແລະແລ້ວຫລັງຈາກນັ້ນມາ ຊີວິດຂອງຂ້າພະເຈົ້າກໍບໍ່ເປັນເໝືອນເດີມອີກຕໍ່ໄປ."

ຄຣິສຕຽນທັງຫລາຍອາດຮູ້ໄດ້ວ່າ " ຊາຕານມີຊີວິດ " ໃນໂລກນີ້. ເຖິງປານນັ້ນກໍຕາມ, ໃນທາງປະຕິບັດແລ້ວພວກເຮົາບໍ່ມັກເອົາໃຈໃສ່ໃນຄວາມຈິງເຣື່ອງນີ້ພໍເທົ່າໃດ ພ້ອມຍັງພາກັນຖືວ່າພວກຜີປີສາດນັ້ນບໍ່ເປັນຄວາມຈິງ ທັງບໍ່ເປັນອັນຕະລາຍໃດໆ ເບິ່ງເໝືອນກັບວ່າພວກມັນເປັນພຽງຕົວຮ້າຍໃນນິຍາຍຕ່າງໆເທົ່ານັ້ນ. ແຕ່ພຣະຄັມພີບໍ່ໄດ້ຖືວ່າມັນເປັນນິຍາຍຈັກນ້ອຍໃນເຣື່ອງຂອງຜີເຂົ້າຄົນນີ້.

ຈົ່ງອ່ານ ມຣກ 5:1-4 ແລະໃຫ້ສົມທຽບຊາຍຄົນນີ້ກັບຜີປີສາດໃນຕົວຂອງນາງແຄທີເບິ່ງດູ. ຊີວິດຂອງພວກມັນຄືກັນຢ່າງໃດ? ມີອັນໃດທີ່ແຕກຕ່າງກັນໃນຣະຫວ່າງພວກມັນ?

ຈົ່ງຂີດວົງມົນໃສ່ຄໍາຂ້າງລຸ່ມທີ່ບອກລັກສະນະການທີ່ຖືກເຂົ້າສິງດ້ວຍຊາຕານ. ຈົ່ງຂີດກ້ອງຄໍາທີ່ເປັນລັກສະນະຂອງການຊົງສະຖິດຢູ່ນໍາໂດຍພຣະເຢຊູໃນຊີວິດ.

- ຖືກຄວບຄຸມ - ຖືກຮັກ - ບໍ່ສາມາດຄວບຄຸມໄດ້ - ຖືກມັດ - ເປັນເສຣີ
- ບໍ່ມີທາງອອກ - ຖືກຫລອກລວງ - ຖືກປ່ອຍ.

ຫລັກຖານໃນຊີວິດທ່ານໄດ້ບອກວ່າຖືກຄວບຄຸມຈາກຜີມານ ຫລືວ່າຖືກຊົງນໍາຈາກພຣະເຢຊູ? ຈົ່ງອະທິບາຍ.

ນັກຮຽນຮູ້ພຣະຄັມພີໄດ້ບອກວ່າຄຣິສຕຽນຈະບໍ່ສາມາດຖືກຜີເຂົ້າຄວບຄຸມເລີຍ. ຢ່າງນ້ອຍທີ່ສຸດເຂົາຈະເຫັນພາບທີ່ພຣະເຢຊູໄດ້ເວົ້າໃນ ມທ 12:29 ທີ່ວ່າ ( ...ໃຜຈະເຂົ້າໄປໃນເຮືອນຂອງຄົນແຂງແຮງ ແລະຈະປຸ້ນເອົາຊັບຂອງເພິ່ນໄດ້ຢ່າງໃດ ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້ເສັຽກ່ອນ? ) ໃນກໍຣະນີຂອງຄົນທີ່ຜີໄດ້ເຂົ້າສິງນັ້ນ ມັນເປັນທີ່ແຈ້ງຂາວທີ່ສຸດວ່າ ຄົນທີ່ແຂງແຮງນັ້ນແມ່ນຜີມານ. ສໍາລັບຄຣິສຕຽນແລ້ວ, ຜູ້ທີ່ແຂງແຮງນັ້ນແມ່ນພຣະເຈົ້າ, ແລະການປຸ້ນຈີ້ພ້ອມທັງການລັກຂອງພຣະເຈົ້ານັ້ນກໍເປັນເຣື່ອງທີ່ເປັນໄປບໍ່ໄດ້.

ເຖິງແມ່ນວ່າຄຣິສຕຽນຈະບໍ່ສາມາດຄວບຄຸມໂດຍຊາຕານກໍຕາມ, ມັນກໍຍັງມີບັນຫາເຣື່ອງການທົດລອງແລະການມີອິດທິພົນຢູ່. ຫລັກຖານໃນຊີວິດຂອງທ່ານໄດ້ຊີ້ໃຫ້ເຫັນວ່າມີການທົດລອງ ແລະການມີອິດທິພົນຂອງມານຕໍ່ເຮົາຢູ່ບໍ່? ຈົ່ງອະທິບາຍ.

ທ່ານຕ້ອງການທີ່ຈະເປັນເສຣີບໍ່? ຄວາມສາມາດສ່ວນຕົວ, ກໍາລັງ, ແລະການຕັດສິນໃຈຂອງທ່ານນັ້ນຍັງບໍ່ພຽງພໍ. ທ່ານຈົ່ງຂໍໃຫ້ພຣະເຈົ້າຊ່ວຍທ່ານໃຫ້ພົ້ນຈາກອິດທິພົນຂອງຜີມານຊາຕານເທີ້ນ.

## 2. <u>ຈົ່ງຮູ້ວ່າຜີມານສາມາດຄວບຄຸມຄົນໄດ້, ພາກສອງ</u> : ( ມຣກ 5:1-7 )

ທ່ານ ເຈ, ລູກຊາຍຂອງນາງ ເຄເຣັນ ສແຕຣນ ໄດ້ເວົ້າຕໍ່ແມ່ໃນຂະນະທີ່ລາວໄດ້ຍິນສຽງຍົ່ງໆໃນຫູ ແລະກໍາລັງເລີ້ມເສັຽສະຕິໄປນັ້ນ, ລາວເວົ້າວ່າ, " ແມ່ເອີຍ, ຈົ່ງໄວ້ໃຈເຮົາ. ເຮົາຍັງມີສະຕິດີຢູ່. " ທ່ານໝໍໄດ້ບອກວ່າຢາຊັກນໍາປະສາດຈະອອກຣິດໃນຕົວຂອງລາວປະມານເຖິງສອງປີ. ເຈ ໄດ້ອອກໂບດແລະຫ້ອງຮຽນວັນອາທິດໄປ ເພື່ອຈະໄປຮຽນຮູ້ເຣື່ອງ " ຜີຖ້ວຍແກ້ວ " (Ouaji Board). ນາງ ເຄເຣັນ ໄດ້ໄປຢ້ຽມລູກຊາຍຂອງຕົນທຸກໆວັນທີ່ຕຶກປິ່ນປົວໂຣກຈິດ. ນາງໄດ້ອ່ານສມຸດສ່ວນຕົວຂອງນາງທີ່ໄດ້ຂຽນໄວ້ວ່າ, " ຜີປີສາດໄດ້ເຂົ້າສິງ ແລະໄດ້ທໍາຮ້າຍຈິດວິນຍານຂອງນາງ. ໂອພຣະເຈົ້າຂ້າ, ຂໍຈົ່ງຊໍາຣະຂ້ານ້ອຍເທີ້ນ. ຂໍຈົ່ງໄດ້ຊ່ວຍໂຜດຈິດວິນຍານຂອງຂ້ານ້ອຍໃຫ້ພົ້ນ

ເທີ້ນ."

ຈົ່ງອ່ານ ມຣກ 5:5-7 ແລະໃນ ລກ 8:27-29. ຈົ່ງເບິ່ງວ່າເຣື່ອງຂອງ ເຈ ແລະເຣື່ອງຂອງຊາຍຄົນນີ້ເບິ່ງດູວ່າມັນຄ້າຍຄືກັນຢ່າງໃດ?

ທ່ານຄິດວ່າຄວາມສຳພັນຂອງພວກເຂົາກັບຄອບຄົວຂອງພວກເຂົາຄ້າຍຄືກັນບໍ່?

- ແຕກຕ່າງກັນ - ຄ້າຍຄືກັນ

ທ່ານເຫັນວ່າສະພາບຂອງພວກເຂົາເປັນຢ່າງໃດ?

- ເກີດຜົນແກ່ຕົນເອງ - ທຳລາຍຕົນເອງ

ພຣະຄັມພີໄດ້ໃຫ້ເຫັນການປະພຶດທີ່ທຳລາຍວ່າເປັນອາການທັມມະດາຂອງການທີ່ຖືກຜີເຂົ້າສິງ. ເຖິງແມ່ນວ່າການປະພຶດທີ່ທຳລາຍຈະບໍ່ແມ່ນອາການຂອງຜີເຂົ້າຄວບຄຸມເລື້ອຍໄປກໍຕາມ, ແຕ່ວ່າມັນເຮັດໃຫ້ປາກົດເຫັນການທີ່ຖືກຄວບຄຸມໂດຍອຳນາດຂອງຜີມານຈາກຄົນເຫລົ່ານັ້ນ.

ທ່ານອາດຈະບໍ່ເຄີຍໄດ້ຖືກຄອບງຳຈາກຜີມານ, ຢາເສບຕິດ, ຫລືວ່າອຳນາດທີ່ອັນຕະລາຍອື່ນໆ ກໍໄດ້, ແຕ່ວ່າຫາກເຜີຍໃຫ້ເຫັນການປະພຶດທີ່ທຳລາຍຕົນເອງ. ຈົ່ງບອກເວລາໃດເວລານຶ່ງຊຶ່ງທ່ານເຄີຍຖືກຄວບຄຸມຈາກອຳນາດຮ້າຍຂອງຄວາມຊົ່ວຮ້າຍເບິ່ງດູ.

ເຫມືອນດັ່ງກໍຣະນີຂອງ ເຈ, ວິນຍານຂອງຜີຮ້າຍມັນກໍຮູ້ຈັກພຣະເຢຊູວ່າເປັນຜູ້ໃດ ແລະທັງຍັງໄດ້ຮ້ອງພຣະນາມຂອງພຣະອົງຢ່າງຖືກຕ້ອງ. ຈົ່ງຂີດກ້ອງຄຳຕອບ. ມີຫຍັງທີ່ທ່ານໄດ້ສັງເກດເຫັນໃນຄຳຕອບນັ້ນ?

ໃນສະພາບການຊີວິດຂອງຄົນໃດຄົນນຶ່ງນັ້ນ, ມັນມັກມີຈຸດນຶ່ງທີ່ທ່ານບໍ່ຢາກກັບມາເມື່ອທ່ານຄວນຈະໄດ້ຕັດສິນໃຈວ່າຈະກັບມາຫາພຣະເຈົ້າ ຫລືວ່າໄດ້ຫ່າງໄກຈາກພຣະອົງ. ດຽວນີ້ທ່ານຕ້ອງການອັນໃດຈະຂໍຈາກພຣະເຈົ້າ?

ມີຫຍັງເກີດຂຶ້ນກັບ ເຈ? ນາງ ເຄແຮັນ ເວົ້າວ່າ, " ສະພາບຈິດຂອງ ເຈ ໄດ້ດີຂຶ້ນຄືນແຕ່ລະຂັ້ນໆໄປດ້ວຍເຫດວ່າລາວໄດ້ເຮັດຕາມພຣະເຈົ້າສັ່ງໃຫ້ເຮັດ. ເວລານີ້ລູກຊາຍຂອງຂ້າພະເຈົ້າກໍກາຍເປັນຜົວແລະເປັນພໍ່ທີ່ດີຂອງຄອບຄົວທີ່ມີລູກສີ່ຄົນ, ທັງຍັງເປັນຄຣິສຕຽນທີ່ມີຊີວິດຊີວາຮັບໃຊ້ໃນການເປັນພະຍານໃຫ້ຄົນມາຫາພຣະເຈົ້າ.

ໃນການດຳເນີນຊີວິດຂອງທ່ານ, ສິ່ງແຮກທີ່ທ່ານຈະທຳເພື່ອໃຫ້ໄດ້ຮັບຄວາມພົ້ນຈາກການຄວບຄຸມຂອງຜີມານຊາຕານນັ້ນ ແມ່ນໃຫ້ທ່ານເຊື່ອພຣະເຢຊູວ່າຊົງເປັນອົງພຣະຜູ້ໂຜດໃຫ້ພົ້ນ ແລະຈົ່ງຮັບຄວາມພົ້ນດ້ວຍພຣະຄຸນໂດຍທາງຄວາມເຊື່ອ. ທ່ານໄດ້ເປັນຄົນທີ່ຟັງຄວາມແລະເຮັດຕາມຢ່າງນັ້ນແລ້ວບໍ່?

## 3. <u>ການເຊື່ອພຣະເຢຊູສາມາດຊະນະຜີມານໄດ້ :</u> ( ມຣກ 5:8-13 )

ຈົ່ງເບິ່ງເຣື່ອງຂອງນາງແຄທີຄືນອີກໃນເຣື່ອງຄວາມພົ້ນຈາກຜີມານຊາຕານ. ໃນຂະນະທີ່ທ່ານອ່ານ ມຣກ 5:8-10, ຈົ່ງຄິດເຖິງນາງແຄທີ ແລະວິນຍານຜີຮ້າຍ. ເຖິງແມ່ນວ່າທັງສອງຈະຈຳພຣະເຢຊູໄດ້ ແລະຮູ້ຈັກເຖິງການສະຖິດຢູ່ຂອງພຣະອົງກໍຕາມ, ແມ່ນຫຍັງຄືຄວາມແຕກຕ່າງໃນການຕອບສນອງຂອງນາງແຄທີຕໍ່ວິນຍານຊົ່ວຮ້າຍນັ້ນ? ທ່ານເຫັນວ່າການຕອບສນອງຂອງນາງແຄທີນີ້ເປັນຢ່າງໃດ?

ວິນຍານຊົ່ວຮ້າຍບໍ່?

ມັນເປັນເຣື່ອງທີ່ໜ້າສົນໃຈທີ່ພຣະເຢຊູເອີ້ນຜີຊົ່ວຮ້າຍນັ້ນຕາມຊື່ຂອງມັນ? ທ່ານຄິດວ່າເປັນຫຍັງພຣະອົງຈຶ່ງເຮັດຢ່າງນັ້ນ?

ເທສການ " ຮາໂລວີນ " ໄດ້ເຕືອນໃຈວ່າຄົນຫລາຍຄົນໃນໂລກນີ້ໄດ້ຢູ່ໃຕ້ອຳນາດຂອງຜີຊົ່ວຮ້າຍ ແລະເຄື່ອງມືຫລາຍຢ່າງຂອງຊາຕານໃຊ້ ເຊັ່ນຕົວຢ່າງການໃຊ້ມົນວິຊາອາຄົມ, ແມ່ມົດໝໍຜີ, ແລະການໃຊ້ຢາເສບຕິດ.

ການຖືກຜີເຂົ້າສິງ:

ການຖືກຜີເຂົ້າສິງຊຶ່ງຕາມຄວາມໝາຍຂອງພາສາກຣີກແລ້ວ ແມ່ນກ່ຽວກັບການກະທຳຂອງຜີໃນການລົບກວນ, ການບີບບັງຄັບ, ແລະລວມທັງການຄອບຄອງຄົນທັງຫລາຍ. ຄຣິສຕຽນໃນສັຕະວັດທີຊາວເອັດນີ້, ພວກເຮົາຈະ

ເຊື່ອໃນເຣື່ອງນີ້ວ່າເປັນຢ່າງໃດ?

ທ່ານ ຄລິນຕັນ ອີ. ອາຣໂນ ອາຈານສອນພຣະຄັມພີໃຫມ່ໄດ້ແບ່ງບົດຮຽນເປັນຂໍ້ໆທີ່ພວກເຮົາສາມາດຮຽນຮູ້ຈາກພຣະເຢຊູກ່ຽວກັບເຣື່ອງຜີມານ ແລະການຕອບສນອງຕໍ່ກັນດັ່ງນີ້:

- ຜີຮ້າຍຫລາຍໂຕສາມາດເຂົ້າຄົນໆດຽວໃນເວລາດຽວກັນ. ກອງທັບຂອງໂຣມັນຕາມປົກກະຕິແລ້ວຈະປະກອບດ້ວຍທະຫານ 6,000 ຄົນ.
- ຜີຮ້າຍສາມາດສະແດງອາການເຂົ້າສິງຂອງມັນດ້ວຍການເວົ້າຜ່ານຄົນທີ່ມັນສິງຢູ່ນັ້ນ, ໃນຂະນະດຽວກັນມັນກໍຄວບຄຸມໂຕຂອງຄົນໆນັ້ນນຳ.
- ຜີຮ້າຍສາມາດທຳໃຫ້ຄົນທີ່ມັນເຂົ້າໄດ້ຮັບການທໍຣະມານດ້ວຍການທຳຮ້າຍຕົນເອງ ແລະເຮັດຄົນອື່ນເຈັບ.
- ຜີຮ້າຍສາມາດອອກຈາກຜູ້ນີ້ແລ້ວໄປເຂົ້າຜູ້ອື່ນໄດ້.
- ຜີຮ້າຍຈະຕໍ່ສູ້ເພື່ອບໍ່ຢາກອອກຈາກຄົນທີ່ມັນເຂົ້າສິງ. ມັນອາດຈະຂໍຮ້ອງເພື່ອບໍ່ໃຫ້ໃຜລົບກວນມັນ.
- ພຣະເຢຊູໄດ້ເວົ້າໂດຍຕົງກັບວິນຍານຜີຮ້າຍ ແລະໃຫ້ມັນບອກຊື່ຂອງມັນ.
- ຖ້າມັນຂັດຂືນແມ້ແຕ່ພຣະເຢຊູ, ກໍບໍ່ແປກຫລັງທີ່ມັນຈະຂັດຂືນຄຳສັ່ງຂອງເຮົາ.
- ພຣະເຢຊູໄດ້ສັ່ງຜີຮ້າຍໂດຍອີງຕາມພຣະອຳນາດຂອງພຣະອົງເອງ. ຄຳສັ່ງຂອງພວກເຮົາກໍອີງໃສ່ພຣະອຳນາດຂອງພຣະອົງເຫມືອນກັນ.

ທ່ານ ອາຣໂນ ຖາມວ່າ, " ຄວາມເຫັນຕາມທັມມະຊາດຂອງໂລກທີ່ແຜ່ຊຶມເຂົ້າໃນວັດທະນະທັມຂອງເຮົາໄດ້ເຮັດໃຫ້ຄວາມເຂົ້າໃຈໃນຄວາມເປັນຈິງຂອງເຣື່ອງວິນຍານເສື່ອມເສັຽໄປ ແລະກີດຂວາງຄວາມສາມາດໃນການຮັບໃຊ້ຄົນທັງຫລາຍທີ່ໄດ້ຖືກທໍຣະມານຢ່າງຫນັກບໍ່?" ສຳລັບຄຣິສຕຽນແລ້ວ, ຄວາມເຂົ້າໃຈຂອງພວກເຮົາແມ່ນເປັນໄປຕາມຄຳເຫັນໃນພຣະຄັມພີ. ພວກເຮົາຄວນຈະເບິ່ງໂລກດັ່ງທີ່ພຣະເຈົ້າຊົງເບິ່ງ. ຜີຮ້າຍກໍແມ່ນສ່ວນນຶ່ງທີ່ພຣະເຈົ້າໄດ້ເຫັນ.

ຈົ່ງອ່ານເຣື່ອງ " ຜີຮ້າຍເຂົ້າສິງຄົນ " ເພື່ອຈະໄດ້ເຂົ້າໃຈແຈ້ງຂຶ້ນອີກ.

ໃນເມື່ອທ່ານໄດ້ພິຈາຣະນາເບິ່ງເຣື່ອງຜີສິງຄົນແລ້ວ, ສິ່ງທີ່ທ່ານເຫັນນັ້ນມັນຫນ້າຢ້ານ ຫລືວ່າມັນສັບສົນ?

ມີອັນໃດບໍ່ທີ່ຈະຊ່ວຍທ່ານໃຫ້ຕໍ່ສູ້ຕ້ານຢັນກັບການທົດລອງ ແລະຕໍ່ສູ້ກັບພວກມານຮ້າຍໄດ້?

ຫລັກຖານຂອງການສະຖິດຢູ່ນຳຂອງພຣະເຢຊູໃນຊີວິດຂອງທ່ານໃນການຕໍ່ສູ້ກັບຜີມານຄວບຄຸມນັ້ນເປັນຢ່າງໃດ?

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ວັນທີ 07 ເດືອນ ພຶສຈິກາ 2004 ( 11 - 07 - 2004 )

---

## <u>ພຣະເຈົ້າຜູ້ຊົງອັສຈັນ</u>

<u>ພຣະຄັມພີສຳລັບບົດຮຽນ:</u> ( ເພງສັຣເສີນ 104: 1- 35 )

<u>ຄວາມຈິງໃນພຣະຄັມພີ:</u> ຜູ້ທີ່ເຊື່ອອະທິຖານຕໍ່ພຣະເຈົ້າເພາະພຣະອົງຊົງເປັນຜູ້ເນຣະມິດສ້າງ.

<u>ຂໍ້ພຣະຄັມພີທີ່ສຳຄັນ:</u> ພຣະອົງໄດ້ສ້າງຫລາຍສິ່ງຫລາຍແນວພຣະເຈົ້າຂ້າ ພຣະອົງໄດ້ສ້າງສັພທຸກສິ່ງໃນຈັກກະວານນີ້. ພຣະອົງໄດ້ສ້າງສິ່ງເຫລົ່ານີ້ຢ່າງສລາດອີຫລີ ແຜ່ນດິນໂລກກໍເຕັມດ້ວຍສິ່ງທີ່ພຣະອົງໄດ້ສ້າງ. ( ເພງສັຣເສີນ 104:24 ).

<u>ຜົນສະທ້ອນຕໍ່ຊີວິດ:</u> ເພື່ອຊ່ວຍໃຫ້ທ່ານໄດ້ອະທິຖານຕໍ່ພຣະເຈົ້າຜູ້ຊົງອັສຈັນ.

## <u>ເປັນຫຍັງຂ້າພະເຈົ້າຈຶ່ງສົມຄວນອະທິຖານຕໍ່ພຣະເຈົ້າ?</u>

ເມື່ອຈອນຍັງຢູ່ໃນວັຍຊາຍໜຸ່ມ, ມີຄັ້ງນື່ງລາວມີໂອກາດໄດ້ໄປຣັດຄາລີຟໍເນັຽທີ່ພໍ່ຂອງລາວໄປ business trip ຊຶ່ງຢູ່ທາງທິດຕາເວັນອອກຂອງສະຫະຣັດ. ຊຶ່ງລາວບໍ່ເຄີຍເຫັນມາກ່ອນເມື່ອວຽກງານຂອງພໍ່ລາວສຳເຣັດແລ້ວເຂົາກໍຢູ່ຕໍ່ອີກ 2-3 ວັນແລະໄດ້ໄປທ່ອງທ່ຽວທີ່ Yosemit National Park. ເມື່ອກັບເມືອເຖິງບ້ານ, ຈອນຊຶ່ງເປັນຄົນທີ່ " ບໍ່ຄ່ອຍມັກປາກ " , ກໍບໍ່ສາມາດທີ່ຈະຢຸດການເລົ່າເຣື່ອງການໄປຄັ້ງນີ້ແລະປະສົບການພ້ອມທັງລາຍລະອຽດພ້ອມທັງຂົນເອົາຮູບທີ່ລາວໄດ້ຖ່າຍມາໃຫ້ທຸກຄົນໃນຄອບຄົວເບິ່ງແລະໄດ້ອະທິບາຍເຖິງພາບເຫຼົ່ານັ້ນເຖິງຄວາມງົດງາມໜ້າອັສຈັນຂອງພູຜາ, ນ້ຳຕົກ, ແລະທີ່ພິເສດຄື ຄວາມຍິ່ງໃຫຍ່ໂດຍມີຄວາມງາມຕາມທັມມະຊາດທີ່ພຣະເຈົ້າເປັນຜູ້ຊົງເນຣະມິດສ້າງ. ແລະດຽວນີ້ຈອນກໍໄດ້ຮຽນຮູ້ແລະເຂົ້າໃຈເຖິງພຣະເຈົ້າຜູ້ອັສຈັນຍິ່ງໃຫຍ່ຂນາດໃດ. ພຣະຜູ້ເປັນເຈົ້າຜູ້ຊົງເນຣະມິດສ້າງສິ່ງທີ່ງົດງາມແລະທຸກສິ່ງທີ່ໜ້າອັສຈັນ! ປາກຂອງເຮົາຄວນຈະສັຣເສີນພຣະເຈົ້າຕລອດເວລາບໍ່ຢຸດໃນຂນະທີ່ພວກເຮົາຮຽນບົດຮຽນໃນອາທິດນີ້ໃນເຣື່ອງຂອງພຣະເຈົ້າພຣະຜູ້ຊົງເນຣະມິດສັພທຸກສິ່ງ, ເປັນຜູ້ຈັດຕຽມໄວ້ໃຫ້, ແລະເປັນຜູ້ວາງແຜນຢ່າງຮອບຄອບຂອງທຸກສິ່ງສາລະພັດທີ່ເປັນສິ່ງທີ່ພຣະອົງຊົງສ້າງທັງຫຼາຍ.

1. <u>ພຣະຜູ້ຊົງສ້າງທີ່ອັສຈັນ:</u> ( ເພງສັຣເສີນ 104: 1-5 )

ໃນລະດູໃບໄມ້ຫຼົ່ນຂອງປີນຶ່ງ, ທ່ານຈະເຫັນສີສັນຄວາມງາມຂອງໃບໄມ້ມີສີເຫຼືອງ, ແດງ, ນ້ຳໝາກກ້ຽງ, ແລະທີ່ສຳຄັນທີ່ສຸດຄືຄວາມສຳຜັດທີ່ເຮົາໄດ້ຮັບຈາກທັມມະຊາດທີ່ພຣະເຈົ້າເປັນຜູ້ຊົງສ້າງ. ແລະກໍຄືຊີວິດທີ່ຟ້າວຟັ່ງຂອງພວກເຮົາທ່ານເຄີຍມີຈັກຄັ້ງບໍ່ທີ່ໄດ້ຢຸດຢືນຊົມທັມມະຊາດແລະຍົກຍໍສັຣເສີນພຣະເຈົ້າພຣະຜູ້ຊົງສ້າງສັພສິ່ງເຫຼົ່ານີ້, ເພື່ອລູກໆ ຂອງພຣະອົງບໍ່? ໃນເພງສັຣເສີນ 22: 3, ໄດ້ບອກພວກເຮົາໄວ້ເຖິງການອະທິຖານທີ່ຍົກຍໍພຣະອົງ. ຈົ່ງອ່ານໃນເພັງສັຣເສີນຂໍ້. 104: 1, ຈະເປັນການຍົກຍໍສັຣເສີນພຣະເຈົ້າຖ້າໃຊ້ຄຳວ່າ ຜູ້ສູງສຸດ , ແລະ ຜູ້ຍິ່ງໃຫຍ່ທີ່ສຸດ. ພວກເຮົາສ່ວນຫຼາຍອາດຈະບໍ່ເຄີຍໄດ້ພົບກັບເຈົ້າຊີວິດໃນໂລກນີ້ຕົວຕໍ່ຕົວ, ແຕ່ພວກເຮົາກໍເຄີຍໄດ້ຍິນການເລົ່າເຣື່ອງແລະໄດ້ເຄີຍເຫັນພາບພະຍົນຫຼືໜັງທີ່ເຂົາສະແດງເຖິງການໂຄຣົບນົບຂາບຂອງຄົນທົ່ວໄປກັບເຈົ້າຊີວິດມາແລ້ວທ່ານຈະມີຄວາມພາກພູມໃຈຂນາດໃດໃນເວລາທີ່ທ່ານຄິດເຖິງວ່າທ່ານແລະຂ້າພະເຈົ້າ, ເປັນລູກຂອງພຣະເຈົ້າ, ກໍຄືມໍຣະດົກທີ່ຈະໄດ້ຮັບນັ້ນແມ່ນພວກເຮົາທັງຫຼາຍຈະໄດ້ເປັນເຊື້ອສາຍຕົວແທນໃຫ້ແກ່ເຈົ້າຊີວິດຂອງເຈົ້າຊີວິດທັງຫຼາຍ

ໃນແຕ່ລະວັນ. ອ່ານຂໍ້ ໒- 5, ໄດ້ອະທິບາຍເຖິງເຣື່ອງຄວາມຍິ່ງໃຫຍ່ຂອງພຣະຜູ້ສ້າງໃນບົດເພັງສັຣເສີນ. ຈົ່ງຂີດກ້ອງຄຳທີ່ມີໃນປະໂຍກນີ້ວ່າແມ່ນຫຍັງທີ່ມີສ່ວນກ່ຽວພັນກັບພຣະເຈົ້າຜູ້ຊົງສ້າງ, ໃນຂໍ້ນີ້ໄດ້ເຕືອນພວກເຮົາວ່າພຣະເຈົ້າບໍ່ພຽງແຕ່ເປັນພຣະຜູ້ສ້າງເທົ່ານັ້ນແຕ່ເປັນຜູ້ເຮັດໃຫ້ທຸກສິ່ງດຳເນີນໄປຕາມແບບແຜນທີ່ພຣະອົງໄດ້ວາງໄວ້ແລ້ວທຸກສິ່ງ. ທ່ານບໍ່ຕ້ອງຢ້ານກົວຕໍ່ລົມ, ໄຟ, ແຜ່ນດິນໄຫວ, ຫຼື ສິ່ງອື່ນໃດທີ່ພຣະບິດາເປັນຜູ້ສ້າງແລະຢູ່ໃຕ້ອຳນາດຂອງພຣະອົງ. ມີຈັກຄັ້ງໃນຊີວິດຂອງທ່ານທີ່ເກີດມີຄວາມກັງວົນເພາະທ່ານບໍ່ສາມາດທີ່ຈະຄວບຄຸມໄດ້ມີບໍ່? ຈົ່ງຂຽນລົງເຖິງລາຍລະອຽດວ່າມີຫຍັງແດ່ທີ່ເປັນກັງວົນແກ່ທ່ານທີ່ສຸດ: 1................., ໒....................3.............4............ ຈົ່ງໃຊ້ເວລາໃນການຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງເປັນຜູ້ຄວບຄຸມສັພທຸກສິ່ງຈົ່ງທູນຂໍຕໍ່ພຣະອົງໃຫ້ຊ່ວຍແກ້ໄຂພາຣະທີ່ຫນັກຫນ່ວງແລະຄວາມກະວົນກະວາຍທີ່ທ່ານມີຢູ່. ແຕ່ນີ້ໄປຈົ່ງສວຍໃຊ້ເວລາຈັກສອງສາມນາທີຂຽນເຖິງເຣື່ອງທີ່ທ່ານຈະອະທິຖານຕໍ່ພຣະອົງແລະຈົ່ງເລີ້ມອະທິຖານເຖິງພຣະເຈົ້າພຣະຜູ້ສ້າງທີ່ອັສຈັນທີ່ພຣະອົງຊົງມີຄວາມເມດຕາ, ໃນສິ່ງທີ່ພຣະອົງຊົງສ້າງແລະພຣະອົງໄດ້ຄວບຄຸມໃນສິ່ງທັງຫມົດນີ້.

## ໒. <u>ພຣະຜູ້ຊົງຈັດຕຽມທີ່ອັສຈັນ:</u> ພາກ 1, ພາກ ໒ ( ເພງສັຣເສີນ 13-15 )

1) ໃນເວລາທີ່ເສຖກິດຕົກຕ່ຳແລະຖືກຊ້ຳເຕີມດ້ວຍສາມີໄດ້ປະຖິ້ມ ໂດນາລາແລະລູກນ້ອຍອີກສາມຄົນ. ມີຫຼາຍຄັ້ງທີ່ນາງຈຳເປັນຕ້ອງໄດ້ເກັບຜັກຫັກຫຍ້າມາເປັນອາຫານປະທັງຊີວິດທຸກໆຄົນໃນຄອບຄົວ. ມີເພື່ອນຜູ້ຍິງຄຣິສຕຽນໄດ້ຮ່ວມກັນແລະແບ່ງປັນເທົ່າທີ່ມີ, ໂດຍຜ່ານການອະທິຖານຢ່າງອົດທົນເຂົາກໍໄດ້ມີການຈັດຕັ້ງສູນກາງສຳລັບຊ່ວຍພວກຜູ້ຍິງດ້ວຍກັນຂຶ້ນດ້ວຍມີຈັກຫຍິບຜ້າພຽງອັນດຽວທີ່ເປັນສິ່ງທີ່ເຂົາສາມາດທຳງານໄດ້. ເຂົາທັງໄດ້ແບ່ງປັນຂ່າວປະເສີດແລະກໍໄດ້ນຳຜູ້ຍິງອື່ນໆ ໃຫ້ເຂົ້າມາຮູ້ຈັກກັບພຣະຄຣິດ. ເຂົາທັງຫຼາຍໄດ້ອະທິຖານເພື່ອຈະໄດ້ມີ ຄອມພິວເຕີໄວ້ໃຊ້ຈັກນຶ່ງຫນ່ວຍ, ແລະເມື່ອພຣະເຈົ້າໄດ້ປະທານໃຫ້ເຂົາອັນນຶ່ງແລະກໍໄດ້ໃຊ້ໃນການຝຶກສອນໃຊ້ວຽກງານດ້ວຍຄອມພິວເຕີນັ້ນ. ໃນຂະນະທີ່ຄວາມຕ້ອງການຄວາມສາມາດທາງດ້ານນີ້ເກີດມີຂຶ້ນ. ໂດນາລາແລະເອື້ອຍນ້ອງທັງຫຼາຍກໍໄດ້ມອບຄວາມໄວ້ວາງໃຈໃນທິດທາງທີ່ພຣະເຈົ້າຊົງເປີດທາງໃຫ້ແລະກໍເຮັດຕາມນັ້ນແລະໃນທີ່ສຸດພວກເຂົາທັງຫມົດກໍປະສົບກັບຜົນສຳເຣັດໃນຂັ້ນປາຍດັ່ງທີ່ໄດ້ຕັ້ງເປົ້າຫມາຍໄວ້ແລ້ວທຸກຢ່າງ. ອ່ານໃນ ພສສ. 104: 13-14, ໄດ້ເວົ້າເຖິງສິ່ງທີ່ພຣະເຈົ້າໄດ້ຈັດຕຽມໄວ້ໃຫ້ເກີດດອກອອກຜົນເພື່ອເປັນອາຫານຂອງຄົນແລະສັດ. ຈົ່ງຂີດວົງມົນໃນສອງສິ່ງທີ່ພຣະເຈົ້າໄດ້ຈັດຕຽມ. ທ່ານມີຄວາມອົບອຸ່ນແລະໝັ້ນໃຈວ່າພຣະເຈົ້າຊົງຫ່ວງໃຍສິ່ງສາຣະພັດທີ່ພຣະອົງເປັນຜູ້ຊົງສ້າງໂດຍສະເພາະແມ່ນມະນຸດແລະສັດ, ຄືພຣະອົງໄດ້ຊົງເນຣະມິດສ້າງໃຫ້ມີນ້ຳ, ພືດຜັກແລະອາຫານສຳລັບເຂົາ. ໃນມັດທາຍ. 6:30 ໄດ້ບອກພວກເຮົາຢ່າງນັ້ນເຫມືອນກັນແລະກໍມີຄວາມແນ່ນອນໃຈໃນສິ່ງທີ່ພຣະອົງໄດ້ຊົງຈັດຕຽມໄວ້ໃຫ້ ! ແຕ່ບໍ່ໄດ້ຫມາຍຄວາມວ່າເມື່ອພຣະເຈົ້າໄດ້ຊົງຈັດຕຽມໃຫ້ພວກເຮົາທຸກຢ່າງແລ້ວພວກເຮົາບໍ່ມີຫນ້າທີ່ຫຍັງທີ່ຈະຕ້ອງຮັບຜິດຊອບ. ແລະໃນບົດຮຽນໃນມື້ນີ້ຈະສອນໃຫ້ເຮົາໄດ້ຮຽນຮູ້ຫນ້າທີ່ຮັບຜິດຊອບທີ່ເຮົາສົມຄວນເຮັດມີຫຍັງແດ່? ຈະບໍ່ຄືກັນໃນພຣະທັມເພັງສັຣເສີນກັບໃນໂລກປັດຈຸບັນແຕ່ມີຄວາມຫມາຍແນວໃດໃນຂໍ້ 14, ຄືຫນ້າທີ່ຈະຕ້ອງຮັບຜິດຊອບ? ຈົ່ງອະທິບາຍຄຳຕອບຂອງທ່ານເອງ. ພຣະເຈົ້າໄດ້ຊົງປະທານໃຫ້ພວກເຮົາມີເຣື່ອແຮງທີ່ຈະທຳງານໃຫ້ກັບພຣະອົງ. ແຮງງານພາກສ່ວນຂອງພວກເຮົາກໍຄືສ່ວນນຶ່ງທີ່ເປັນພຣະພອນທີ່ພຣະເຈົ້າໄດ້ຈັດຕຽມໄວ້ໃຫ້. ມີຢູ່ ໒ ຂໍ້ທີ່ສຳຄັນທີ່ທ່ານຈະໄດ້ຮຽນຮູ້ຈາກບົດຮຽນນີ້ຄື:

* ພວກເຮົາຈະບໍ່ເປັນຄົນກຽດຄ້ານ, ແຕ່ພວກເຮົາຈະໃຊ້ເຣື່ອແຮງທີ່ມີຢູ່ໃຫ້ເປັນທີ່ໃຊ້ງານໄດ້.

* ດ້ວຍເຣື່ອແຮງຂອງເຮົາພຽງຢ່າງດຽວບໍ່ສາມາດທີ່ຈະສນອງຄວາມຕ້ອງການຂອງພວກເຮົາແລະຄອບຄົວໄດ້. ຈົ່ງຂຽນລາຍລະອຽດເຖິງເຣື່ອງເວລາໃດແດ່ທີ່ພຣະເຈົ້າໄດ້ຊົງປະທານສະຕິປັນຍາທີ່ເປັນພື້ນຖານທີ່ຈະໃຊ້ໃນສິ່ງທີ່ມະນຸດທຸກໆ ຄົນຕ້ອງການເພື່ອໃນການຮັບໃຊ້ຄົນໃດຄົນນຶ່ງທີ່ເຮົາຮູ້ຈັກ. ທ່ານຮູ້ສຶກໄດ້ແນວໃດວ່າທ່ານໄດ້ສຳຜັດກັບໃນສິ່ງທີ່ພຣະອົງໄດ້ຊົງຈັດຕຽມໄວ້ໃຫ້, ກໍຄືທ່ານໄດ້ນຳຄວາມຮັບຜິດຊອບທີ່ຈະຈັດແຈ່ງໃຫ້ຄອບຄົວຂອງທ່ານຕໍ່

ໄປ, ທ່ານຈະບໍ່ໄດ້ຍົກບ່າໄຫຼ່ຂຶ້ນສູງເປັນການອວດຕົວເອງ ຈົ່ງອ່ານຄືນ ມທ. 5: 45, ເພື່ອເພີ້ມເຕີມທີ່ທ່ານໄດ້ເຫັນໝາຍສຳຄັນ. ເຖິງແມ້ວ່າຄົນທີ່ບໍ່ຮູ້ຈັກຂອງປະທານນັ້ນແຕ່ໄດ້ໃຊ້ຢ່າງຊົມຊື່ນຍິນດີຈາກຜູ້ຈັດຕຽມທີ່ໜ້າອັສຈັນ. ພວກເຮົາບໍ່ຄວນຈະລໍຊ້າໃນການທີ່ຈະອະທິຖານຕໍ່ພຣະຜູ້ຊົງຈັດຕຽມທີ່ໜ້າອັສຈັນ. ຈົ່ງໃຊ້ເວລາໃນການເຂົ້າເຝົ້ານະມັສການພຣະອົງ, ທີ່ພຣະອົງເປັນຜູ້ທ່ຽງທັມ, ບໍ່ປ່ຽນແປງຄຳສັນຍາທີ່ຈະເປັນຜູ້ຈັດຕຽມຕລອດໄປໃນໃນອະນາຄົດ.

2 ) ໃນຂນະທີ່ລູກຊາຍຂອງຂ້າພະເຈົ້າມີການສອບເສັງເກືອບທຸກໆ ວັນເສົາເລື້ອຽງ ມາ. ຂ້າພະເຈົ້າກໍໄດ້ແຕ່ພຽງອະທິຖານຂໍພຣະເຈົ້າຊົງໂຜດປະທານສັນຕິສຸກ, ຈິດໃຈທີ່ປອດໂປ່ງແລະມີຄວາມສາມາດທີ່ຈະຄິດລື້ມຄືນເຖິງສິ່ງທີ່ໄດ້ພຽນພະຍາຍາມເຮັດທຸກຢ່າງໃນການທີ່ຈະຮຽນຮູ້. ນີ້ແມ່ນຄວາມຫ່ວງໃຍທີ່ຂ້າພະເຈົ້າມີທີ່ຈະປຽບທຽບກັບຢ່າງອື່ນອີກທັງເປັນສິ່ງທີ່ສຳຄັນທີ່ສຸດທີ່ຂ້າພະເຈົ້າໄດ້ອະທິຖານຮ້ອງຂໍ. ແຕ່ຂ້າພະເຈົ້າຮູ້ດີວ່າພຣະເຈົ້າຈະຊົງຕອບຄຳອະທິຖານນີ້ເພາະຈະໄດ້ເປີດໂອກາດໃຫ້ລູກຊາຍຂອງຂ້າພະເຈົ້າໄດ້ເຂົ້າຮຽນວິທະຍາລັຍແລະໄດ້ຮັບທຶນການສຶກສາເພາະດ້ວຍເຫດນີ້ເຂົາຈຶ່ງຈະດຳເນີນການຮຽນໄປໄດ້ຈົນສຳເຣັດແລະຈະໄດ້ອອກມາເປັນຜູ້ຮັບໃຊ້ພຣະອົງໃນອະນາຄົດ. ເປັນທີ່ອັສຈັນທີ່ພຣະເຈົ້າໄດ້ຈັດຕຽມສິ່ງງ່າຍໆ ເພື່ອໃຫ້ພຽງພໍກັບຄວາມຕ້ອງການຂອງພວກເຮົາທາງດ້ານຮ່າງກາຍ. ແຕ່ເຖິງປານນັ້ນພຣະອົງກໍຍັງມີຄວາມສົນໃຈໃນທຸກສິ່ງທີ່ເກີດຂຶ້ນໃນຊີວິດຂອງເຮົາແຕ່ລະຄົນບໍ່ວ່າຈະເປັນເຣື່ອງພາຍໃນຈິດໃຈແລະຄວາມຕ້ອງການພາຍນອກທີ່ເຮັດໃຫ້ເຮົາເຄືອງໃຈພຣະອົງກໍໄດ້ຊົງຈັດຕຽມປົກປ້ອງທຸກຢ່າງແມ່ນພຣະເຈົ້າຜູ້ຊົງຈັດຕຽມທີ່ໜ້າອັສຈັກແທ້ໆ! ຖ້າຈະນັບຈາກ **A** ( ທັມດາ ) ໄປເຖິງ **Z** ( ສູນ 0 ), ມີຈັກຄັ້ງທີ່ທ່ານຮູ້ສຶກວ່າໄດ້ຮັບພຣະພອນແມ້ແຕ່ໃນສິ່ງເລັກນ້ອຍໃນຊີວິດຂອງທ່ານຈາກພຣະເຈົ້າແລະທ່ານໄດ້ສຳນຶກແລະຂອບພຣະຄຸນພຣະອົງ?..............ຈົ່ງໃຊ້ບາງເວລາໃນວັນນີ້ອະທິຖານຂໍການຊົງນຳຈາກພຣະເຈົ້າບໍ່ວ່າໃນສິ່ງເລັກນ້ອຍໄປພ້ອມກັບສິ່ງໃຫຍ່ໃນສິ່ງທີ່ທ່ານຕ້ອງການ. ທ່ານຈະທູນຂໍສິ່ງໃດເພື່ອພຣະເຈົ້າຈະໄດ້ຈັດຕຽມໃຫ້ແກ່ທ່ານໃນວັນນີ້?

## 3. <u>ພຣະຜູ້ຊົງວາງໂຄງຮ່າງທີ່ອັສຈັນ:</u> ພາກ 1, ພາກ 2, ( ເພງສັຣເສີນ 104: 24, 27- 30 )

1 ) ນັກວິທະຍາສາດບາງຄົນມີຄວາມເຊື່ອວ່າທຸກສິ່ງທີ່ເກີດມີຢູ່ໃນໂລກຈັກກະວານນີ້ແມ່ນເກີດມາຈາກການຣະເບີດອອກຈາກດວງດາວຕ່າງໆ. ເຂົາມີຄວາມເຊື່ອວ່າ 12 ຫາ 15 ພັນລ້ານປີກ່ອນນັ້ນສະເກັດດາວນ້ອຍໆ ທັງຫຼາຍໄດ້ແຕກກະຈັດກະຈາຍອອກຈາກວົງຈອນຂອງດາວດວງໃຫຍ່ສູ່ຈັກກະວານ, ແລະໂລກຂອງເຮົາໜ່ວຍນີ້ກໍເປັນສະເກັດດາວອັນນຶ່ງໃນຈຳນວນນັ້ນແລະໄດ້ປ່ຽນແປງຕົວເອງຈົນເຖິງປັດຈຸບັນນີ້! ທ່ານລອງຄຶດວາດພາບເບິ່ງຖ້າຫາກມີການລະເບີດຫີນກ້ອນໃຫຍ່ດ້ວຍດິນລະເບີດແລະຊິ້ນເລັກນ້ອຍຕ່າງໆ ໄດ້ແຕກກະຈັດກະຈາຍໄປຕົກໃນສະຖານທີ່ເໝາະສົມແລະຈະເກີດເປັນຄອມພິວເຕີບັງຄັບໃຫ້ເປັນໄປໄດ້ບໍ່? ແນ່ນອນທີ່ສຸດເປັນໄປບໍ່ໄດ້! ຄອມພິວເຕີ້ຕ້ອງໄດ້ມີຜູ້ປະດິດແລະປ້ອນຄວາມສາມາດ, ໂດຍຜ່ານການຮຽນ, ການຄົ້ນຄວ້າຈາກນັກວິສວະກອນທີ່ມີສມອງເປັນເລີດ. ຈົ່ງຄິດເຖິງ ແຊວລ໌ອັນນຶ່ງທີ່ມີຊີວິດທີ່ເຮົາຄວນຈະຄິດວ່າມີຄຸນຄ່າໃນການພັທນາການຫຼາຍກວ່າຄອມພິວເຕີນັ້ນ. ນັກວິທະຍາສາດທັງຫຼາຍໃຫ້ຄວາມສຳຄັນໃນເຣື່ອງນີ້ວ່າມີຄວາມເລິກເຊິ່ງເຂົ້າໃຈໄດ້ຍາກຫຼາຍກວ່າການສ້າງເມືອງໃຫຍ່ ໆທາງຂ້າງໃນ, ໃນການທຳງານຮ່ວມກັນເພື່ອຈະໄດ້ສ້າງຈາກພຽງເມັດຊາຍເທົ່ານັ້ນ. ມະນຸດຜູ້ນຶ່ງສາມາດມີຫຼືອາດມີການປ້ອງກັນໃນຮ່າງກາຍຈາກແຊວລ໌ນ້ອຍໆ ເຫຼົ່ານີ້ຫຼາຍກວ່າ 60 ໂກດທີ່ອາດຈະເອີ້ນວ່າ " ກຳແພງປ້ອງກັນເມືອງ." ມັນບໍ່ເປັນການງ່າຍທີ່ຈະສາມາດຜ່ານເຂົ້າໄປໄດ້ໂດຍບັງເອີນ. ອ່ານໃນ ພສລສ 104: 24. ແມ່ນຫຍັງທີ່ເປັນສາມຫົວຂໍ້ໃຫຍ່ນບົດຮຽນໃນມື້ນີ້ແລະຈົ່ງບອກຂໍ້ເຫລົ່ານັ້ນມາ? ໃນພຣະທັມຂໍ້ນີ້ບອກໄວ້ວ່າສັພທຸກສິ່ງເກີດມີຂຶ້ນກໍເພາະພຣະເຈົ້າເປັນຜູ້ຊົງເນຣະມິດສ້າງ, ດ້ວຍພຣະປັນຍາອັນລ້ຳເລີດ ຊຶ່ງເກີນທີ່ມະນຸດຈະສາມາດເຂົ້າໃຈໄດ້. ມັນເປັນການງ່າຍທີ່ທ່ານຈະເຂົ້າໃຈໃນພຣະທັມ ພສສ ທີ່ໄດ້ອະທິບາຍເຖິງຄວາມງົດງາມຂອງທັມມະຊາດຫຼືສັງເກດເບິ່ງຊີວິດການເປັນຢູ່ຂອງສັດປ່ານາໆຊະນິດຊຶ່ງທັງໝົດນີ້ແມ່ນພຣະເຈົ້າເປັນຜູ້ຊົງເນຣະມິດສ້າງຊຶ່ງບໍ່ສາມາດທີ່ຈະນັບໄດ້. ໃນວຽກງານນີ້ ໄດ້ດົນໃຈທີ່ຈະເຮັດທ່ານຕ້ອງໄດ້ອະທິຖານຍ້ອງຍໍພຣະຜູ້ຊົງສ້າງແມ່ນບໍ່? ທັງໝົດທີ່ພຣະອົງຊົງສ້າງ ສາມາດທີ່ຈະແປ

ໄດ້ວ່າ " ທັງຫມົດເປັນທີ່ຈັດຕຽມຢ່າງດີ." ແມ່ນຫຍັງທີ່ເປັນສັນຍາລັກໃຫມ່ທັງຫມົດນີ້ທີ່ທ່ານເຂົ້າໃຈ? ພຣະເຈົ້າອົງດຽວເທົ່ານັ້ນທີ່ເປັນຜູ້ຊົງສ້າງແລະເຕັມໄປດ້ວຍສະຕິປັນຍາ, ຣວມທັງສ້າງທ່ານແລະສິ່ງທີ່ຈະສນອງຄວາມຕ້ອງການຂອງທ່ານທຸກຢ່າງທີ່ເຫມາະສົມດ້ວຍ.

ຂ) " ຊາລີ, ເຈົ້າເຫັນທາງໃນຂອງເດັກນ້ອຍຜູ້ຊາຍຄົນນັ້ນບໍ່?" ແມ່ຖາມ, " ໂອ, ແມ່," ຊາລີຕອບ, " ທອດ ເປັນຄົນທີ່ອ່ອນໂຍນແລະຫນ້າຮັກ, ແລະພວກເຮົາກໍມີຫຼາຍຢ່າງທີ່ເປັນປົກກະຕິທັມມະດາ." ແມ່ອາດຈະຕໍ່ລອງຕີລາຄາລະວ່າງຊາລີກັບທອດຊຶ່ງທີ່ຈິງແລ້ວກໍເປັນທັມມະດາທົ່ວໆ ໄປ, ແຕ່ເພັງສັຣເສີນ 104: 27-30 ໄດ້ບອກຢ່າງຈະແຈ້ງເຖິງທຸກສິ່ງທີ່ໄດ້ຊົງສ້າງມີສິ່ງທັມມະດາຈົ່ງອ່ານແລະອະທິບາຍຂໍ້ເຫຼົ່ານັ້ນ. ໃນຕອນສຸດທ້າຍຂອງບົດຮຽນໃນອາທິດນີ້ພຣະເຈົ້າໄດ້ຊົງສ້າງທຸກສິ່ງແລະປະໄວ້. ຈົ່ງຂີດກ້ອງໃນສິ່ງທີ່ພຣະເຈົ້າຊົງຫ່ວງໃຍ, ຈັດຕຽມໄວ້ໃຫ້, ແລະສືບຕໍ່ໃນການດູແລຮັກສາໃນສິ່ງທີ່ພຣະອົງຊົງຮັກແລະເນຣະມິດສ້າງໄວ້ແລ້ວ. ໃນຄຳເວົ້າຂອງທ່ານເອງ, ແລະຈົ່ງອະທິບາຍໃນຂໍ້ດັ່ງກ່າວວ່າທ່ານໄດ້ຮຽນຮູ້ໄດ້ແນວໃດກ່ຽວກັບເຣື່ອງຂອງພຣະເຈົ້າ. ຂໍ້ 28,...........ຂໍ້29,..........ຂໍ້30,..........

ໃນພຣະທັມ ພສສ, ໄດ້ຂຽນເຖິງພວກເຮົາແລະຄົນອື່ນໆ ທີ່ຈະໄດ້ຮຽນຮູ້ໃນອາທິດນີ້, ດ້ວຍການຫັນຄວາມສົນໃຈຈາກບັນຫາທີ່ມີຢ່າງລົ້ນເຫຼືອໃນຊີວິດແລະສົນໃຈໄປສູ່ຄວາມອົບອຸ່ນແລະການແກ້ໄຂບັນຫາທັງຫມົດ. ພຣະອົງຊົງເປັນຜູ້ມີຄວາມເມດຕາແລະເປັນແບບຢ່າງເພື່ອພວກເຮົາຈະໄດ້ເຮັດຢ່າງນັ້ນເຫມືອນກັນ. ໂດຍຜ່ານສິ່ງເຫຼົ່ານີ້ ກໍມີຫຼາຍທາງໃນການທີ່ຈະຍ້ອງຍໍສັຣເສີນພຣະອົງ. ໃນສມັຍກ່ອນໄດ້ໃຊ້ສຽງດົນຕຣີທັງສຽງເພງເປັນການຖວາຍກຽດພຣະເຈົ້າ, ເຖິງໃນປັດຈຸບັນນີ້ກໍຍັງໃຊ້ສຽງດົນຕຣີທັງສຽງເພງໃນເວລານະມັສການເພື່ອເປັນການຍ້ອງຍໍສັຣເສີນພຣະເຈົ້າຄືກັນ. ແລະເຮົາສາມາດໃຊ້ສິ່ງເຫຼົ່ານີ້ໃນການເຂົ້າເຝົ້າພຣະເຈົ້າເປັນການສ່ວນຕົວໄດ້ເຊັ່ນກັນ. ມີຢູ່ ສອງ ຢ່າງທີ່ພວກເຮົາຄວນຈະຈື່ຈຳໄວ້ໃນໃຈໃນການອະທິຖານໄຫວ້ວອນແລະຍ້ອງຍໍພຣະເຈົ້າ, ມັດທາຍ 15: 8, ຄືໃຫ້ທຸກສິ່ງອອກມາຈາກໃຈຈິງບໍ່ແມ່ນພຽງແຕ່ເປັນການສະແດງໂອ້ອວດ, ອາໂມດ 5: 21-24 ໄດ້ສຸມຈຸດໃສ່ໃນການດຳຣົງຊີວິດຂອງເຮົາເປັນສຳຄັນທີ່ຈະຕ້ອງໃຫ້ມາຈາກພຣະເຈົ້າເທົ່ານັ້ນຖ້າປາສຈາກນີ້ແລ້ວຊີວິດກໍບໍ່ມີຄວາມຫມາຍຫຍັງ.

ຫລັງຈາກທີ່ທ່ານໄດ້ເຮັດໃຫ້ຈິດໃຈແລະຊີວິດຂອງທ່ານໃຫ້ສະອາດຜ່ອງໃສຕໍ່ພຣະພັກພຣະເຈົ້າແລ້ວ. ຈົ່ງຮ້ອງເພງສັຣເສີນພຣະເຈົ້າແລະຈົ່ງຍ້ອງຍໍສັຣເສີນພຣະອົງເຖີ້ນ.

( ອຸປະຖັມໂດຍ ລຊບສ www.lsbf.org )

# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ວັນທີ 14 ເດືອນ ພຶສຈິກາ 2004 ( 11- 14- 2004 )

---

## ພຣະເຈົ້າຊົງປົກຄອງ

**ພຣະຄັມພີສຳລັບບົດຮຽນນີ້:** ( ເພງສັຣເສີນ. 33: 6-17, 20-22 )

**ຄວາມຈິງໃນພຣະຄັມພີ:** ເພາະວ່າພຣະເຈົ້າຊົງເປັນຜູ້ປົກຄອງສາຣະພັດທຸກສິ່ງທີ່ພຣະອົງຊົງເປັນຜູ້ເນຣະມິດສ້າງ, ຜູ້ທີ່ເຊື່ອທັງຫຼາຍຕ້ອງຍອມຮັບຕໍ່ຣິດທານຸພາບຂອງພຣະອົງ.

**ຂໍ້ພຣະຄັມພີທີ່ສຳຄັນ:** ພວກຂ້ານ້ອຍຂໍຝາກຄວາມຫວັງໄວ້ກັບພຣະຜູ້ເປັນເຈົ້າພຣະອົງຊົງເປັນຜູ້ຊ່ອຍເຫຼືອແລະຜູ້ປົກປັກຮັກສາພວກຂ້ານ້ອຍ. ( ເພງສັຣເສີນ 33: 20 )

**ຜົນສະທ້ອນຕໍ່ຊີວິດ:** ເພື່ອຊ່ວຍໃຫ້ທ່ານໄດ້ດຳຣົງຊີວິດໂດຍຍອມຢູ່ໃນການຄຸ້ມຄອງຂອງພຣະເຈົ້າ.

### ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງຍອມທີ່ຈະຢູ່ໃຕ້ຣິດອຳນາດຂອງພຣະເຈົ້າ?

ໃນຖານະທີ່ພວກເຮົາທີ່ເປັນພໍ່ແມ່ກໍໄດ້ມີການສັ່ງສອນລູກເລື້ອຍມາກ່ຽວກັບຄຸນຄ່າແລະຄວາມຕ້ອງການຂອງພວກເຮົາໃນຂນະທີ່ເຂົາຈະເຣີນໃຫຍ່ຂຶ້ນ, ພວກເຮົາກໍໄດ້ໃຫ້ສິດເສຣີພາບແກ່ເຂົາຫຼາຍຂຶ້ນໃນການຕັດສິນໃຈ. ພວກເຮົາກໍພຽງແຕ່ໄດ້ອະທິຖານເພື່ອເຂົາໃນການຕັດສິນໃຈ ໂດຍຫວັງວ່າພື້ນຖານການສັ່ງສອນທີ່ເຮົາໄດ້ສັ່ງສອນໄວ້ແຕ່ກ່ອນນັ້ນ. ໃນຊີວິດຂອງເຂົາຄົງມີຄັ້ງນຶ່ງຈະໄດ້ໃຊ້, ແຕ່ມີຫຼາຍຄັ້ງທີ່ເຂົາໄດ້ຕັດສິນໃຈຜິດໄປ. ລູກຊາຍວັຍໜຸ່ມຄະນອງຂອງຂ້າພະເຈົ້າໄດ້ເກີດອຸບັດເຫດຣົດຍົນເລັກນ້ອຍຫຼາຍຄັ້ງໃນຂນະທີ່ທ່ຽວຫຼິ້ນກັບໝູ່ເພື່ອນຂອງລາວ. ຍ້ອນສາເຫດນີ້ລາວຈຶ່ງໄດ້ຮັບຄວາມລຳບາກທຳງານໃນຍາມວ່າງ ແລະເງິນທີ່ໄດ້ມາກໍແມ່ນເອົາໄປໃຊ້ໃນການສ້ອມແຊມຣົດຂອງລາວ ແລະໄດ້ຮັບໂທດໂດຍບໍ່ໄດ້ຂັບຣົດຊົ່ວລະຍະນຶ່ງ. ຍ້ອນຄວາມບໍ່ເຊື່ອຟັງຂອງລາວໄດ້ນຳບັນຫາຫຍຸ້ງຍາກຫຼາຍອັນມາສູ່ລາວແລະພໍ່ແມ່ກໍມີພາຣະເພີ້ມຂຶ້ນຕາມໜ້າທີ່ຈະຕ້ອງຮັບຜິດຊອບເພາະລາວຍັງຢູ່ໃນຄວາມປົກຄອງຂອງພໍ່ແມ່ຢູ່. ລາວໄດ້ຮຽນບົດຮຽນອັນລ້ຳຄ່ານີ້ ໂດຍການເຊື່ອຟັງແລະປະຕິບັດຕາມຄວາມສຳພັນລະຫວ່າງພໍ່ແມ່ແລະພຣະເຈົ້ານຳອີກ. ພຣະເຈົ້າຍິ່ງມີສິດທີ່ຈະໄດ້ຮັບການເຊື່ອແລະຟັງຄວາມຫຼາຍກວ່າໃນຖານະທີ່ພວກເຮົາເປັນພໍ່ແມ່ອີກ ການຍອມເຊື່ອຟັງແລະປະຕິບັດຕາມພຣະເຈົ້ານັ້ນກໍເພື່ອຄວາມສຳພັນທີ່ມີຕໍ່ພຣະອົງໃຫ້ມີຄວາມເຂັ້ມແຂງເໝືອນເດີມ. ການຍອມເຊື່ອຟັງນັ້ນບໍ່ຄວນຈະເປັນການຝືນໃຈແຕ່ເປັນໄປຕາມທາງທີ່ຖືກຕ້ອງ ເພື່ອພວກເຮົາຈະໄດ້ຮັບປະສົບການທີ່ເຕັມໄປດ້ວຍຄວາມສຳພັນອັນສົມບູນກັບພຣະບິດາຜູ້ຊົງສະຖິດຢູ່ເທິງສວັນ.

### 1. ສະແດງອອກເຖິງຣິດອຳນາດຂອງພຣະເຈົ້າ ( ເພງສັລເສີນ. 33: 6-11 )

ໂດຍຜ່ານທາງພຣະຄັມພີພວກເຮົາໄດ້ຖືກສັ່ງສອນໃຫ້ຮູ້ເຖິງຣິດອຳນາດທີ່ແທ້ຈິງທີ່ມີໃນພຣະເຈົ້າ. ພຣະອົງຊົງເປັນພຣະບິດາຂອງອຳນາດທັງໝົດ, ແລະຊົງເປັນຜູ້ດຽວທີ່ສາມາດປະທານອຳນາດຕ່າງໆ ໃຫ້ມະນຸດ ເບິ່ງໃນ ( ໂຣມ. 13: 1 ) ບົດຮຽນນີ້ຈະໄດ້ " ສະແດງອອກເຖິງຣິດອຳນາດຂອງພຣະເຈົ້າ " ອ່ານໃນ ພສສ. 33: 6--7, 9, ພຣະເຈົ້າໄດ້ຊົງສຳແດງຣິດອຳນາດຂອງພຣະອົງອອກມາຄືແນວໃດ? ຈົ່ງຂີດກ້ອງແລະເບິ່ງລື້ມຄືນວ່າທ່ານໄດ້ພົບສິ່ງໃດແດ່.

( 1 ) ພຣະຜູ້ເປັນເຈົ້າໄດ້ຊົງສ້າງຟ້າສວັນຊັ້ນຟ້າ, ຕາເວັນ, ເດືອນແລະດາວດ້ວຍພຣະວາຈາຂອງພຣະອົງ, ໃນຂໍ້ 6.

( 2 ) ພຣະອົງຊົງທ້ອນໂຮມເອົານ້ຳທະເລ, ມະຫາສມຸດອັນເລິກທັງໝົດໄວ້ໃນບ່ອນດຽວ, ໃນຂໍ້ 7.

( 3 ) ເມື່ອພຣະອົງຊົງສັ່ງໂລກນີ້ກໍເກີດມີມາແລະທຸກສິ່ງກໍປາກົດຂຶ້ນມາຕາມພຣະດຳລັດຂອງພຣະອົງ, ໃນຂໍ້ 9.

ສັພທຸກສິ່ງທີ່ເກີດມີມາບໍ່ແມ່ນອຸບັດຕິເຫດແຕ່ແມ່ນພຣະເຈົ້າເປັນຜູ້ເນຣະມິດສ້າງດ້ວຍພຣະວັຈນະຂອງພຣະອົງ. ຍ້ອນພຣະຄຸນແລະຣິດທານຸພາບອັນສູງສົ່ງທຸກສິ່ງນີ້ຈຶ່ງເກີດມີມາ. ຕາມຂໍ້ 8 , ພວກເຮົາຈະຕອບສນອງຕໍ່ຣິດອຳນາດຂອງພຣະເຈົ້າແນວໃດ? ຖືກຕ້ອງແລ້ວ, ຄືເຮົາຕ້ອງມີຄວາມຢຳເກງແລະດຳຣົງ ຢູ່ໃຕ້ການນຳພາຂອງພຣະອົງ. ເມື່ອພວກເຮົາຫາກເຫັນແລ້ວເຖິງຄວາມຍິ່ງໃຫຍ່ແລະຣິດອຳນາດ, ພ້ອມທັງຄວາມບໍຣິສຸດ, ຂອງພຣະເຈົ້າແລ້ວເຮົາຄວນຈະຄຸເຂົ່າລົງເພື່ອເພື່ອຂາບໄຫວ້ນະມັສການພຣະອົງ, ສາລະພາບບາບແລະຊອກຫາການເຊື່ອຟັງຄຳສັ່ງຂອງພຣະອົງ. ແມ່ນຫຍັງຄື ສະແດງອອກເຖິງຣິດອຳນາດຂອງພຣະເຈົ້າ ແລະເຮັດໃຫ້ທ່ານຕ້ອງດຳຣົງຢູ່ໃຕ້ການຊົງນຳຂອງພຣະອົງ? ແມ່ນຫຍັງຈະເກີດຂື້ນຖ້າເຮົາບໍ່ເຊື່ອຟັງພຣະເຈົ້າ? ( ເບິ່ງໃນຂໍ້ 10 ). ຕາມພື້ນຖານແລ້ວ, ຂໍ້ນີ້ຈະບອກພວກເຮົາ ບາງຄັ້ງພຣະເຈົ້າຈະຊົງອະນຸຍາດໃຫ້ມະນຸດສາມາດທຳລາຍແຜນການຂອງພຣະອົງດ້ວຍຄວາມບໍ່ເຊື່ອຟັງ. ກໍເຫມືອນກັບວ່າເຮົາໄດ້ປ່ອຍໃຫ້ຄວາມບາບຄອບງຳເປັນເວລາດົນນານເກີນໄປ. ແຕ່ພຣະອົງກໍຍັງຊົງເບິ່ງຢູ່, ດ້ວຍເວລາຂອງພຣະອົງ, ຄວາມບາບຈະຖືກລົງໂທດແລະແຜນການທີ່ພຣະອົງເພື່ອສິ່ງທີ່ພຣະອົງຊົງສ້າງຈະໄດ້ຖືກອອກໄປ. ມີບາງຄັ້ງໃນຊີວິດຂອງທ່ານເຄີຍເກີດການບໍ່ເຊື່ອຟັງຣິດອຳນາດຂອງພຣະເຈົ້າມີບໍ່? ພຣະອົງຊົງອ້າແຂນພ້ອມທີ່ຈະໃຫ້ອະພັຍແກ່ທ່ານ, ແລະທ່ານຈະໄດ້ໃຫ້ຄຳຫມັ້ນສັນຍາທີ່ຈະດຳຣົງຊີວິດຢູ່ໃຕ້ຮົ່ມພຣະຄຸນຂອງພຣະອົງໃນວັນນີ້ເຖີດ.

## 2. <u>ຣິດອຳນາດທີ່ບໍ່ມີຂອບເຂດຈຳກັດຂອງພຣະເຈົ້າ ພາກ1, ພາກ 2</u>, ( ເພງສັຣເສີນ. 33: 12- 17 )

1. ໃນຂນະທີ່ທຸກໆ ຣັດກຳລັງມີການເລືອກຕັ້ງແລະມີການແຂ່ງຂັນເພື່ອເອົາຄະແນນສຽງຢູ່ບາງບ່ອນ. ສະພາກໍມີການເຕືອນບໍ່ໃຫ້ປະທານາທິບໍດີໃຊ້ສິດເກີນຂອບເຂດ. ມີຫົວຫນ້າສານຫຼາຍຄົນກໍມີຄວາມກະຕືລືລົ້ນໃນການທີ່ຈະອະທິບາຍແລະອອກກົດຫມາຍໃຫມ່ແທນການໃຊ້ກົດຫມາຍງ່າຍໆ ທີ່ມີຢູ່ແລ້ວ. ຕົວຢ່າງທີ່ກ່າວມາກໍແມ່ນແຕ່ລະສ່ວນອົງການກໍຢາກຈະໃຊ້ອຳນາດທີ່ຕົນມີຢູ່ໃຫ້ມີຜົນຕໍ່ອຳນາດຂອງຝ່າຍອື່ນ. ບົດຮຽນຂ້າງເທິງເຮົາໄດ້ຮຽນເຖິງເຣື່ອງທີ່ພຣະເຈົ້າໄດ້ຊົງໃຊ້ຣິດອຳນາດທີ່ພຣະອົງມີເພື່ອເນຣະມິດສ້າງທຸກໃຫ້ທຸກສິ່ງໄດ້ເກີດຂື້ນມີມາຢູ່ໃນໂລກນີ້. ໃນບົດຮຽນນີ້ເຮົາຈະຫັນຄວາມສົນໃຈໄປຫາພຣະຜູ້ມີຣິດທານຸພາບເຫນືອທຸກສິ່ງ, ເຫນືອມະນຸດ, ແຕ່ມີຫຼາຍຄົນໄດ້ຮູ້ແລະເຂົ້າໃຈຢ່າງຖ່ອງແທ້ເຖິງການປົກປ້ອງຄຸ້ມຄອງທີ່ພຣະອົງຊົງມີໃນຊີວິດຂອງເຂົາ. ທ່ານເດເຫັນວ່າແນວໃດໃນເຣື່ອງນີ້ເບິ່ງໃນ ພສສ. ຂໍ້ 33: 12-15, ແລະຈົ່ງອະທິບາຍ? ໃນຂໍ້13-14, ໄດ້ບອກເຖິງເຣື່ອງທີ່ພຣະອົງຊົງເບິ່ງແຍງຄຸ້ມຄອງພວກເຮົາ. ພຣະອົງມີເວລາທີ່ຈະເຫັນແລະຮູ້ການກະທຳທຸກຢ່າງ, ຄວາມນຶກຄິດ, ທັງຄວາມຮູ້ສຶກ ຂອງທຸກໆ ຊີວິດທີ່ຢູ່ໃນໂລກນີ້, ຕາມພື້ນຖານຂອງບົດຮຽນຂໍ້ນີ້, ຈົ່ງຂີດຫມາຍຄວາມຮູ້ສຶກຂອງທ່ານ:

- ໂອບກອດດ້ວຍຄວາມຍິນດີ. - ເປັນທີ່ເພິ່ງພາ, - ຢ້ານກົວ, - ຜ່ອນຄາຍ, - ອົບອຸ່ນ, - ປອດພັຍ,

ພວກເຮົາອາດຈະອ້າແຂນໂອບກອດຍອມຮັບສິ່ງໃດສິ່ງນຶ່ງທີ່ບໍ່ດີ, ທີ່ພວກເຮົາເກັບໄວ້ໃນໃຈເຮົາເອງໂດຍບໍ່ໃຫ້ຄົນອື່ນຮູ້ແຕ່ພຣະເຈົ້າຊົງຮູ້ແລ້ວ. ເຮົາເອງອາດຈະມີຄວາມຢ້ານກົວໃນຜົນທີ່ຈະໄດ້ຮັບແລະຄວາມທຸກລຳບາກທີ່ຕາມມາອາດຈະມີຄວາມຮູ້ສຶກຕ້ອງການທີ່ຈະແກ້ໄຂໃນສິ່ງທີ່ບົກພ່ອງໃນສ່ວນເລິກຂອງຫົວໃຈຂອງເຮົາເອງ. ອີກຢ່າງນຶ່ງ, ສິ່ງທີ່ເກີດຂື້ນທັງຫມົດນີ້ຈະສາມາດຊ່ອຍປົດປ່ອຍ, ທັງໃຫ້ຄວາມອົບອຸ່ນ, ແລະໃຫ້ຄວາມປອດພັຍທີ່ເຮົາໄດ້ຮູ້ວ່າພຣະເຈົ້າມີຄວາມຫ່ວງໃຍຕໍ່ທຸກສິ່ງທີ່ເກີດຂື້ນກັບເຮົາທີ່ທ່ານແລະຂ້າພະເຈົ້າບໍ່ຈຳເປັນຕ້ອງມີຄຳຕອບໃນບັນຫາທີ່ເກີດຂື້ນໃນຊີວິດຂອງເຮົາທຸກໆ ຄົນ, ກໍຄືພຣະເຈົ້າຜູ້ມີຄວາມຮັກໄດ້ຮັບຜິດຊອບຫມົດແລ້ວໃນຂໍ້ 15, ໄດ້ເວົ້າເຖິງພຣະເຈົ້າຜູ້ມີຫົວໃຈເປັນສິລປະຊົ່ງໄດ້ຊົງປັ້ນແຕ່ງເຂົາໃຫ້ເປັນພາຊະນະທີ່ໃຊ້ການໄດ້. ເຢເຣມີຢາໄດ້ບອກໄວ້ໃນຂໍ້ 18: 1-6, ໂດຍທີ່ພຣະອົງຊົງຕັ້ງໃຈປັ້ນຈົນເປັນຮູບຮ່າງລັກສນະທີ່ພຣະອົງພໍພຣະທັຍ. ພຣະເຈົ້າໄດ້ຊົງໃຊ້ຣິດອຳນາດຂອງພຣະອົງໃນການສ້າງຈິດໃຈພວກເຮົາແລະໄດ້ຮູ້ເຖິງຄວາມເລິກລັບໃນຈິດໃຈຂອງພວກເຮົາ. ເມື່ອພຣະອົງຊົງເຫັນຄວາມບໍ່ເຕັມໃຈຂອງພວກເຮົາແຕ່ກໍຍັງບໍ່ໄດ້ປະຖິ້ມແລະຍັງຄົງດຳເນີນການປັ້ນໃຫ້ພວກເຮົາໃຫ້ຄ້າຍຄືພຣະອົງຫຼາຍຂື້ນໄປ. ໃນທີ່ສຸດ, ເບິ່ງໃນຂໍ້ 12 , ພວກເຮົາຈະເຫັນການຊົງເລືອກໄວ້ສຳລັບພວກເຮົາແລ້ວເພື່ອຈະໄດ້ເຫັນຄວາມຊົມຊື່ນຍິນດີຖ້າຫາກພວກເຮົາໃຊ້ຊີວິດຢູ່ເທິງພື້ນານທີ່ພຣະອົງໄດ້ຊົງປະທານໃຫ້ກໍຄືມີຈິດໃຈທີ່ມີຄວາມເຂົ້າໃຈໂດຍຜ່ານພຣະ

ນາມຂອງພຣະເຢຊູຄຣິດ ( ຟລປ. 4: 7, ) ຈົ່ງຂຽນຂໍ້ຄວາມລົງໄປໃນຂໍ້ຂ້າງລຸ່ມນີ້ມີຫຍັງແດ່ທີ່ທ່ານສາມາດທີ່ຈະນັບໄດ້ເຖິງຣິດອຳນາດຂອງພຣະເຈົ້າທີ່ມີຢູ່ເຫນືອທ່ານແລະພຣະອົງຊົງເຫັນທ່ານຈົນເຖິງທຸກວັນນີ້?

1......................................2......................................3......................................4....................

ແລະດຽວນີ້ທ່ານຈົ່ງຂໍໃຫ້ພຣະອົງຊົງໄດ້ຊ່ວຍໃຫ້ທ່ານໄດ້ຝຶກແອບ ແລະທົນສູ້ໂດຍອາສັຍຣິດອຳນາດຈາກພຣະອົງ.

2. ແຈກ ແລະ ຊູ ໄດ້ທຳງານຫນັກ ເພື່ອທີ່ຈະເປັນບັນໄດທີ່ຈະເຮັດໃຫ້ລູກ 2 ຄົນທີ່ກຳລັງເປັນຫນຸ່ມສາວຄື ເຢຣານີ ແລະຢານາ. ເຂົາທັງສອງໄດ້ຮັບຄວາມສຳເຣັດໃນການສ້າງເຮືອນຫໍ ແລະທ້ອນຫອມເງິນຄຳໄວ້ເພື່ອຮຽນຕໍ່ວິທະຍາລັຍຂອງລູກເຂົາທັງສອງ. ເພື່ອນບ້ານຂອງເຂົາຄື ເຈຊັນ ແລະ ລິນດາ, ໄດ້ເຊີນພວກເຂົາໃຫ້ໄປຢ້ຽມຢາມໂບດທີ່ເຂົາເປັນສະມາຊິກຢູ່. ເຈຊັນຍັງໄດ້ແບ່ງປັນເຖິງເຣື່ອງຄວາມລອດພົ້ນໂດຍໃຊ້ການສິດສອນຂອງ **FAITH** ຊຶ່ງເປັນກອງປະກາດທີ່ມີປະສິດຕິພາບ. ໂດຍຜ່ານການຂອບຄຸນແລະຫ່ວງໃຍຂອງເພື່ອນບ້ານຄື ແຈກ ແລະ ຊູ ໄດ້ເຫັນຄວາມຕ້ອງການຂອງຕົນເອງ, ຄືໄດ້ " ເກັບເຣື່ອງຕ່າງໆ ທີ່ເປັນສ່ວນຕົວບໍ່ວ່າທາງດ້ານການສ້າງຖານະ, ຄອບຄົວແລະເຂົາກໍບໍ່ມີເວລາວ້າງພໍສຳລັບຄົນອື່ນຫຼືຈະເພີ້ມຕື່ມສິ່ງອື່ນໆ ໃນປະຕິທິນຂອງການວາງແຜນຄອບຄົວໄດ້ອີກ. ໃນເວລາຕໍ່ມາທັນທີ ຈານາ ກໍເກີດມີອາການຜິດປົກກະຕິຄືມີຈຸດຊ້ຳດຳຂຽວຕາມຕົນຕົວ. ພໍ່ແມ່ຂອງນາງກໍໄດ້ນຳໄປຫາທ່ານຫມໍ, ແລະຫຼັງຈາກນັ້ນກໍຖືກສົ່ງເຂົ້າຫ້ອງສຸກເສີນສຳຣັບກວດອາການ, ແລະກໍໄດ້ພົບວ່ານາງເປັນພະຍາດທີ່ປົວບໍ່ໄດ້ຊະນິດນຶ່ງຄືເມັດເລືອດບໍ່ທຳງານປົກກະຕິຕ້ອງໄດ້ອາສັຍເຄື່ອງກັ່ນກອງຊ່ວຍຟອກເລືອດນັ້ນ. ທັງ ແຈກແລະຊູ ເກີດຄວາມທໍ້ແທ້, ເຂົາບໍ່ເຂົ້າໃຈວ່າເປັນດ້ວຍເຫດໃດເຫດການແບບນີ້ຈຶ່ງເກີດຂຶ້ນກັບຄົນໃນຄອບຄົວຂອງເຂົາ. ຊຶ່ງເຂົາທັງສອງກໍໄດ້ເຮັດແຕ່ໃນສິ່ງທີ່ຖືກຕ້ອງສເມີມາ. ຄືທຳງານດ້ວຍຄວາມອົດທົນຕໍ່ຄວາມຍາກລຳບາກເພື່ອທີ່ຈະສັນຫາໄວ້ໃຫ້ກັບອະນາຄົດແລະເພື່ອລູກຂອງເຂົາ. ແຕ່ດຽວນີ້ພວກເຂົາຈະເຮັດແນວໃດ? ເຂົາຈະຫັນຫນ້າໄປເພິ່ງຜູ້ໃດ? ກໍຄືສາມີພັຣຍາຄູ່ນີ້ແຫຼະທີ່ບໍ່ໄດ້ເລືອກທີ່ຈະຫັນໄປເພິ່ງພຣະເຈົ້າ. ເປັນຫຍັງຄົນຫຼາຍຄົນຈຶ່ງເພິ່ງໃນຄວາມສາມາດຂອງຕົນເອງ?

..................., ........................., ............................., ..............................., ...................................

ຈົ່ງອ່ານເພງສັຣເສີນ 33: 16-17, ແມ່ນຫຍັງທີ່ບອກເຖິງພຣະທັມຕອນນີ້ສອນສາມີພັຣຍາຄື ແຈກ ແລະ ຊູ ແນວໃດຕາມທີ່ທ່ານໄດ້ຂຽນໃສ່ໃນຊ່ອງວ່າງຂ້າງເທິງນີ້?

ພຣະທັມຕອນນີ້ຈະເຮັດໃຫ້ຄົນຜູ້ທີ່ຕົກຢູ່ໃນຄວາມຍາກລຳບາກມີຄວາມຫວັງໄດ້ແນວໃດ?

ພຣະທັມຕອນນີ້ຈະຊ່ວຍໃຫ້ມະນຸດໄດ້ຍອມດຳຣົງຊີວິດຢູ່ໃຕ້ຣິດອຳນາດຂອງພຣະເຈົ້າບໍ່?

ພຣະທັມຕອນນີ້ໄດ້ບອກພວກເຮົາແລ້ວວ່າ ເຈົ້າຊີວິດ...... ປະຊາຊາດ.....ກໍຕັດສິນໃຈຜິດ ຖ້າເຂົາຫາກອາສັຍກຳລັງແລະຄວາມສາມາດຂອງກອງທະຫານເທົ່ານັ້ນກໍຈະບໍ່ຊະນະໄດ້. ຈະບໍ່ມີຄ່າຫຍັງຖ້າເຮົາຈະອາສັຍກຳລັງແຮງມ້າຫຼືກຳລັງປະສົບການທີ່ໄດ້ຝຶກຝົນມາຢ່າງດີກໍຕາມ ຫຼືມີແຜນການທີ່ເລີກແລບກໍບໍ່ສາມາດທີ່ຈະຫຼີກຫນີຈາກບັນຫາທີ່ຈະເກີດແລະຜ່ານເຂົ້າມາໃນຊີວິດຂອງພວກເຮົາໄດ້. ຖ້າຈະມີສິ່ງເຫຼົ່ານີ້ກໍບໍ່ເປັນຄວາມຜິດ, ແຕ່ຈະຜິດກໍຄືເຮົາຈະອາສັຍແຕ່ພຽງສິ່ງເຫຼົ່ານີ້ເທົ່ານັ້ນຫຼືໃຫ້ຄວາມສຳຄັນນ້ອຍກວ່າພຣະເຈົ້າຊຶ່ງເປັນພຣະເຈົ້າຜູ້ສູງສຸດ, ແລະມີຣິດທານຸພາບອັນສູງສົ່ງແລະເປັນພຽງບ່ອນດຽວເທົ່ານັ້ນທີ່ເຮົາຈະເພິ່ງໄດ້ຢ່າງປອດພັຍ. ພຣະເຈົ້າຈະຊົງປະທານຄວາມປອດພັຍໃຫ້ແກ່ການດຳຣົງຊີວິດຂອງພວກເຮົາ, ພຽງແຕ່ຮ້ອງຂໍອະທິຖານໃຫ້ພຣະອົງຊົງຊ່ວຍໃຫ້ພວກເຮົາໄດ້ຢູ່ໃຕ້ການຄຸ້ມຄອງເພື່ອພວກເຮົາຈະໄດ້ຍອມທີ່ຈະໃຫ້ພຣະອົງເປັນແຫຼ່ງຂອງຄວາມປອດພັຍສຳລັບພວກເຮົາ.

## 3. ຜົນສະທ້ອນໃນຣິດອຳນາດຂອງພຣະເຈົ້າ: ພາກ1, ພາກ 2,( ເພງສັຣເສີນ. 33: 20-22 )

1. ພຣະເຈົ້າຊົງຕ້ອງການໃຫ້ພວກເຮົາຕອບສນອງແລະຍອມຮັບຕໍ່ຣິດອຳນາດຂອງພຣະອົງ ກໍຄືຂອງເຮົາເອງ. ພຣະອົງຊົງຮູ້ແລ້ວເຖິງຄວາມຕ້ອງການໃນການດຳຣົງຊີວິດຂອງເຮົາທຸກຄົນ. ເວລາທີ່ພຣະອົງຊົງຕັ້ງໄວ້ແລ້ວນັ້ນແມ່ນດີເລີດແລ້ວ, ມີພຽງພຣະເຈົ້າອົງດຽວເທົ່ານັ້ນທີ່ຈະສາມາດນຳພາພວກເຮົາໃຫ້ໄປເຖິງຈຸດຫມາຍປາຍທາງໄດ້. ທ່ານຄິດເຫັນແນວໃດກ່ຽວກັບເຣື່ອງທີ່ພຣະເຈົ້າຊົງຕ້ອງການໃຫ້ພວກເຮົາດຳຣົງຊີວິດແລະຍອມຮັບໃນຣິດອຳ

ນາດຂອງພຣະອົງ? ຂ້າພະເຈົ້າຈະໃຊ້ຄໍາວ່າ " I " ເປັນຄໍາຂື້ນຕົ້ນ " e " ເປັນຄໍາສຸດທ້າຍ, ແລະຄໍາວ່າ " ov " ເປັນຄໍາເຄິ່ງກາງ. ພຣະເຈົ້າຮັກພວກເຮົາແລະເຂົ້າໃນທຸກຢ່າງໃນໃຈຂອງເຮົາ, ພຣະອົງຊົງຮັກຫຼາຍກວ່າທີ່ເຮົາຮັກຕົວເອງ ແລະພຣະອົງຊົງຕ້ອງການໃຫ້ເຮົາໄດ້ໃນສິ່ງທີ່ດີທີ່ສຸດຫຼາຍກວ່າທີ່ຕົວທ່ານເອງຕ້ອງການໃຫ້ຕົວເອງ. ອ່ານ ພສສ. 33: 20, ຈົ່ງຂີດວົງມົນອ້ອມແລະບອກເຖິງການຕັ້ງເວລາຂອງພຣະເຈົ້າ. ເພື່ອ ຈະໄດ້ລໍຖ້າພຣະຜູ້ເປັນເຈົ້າ ແລະມີຄວາມເຊື່ອໝັ້ນຄົງໃນພຣະອົງ. ຈົ່ງອະທິບາຍພຣະເຈົ້າເຮັດແນວໃດທີ່ຊົງສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນຂອງພຣະອົງ ມີຫຼາຍຄົນໃນພວກເຮົາໄດ້ມີປະສົບການກັບການຕັ້ງເວລາໃນບາງບັນຫາແລະບໍ່ໄດ້ເຫັນພ້ອມກັບພຣະເຈົ້າ. ມີຈັກເທື່ອບໍ່ໃນຊີວິດຂອງທ່ານໄດ້ພະຍາຍາມບັງຄັບແກ້ໄຂບັນຫາໂດຍບໍ່ລໍຖ້າຂໍໃຫ້ພຣະເຈົ້າຊ່ວຍຕັດສິນໃຈ? ຈົ່ງອະທິບາຍ. ຄໍາທີ່ເຫຼືອໃນຂໍ້ທີ 20 ໄດ້ບອກພວກເຮົາເຖິງຜົນສະທ້ອນໃນຣິດອໍານາດຂອງພຣະເຈົ້າຖ້າພວກເຮົາຫາກມີຄວາມປະສົງທີ່ຈະຍອມໂດຍການລໍຖ້າພຣະເຈົ້າ. ທ່ານຈົ່ງອະທິບາຍເຖິງຜົນສະທ້ອນນີ້ວ່າເປັນແນວໃດ? ໃນເມື່ອພວກເຮົາມີການຝຶກແອບດ້ວຍຄວາມອົດທົນເຖິງເຣື່ອງຄວາມໝັ້ນໃຈ, ພຣະອົງກໍຈະເປັນທັງສອງຢ່າງຄື ຜູ້ຊ່ວຍພວກເຮົາ, ເພື່ອປົກປ້ອງການຕັດສິນໃຈເລືອກຫຼື ເກາະກໍາບັງໃຫ້ພວກເຮົາ. ໃນເວລາໃດແດ່ໃນຊີວິດຂອງທ່ານທີ່ຊອກຫາການແນະນໍາບອກທາງຂອງພຣະເຈົ້າມີບໍ່? ທ່ານໄດ້ເປີດໃນຍິນດີທີ່ຈະລໍຖ້າແລະມີຄວາມໝັ້ນໃຈໃນຣິດອໍານາດຂອງພຣະເຈົ້າວ່າພຣະອົງຈະຈັດຫາໃຫ້ໃນເວລາທີ່ເໝາະສົມຂອງພຣະອົງມີບໍ່?

ຂ. ເຮົາໄດ້ຮຽນແລ້ວເຖິງຜົນປະໂຍດທີ່ເຮົາຈະໄດ້ຮັບ ຈາກການທີ່ພວກເຮົາຍອມທີ່ຈະດໍາຣົງຊີວິດຢູ່ໃຕ້ຣິດອໍານາດຂອງພຣະເຈົ້າກໍຄືພຣະອົງຈະຊົງຊ່ວຍເປັນເກາະກໍາບັງໃຫ້ແກ່ໃຫ້. ອ່ານໃນ ພສສ. 33: 21- 22, ແລະຂີດວົງມົນໃນຂໍ້ເພີ້ມເຕີມທີ່ບອກເຖິງຜົນທີ່ເຮົາຈະໄດ້ຮັບຈາກການຍອມທີ່ຈະຢູ່ໃຕ້ຣິດອໍານາດຂອງພຣະເຈົ້າ. ໃນຂໍ້ 21, ບອກໄວ້ວ່າ ພວກຂ້ານ້ອຍຍິນດີນໍາພຣະອົງ. ຄວາມໝາຍ " ຍິນດີ " ນໍາພຣະອົງມີພຽງເວລາທີ່ມີສິ່ງດີໆ ເກີດຂື້ນເທົ່ານັ້ນບໍ່? ທຸກໆຄົນສາມາດມີຄວາມຊົມຊື່ນຍິນດີເມື່ອມີສິ່ງດີໆ ຜ່ານເຂົ້າມາໃນຊີວິດ. ແຕ່ທ່ານແລະຂ້າພະເຈົ້າສາມາມີຄວາມສຸກໄດ້ແມ້ແຕ່ໃນເວລາແຫ່ງຄວາມທຸກໂສກເສົ້າ, ຫຼືເກີດມີຄວາມຫຍຸ້ງຍາກລໍາບາກເພາະເຮົາຮູ້ແລ້ວວ່າຣິດອໍານາດຂອງພຣະເຈົ້າຈະຊົງຄຸ້ມຄອງພວກເຮົາ. ໃນຂໍ້ 22, ໄດ້ສະແດງເຖິງຄວາມຣະມັດຣະວັງໃນຣິດອໍານາດຂອງພຣະເຈົ້າ. ພວກໄດ້ຝາກຄວາມຫວັງໃນພຣະເຈົ້າ. ພຣະອົງຈະຊົງປະຖິ້ມຄວາມ ໄວ້ວາງໃຈໃນຄວາມຮັກ ແລະຈະຊົງໃຫ້ພວກເຮົາ ມີຄວາມຫວັງ ໃນພຣະອົງໄດ້ຢ່າງໃດ? ໃນຫຼາຍປີຜ່ານມາ, ສາມີຂອງຂ້າພະເຈົ້າໄດ້ຖືກສເນີໃຫ້ມີງານໃໝ່ທີ່ຢູ່ຕ່າງຣັດ. ພວກເຮົາມີຄວາມກະຕືລືລົ້ນແລະຍິນດີທີ່ຈະຮັບເຮົາວຽກໃໝ່ນີ້. ເຖິງຢ່າງໃດ, ຜ່ານການອະທິຖານແລ້ວ ພວກເຮົາກໍຍັງບໍ່ມີຄວາມແນ່ໃຈວ່າພຣະເຈົ້າມີພຣະປະສົງແນວໃດໃນເຣື່ອງນີ້. ພວກເຮົາມີເວລາ 2 ອາທິດໃນການຕັດສິນໃຈ, ແລະພວກເຮົາກໍຕິດປ້າຍປະກາດຂາຍເຮືອນແລ້ວ. ທັງອະທິຖານເພື່ອເຣື່ອງນີ້, ຖ້າວ່າພຣະເຈົ້າຫາກພໍພຣະທັຍໃຫ້ພວກເຮົາຮັບເອົາໜ້າທີ່ວຽກນີ້, ຂໍໃຫ້ມີຄົນມາຊື້ບ້ານຂອງພວກເຮົາໃນແລງວັນອາທິດນີ້ເພາະຈະສໍາເຣັດໃນເຣື່ອງໜັງສືຊື້ຂາຍໃນເວລາ 2 ອາທິດພໍດີ. ແລງວັນອາທິດຜ່ານໄປໂດຍບໍ່ມີຫຍັງເກີດຂື້ນ, ພວກເຮົາກໍໄດ້ຕອບປະຕິເສດໃນວຽກງານທີ່ຖືກສເນີໃຫ້ມານັ້ນ. ຫຼັງຈາກທ່ຽງວັນຂອງວັນຈັນ, ກໍມີສາມີພັຣຍາຄູ່ນຶ່ງມາເບິ່ງບ້ານຂອງເຮົາແລະເຂົາທັງສອງມີຄວາມພໍໃຈຫຼາຍແລະຕົກລົງເຮັດໜັງສືຊື້ຂາຍໃນວັນນັ້ນວັນນັ້ນເລີຍ. ພວກເຮົາເສັຽໃຈບໍ່ທີ່ໄດ້ປະຕິເສດວຽກທີ່ສເນີໃຫ້ມາ? ບໍ່ດອກ, ພວກເຮົາມີຄວາມຮູ້ສຶກກະຕືລືລົ້ນຕາມທິດທາງທີ່ພຣະເຈົ້າຊົງນໍາຕ່າງຫາກຄືພຣະເຈົ້າຜູ້ຊົງມີຄວາມຮັກແລະຢັ່ງຮູ້ທຸກສິ່ງຊົງນໍາພາພວກເຮົາໃນການຕັດສິນໃຈທຸກຢ່າງ! ພວກເຮົາມີຄວາມຊົມຊື່ນຍິນດີໃນພຣະອົງໃນເວລາທີ່ພວກເຮົາຫຼຽວຄືນຫຼັງເຖິງການຕັດສິນໃຈຂອງພວກເຮົາ. ພຣະອົງໄດ້ຊົງສະແດງໃຫ້ພວກເຮົາຮູ້ຈາກເວລາຕໍ່ເວລາແລະພວກເຮົາກໍເຊື່ອຟັງໃນການປົກປ້ອງຄຸ້ມຄອງຂອງພຣະອົງເພື່ອພວກເຮົາຈະບໍ່ໄດ້ຕັດສິນໃຈເລືອກຜິດ. ເພາະພວກເຮົາຮູ້ ໃນຄວາມຮັກອັນໝັ້ນຄົງ ຂອງພຣະອົງ, ທ່ານແລະຂ້າພະເຈົ້າສາມາດມີຄວາມ ຊົມຊື່ນຍິນດີ ແລະມີຄວາມ ຫວັງ ເພື່ອອະນາຄົດຂອງພວກເຮົາ.

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ວັນທີ 21 ເດືອນ ພຶສຈິກາ 2004 ( 11- 21- 2004 )

---

## ຈົ່ງຂອບພຣະຄຸນ

<u>ພຣະຄັມພີສຳລັບບົດຮຽນນີ້:</u> ( ເພງສັຣເສີນ 65: 1-13 )

<u>ຄວາມຈິງໃນພຣະຄັມພີ:</u> ເຮົາຄວນຈະຂອບພຣະຄຸນຕໍ່ພຣະຜູ້ເປັນເຈົ້າເພາະພຣະອົງເປັນຜູ້ຊົງສ້າງ, ເພາະພຣະອົງເປັນຜູ້ໃຫ້ອະພັຍ, ໃຫ້ຄວາມຫວັງແລະຍັງເປັນຜູ້ຈັດຕຽມທຸກສິ່ງສາຣະພັດໄວ້ໃຫ້.

<u>ຂໍ້ພຣະຄັມພີທີ່ສຳຄັນ:</u> ຄວາມສຸກເປັນຂອງຜູ້ທີ່ພຣະອົງຊົງເລືອກໄວ້ຄືຜູ້ທີ່ພຣະອົງຊົງນຳເຂົາເຈົ້າເຂົ້າມາໃນສະຖານທີ່ສັກສິດ ພວກຂ້ານ້ອຍຈະອີ່ມບໍຣິບູນດ້ວນພຣະພອນແລະຂອງດີທີ່ວິຫານອັນສັກສິດຂອງພຣະອົງ. ( ເພງສັຣເສີນ. 65: 4 )

<u>ຜົນສະທ້ອນຕໍ່ຊີວິດ:</u> ເພື່ອຊ່ວຍໃຫ້ທ່ານໄດ້ມີການຂອບພຣະຄຸນຕໍ່ພຣະຜູ້ເປັນເຈົ້າ.

## <u>ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງຂອບພຣະຄຸນຕໍ່ພຣະຜູ້ເປັນເຈົ້າ?</u>

ໃນປີທີແລກໃນການປະຈົນພັຍຂອງພວກ Pilgrims' ຊຶ່ງໃນປັດຈຸບັນເອີ້ນວ່າ Massachusetts ຊຶ່ງເປັນປີທີ່ໄດ້ພົບກັບຄວາມຍາກລຳບາກທີ່ສຸດ. ຫຼັງຈາກທີ່ໃຊ້ເວລາ 65 ວັນໃນການເດີນທາງຜ່ານພາຍຸຢູ່ໃນມະຫາສມຸດແອດລັງຕິກ, ພວກເຂົາກໍໄດ້ພົບກັບຄວາມໜາວເຢັນແລະຫິມະຕົກໃນລະດູໜາວແລະມີອາຫານພຽງເລັກນ້ອຍເທົ່ານັ້ນ. ເມື່ອເຖິງລະດູໃບໄມ້ປົ່ງ, ເຄິ່ງນຶ່ງຂອງ Pilgrims' ໄດ້ຕາຍໄປ. ຜູ້ຂຽນເຣື່ອງນີ້ໄດ້ບອກໄວ້ວ່າພວກເຂົາບໍ່ໄດ້ຍອມແພ້, ແລະບໍ່ໄດ້ລະເລີຍທີ່ຈະມີການຂອບພຣະຄຸນພຣະເຈົ້າໃນສິ່ງທີ່ເຂົາມີເຫຼືອຢູ່ແລະພຣະເຈົ້າກໍໄດ້ອວຍພຣະພອນແກ່ເຂົາໂດຍທີ່ໄດ້ໃຫ້ເຂົາມີຜູ້ນຳທີ່ເຂັ້ມແຂງທີ່ເປັນຄົນຂອງພຣະເຈົ້າແກ່ກຸ່ມຂອງເຂົາ, ແລະໄດ້ປະທານເພື່ອນຄົນອິນດຽນທີ່ໄດ້ໃຫ້ຄວາມຊ່ວຍເຫຼືອສອນເຂົາໃຫ້ຮຽນຮູ້ໃນການຕັ້ງຖິ່ນຖານໃໝ່ໃນດິນແດນໃໝ່. ເພື່ອນທີ່ສຳຄັນຜູ້ນີ້, ຊື່ວ່າ Squanto ໄດ້ສອນພວກເຂົາກໍຄືການປູກຝັງແລະການຫ້າງແຮ້ວເອົາສັດປ່າ, ເມື່ອອາກາດແຫ້ງແລ້ງໃນລະດູຮ້ອນ, ເຂົາກໍໄດ້ມີການອະທິຖານແລະກໍໄດ້ຮັບຄຳຕອບພາຍໃນ 10 ວັນຄືຝົນຕົກແລະຊ່ວຍພືລປູກໃຫ້ລອດຕາຍ. ພວກ Pilgrims' ໄດ້ຕັດສິນໃຈເລືອກເອົາວັນນຶ່ງໃນແຕ່ລະປີໄວ້ຕ່າງຫາກສຳລັບການຂອບພຣະຄຸນພຣະເຈົ້າໂດຍໄດ້ຈັດໃຫ້ມີການສເລີມສລອງແຕ່ລະປີ. ໃນອາທິດນີ້ແມ່ນຕົກຖືກວັນຂອບພຣະຄຸນພຣະເຈົ້າທີ່ໄດ້ຖືກເລືອກໄວ້ແລ້ວແລະພວກເຮົາຈະໄດ້ຮຽນຮູ້ນຳກັນວ່າເປັນຫຍັງເຂົາຈຶ່ງເລືອກວັນພະຫັດໃຫ້ເປັນວັນ ບໍຣິສຸດ. ແລະນີ້ກໍຄວນເປັນເວລາແຫ່ງການຂອບພຣະຄຸນແລ້ວ.

1. <u>ຂອບພຣະຄຸນພຣະຜູ້ເປັນເຈົ້າຜູ້ຊົງມີການອະພັຍ,</u> ( ເພງສັຣເສີນ. 65: 1- 4 )

ທ່ານເຄີຍຈື່ໄດ້ບໍ່ວ່າໃນຄັ້ງນຶ່ງໃນຊີວິດຂອງທ່ານໄດ້ເອີ້ນແລະຍອມຮັບເອົາພຣະເຢຊູຄຣິດໃຫ້ອະພັຍໃນຄວາມຜິດບາບຂອງທ່ານແລະເຂົ້າມາເປັນພຣະຜູ້ຊ່ວຍໃຫ້ລອດຂອງທ່ານຍັງຈື່ໄດ້ບໍ່? ຈົ່ງຂຽນລົງຕໍ່ໄປນີ້ວ່າເວລານັ້ນເກີດຂຶ້ນເມື່ອໃດ?..........................................................................................................................................
( ຖ້າທ່ານຍັງບໍ່ເຄີຍໄດ້ມີປະສົບການໃນເຣື່ອງນີ້, ຈົ່ງບອກກັບຄຣິສຕຽນຫຼືຜູ້ນຳໃນການສອນພຣະຄັມພີຈົ່ງບອກພວກນີ້ໃຫ້ນຳພາທ່ານໃນການຕັດສິນໃນທີ່ຈະຕິດຕາມແລະປ່ຽນແປງຊີວິດ, ແລະຈົ່ງຕິດຕາມຄຳແນະນຳໃນປຶ້ມນີ້ໜ້າທີ 2. ). ຈົ່ງຄິດເຫັນເວລາທີ່ທ່ານໄດ້ຕັດສິນໃຈແລະໃຫ້ຄຳສັນຍາໃນເວລາຕໍ່ມາທ່ານກໍຈະພົບກັບຄວາມຜ່ອນຄາຍກັບພາຣະອັນໜັກໜ່ວງຂອງຄວາມບາບທີ່ທ່ານແບກຫາບຢູ່ນັ້ນທ່ານໄດ້ຄິດເຖິງເວລານີ້ບໍ່? ຄວາມບາບທັງໝົດຂອງ

ທ່ານໄດ້ຖືກຍົກເລີກແລ້ວ - ໃນອະດີດ, ໃນປັດຈຸບັນແລະໃນອະນາຄົດ! ມັນເປັນສິ່ງທີ່ຜ່ອນຄາຍໜ້າອັສຈັນແທ້! ແລະທ່ານເຄີຍຂອບພຣະຄຸນພຣະເຈົ້າໃນການອະພັຍນີ້ບໍ່?

ບົດຮຽນໃນມື້ນີ້ເວົ້າເຖິງການປົດປ່ອຍຈາກພາຣະໜັກທັງຫຼາຍອ່ານໃນ ພສສ. 65: 1-4, ໄດ້ບອກເຖິງບາງຢ່າງໃນພຣະເຈົ້າທີ່ທ່ານເຫັນຢູ່ໃນແຕ່ລະຂໍ້: ຂໍ້1,.................... ຂໍ້2, .....................ຂໍ້3, ...................ຂໍ້4, ................

ຈົ່ງຂີດຈາກເບື້ອງຊ້າຍຫາຄວາມໝາຍທີ່ຖືກກັນໃນເບື້ອງຂວາ

| | |
|---|---|
| ຮູ້ດ້ວຍສຳຜັດ | ກ. ຮູ້ວ່າເປັນສິ່ງຖືກຕ້ອງແຕ່ປະຕິເສດທີ່ຈະເຮັດຕາມ. |
| ຕອບແທນ | ຂ. ການຕອບແທນທາງສ່ວນຕົວ |
| ບໍ່ເຊື່ອຟັງ | ຄ. ເພື່ອ " ປົກປິດໄວ້ " ( ຜົນທີ່ຕາມມາກໍຄືຄວາມບາບ ) |

ທີ່ຈະປົກບັງແລະລົບລ້າງຄວາມຜິດບາບໄດ້ກໍມີແຕ່ພຣະເຈົ້າພຣະອົງດຽວເທົ່ານັ້ນ. ທ່ານແລະຂ້າພະເຈົ້າຄວນໄດ້ມີປະສົບກັບການໃຫ້ອະພັຍໃນແຕ່ລະວັນ. ຖ້າວ່າພວກເຮົາຫາກເປັນຄຣິສຕຽນແທ້, ຄວາມຜິດບາບຂອງພວກເຮົາໄດ້ຖືກໃຫ້ອະພັຍແລ້ວ. ແຕ່ພວກເຮົາກໍຍັງຕ້ອງສາຣະພາບບາບໃຫ້ເປັນປົກກະຕິຢູ່ ເພື່ອຈະໄດ້ຕໍ່ຄວາມສຳພັນອັນດີກັບພຣະເຈົ້າເລື້ອຍໆ ໄປ ທ່ານໄດ້ສາຣະພາບບາບຂອງທ່ານໃນວັນນີ້ແລ້ວບໍ່? ທ່ານມີຄວາມຮັບຮູ້ແລະຕໍ່ສູ້ແລະຕ້ອງການທີ່ຈະແກ້ໄຂຈຸດນີ້ໃຫ້ຖືກຕ້ອງຕາມນ້ຳພຣະທັຍພຣະເຈົ້າບໍ່? ຄວາມບາບນັ້ນຈະບໍ່ໄດ້ແຍກທ່ານໃຫ້ອອກຈາກຄວາມສຳພັນກັບພຣະເຈົ້າ. ທ່ານຈະໄດ້ຮັບການອະພັຍບາບແທນແລະຈະເຮັດໃຫ້ທ່ານໄດ້ເຂົ້າໃກ້ຊິດກັບພຣະເຈົ້າຫຼາຍຂຶ້ນ. ຈົ່ງອະທິຖານຕໍ່ ຜູ້ທີ່ໄດ້ຍິນທ່ານແລະທູນຂໍ ການອະພັຍບາບ ທີ່ທ່ານຮູ້ຕໍ່ພຣະເຈົ້າ. ໃນຂໍ້ 4 ໄດ້ເວົ້າເຖິງລາງວັນທີ່ພວກເຮົາຈະໄດ້ຮັບຄືການຕິດຕາມແລະສາລະພາບບາບແລະໄດ້ຮັບການອະພັຍ. ຈົ່ງຂີດກ້ອງຄຳເວົ້າໃນຂໍ້ນີ້ທີ່ໄດ້ອະທິບາຍເຖິງລາງວັນທີ່ຈະໄດ້ຮັບ. ແລະຂໍ້ໃດທີ່ມີຄວາມໝາຍທີ່ສຸດສຳລັບທ່ານ? ແລະດ້ວຍເຫດໃດ?

ການຂອບພຣະຄຸນທີ່ພວກເຮົາມີປະສົບການນີ້ ກໍເພາະການອະພັຍຊຶ່ງນຳຄວາມຊົມຊື່ນຍິນດີມາສູ່ຊີວິດປະຈຳວັນຂອງເຮົາເພາະພວກເຮົາໄດ້ເຂົ້າໃກ້ພຣະອົງຫຼາຍຂຶ້ນ. ພວກເຮົາຈະອີ່ມບໍຣິບູນດ້ວຍພຣະພອນ ແລະຂອງດີທີ່ພຣະວິຫານສັກສິດຂອງພຣະອົງ. ໃນຂນະທີ່ທ່ານໄດ້ພະຍາຍາມຫຼີກໜີຈາກ ການຕອບແທນແລະການບໍ່ເຊື່ອຟັງ ທີ່ມີໃນຊີວິດຂອງທ່ານ, ຈົ່ງສາລະພາບບາບແລະຂໍໃຫ້ພຣະອົງອະພັຍໃຫ້, ແລະທ່ານຈະໄດ້ພົບກັບຂອງດີ ທີ່ພຣະອົງຕຽມໄວ້ໃຫ້ ແລະຈະໄດ້ພົບວ່າຕົວທ່ານເອງຈະໄດ້ເຕັມໄປດ້ວຍການຂອບພຣະຄຸນໃນຂອງປະທານເຫລົ່ານັ້ນ.

## 2. <u>ຂອບພຣະຄຸນພຣະຜູ້ເປັນເຈົ້າທີ່ພຣະອົງຊົງປະທານຄວາມຫວັງໃຫ້:</u>

### <u>ພາກ1, ພາກ 2</u>: ( ເພງສັຣເສີນ 65: 5-8 )

1. ໃນທ້າຍປີຂອງປີທີແລກຂອງພວກPingrims' ມີຫຼາຍເຫດຜົນທີ່ຈະປະປ່ອຍຄວາມຫວັງທີ່ເຂົາມີເພາະມີເຫດການຫຼາຍຢ່າງເກີດຂຶ້ນທີ່ຮ້າຍແຮງຕັ້ງແຕ່ພົບກັບລົມມໍລະສຸມທີ່ມະຫາສມຸດອັດລັງຕິກໃນຂນະທີ່ພວກເຂົາເດີນທາງອົພຍົບມາທາງເຮືອ, ເຂົາໄດ້ພົບກັບຄວາມໜາວເຢັນທີ່ຂົມຂື່ນ, ຄວາມອຶດຫິວຕາຍໃນລະດູໜາວຂອງຄອບຄົວແລະຄົນທີ່ພວກເຂົາຮັກ. ແລະທ້າຍສຸດກໍຄືຄວາມແຫ້ງແລ້ງໃນລະດູຮ້ອນທີ່ໄດ້ທຳລາຍຜົລປູກຂອງພວກເຂົາ. ເຖິງຢ່າງໃດກໍຕາມຜູ້ຂຽນເຣື່ອງນີ້ກໍບອກໄວ້ວ່າເຂົາບໍ່ໄດ້ລະຖິ້ມຄວາມຫວັງເພາະພຣະເຈົ້າເປັນຄວາມຫວັງ. ພວກເຂົາໄດ້ທົດແທນໂດຍຕັ້ງວັນນຶ່ງໄວ້ສຳລັບການຖືສິນອົດແລະການຂອບພຣະຄຸນແລະໃນວັນດຽວກັນ ພວກເຂົາໄດ້ອະທິຖານເປັນເວລານານ 9 ຊົ່ວໂມງ. ພຣະເຈົ້າໄດ້ຍິນຄຳອະທິຖານຂອງເຂົາແລະຊົງປະທານໃນສິ່ງທີ່ເຂົາຕ້ອງການໃຫ້ຄືຝົນໄດ້ຕົກລົງມາເປັນເວລາຫຼາຍວັນແລະໄດ້ຊ່ວຍໃຫ້ຜົລປູກຂອງເຂົາລອດຕາຍ. ຄວາມຫວັງ ເປັນເຫດຜົນທີ່ອັສຈັນທີ່ຈະຂອບພຣະຄຸນພຣະເຈົ້າໃນອາທິດນີ້. ຈົ່ງອ່ານລົ້ມຄືນເຖິງເຣື່ອງ ຄວາມຫວັງໃນພຣະເຈົ້າ ໃນບົດຮຽນຂໍ້ນີ້. ມັນເປັນການງ່າຍສຳ

ລັບການຂອບຄຸນໃນສິ່ງທີ່ຕາເບິ່ງເຫັນ ແຕ່ຍາກທີ່ຈະຂອບພຣະຄຸນໃນສິ່ງທີ່ພວກເຮົາມີຄວາມຫວັງໃນສິ່ງທີ່ເບິ່ງບໍ່ເຫັນ. ແຕ່ຈະເປັນການສະແດງຄວາມເຊື່ອແລະພຣະອົງຈະຊົງປະທານການຊ່ວຍເຫຼືອ, ບໍ່ວ່າຈະມີສິ່ງໃດເກີດຂຶ້ນກໍຕາມ. ເມື່ອໃດທີ່ພຣະອົງໄດ້ປະທານສິ່ງໃດໃຫ້ແກ່ທ່ານແມ້ແຕ່ໃນຖາມກາງຄວາມຮ້າຍແຮງທີ່ກຳລັງເກີດຂຶ້ນໃນຊີວິດຂອງທ່ານ?

ທ່ານເຄີຍໄດ້ມີປະສົບການກັບມໍລະສຸມໃນຊີວິດຂອງທ່ານດຽວນີ້ບໍ່? ຈົ່ງອະທິບາຍລົງຂ້າງລຸ່ມນີ້:

.....................................................................................................................................

ຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງເປັນຄວາມຫວັງໃນທີ່ສຸດປາຍຂອງໂລກນີ້, ແລະເຫດການຮ້າຍຕ່າງໆ ທີ່ເກີດຂຶ້ນ, ພຣະອົງຊົງເປັນຄວາມຫວັງຂອງທ່ານໃນມໍລະສຸມນີ້.

2. ມັດທາຍ 8: 23-27, ໄດ້ເວົ້າເຖິງສາວົກແລະພຣະເຢຊູກຳລັງເດີນທາງດ້ວຍເຮືອ, ໃນທັນໃດນັ້ນກໍເກີດລົມພາຍຸແລະພັດຟອງນ້ຳມາໃສ່ເຮືອ. ພວກສາວົກມີຄວາມຢ້ານກົວ, ແຕ່ພຣະອົງບໍ່ໄດ້ມີຄວາມຢ້ານກົວ. ພຣະອົງກຳລັງນອນພັກຜ່ອນຢູ່ໃນເຮືອ. ພວກສາວົກໄດ້ປຸກພຣະອົງໃຫ້ລຸກຂຶ້ນແລະຂໍໃຫ້ພຣະອົງຊ່ອຍ. ພຣະເຢຊູພຽງແຕ່ເອີ່ຍປາກເທົ່ານັ້ນ, ແລະໂດຍຄຳສັ່ງຂອງພຣະອົງ, ລົມພາຍຸແລະຟອງນ້ຳໃຫຍ່ນັ້ນກໍຄ່ອຍຢຸດເຊົາໃນທີ່ສຸດ. ໃນ ພສສ. 65: 7-8, ພວກເຮົາໄດ້ເຫັນໃນເພງສັຣເສີນພຣະເຈົ້າແລະໄດ້ກ່າວເຖິງຣິດທານຸພາບຂອງພຣະເຈົ້າທີ່ສາມາດຈະເຮັດສິ່ງໃດກໍໄດ້. ຈົ່ງອ່ານຄືນໃນເຣື່ອງຈົ່ງມີ ຄວາມຫວັງໃນພຣະເຈົ້າໃຫ້ຫຼາຍໆ! ທີ່ຜ່ານມາພວກເຮົາກໍໄດ້ມີການຂອບພຣະຄຸນພຣະເຈົ້າທີ່ພຣະອົງໄດ້ຊົງປະທານຄວາມຫວັງໃນລະຫວ່າງກາງມໍລະສຸມທີ່ເກີດຂຶ້ນໃນຊີວິດຂອງເຮົາ. ຈົ່ງຄິດເຖິງຄົນທີ່ຢູ່ຮອບຂ້າງຕົວເຮົາທີ່ໄດ້ມີປະສົບການກັບມໍລະສຸມຊີວິດ, ຜູ້ໃດທີ່ທ່ານຄິດວ່າເຂົາຕ້ອງການຄວາມຫວັງໃນພຣະເຈົ້າໃນເວລານີ້? ທ່ານຈະແບ່ງປັນຄວາມຫວັງໃນພຣະເຈົ້າໃຫ້ແກ່ເຂົາໄດ້ແນວໃດໃນເວລາເຊັ່ນນີ້? ເພາະເຮົາໄດ້ຮຽນເຣື່ອງນີ້ມາແລ້ວໃນຂ້າງເທິງແລະຈະຊ່ອຍເຂົາໄດ້ຢ່າງໃດ? ຈົ່ງຕັ້ງເວລາໄວ້ຕ່າງຫາກສຳລັບການຂອບພຣະຄຸນສຳລັບແຕ່ລະຄົນແລະນຳເອົາແນວຄິດນີ້ມາຝຶກແອບ. ຂອບພຣະຄຸນພຣະເຈົ້າທີ່ເຮົາມີຄວາມຫວັງທີ່ພຣະອົງຊົງປະທານໃຫ້ໃນເວລາແຫ່ງຄວາມຫຍຸ້ງຍາກໃນຊີວິດ.

## 3. <u>ຂອບຄຸນພຣະຜູ້ເປັນເຈົ້າເພາະພຣະອົງຊົງເຮັດໃຫ້ມີຄວາມພໍດີ, ພາກ1,</u>

<u>ພາກ 2:</u> ( ພສສ, 65: 9-13 )

1. ຂ້າພະເຈົ້າເປັນຄົນນຶ່ງທີ່ຮັ່ງມີທີ່ສຸດໃນໂລກ! ໂອ, ຢ່າເຂົ້າໃຈຜິດຂ້າພະເຈົ້າ. ຂ້າພະເຈົ້າບໍ່ມີເງິນຫຼາຍດອກ. ແຕ່ຈົ່ງໃຫ້ຂ້າພະເຈົ້າບອກກັບທ່ານທັງຫຼາຍວ່າຂ້າພະເຈົ້າມີຫຍັງແດ່. ຂ້າພະເຈົ້າມີຄູ່ຊີວິດທີ່ໜ້າພາກພູມໃຈ, ແລະລູກຊາຍທີ່ໜ້າຮັກອີກສອງຄົນທີ່ມີສຸຂພາບສົມບູນດີ. ແລະມີແມ່ທີ່ເປັນຄົນຂອງພຣະເຈົ້າທີ່ໄດ້ລ້ຽງດູຂ້າພະເຈົ້າມາເປັນຢ່າງດີແລະເພິ່ນໄດ້ສັ່ງສອນໃຫ້ຮູ້ພຣະເຈົ້າຮັກແລະໄວ້ວາງໃຈໃນພຣະອົງ. ຂ້າພະເຈົ້າມີບ້ານທີ່ເຕັມໄປດ້ວຍອາຫານການກິນພຽງພໍສຳລັບຂ້າພະເຈົ້າເອງແລະຄອບຄົວ. ຂ້າພະເຈົ້າມີສຸຂພາບດີ, ມີເພື່ອນທີ່ເປັນຄົນຂອງພຣະເຈົ້າແລະມີໂບດທີ່ອັສຈັນ. ແລະດີທີ່ສຸດ, ຂ້າພະເຈົ້າມີພຣະບິດາຜູ້ສະຖິດຢູ່ໃນສວັນຄືຜູ້ທີ່ເນຣະມິດສ້າງສັພທຸກສິ່ງແລະເປັນເຈົ້າຂອງ " ຝາສາດທີ່ຕັ້ງຢູ່ເທິງພູເປັນພັນໆ ໜ່ວຍ " ( ພສສ. 50:10 ) . ຂ້າພະເຈົ້າບໍ່ຕ້ອງການຄວາມຮັ່ງມີທີ່ມີຢູ່ໃນໂລກນີ້, ເພາະພຣະບິດາຊົງເປັນເຈົ້າຂອງໝົດທຸກຢ່າງຢູ່ແລ້ວ. ເພື່ອຈະໃຫ້ສັ້ນເຂົ້າ, ຂ້າພະເຈົ້າມີຄວາມຮູ້ສຶກເໝືອນຢູ່ໃນເພັງສັຣເສີນຄື, ທີ່ບໍ່ສາມາດອົດໄດ້ໃນການທີ່ຈະສັຣເສີນຂອບພຣະຄຸນພຣະເຈົ້າເມື່ອເວລາໃດໄດ້ທວນລະນຶກເຖິງພຣະຄຸນພຣະເຈົ້າທີ່ພຣະອົງຊົງເປັນຜູ້ຈັດແຈງໃຫ້ມີຄວາມພໍດີ. ຈົ່ງອ່ານໃນ ພສສ. 65: 9-13, ຈົ່ງຂີດກ້ອງໃນສິ່ງທີ່ຜູ້ຂຽນເພງສັຣເສີນໄດ້ຂອບພຣະຄຸນ. ຈົ່ງຂີດໝາຍຂ້າງນຶ່ງເພື່ອຕົວທ່ານເອງດ້ວຍ. ຈົ່ງສະແດງອອກເຖິງການຂອບພຣະຄຸນຕໍ່ພຣະເຈົ້າ. ແລະປຽບທຽບວ່າທ່ານໄດ້ຂອບພຣະຄຸນພຣະເຈົ້າມີຫຍັງແດ່ທີ່ຄືກັນກັບໃນພຣະທັມເພງສັຣເສີນແດ່? ທ່ານຈະເຮັດໃຫ້ວັນຂອບພຣະຄຸນພຣະເຈົ້າໃຫ້ເປັນວັນພິເສດແລະດ້ວຍຄວາມຈິງໃຈໃນການຂອບຄຸນທີ່ພຣະເຈົ້າເປັນຜູ້ຊົງປະທານໃຫ້ແນວໃດ? ຈົ່ງຂຽນລົງບາງຄວາມຄິດເຫັນຂອງທ່ານ:

1...................................................................2...........................................................................

ຈົ່ງອະທິບາຍຢ່າງນ້ອຍໃນຄວາມຄິດເຫັນຢ່າງນຶ່ງທີ່ທ່ານໃຫ້ມີ. ຈົ່ງສັນຍາຕໍ່ພຣະເຈົ້າວ່າທ່ານຈະປະຕິບັດຕາມນັ້ນ, ແລະຈົ່ງຂອບພຣະຄຸນທີ່ພຣະອົງຊົງເປັນຜູ້ຈັດຕຽມໃຫ້ມີຄວາມພໍດີໃຫ້ແກ່ທ່ານ.

2. ບົດຮຽນຂ້າງເທິງເຮົາໄດ້ຂີດກ້ອງບາງຄຳໃນຂໍ້ພຣະທັມທີ່ໄດ້ກ່າວເຖິງພຣະເຈົ້າຜູ້ຊົງຈັດຕຽມໃຫ້ມີຄວາມພໍດີທີ່ໄດ້ບັນທຶກໄວ້ໃນພຣະທັມ ເພງສັຣເສີນ 65: 9-13, ແລະທ່ານໄດ້ເຮັດສິ່ງໃດແດ່ທີ່ຄືກັບພຣະທັມຂໍ້ນີ້. ແມ່ນຂໍ້ຄວາມໃດທີ່ທ່ານໄດ້ຂີດກ້ອງກ່ອນໝູ່? ທ່ານເຄີຍຄຶດຈັກເທື່ອບໍ່ວ່າຈະຂອບຄຸນພຣະເຈົ້າໃນເຣື່ອງຂອງນ້ຳ ? ນີ້ອາດຈະເປັນເວລາທີ່ດີທີ່ສຸດ ຄືທ່ານກຳລັງເຮັດວຽກຢູ່ຂ້າງນອກແລະອາກາດຮ້ອນລະອຸແລະທ່ານເກີດຄວາມກະຫາຍຢາກດື່ມນ້ຳເປັນທີ່ສຸດ. ຫຼືບາງທີທ່ານເປັນຜູ້ປູກຝັງດອກໄມ້, ພືດຜັກ ຫຼື ພືດຜົນຢ່າງອື່ນໃນຂນະທີ່ເກີດຄວາມແຫ້ງແລ້ງ. ແລະເວລານັ້ນຖ້າທ່ານຫາກມີນ້ຳພຽງພໍກັບການປູກຝັງທ່ານຈະມີຄວາມຮູ້ສຶກຂອບພຣະຄຸນພຣະເຈົ້າຂນາດໃດ. ແຕ່ສ່ວນທີ່ສຳຄັນທີ່ສຸດ, ຄືພວກເຮົາປຽບທຽບຄືເວລາທີ່ພວກເຮົາຕ້ອງການ ( ຄືນ້ຳ ) ທີ່ຈະໄດ້ມາກໍເມື່ອເຖິງເວລາຂອງມັນໃນເວລາທີ່ຫາບໍ່ໄດ້. ແລະຈົ່ງເຂົ້າໃຈໃນເຣື່ອງນ້ຳຄື:

- ນ້ຳເປັນສິ່ງຈຳເປັນທີ່ສຸດໃນຮ່າງກາຍຂອງມະນຸດ. ຖ້າປາສຈາກອາຫານແລະນ້ຳແລ້ວ, ມະນຸດຈະຕາຍໄວ ຄືຂາດນ້ຳຫຼາຍກວ່າຂາດອາຫານ.
- ນ້ຳເປັນສິ່ງຈຳເປັນສຳລັບສັດແລະພືດພັນຕົ້ນໄມ້ທຸກຊະນິດ. ຖ້າບໍ່ມີນ້ຳແລ້ວ, ພວກເຮົາກໍຈະບໍ່ມີອາຫານ
- ມະນຸດບໍ່ສາມາດຜລິດນ້ຳໄດ້. ໃນຕົ້ນເດີມນັ້ນ, ພຣະເຈົ້າຊົງເປັນຢູ່ແລະດ້ວຍພຣະປັນຍາຂອງພຣະອົງຈຶ່ງໄດ້ຊົງສ້າງຄວາມພໍດີສຳລັບທຸກໆ ສິ່ງແລະຈະພຽງພໍກັບຄວາມຕ້ອງການຂອງພວກເຮົານານເທົ່ານານທີ່ພວກເຮົາອາສັຍຢູ່ໃນໂລກນີ້.

ແມ່ນຫຍັງທີ່ທ່ານຂີດໝາຍໃນຂໍ້ຕໍ່ໄປໃນພຣະຄັມພີຕອນນີ້? ເມັດເຂົ້າແມ່ນບໍ່? ພວກເຮົາຄວນຂອບພຣະຄຸນພຣະເຈົ້າສຳລັບອາຫານ. ມີຫຼາຍຄົນໄດ້ຂອບພຣະຄຸນພຣະເຈົ້າກ່ອນກິນອາຫານທຸກຄາບ, ແລະເປັນສິ່ງຖືກຕ້ອງແລ້ວກໍຄວນເຮັດ! ມີຫຼາຍຄົນໃນພວກເຮົາອາດຈະບໍ່ມີປະສົບການກັບຄວາມອຶດຫິວທີ່ແທ້ຈິງ. ພວກເຮົາກໍຮູ້ຢູ່ວ່າເຫດການແບບນີ້ບໍ່ຄ່ອຍເກີດມີຢູ່ໃນຫຼາຍພາກສ່ວນຂອງໂລກ. ທ່ານໄດ້ຂີດກ້ອງຄຳວ່າກົບ ບໍ່? ທ່ານເຄີຍຂອບພຣະຄຸນສຳລັບສັດຕ່າງໆ ບໍ່? ເປັນຫຍັງ? ພວກເຮົາສາມາດທີ່ຈະຂອບພຣະຄຸນພຣະເຈົ້າສຳລັບສັດທຸກຊະນິດໂດຍມີຫຼາຍເຫດຜົນ. ສັດບາງຊະນິດໄດ້ໃຫ້ຜົນຄືເປັນອາຫານແກ່ພວກເຮົາ ຊຶ່ງໃນຂະນະທີ່ສັດບາງຊະນິດໃຫ້ຄວາມອົບອຸ່ນປະດັບປະດາໃຫ້ແກ່ໂລກ. ຄົນບາງກຸ່ມກໍໄດ້ຜົນປໂຍດຈາກສັດຄືໃຊ້ເປັນຍານພາຫະນະແລະແກ່, ຕ່າງ, ຄຸ້ມຄອງ, ຊ່ອຍວຽກງານການໜັກຫຼາຍຢ່າງ. ໃນປໂຍກນີ້ພຣະເຈົ້າໄດ້ຈັດຕຽມໃຫ້ມີຄວາມພໍດີສຳລັບເປັນພື້ນຖານການດຳຣົງຊີວິດຢູ່ໃນສັງຄົມມະນຸດ. ໃນການອະທິຖານຂອງທ່ານໃນວັນນີ້, ຈົ່ງຕື່ມໃສ່ໃນສິ່ງທີ່ທ່ານຍັງບໍ່ທັນໄດ້ຮັບເທື່ອແຕ່ພຣະເຈົ້າຊົງຮູ້ແລະຈັດຕຽມໄວ້ແລ້ວຊຶ່ງທ່ານຈະໄດ້ໃຊ້ໃນວັນນຶ່ງຂ້າງໜ້ານີ້.

( ອຸປຖັມໂດຍ ລ.ຊ.ບ.ສ. www.lsbf.org )

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ວັນທີ 28 ເດືອນ ພຶສຈິກາ 2004 ( 11 - 28 - 2004 )

---

## ປະກາດກ່ຽວກັບເຣື່ອງພຣະເຈົ້າ

**ພຣະຄັມພີສໍາລັບບົດຮຽນໃນວັນນີ້:** ( ເພງສັຣເສີນ ບົດທີ 145: 1- 21 )

**ຄວາມຈິງໃນພຣະຄັມພີ:** ບຸກຄົນທີ່ເຊື່ອທັງຫລາຍສາມາດປະກາດກ່ຽວກັບເຣື່ອງຂອງພຣະເຈົ້າເພາະພຣະເມດຕາ, ການປົກຄອງ, ຄວາມຊ່ວຍເຫລືອ, ແລະຄວາມຮັກຂອງພຣະອົງ.

**ຂໍ້ພຣະຄັມພີທີ່ສໍາຄັນ:** ມະນຸດຈະກ່າວເຖິງຣັສມີແລະອໍານາດອັນສະງ່າຣາສີຂອງພຣະອົງ ສ່ວນຂ້ານ້ອຍກໍຈະຄິດເຖິງການກະທໍາອັນອັສຈັນຂອງພຣະອົງ. ( ເພງສັຣເສີນ 145: 5 )

**ຜົນສະທ້ອນຕໍ່ຊີວິດ:** ເພື່ອຊ່ວຍໃຫ້ທ່ານປະກາດກັບຄົນອື່ນ ໆກ່ຽວກັບເຣື່ອງພຣະເຈົ້າ.

## ເປັນຫຍັງຂ້າພະເຈົ້າຈະຕ້ອງປະກາດກັບຄົນອື່ນໆກ່ຽວກັບເຣື່ອງພຣະເຈົ້າ

ການບອກເຣື່ອງຂ່າວປະເສີດເປັນເຣື່ອງຜິດປົກກະຕິຢູ່ໃນສັງຄົມປັດຈຸບັນນີ້. ເມື່ອທ່ານຊື້ໜັງສືພິມສະບັບນຶ່ງແລະເລີ້ມກວດເບິ່ງຫົວຂໍ້ຂ່າວໃຫຍ່ຫລືເບິ່ງທີວີພວກເຮົາຈະເຫັນຂ່າວກ່ຽວເຣື່ອງການປຸ້ນຈີ້, ຄົນເມົາເຫລົ້າຂັບຣົດ, ການຂົ່ມເຫັງເດັກນ້ອຍ,ຂົ່ມຂືນ,ຫລືຂ້າກັນ. ມັນເປັນຂ່າວທີ່ສັ່ນສະເທືອນຂວັນ, ທຸກຣະທົມ, ແລະເປັນສິ່ງທີ່ທົນບໍ່ໄດ້ທີ່ຈະຕ້ອງໄດ້ເຫັນຂ່າວທີ່ວ່າມາຂ້າງເທິງນີ້ຊໍ້າແລ້ວຊໍ້າອີກໃນແຕ່ລະວັນ. ແຕ່ລະຍະຫລັງນີ້, ຂ້າພະເຈົ້າໄດ້ເຫັນຂ່າວທີ່ເກີດຂຶ້ນຢູ່ໃນທ້ອງຖິ່ນຂອງຂ້າພະເຈົ້າເອງ. ມີນາງພະຍາບານຜູ້ນຶ່ງໃນຂນະທີ່ຂັບຣົດທີ່ຈະໄປທໍາງານທີ່ໂຮງພະຍາບານຕອນ 6 ໂມງເຊົ້າ. ແຕ່ກ່ອນຈະໄປຮອດຕີນຣົດຂອງນາງເກີດແຕກກາງທາງ. ນາງໄດ້ໂທຣະສັບຫາບໍຣິການສ້ອມແປງ, ແຕ່ເຂົາບອກວ່າອີກຊົ່ວໂມງນຶ່ງຈຶ່ງຈະວ່າງ ແລະມາປ່ຽນຕີນຣົດໃຫ້ໄດ້. ໃນລະຍະນັ້ນມີເຈົ້າໜ້າທີ່ຕໍາຣວດຄົນນຶ່ງທີ່ໝົດເວລາເຮັດວຽກແລ້ວໄດ້ເຫັນນາງແລະໄດ້ຢຸດຊ່ວຍປ່ຽນໃຫ້ ແລະນາງກໍໄດ້ໄປຮອດໂຮງພະຍາບານບ່ອນທີ່ນາງທໍາງານທັນເວລາພໍດີ. ມັນເປັນຂ່າວທີ່ໜ້າຕື່ນເຕັ້ນຍິນດີສໍາລັບຂ້າພະເຈົ້າ ເພາະບໍ່ໄດ້ຄິດວ່າຈະມີຂ່າວດີແບບນີ້ເກີດຂຶ້ນເປັນບາງຄັ້ງຄາວຢູ່ໃນໂລກໜ່ວຍນີ້. ທ່ານແລະຂ້າພະເຈົ້າໃນຖານະທີ່ເປັນຄຣິສະຕຽນຜູ້ນຶ່ງຄືກັນ, ຂ່າວດີທີ່ສຸດທີ່ຢາກຈະໄດ້ຍິນກໍຄືຂ່າວເຣື່ອງພຣະຄຸນຂອງພຣະເຈົ້າ, ພຣະຣາຊອານາຈັກຂອງພຣະອົງ, ການຊ່ວຍເຫຼືອ, ແລະຄວາມຮັກຂອງພຣະອົງ. ຄົນທຸກຄົນທີ່ຢູ່ອ້ອມຮອບຕົວເຮົາກໍຕ້ອງການທີ່ຈະໄດ້ຍິນຂ່າວດີນີ້ເຊັ່ນດຽວກັນ.

## 1 ປະກາດເຖິງພຣະຄຸນຂອງພຣະເຈົ້າ: ( ເພງສັຣເສີນ 145: 3- 5, 8- 9 )

ລູກຊາຍວັຍໜຸ່ມຂອງຂ້າພະເຈົ້າເສັງຕົກວິຊາທີ່ເປັນພື້ນຖານໃນການທີ່ຈະເຂົ້າຢູ່ໃນກຸ່ມຫລິ້ນດົນຕຣີຂອງໂຮງຮຽນ. ໂທດລາວກໍຄືໃນທ້າຍອາທິດນັ້ນລາວໄດ້ຖືກຈໍາກັດຂອບເຂດທຸກຢ່າງ ເຊັ່ນບໍ່ສາມາດທີ່ຈະອອກໄປທ່ຽວຂ້າງນອກໄດ້ ( ນອກຈາກໄປໂບດ ) ບໍ່ສາມາດເວົ້ານໍາໝູ່ເພື່ອນທາງ Internet ຍັງມີອີກງານນຶ່ງທີ່ລາວຕັ້ງໃຈໄວ້ເປັນເວລາດົນນານແລ້ວທີ່ຈະພາກບໍ່ໄດ້. ຍ້ອນຄວາມອີດູຕົນທີ່ມີໃນຫົວໃຈຂອງຂ້າພະເຈົ້າ ຈຶ່ງໄດ້ອະນຸຍາດໃຫ້ລາວອອກໄປໃນງານນີ້ໄດ້. ຂ້າພະເຈົ້າກໍພຽງແຕ່ຫວັງວ່າລູກຈະມີຄວາມຮູ້ສຶກຂອບຄຸນໃນການທີ່ຂ້າພະເຈົ້າໄດ້ສະແດງອອກໃນຄວາມຮັກແລະຄວາມຫ່ວງໃຍແລະອີດູຕົນຈະເປັນການໜູນໃຈໃຫ້ລາວໄດ້ເປັນຜູ້ທີ່ເຊື່ອຟັງໃນອະນາຄົດ. ພຣະຄຸນເປັນສິ່ງທີ່ຊົງປະທານໃຫ້ບໍ່ມີຂອບເຂດຈໍາກັດ, ພວກເຮົາເປັນຄົນຜິດບາບແລະບໍ່ສົມຄວນທີ່ຈະໄດ້ຮັບຂອງຂວັນອັນລໍ້າຄ່ານີ້ທີ່ພຣະເຈົ້າໄດ້ຊົງປະທານໃຫ້ແກ່ພວກເຮົາ. ອ່ານໃນ ພສສ.145: 3-5, ໃນຂໍ້ນີ້ໄດ້ບອກໃຫ້ພວກເຮົາເລົ່າເຣື່ອງພຣະຄຸນແລະຣິດທານຸພາບຂອງພຣະເຈົ້າສູ່ກັນຟັງໄປຈົນເຖິງເຊັ່ນລູກຫຼານເຫຼັນຂອງເຮົາ. ຂ່າວປະເສີດເປັນສິ່ງທີ່

ຄວນແບ່ງປັນແກ່ຄົນອື່ນໆ ເຊັ່ນຄົນລຸ້ນຫຼັງຕໍ່ໄປບໍ່? ມີຢູ່ຫຼາຍຂໍ້ສຳຄັນທີ່ເຮົາຄວນຈະແບ່ງປັນຄື: - ສັ່ງສອນພຣະທັມພຣະເຈົ້າໃຫ້ແກ່ລູກໆຂອງເຮົາ. - ແບ່ງປັນການທີ່ເຮົາໄດ້ມີປະສົບການໃນຄວາມເຊື່ອໃຫ້ແກ່ລູກຂອງເຮົາ. - ສະແດງອອກເຖິງຄວາມຮັກຂອງພຣະເຈົ້າໃນຊີວິດປະຈຳວັນຂອງເຮົາ. - ນຳລູກໆ ຂອງໄປໂບດເພື່ອໃຫ້ເຂົາໄດ້ຮັບການສັ່ງສອນແລະມີປະສົບການໂດຍຄຣິສຕຽນອື່ນ ໆ . ແບ່ງປັນຄວາມເຊື່ອກັບພໍ່ແມ່, ຄອບຄົວ, ແລະໝູ່ເພື່ອນໃກ້ຊິດຂອງເຮົາ, - ເປັນຕົວຢ່າງໃຫ້ແກ່ລູກແລະຄົນອື່ນດ້ວຍການເປັນຄຣູສອນແລະຮັບໃຊ້ອື່ນໆ ຢູ່ໃນໂບດ. - ເຮັດວຽກຮັບໃຊ້ສັງຄົມສົງເຄາະໃນເຂດທ້ອງຖິ່ນເຊັ່ນ: ຊ່ວຍເຫຼືອອູ້ມຊູວຽກງານການຮັບໃຊ້ຂອງກອງປະກາດໂດຍການອະທິຖານແລະຊ່ວຍດ້ວຍການຖວາຍເງິນ. ທ່ານຈະເຮັດວຽກງານການແບ່ງປັນໃຫ້ດີຂຶ້ນໄດ້ແນວໃດສຳລັບຄົນລຸ້ນຫຼັງຕໍ່ໄປ? ຈົ່ງໃຫ້ຄຳສັນຍາກັບພຣະເຈົ້າໃນວັນນີ້.

## 2. <u>ປະກາດເຖິງອານາຈັກຂອງພຣະອົງ:</u> ( ເພງສັຣເສີນ 145: 14- 16 )

ອານາຈັກຂອງ ຊາໂລໂມນຍິ່ງໃຫຍ່ແລະໜ້າອັສຈັນ, ແລະຂອງເຈົ້າຊີວິດ ອາຣາຊະລັດ ກໍເຊັ່ນດຽວກັນ. ແຕ່ເປັນອານາຈັກທີ່ຖືກສ້າງຂຶ້ນຢູ່ໃນໂລກນີ້ຊຶ່ງສ້າງຂຶ້ນມາແລ້ວກໍມີວັນເສື່ອມສູນໄປ ແລະເປັນພຽງສິ່ງເລັກນ້ອຍໃນໂລກນີ້ທີ່ເປັນສ່ວນນ້ອຍໆ ຂອງພຣະເຈົ້າ. ແຕ່ຣາຊອານາຈັກຂອງພຣະເຈົ້າຈະຍັງຄົງມີຢູ່ຕລອດໄປເປັນນິດບໍ່ມີວັນເສື່ອມສູນໄປ. ພຣະເຈົ້າຜູ້ສ້າງສັພທຸກສິ່ງແລະປົກຄອງຢູ່ເໜືອທຸກສິ່ງ, ຢູ່ເໜືອທ້ອງຖິ່ນຂອງທ່ານ, ຣັດ, ປະເທດ, ທະວີບ, ແລະທົ່ວທຸກມຸມໂລກ, ແລະທັງໝົດໂລກຈັກກະວານທັງໝົດ. ອ່ານໃນພສສ. 145: 11-13, ຈົ່ງເບິ່ງໃນຂໍ້ 10, ແລະໃຫ້ຄວາມຄິດເຫັນວ່າທ່ານຄິດວ່າ ຄຳວ່າ **ພວກເຂົາ** ນັ້ນໝາຍເຖິງຜູ້ໃດ? ( ຂໍ້ 11 ) ມີຄວາມໝາຍຕໍ່ໃສ່ອັນໃດ? ວ່າພວກເຂົາຈະເຮັດຫຍັງ? ຖ້າພຣະເຈົ້າເປັນຜູ້ສ້າງໝົດທຸກຄົນແລະທຸກສິ່ງທີ່ໄດ້ເກີດມີມາກໍເປັນພາກສ່ວນນຶ່ງຂອງພຣະຣາຊອານາຈັກຂອງພຣະອົງ, ເປັນຫຍັງເຮົາຈຶ່ງຕ້ອງຄວນກ່າວເຖິງພຣະຄຸນຂອງພຣະເຈົ້າພ້ອມທັງຣາຊອານາຈັກແລະຍ້ອງຍໍຣິດທານຸພາບອັນສູງສົ່ງຂອງພຣະອົງ? ບໍ່ແມ່ນໝົດທຸກຄົນທີ່ຢູ່ໂລກນີ້ຈະຮູ້ເຖິງຣາຊອານາຈັກຂອງພຣະເຈົ້າຫຼືຮູ້ຊຶ້ງເຖິງຄວາມຊື່ນຊົມຍິນດີໃນກົດບັນຍັດຂອງພຣະອົງ. ເປັນໜ້າທີ່ຂອງພວກເຮົາໝົດທຸກຄົນທີ່ຈະຕ້ອງເປັນຜູ້ອອກໄປປະກາດເຖິງພຣະພອນທີ່ໄດ້ຊົງປະທານໃຫ້ເພື່ອໃຫ້ຄົນອື່ນໄດ້ຮູ້ແລະຕັດສິນໃຈທີ່ຈະມີຄວາມຢຳເກງໃນຣິດອຳນາດທີ່ເໜືອນເຈົ້າຊີວິດຂອງຕົນ. ຕາມຂໍ້ 12-13, ພວກເຮົາຄວນຈະປະກາດເຖິງຄວາມສຳຄັນໃນເຣື່ອງນີ້ແນວໃດ? ບຸກຄົນທີ່ບໍ່ມີຄວາມສຳພັນກັບພຣະເຈົ້າກໍຄືຄົນທີ່ຕາບອດໃນເຣື່ອງພຣະຄຸນແລະຣິດທານຸພາບຂອງພຣະເຈົ້າ. ເມື່ອເຮົາຮູ້ແລ້ວກໍຄວນເປັນຜູ້ປະກາດຕໍ່ໃຫ້ຄົນອື່ນຮູ້ນຳເພື່ອເຂົາຈະໄດ້ເຫັນຮຸ່ງທີ່ແທ້ຈິງ. ຣາຊອານາຈັກກໍຕ້ອງການກຳລັງທະຫານແລະທ່ານກໍເປັນທະຫານໃນຣາຊອານາຈັກຂອງພຣະເຈົ້າ. ໜ້າທີ່ຂອງພວກເຮົາຄືບໍ່ທຳລາຍຄົນ, ແຕ່ຕ້ອງໄດ້ປະກາດເຖິງຄວາມຍິ່ງໃຫຍ່ອັສຈັນ ແລະມີຢູ່ຕລອດໄປເປັນນິດ ກໍຄືທັມມະຊາດຂອງຣາຊອານາຈັກຂອງພຣະເຈົ້າ. ທ່ານຈະເຮັດໜ້າທີ່ນີ້ໃຫ້ສຳເຣັດໄດ້ແນວໃດຈົ່ງຂຽນລົງວ່າທ່ານມີວິທີໃດແດ່? ຖ້າທ່ານຫາກມີບັນຫາໃນການທີ່ຈະຫາຄຳເວົ້າຢ່າງໃດຈຶ່ງຈະເໝາະສົມກັບການທີ່ຈະເປັນພະຍານແກ່ຄົນທີ່ບໍ່ທັນມີຄວາມເຊື່ອເທື່ອ, ມີສິ່ງນຶ່ງທີ່ເຫັນວ່າເປັນວິທີດີທີ່ສຸດກໍຄືຈົ່ງແບ່ງປັນປະສົບການຕົວຈິງ ຫຼືເປັນພະຍານເຣື່ອງລາວທີ່ໄດ້ເກີດຂຶ້ນໃນຊີວິດຈິງຂອງທ່ານເອງແລະພຣະເຈົ້າໄດ້ເຮັດໃກ້ເກີດການອັສຈັນແລະມີການປ່ຽນແປງແນວໃດແດ່. ທ່ານອາດຈະມີການເຂົ້າອົບຮົມສັມມະນາເພື່ອຈະເປັນພະຍານໃນໂບດຂອງທ່ານເອງ. ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ທ່ານມີຄວາມໝັ້ນໃຈແລະອົບອຸ່ນໃນການທີ່ຈະມີຄວາມຄິດເຫັນແລະໃຫ້ຄຳແນະນຳແນວໃດ. ຈົ່ງໃຫ້ຄຳສັນຍາທີ່ຈະແບ່ງປັນເປັນພະຍານແກ່ຄົນຜູ້ທີ່ຍັງບໍ່ທັນມີຄວາມເຊື່ອເທື່ອໃນອາທິດນີ້ໃຫ້ໄດ້.

## 3. <u>ປະກາດເຖິງການຊ່ວຍເຫລືອຂອງພຣະອົງ:</u> ( ເພງສັຣເສີນ 145: 17- 21 )

ໃນລະຍະຫຼາຍປີຜ່ານມານີ້ ລາຍການໂຄສະນາທາງທີວີໄດ້ມີການໂຄສະນາເຄື່ອງສື່ສານທີ່ໃຊ້ກົດຮ້ອງຫາຣົດໂຮງພະຍາບານຫຼືອົງການຊ່ວຍເຫຼືອຄື, ມີຍິງຊະລາຜູ້ນຶ່ງນອນຢູ່ກັບພື້ນ, ລາວກົດປຸ່ມທີ່ຕິດຢູ່ກັບຕົວ ທັງຮ້ອງທັງໄຫ້. ແລະເວົ້າວ່າ " ຂ້ອຍລົ້ມ.... ແລະລຸກບໍ່ໄດ້ ". ເພາະເຄື່ອງສື່ສານທີ່ສາມາດຊ່ອຍຄົນເຈັບຄົນເຖົ້າທີ່ເກີດອຸບັດເຫດກະທັນຫັນ

ທີ່ສາມາດເອີ້ນຄືນໃຫ້ມາຊ່ອຍໄດ້ທັນເວລາທີ່ຢູ່ໃກ້ມີສາມາດໃຊ້ໄດ້ຕລອດເວລາແລະງ່າຍດາຍ. ແຕ່ມີການ " ລົ້ມ " ທີ່ແຕກຕ່າງກັບຍິງຊະຣາຜູ້ນີ້ທີ່ພວກເຮົາມີປະສົບການໃນຊີວິດປະຈຳວັນຂອງພວກເຮົາ. ພວກເຮົາສາມາດທີ່ຈະເອີ້ນຫາຜູ້ຊ່ອຍໄດ້ຄືກັນກັບໃນບົດຮຽນທີ່ພວກເຮົາກຳລັງຮຽນຢູ່ນີ້.ຈົ່ງອ່ານໃນ ພສສ. 145: 14-16, ຈົ່ງຂີດກ້ອງເຖິງການເສັຍສະລະຂອງພຣະເຈົ້າໃນການ **ຊ່ອຍ** ພວກເຮົາຄຳວ່າ **ຊ່ອຍ** ອາດມີຄວາມໝາຍວ່າ " ເຮັດໃຫ້ມີພຽງພໍ " ຫຼື " ອູ້ມຊູຂຶ້ນ " ພຣະເຈົ້າຊ່ອຍທ່ານໃນທາງໃດແດ່ຢູ່ໃນຂໍ້ນີ້? ໃນຂ້າງລຸ່ມນີ້ມີຄຳອະທິບາຍເຖິງການລົ້ມລົງຂອງຄົນບາງຄົນທີ່ໄດ້ປະສົບຜ່ານມາ: - ຜູ້ທີ່ຕົກຢູ່ໃນຄວາມຍາກລຳບາກແລະຖືກຫຍໍ້ທໍ້ (ຂໍ້ 14) - ຜູ້ທີ່ຂາດເຂີນອາຫານການກິນ (ຂໍ້ 15) - ຜູ້ທີ່ຕ້ອງການຄວາມເພິ່ງພໍໃຈໃນທຸກສິ່ງ (ຂໍ້ 16) ຄວາມຍາກລຳບາກແລະການຖືກຫຍໍ້ທໍ້ຈາກຄວາມບໍ່ຖືກຕ້ອງ. ທ່ານແລະ ຂ້າພະເຈົ້າເຄີຍຖືກຄົນຫຍໍ້ທໍ້ຢ່າງບໍ່ຍຸດຕິທັມຫຼາຍເທື່ອ, ແມ້ແຕ່ໃນຄຳທີ່ບໍ່ສຸພາບແຕ່ພວກເຮົາກໍຮູ້ເຣື່ອງລາວຂອງຄົນທີ່ຖືກຄະດີຄວາມຍ້ອນການທຳຮ້າຍຂອງຄົນປ່າເຖື່ອນຜິດກົດໝາຍ, ພວກທາດ, ແລະຈາກຄວາມບໍ່ຍຸຕິທັມຂອງຣັຖບານ. ຜູ້ທີ່ເຊື່ອກໍດຳຣົງຊີວິດຢູ່ໃນໂລກນີ້ແລະກໍຈະຖືກເຫດການແບບນີ້ຜ່ານເຂົ້າມາໃນຊີວິດເພາະ **ການເຍາະເຍີ້ຍ** ກໍຢູ່ໃນພວກຄົນປ່າເຖື່ອນທັງຫຼາຍ. ໃນຂໍ້ 14, ໄດ້ເວົ້າເຖິງ **ພຣະອົງຊົງຍົກເຂົາທັງໝົດຂຶ້ນ** ມີຜູ້ໃດເຄີຍຖືກເຍາະເຍີ້ຍບໍ່? ການຂາດເຂີນອາຫານສຳລັບຮ່າງກາຍຂໍສາມາດເຮັດໃຫ້ພ່າຍແພ້ຫຼື " ລົ້ມລົງ " ຕາມຄວາມຈິງແລ້ວພວກເຮົາທັງໝົດທີ່ຢູ່ທີ່ນີ້ຍັງບໍ່ເຄີຍປະສົບກັບບັນຫາຂາດແຄນສຳລັບຮ່າງກາຍຈັກເທື່ອ. ເຖິງແມ່ນວ່າເຮົາຈະບໍ່ມີທຸກສິ່ງຕາມທີ່ເຮົາປາຖນາຢາກຈະມີ ແຕ່ພວກເຮົາກໍມີອາຫານພຽງພໍສຳລັບກິນ, ມີເຮືອນທີ່ໄດ້ອາສັຍຢູ່ມີເຄື່ອງນຸ່ງຫົ່ມເພື່ອໃຫ້ຄວາມອົບອຸ່ນ, ແລະມີທີ່ນອນສຳລັບຫຼັບນອນ. ຊຶ່ງມີຄົນຈຳນວນຫຼາຍຄົນທີ່ຢູ່ອ້ອມຕົວເຮົາບໍ່ມີພຽງພໍສຳລັບຄວາມຕ້ອງການໃນຊີວິດ. ໃນຂໍ້ 16, ໃຊ້ຄຳທົ່ວໄປສຳລັບການອະທິບາຍລາຍລະອຽດເຖິງຄວາມ ຕ້ອງການຂອງທຸກໆ ຊີວິດທີ່ຢູ່ໃນໂລກນີ້. ແລະພ້ອມກັນນີ້ກໍຄືການຖືກດູໝິ່ນທາງດ້ານຮ່າງກາຍຂອງມະນຸດມີຫຍັງແດ່? ພຣະເຈົ້າຈະຈັດແຈງໃຫ້ຄວາມພໍດີກັບຄວາມຕ້ອງການຂອງທຸກໆ ຊີວິດໄດ້ແນວໃດ? ພຣະເຈົ້າໄດ້ຊ່ອຍໃຫ້ມະນຸດທຸກໆ ສະພາບການທີ່ຈະເກີດຂຶ້ນ. ແຕ່ມະນຸດສ່ວນຫຼາຍບໍ່ຮູ້ວ່າພຣະເຈົ້າຊົງພໍພຣະທັຍທີ່ຈະ **ເປີດ** ແລະ **ອ້າແຂນ** ຕ້ອນຮັບເອົາຜູ້ທີ່ເຊື່ອພຣະອົງ. ເຂົາຕ້ອງການໃຫ້ພວກເຮົາ " ບອກເຖິງການຊ່ອຍເຫຼືອຂອງພຣະອົງ " ເຂົາຈຶ່ງຈະຍອມເຊື່ອ.

4 <u>ປະກາດເຖິງຄວາມຮັກຂອງພຣະອົງ ພາກ 1 ແລະ 2</u>: ( ເພງສັຣເສີນ. 145: 17- 21 )

1. ບາງຄົນມີຄວາມເຊື່ອວ່າພຣະເຈົ້າຫລິ້ນເກມ " ແມວ ແລະໜູ " ກັບລູກຂອງພຣະອົງ ເຂົາເຫລົ່ານັ້ນຄິດວ່າພຣະອົງຊົງຈ້ອງທີ່ຈະຄຸບເອົາແຕ່ຄວາມຜິດ ແລະຖ້າຫາກເປັນຄວາມຈິງເຊັ່ນນັ້ນພວກເຮົາກໍແມ່ນຕົກຢູ່ໃນບັນຫາໃຫຍ່. ມີຄົນອີກຈຳນວນນຶ່ງຄິດເຖິງເຣື່ອງພຣະເຈົ້າເພາະພຣະຄຸນແລະຄວາມຮັກ, ພຣະອົງຈະບໍ່ປ່ອຍໃຫ້ພວກເຮົາໃຫ້ໄດ້ຮັບຄວາມທຸກທໍຣະມານຄືການຖືກລົງໂທດຈາກການເຮັດບາບ. ທັງສອງຂໍ້ຄວາມຄິດເຫັນນີ້ກໍຖືກຕ້ອງເໝືອນກັນ, ເບິ່ງໃນ ພສສ. 145: 17-19, ໃນຂ້າງຕົ້ນຂອງຂໍ້ພຣະທັມໄດ້ບອກພວກເຮົາເຖິງພຣະເຈົ້າມີທັງສອງ.................... .ແລະ..................ແລະຄຳທີ່ສາມໄດ້ບອກພວກເຮົາໃຫ້.......................ພຣະອົງ, ແລະຍັງໄດ້ບອກພວກເຮົາວ່າຖ້າຫາກຮ້ອງຂໍຄວາມ..................ແລະ...............ພວກເຮົາ.

| | |
|---|---|
| *ຄວາມຍຸດຕິທັມ:* | *ພຣະຄຸນ:* |
| *ຄືເຮັດໃຫ້ຖືກຕ້ອງ* | *ບໍ່ສົມຄວນແຕ່ຊົງໄດ້ປະທານໃຫ້* |
| *ຢຳເກງ:* | |
| *ຄືການຖ່ອມຕົວໃນການນະມັສການ* | |

ແຕ່ໃນພຣະເຈົ້າ, ສອງຢ່າງຂ້າງເທິງນີ້ແມ່ນມີຢູ່ໃນພຣະອົງເຕັມບໍຣິບູນແລ້ວ, **ຄືຄວາມຍຸດຕິທັມ**, ເຮົາມີພຣະເຈົ້າອົງທ່ຽງທັມທີ່ໄດ້ຕອບສນອງຕໍ່ພວກເຮົາດ້ວຍຄວາມຮັກແລະເມດຕາດ້ວຍ**ພຣະຄຸນ**ໂດຍວິທີທາງຂອງພຣະອົງ. ແຕ່ໃນພວກເຮົາຄວນມີ**ຄວາມຢຳເກງ,** ຫຼືຄວາມເຄົາຣົບນັບຖືແລະໃນເວລາດຽວກັນ, ກໍໄດ້ຮັບຄວາມອົບອຸ່ນດ້ວຍຄວາມຮັກທີ່ພຣະອົງຈະຊົງຖອກເທລົງມາເມື່ອພວກເຮົາຫາກ**ຮ້ອງຫາ**ພຣະອົງແລະພຣະອົງກໍຈະ**ຊົງຊ່ອຍ**ເຮົາ. ໃນຂໍ້ 18 ໄດ້

ບອກວ່າ**ພຣະເຈົ້າ**........................ຄວາມໝາຍໃນພຣະທັມຂໍ້ນີ້ແມ່ນມີຢູ່ 2 ຂໍ້ເປັນພື້ນຖານ. ນຶ່ງຄືມີຄວາມໝາຍ **ໃກ້ຄຽງກັນ**,ໃນເມື່ອພຣະເຈົ້າຊົງຢູ່ທຸກແຫ່ງແລະແນ່ນອນຄວາມໝາຍທີ່ຫຼາຍຄົນເຂົ້າໃນກໍຄ້າຍຄືກັນຄືມີຄວາມສໍາຜັດ ໃນຄວາມສໍາພັນອັນໃກ້ຊິດ. ຈົ່ງບອກຊື່ບຸກຄົນທີ່ຢູ່ໃກ້ຊິດກັບທ່ານ. ທ່ານໄດ້ຂຽນຊື່ເພື່ອນທີ່ນັ່ງຮຽນຕໍ່ຈາກທ່ານໃນ ຫ້ອງຮຽນພຣະຄັມພີນີ້ແລ້ວບໍ່? ຊື່ເພື່ອນຂ້າງບ້ານຂອງທ່ານເດ? ເພື່ອນ ແລະຄອບຄົວທີ່ຢູ່ຕ່າງບ້ານຕ່າງເມືອງເດ? ຖ້າທ່ານຫາກເປັນລູກຂອງພຣະເຈົ້າຜູ້ນຶ່ງ, ພຣະອົງກໍຊົງເປັນຜູ້ໃກ້ຊິດກັບທ່ານຄືເປັນເພື່ອນແທ້ທີ່ຮັກແພງກັນທີ່ສຸດ. ທ່ານໄດ້ເວົ້າກັບຜູ້ໃດກ່ຽວກັບຄວາມສໍາພັນທີ່ແໜ້ນແຟ້ນກັບເພື່ອນຮັກແພງທີ່ສຸດຜູ້ນີ້? ທ່ານຈະບອກເຣື່ອງຄວາມ ຮັກທີ່ມີຕໍ່ເພື່ອນຮັກຜູ້ນີ້ແນວໃດ?

**2.** ໂຈ ມາໂບດເປັນບາງຄັ້ງຄາວເພື່ອສອນໂຮງຮຽນວັນອາທິດ, ລາວເປັນຄົນນິດສັຍດີແລະເປັນເພື່ອນທີ່ດີ ກັບທຸກຄົນທີ່ຢູ່ອ້ອມຂ້າງລາວ. ແຕ່ເວລາລາວຢູ່ທີ່ບ້ານ ລາວເປັນຄົນທີ່ມັກຂົ່ມເຫງຄົນໃນຄອບຄົວ ແລະມັກເບິ່ງ ພາບລາມົກທີ່ຢູ່ໃນ ອິນເທີເນັດ, ແລະຍັງບໍ່ຍອມຊ່ວຍເຫລືອວຽກງານໃນຄອບຄົວ. ທ່ານຄິດວ່າຊາຍຜູ້ນີ້ເປັນຄົນດີແຕ່ ມີພຽງຂໍ້ຜິດພາດເລັກນ້ອຍແມ່ນບໍ່? ຈົ່ງອ່ານໃນບົດຮຽນນີ້ຄື: ໃນ **ພສສ 145: 20-21.** ມັນມີພື້ນຖານຢູ່ສອງຢ່າງ ທີ່ຈໍາແນກມະນຸດທີ່ຢູ່ໃນໂລກນີ້.......................ແລະ................................... ຄິດວ່າຂໍ້ໃດທີ່ທ່ານໄດ້ຜິດພາດ? ເປັນຫຍັງ? ເພື່ອຊ່ວຍໃຫ້ທ່ານໄດ້ມີຄໍາຕອບຕໍ່ຄໍາຖາມນີ້ຄື: ຄວາມມີສິນທັມແມ່ນຜູ້ທີ່ຫັນໜີຈາກການເຮັດ ບາບແລະມີຄວາມເຊື່ອໃຄວາມສໍາພັນກັບພຣະເຈົ້າ. ທີ່ກ່າວມານີ້ບໍ່ໄດ້ໝາຍຄວາມວ່າເຂົາເຈົ້າປາສຈາກຄວາມບາບ ແຕ່ໄດ້ຮັບການຊົງຍົກໂທດບາບແລ້ວແລະຖືກຊໍາຣະໃຫ້ເຂົ້າໃກ້ພຣະອົງຫຼາຍຂຶ້ນ. ຄົນຊົ່ວຮ້າຍກໍຄືບຸກຄົນທີ່ເຮັດຕາມ ຄວາມຕັນຫາຢາກຂອງຕົນເອງໂດຍບໍ່ໄດ້ຟັງຄໍາເຕືອນແລະຕາມນໍ້າພຣະທັຍຂອງພຣະເຈົ້າ.) ໃນຂໍ້ທີ່ 20 ໄດ້ເວົ້າເຖິງ ພຣະເຈົ້າໄດ້ຕອບສນອງຜູ້ທີ່ຮັກພຣະອົງວ່າຢ່າງໃດ? ..........................ພວກເຮົາມີຄວາມຫ່ວງໃຍຕໍ່ລູກຂອງເຮົາ ຂນາດໃດ? ພວກເຮົາຮັກເຂົາຫຼາຍກວ່າຕົນເອງ, ດູແລເບິ່ງແຍງເຂົາ, ປົກປ້ອງເຂົາຈາກສິ່ງທີ່ຈະເປັນອັນຕະລາຍຕໍ່ ເຂົາ, ແລະນໍາພາເຂົາໄປໃນທາງທີ່ຄວນຈະໄປ. ກໍຄືກັນ, ພຣະເຈົ້າກໍເຝົ້າລະວັງລູກຂອງພຣະອົງຢູ່ທັງກາງເວັນແລະ ກາງຄືນ. ພວກເຮົາບໍ່ໄດ້ຄາດສາຍຕາແລະການຄຸ້ມຄອງຂອງພຣະອົງເລີຍ. ພຣະເຈົ້າຕອບສນອງຄົນຊົ່ວຮ້າຍແນວ ໃດ?....................................ທາງນຶ່ງກໍຄືພຣະອົງຈະຊົງທໍາລາຍແລະລົບລ້າງຈາກພຣະອົງກໍຄື: ຍ້ອນຕົວເຂົາ ເອງເຮັດຄືການບໍ່ເຊື່ອຟັງ. ເຮົາຈະຕອບເຂົາໄດ້ ຄືອ່ານຢູ່ໃນຂໍ້ 21 ທີ່ເດວິດໄດ້ເກີດມີຄວາມ " ຮັກພຣະເຈົ້າ " ແລະກໍ ເປັນລັກສະນະນຶ່ງຂອງການສະແດງອອກຂອງພວກເຮົາ. ດ້ວຍເຫດນີ້, ເດວິດຈຶ່ງໄດ້ຂຽນແລະຮ້ອງເພງ **ສັຣເສີນ** ພຣະ ເຈົ້າແລະຊວນ**ໃຫ້ທຸກໆ ຊີວິດໄດ້ຮ່ວມ**ກັນກັບເພິ່ນ. ເດວິດໄດ້ຕັ້ງໃຈບອກເຖິງຄວາມຮັກຂອງພຣະເຈົ້າ. ທ່ານເດໄດ້ຮູ້ ຈັກຜູ້ໃດບໍ່ທີ່ບໍ່ສາມາດຮ້ອງເປັນໃນ ເພງສັຣເສີນໄດ້ ( ພາະເຂົາບໍ່ໄດ້ເກີດມີຄວາມຮັກໃນ ຄຸນລັກສະນະຂອງ ຄໍາວ່າ " ຮັກພຣະເຈົ້າ ". ຈົ່ງອ່ານຄືນບົດຮຽນທີ່ຮຽນມາຂ້າງຕົ້ນຈົນຈົບ ທ່ານຈະໄດ້ເຫັນການໜູນໃຈແລະຄໍາແນະນໍາເພື່ອ ການແບ່ງປັນຄວາມຮັກຂອງພຣະເຈົ້າໃນຖ້າມກາງຄົນທີ່ຫລົງຫາຍ. ທ່ານຈະເຮັດຢ່າງໃດໃນມື້ນີ້?